# ທອງວິນ ພົມວິຫານ



## ຊີວິດ ແລະ ວຽກງານ

600

# ທອງວິນ ພົມວິຫານ

# ຊີວິດ

# ແລະ

# ການເຄື່ອນໄຫວວຽກງານ

## ໃນຂະບວນວິວັດປະຫວັດສາດ
## ຂອງປະເທດລາວ

ຈັດພິມໂດຍ

ສຳນັກພິມຈຳໜ່າຍໜຸ່ມລາວ

ອະນຸມັດພິມ : 5/8/1991 ເລກທີ 22/ຊຫມ.

---

ດວງໄຊ ຫລວງພະສີ : ບັນທຶກຈາກການເລົ່າ,ຂຽນຮຽບຮຽງ,
ອອກແບບ ແລະ ຈັດຫນ້າ.

---

ພິມທີ່ໂຮງພິມຊາວຫນຸ່ມ

ຂະຫນາດ 13 × 19 ຊຕມ.

ຈຳນວນ 1.000 ຫົວ.

ເລີ່ມຂຽນ 1.5.1990.

ພິມແລ້ວ 25.5.1992.



# ທອງວິນ ພົມວິຫານ

ກຳມະການສູນກາງພັກ, ສະມາຊິກສະພາປະຊາຊົນສູງສຸດ ເລຂາທິ I, ຄະນະບໍລິຫານງານຊາວຫນຸ່ມປະຊາຊົນປະຕິວັດລາວ.

ສາກພາບດ້ານຫລັງ ເປັນໂຄງການທີ່ນາງ ໄຝ່ຝັນຊຶ່ງປັດຈຸບັນພວມກໍ່ຕັ້ງຢູ່ທີ່ສວນເຍົາວະຊົນ 2 ທັນວາ ທີ່ນະຄອນຫລວງວຽງຈັນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

1990

# ຄຳນຳ

ຄະນະອຳນວຍການສຳນັກພິມຈຳໜ່າຍຊາວໜຸ່ມຂອງພວກເຮົາໄດ້ຮັບກຽດຢ່າງສູງ, ຈັດພິມປຶ້ມ " ຊີວິດແລະການເຄື່ອນໄຫວວຽກງານ " ຂອງທ່ານນາງທອງວິນ ພົມວິຫານກຳມະການສູນກາງພັກ, ສະມາຊິກສະພາປະຊາຊົນສູງສຸດເລຂາທິການທີ່ໜຶ່ງ ຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ.

ພວກເຮົາໄດ້ຕີລາຄາສູງຕໍ່ເນື້ອໃນຊີວິດສ່ວນຕົວຂອງທ່ານນາງທອງວິນ ພົມວິຫານ, ທີ່ມີສ່ວນຜູກພັນຢູ່ກັບໜ້າປະຫວັດສາດແຫ່ງການປະຕິວັດຂອງຊາດລາວເຮົາຕະຫລອດ 40 ປີເຕັມ, ນັບແຕ່ທ່ານມີອາຍຸພຽງ 12 ປີກໍໄດ້ເຂົ້າຮ່ວມຂະ ບວນການຕໍ່ສູ້ປະຕິວັດແລ້ວ.

ປຶ້ມ " ຊີວິດ ແລະ ການເຄື່ອນໄຫວວຽກງານ" ຂອງທ່ານນາງທອງວິນ ພົມວິຫານ, ຈຶ່ງບໍ່ພຽງແຕ່ອ່ານແລ້ວໄດ້ຮູ້ເຖິງເສັ້ນທາງຊີວິດອັນຍາວໄກຂອງທ່ານ, ຫາກຍັງຈະຮູ້ໄດ້ແຕ່ລະໄລຍະຂອງການປະຕິວັດ, ຄວາມລະອິດລະອຽວຂອງຊີວິດ, ເຊິ່ງຄົນຜູ້ໜຶ່ງກໍຄືປະຫວັດສາດອັນໜຶ່ງທີ່ຜູກພັນຢູ່ກັບ ປະຫວັດ ສາດລວມຂອງປະເທດຊາດ. ດັ່ງນັ້ນ, ເສັ້ນທາງຊີວິດຂອງຄົນຜູ້ໜຶ່ງກໍຄືເອກະສານເຫລັ້ມໜຶ່ງ, ຄືຕຳລາຫົວໜຶ່ງ ແລະ ຄືບົດ ຮຽນໃຫຍ່ ແລະ ຍາວບົດໜຶ່ງເພື່ອສຶກສາອົບຮົມຄົນຮຸ່ນຫລັງທີ່ ເກີດໃໝ່ໃຫຍ່ລຸນ.

ປື້ມຫົວນີ້ໄດ້ບັນຈົງຂຽນໃຫ້ເປັນປະເພດເອົາຊີວິດຈິງຜູກພັນກັບວຽກງານ ແລະ ປະຫວັດສາດຂອງລາວເຮົາ, ເມື່ອໄດ້ອ່ານແລ້ວ, ຈຶ່ງບໍ່ພຽງແຕ່ໄດ້ຮູ້ໄດ້ເຂົ້າໃຈເຖິງຊີວິດສ່ວນຕົວ ຂອງທ່ານ, ຫາກຍັງຈະໄດ້ຮຽນຮູ້ ແລະ ເຫັນໄດ້ຫລາຍສິ່ງ ຫລາຍແນວຕະຫລອດ 4 ທົດສະວັດໃນຊີວິດແຫ່ງເສັ້ນທາງຂອງແມ່ຍິງລາວຄົນຫນຶ່ງໄດ້ເລີ່ມຈາກການກຳເນີດໃນຄອບຄົວຊາວໄຮ່ ຊາວນາຢູ່ບ້ານປ່າບ້ານດົງທຳມະດາ, ຈົນກ້າວຂຶ້ນເປັນເຖິງກຳມະການສູນກາງພັກ, ເປັນສະມາຊິກສະພາປະຊາຊົນສູງສຸດ ແລະ ເປັນເລຂາທິການທີ I ຄະນະບໍລິຫານງານສູນກາງຊາວຫນຸ່ມປະຊາຊົນປະຕິວັດລາວ, ຈຶ່ງບໍ່ແມ່ນເລື່ອງທຳມະດາ ແລະ ຄົນທຳມະດາເລີຍ, ເມື່ອບາດກ້າວທຳອິດຂອງທ່ານກ້າວຂຶ້ນບົນເສັ້ນທາງອັນຖືກຕ້ອງມາແຕ່ຫົວທີ່ພຸ້ນແລ້ວ.

ດັ່ງນັ້ນ, ຄະນະອຳນວຍການສຳນັກພິມຈຳຫນ່າຍຊາວຫນຸ່ມຈຶ່ງຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບອົກຂອບໃຈຢ່າງເລິກເຊິ່ງຕໍ່ຄວາມພະຍາຍາມ ແລະ ຄວາມອົດທົນຂອງທ່ານນາງທອງວິນ ພົມວິຫານ ທີ່ໄດ້ມອບຜົນງານຊິ້ນນີ້ໃຫ້ແກ່ສ່ວນລວມ ເພື່ອເປັນມໍລະດົກບັນຈຸເຂົ້າໃນຫໍຄັງສະຫມຸດວັດທະນະທຳຂອງ ຊາດລາວເຮົາສືບຕໍ່ໄປ.

ຂໍຂອບໃຈ

ວຽງຈັນ, ວັນທີ : 15/1/1990

ຄະນະອຳນວຍການສຳນັກພິມຊາວຫນຸ່ມ.

# ຄຳນຳໜ້າ

ໃນໂອກາດຄົບຮອບຄ້າຍວັນເກີດ 52 ປີ ຂອງຂ້າພະເຈົ້າ ( 7.1.1938 - 7.1.1990 ) ນີ້, ຂ້າພະເຈົ້າໄດ້ ທວນຄິດຄືນເສັ້ນທາງຊີວິດອັນຍາວໄກ, ເພື່ອທົບທວນຄືນຄວາມຊົງຈຳ ແລະ ເພື່ອບັນທຶກຄວາມຊົງຈຳອັນນີ້ໄວ້ເປັນອະນຸສອນແຫ່ງຊີວິດ.

ແນ່ນອນ, ຊີວິດຂອງຄົນຜູ້ໜຶ່ງ, ບໍ່ວ່າຈະເປັນຜູ້ຍິງ ຫລືຜູ້ຊາຍ, ຈະເປັນຊ່ວງໄລຍະຊີວິດສັ້ນ ຫລື ຍາວ, ຕ່າງກໍ່ມີຄວາມໝາຍ, ມີຄຸນຄ່າໃຫ້ແກ່ຕົນເອງ ແລະ ເປັນບົດຮຽນໃຫ້ກັບ ກຸ່ມຄົນທີ່ຢູ່ໃນສັງຄົມ, ຄຸນຄ່າຂອງຊີວິດຈະດີ ຫລື ບໍ່ດີແມ່ນຂຶ້ນຢູ່ ກັບຄົນທີ່ເປັນເຈົ້າຂອງຊີວິດວ່າ " ຕະຫລອດໄລຍະທີ່ມີຊີວິດຢູ່,ເຮົາໄດ້ເຮັດໄດ້ທຳສິ່ງໃດແດ່ ທີ່ເປັນປະໂຫຍດ ໃຫ້ກັບສັງຄົມ ?" ເຖິງວ່າຄວາມດີຂອງເຮົາທີ່ໄດ້ສ້າງຂຶ້ນມານັ້ນ,ມັນ,ຄົນອາດແມນບໍ່ທັນເຫັນ, ຕ້ອງມີມື້ໜຶ່ງ ຈະຕ້ອງມີຄົນແນມເຫັນຄຸນຄ່າຄວາມດີຂອງເຮົາຢ່າງແນ່ນອນ.

ຕະຫລອດໄລຍະເວລາ 52 ປີ,ເປັນເສັ້ນທາງຍາວໄກ ບໍ່ແມ່ນຂອງຄ່ອຍ, ຖ້າຈະແບ່ງອອກເປັນ 2 ໄລຍະກໍຄື: ແຕ່ 1 ປີເຖິງ 11 ປີ ຂ້າພະເຈົ້າຢູ່ນຳພໍ່ແມ່,ແຕ່ 12 ປີເຖິງ 52 ປີ ຂ້າພະເຈົ້າຢູ່ນຳຄອບຄົວລູກຜົວຂອງການຈັດຕັ້ງປະຕິວັດແລະ ຈະຢູ່ນຳການຈັດຕັ້ງປະຕິວັດຊົ່ວນິລັນດອນ.

ປຶ້ມ" ຊີວິດ ແລະ ການເຄື່ອນໄຫວວຽກງານ" ຂອງ ຂ້າພະເຈົ້ານີ້, ທ່ານຜູ້ອ່ານ ອ່ານແລ້ວອາດຈະບໍ່ໄດ້ຍິນສຽງປືນ, ບໍ່

ໄດ້ຍິນສຽງປືນ, ບໍ່ໄດ້ຍິນສຽງຕະລຸມບອນປະຈົນບານເຊິ່ງໜ້າກັບສັດຕູ. ແຕ່, ທ່ານຈະໄດ້ພົບເຫັນເສັ້ນທາງລະອິດລະອຽວແຫ່ງສະໜາມຮົບຊີວິດ, ສະໜາມຮົບແນວຄິດ, ສະໜາມ ຮົບຄວາມປ່ຽວພອຍແຫ່ງການພັດພາກທີ່ຂ້າພະເຈົ້ານັ່ງຢູ່ໃນອ້ງລັບມືມານ, ແຕ່ກໍ່ຕັດສິນໃຈສູ້ຊົນ ເພື່ອຢາກສະແດງໃຫ້ທຸກຄົນ ເຫັນວ່າ " ແມ່ຍິງລາວກໍ່ຍັງມີຄົນເດັດຂາດ " ແລະ ທ່ານຜູ້ ອ່ານຈະໄດ້ເຫັນແມ່ຍິງລາວແບກຫາບວຽກຄອບຄົວ, ແບກຫາບ ວຽກງານສ່ວນລວມ ແລະ ແບກຫາບ 5 ໂຄງການເພື່ອຈະໄດ້ ສ້າງຂຶ້ນຮັບໃຊ້ສັງຄົມ ແລະ ປະເທດຊາດ, ຈົນຂ້າພະເຈົ້າມືດໜ້າລາຍຕາຟູບໜ້າຢູ່ກັບໂຕະ, ແຕ່ກໍ່ກັດແຂ້ວສູ້, ສູ້ຊົນເພື່ອຢັ້ງ ຢືນເຖິງສັດຈະທຳຂອງຄວາມເປັນຈິງຂອງລູກແມ່ຍິງໃຫ້ທຸກຄົນໄດ້ຮູ້, ໃຫ້ຊາວໂລກໄດ້ເຫັນ.

ການທີ່ຂ້າພະເຈົ້າຂຽນປຶ້ມ " ຊີວິດ ແລະ ການເຄື່ອນໄຫວວຽກງານ " ຂອງຂ້າພະເຈົ້າຂຶ້ນ, ບໍ່ແມ່ນອວດອ້າງ ແຕ່ຢ່າງໃດ, ຈຸດປະສົງກໍ່ແມ່ນຢາກໃຫ້ທຸກຄົນຮູ້ຄວາມເປັນຈິງໃນ ຊີວິດຂອງຂ້າພະເຈົ້າ, ເພື່ອຂໍມອບປຶ້ມຫົວນີ້ໄວ້ເປັນມໍລະດົກ ທາງວັດທະນະທຳໃຫ້ກັບປະເທດຊາດ, ໃຫ້ກັບຄົນລຸ້ນຫຼັງເພື່ອ ເອົາເປັນບົດຮຽນສືບທອດ.

ນະຄອນຫລວງວຽງຈັນ, ວັນທີ 17/1/1990

ທອງວິນ ພົມວິຫານ.

# ສາລະບານ


| ສາລະບານ | ຫນ້າ |
| --- | --- |
| ຢູ່ໃນທ້ອງຂອງມານດາ | 1 |
| ບື້ນເຍົາໄວ | 5 |
| ອິດສະຫລະເຂົ້າບ້ານ | 10 |
| ຈາກບ້ານ | 12 |
| ມືຄືນມາຂໍ | 17 |
| ຖືກປິດລ້ອມ | 19 |
| ຕິດຕໍ່ກັນໄດ້ | 21 |
| ເປັນພະນັກງານນ້ອຍ | 23 |
| ເດີນທາງໄກ | 27 |
| ສາມເດືອນທີ່ເດີນທາງ | 30 |
| ດິນແດນເຂດທີ່ຫມັ້ນ | 35 |
| ບັ້ນຮ່ຳຮຽນ | 37 |
| ປາກກາ | 39 |
| ຈົດຫມາຍນ້ອຍ | 42 |
| ຜູ້ທີ 4 ເປັນພະຍານ | 46 |
| ກັບເມືອຢາມບ້ານ | 48 |
| ລຳຫມັ້ນສັນຍາ | 52 |
| ໄປຫລວງພະບາງ | 55 |
| ແຕ່ງງານ | 56 |
| ລວມລາວຄັ້ງທີ່ຫນຶ່ງ | 59 |
| ລູກຫົວແກ້ວຫົວແຫວນ | 61 |
| ຢູ່ນຳປູ່ຍ່າ | 63 |
| ປຽວພອຍ | 67 |
| ຂໍເປັນແມ່ຍິງທີ່ດີ, ເປັນເມຍທີ່ດີແລະເປັນແມ່ທີ່ດີ | 73 |

| | |
|---|---|
| ອອກຈາກສະຫວັນນະເຂດ | 75 |
| ລົບຫນ້າລົບຕາ | 77 |
| ເປັນນັກຣຽນ | 78 |
| ເປັນຄະນະອຳນວຍການ | 80 |
| ປົດປ່ອຍທົ່ວປະເທດ | 82 |
| ເສົ້າສະລົດໃຈ | 84 |
| ຕັດສິນໃຈສູ້ຊົນ | 87 |
| ສ້າງຕັ້ງຫນັງສືພິມ | 91 |
| ສ້າງຕັ້ງໂຮງພິມ | 94 |
| ສ້າງຕັ້ງໂຮງຮຽນຊາວຫນຸ່ມ | 99 |
| ສ້າງຕັ້ງສວນອຸທິຍານເຍົາວະຊົນ 2 ທັນວາ | 102 |
| ກອນເປີດກອງປະຊຸມ | 107 |
| ເປັນກຳມະການສູນກາງພັກ | 109 |
| ກອງປະຊຸມໃຫຍ່ຊາວຫນຸ່ມຄັ້ງທີ I | 111 |
| ເປັນຜູ້ວ່າການແທນ | 113 |
| ກອງປະຊຸມໃຫຍ່ຄັ້ງທີ II | 118 |
| ນະໂຍບາຍເປີດກວ້າງ | 121 |
| ດຳເນີນໂຄງການ | 126 |
| ວິທີເຄື່ອນໄຫວສ້າງໂຄງການ | 129 |
| ຄວາມນຶກຄິດ | 133 |
| ຍັງສືບຕໍ່ | 136 |
| ຫລຽນໄຊຊະນະ | 143 |

# ຢູ່ໃນທ້ອງຂອງມານດາ



ພໍ່ແລະແມ່ ຜູ້ບັງເກີດເກົ້າຂອງນາງ ທຸ່ຍວິນ ພົມວິຫານ
(ເພິ່ນມີລູກດວຍກັນ 9 ຄົນ, ນາງແມ່ນຜູ້ທີ 3 )

ແມ່ໄດ້ເລົ່າສູ່ນາງຟັງຫລາຍຄັ້ງທັ້ນວ່າ : ພໍ່ຂອງນາງບໍ່ພຽງແຕ່ເປັນຄົນດຸໝັ່ນມາແຕ່ຄາວຍັງນ້ອຍ ຫາກຍັງເປັນຄົນມີຈິດ ໃຈກວ້າງຂວາງ. ມັກຊ່ວຍເຫລືອຊາວບ້ານ ຜູ້ທີ່ຕົກທຸກໄດ້ຍາກອີກ ນຳອັນພິເສດໄປກວ່ານັ້ນອີກກໍ່ແມ່ນ ພໍ່ມັກເວົ້ານຳໝູ່ຄູ່ຂອງເພິ່ນຢູ່ ສະເໝີວ່າ : ເພິ່ນເປັນຫ່ວງເປັນໃຍນຳໂຊກຊາຕາກຳບ້ານ ເມືອງຂອງລາວເຮົາຫລາຍ. ສ່ວນແມ່, ເປັນຄົນທຳມະຫາໂມ, ດຸ ໝັ່ນ

ບ່າຫາບນ້ຳຫົວຄຽງບ່າຄຽງໄຫລ່ກັບຜົວ, ເບິ່ງເລິກເຂົ້າໄປແມ່ ຍັງ ເປັນຄົນດຸໝັ່ນຂະຫຍັນພຽນກວ່າພໍ່, ເພາະກາງຄືນເດິກແມ່ ຍັງ ເຂັນຝ້າຍຕົ້ມໃຍແລ້ວຈຶ່ງເຂົ້ານອນ, ຮຸ່ງເຊົ້າຊ້ຳລຸກເດິກຕຳ ເຂົ້າ ຕັກນ້ຳ, ລ້ຽງລູກແລະພໍ່, ຕາມທຳນຽມລາວ, ແມ່ຍິງຕ້ອງ ແບກ ຫາບໜ້າວຽກຍ່ອຍລະອຽດໃນຊີວິດຄອບຄົວ, ພິເສດແມ່ຂອງນາງ ຊ້ຳຮັກແພງສອນລູກໃຫ້ກາຍເປັນຄົນດີຂອງຄອບຄົວ, ການສິດ ສອນ ຝຶກລູກ ອັນລະອຽດແນ່ນແມ່ໄດ້ແບກພາລະທັງໝົດ, ທັງເຊື່ອຖືຮີດ ຄອງປະເພນີອັນດີງາມທີ່ຫລາຍເຊັ່ນຄົນເຄີຍຖືກັນມາ, ສ່ວນພໍ່ມີ ແຕ່ ວົນນຳບັນຫາໃຫຍ່ໆເທົ່ານັ້ນ, ແມ່ຂອງນາງເຊື່ອວ່າ "ຄວາມສັກສິດ ມີຈິງ " ເຊື່ອວ່າ " ຄົນໃດທຳດີກໍ່ຕ້ອງໄດ້ດີ ຄົນໃດທຳຊົ່ວກໍຈະມີ ກັມນຳສະໜອງ "

ແມ່ເລົ່າໄປອີກວ່າ : ຖ້ານະຄອບຄົວຂອງເຮົາເຖິງຈະ ອົດທົນເອົາຫລັງສູ້ຟ້າ ເອົາໜ້າສູ້ດິນ, ເຮັດທັງນາ, ເຮັດທັງໄຮ່ກໍ່ ຍັງ ພໍຢູ່ພໍກິນ, ບາງປີກໍອຶດ. ລູກຄົນທີ່ໜຶ່ງ ຄົນທີ່ສອງຄົນທີ່ສາມ ທະຍອຍຄານຕາມຫລັງກັນອອກມາ, ສະມາຊິກເພີ່ມຂຶ້ນຈາກສອງ ສາມ ຄົນເປັນສີ່ຫ້າຄົນ. ຄວາມລຳບາກເໝືອນເງົາຕາມຕົວ. ເພາະ ບໍ່ ພຽງແຕ່ຈະແບກຫາບຈາກບ່າເບື້ອງຂວາບ່າເບື້ອງຊ້າຍແລ້ວ ຍັງ ບໍ່ພໍ ທັງມືຊ້າຍທັງມືຂວາຍັງຫອບຫິ້ວນະ ລຸງຕຸງນັງ ທັງເຫື່ອ ໄຫລ ໄຄຍອຍ ແຕ່ປານນັ້ນກໍເຈັບປວດໄປທົ່ວສາລະພາງຮ່າງກາຍ.

ພໍ່ຂອງນາງບໍ່ມັກຈະປາກພໍປານໃດ, ເມື່ອແນມເຫັນ ສະພາບຄອບຄົວແລ້ວ ມີແຕ່ບອກແມ່ໃຫ້ອົດທົນເພາະໝູ່ບ້ານເປັນ ໝູ່ບ້ານນອກຄອກຄາເນ. ລາຍໄດ້, ນອກຈາກເຮັດນາເຮັດໄຮ່ ເປັນ

ອາຊີບຫລັກແລ້ວ ກໍເຂົ້າປ່າລ່າສັດ, ຕັດຟືນ, ລ້ຽງຫມູ ລ້ຽງ ໄກ່ ເຮັດໄຮ່ເຂົ້າ, ໄຮ່ສາລີ,ບາງປີ ການເກັບກ່ຽວບໍ່ໄດ້ດັ່ງໃຈ ນຶກ ຈົດດີ. ມີຫລາຍເທື່ອ ພໍ່ເຄີຍໄປປຶກສາກັບຄົນເຖົ້າຄົນແກ່ ຄິດ ຢາກຈະຍົກຍ້າຍບ້ານ ເພາະຫມູ່ບ້ານນີ້ຢູ່ກາງປ່າກາງດົງ ໂພດ ໄປ ຜູ້ເຖົ້າຜູ້ແກ່ບໍ່ເຫັນດີນຳ ເພາະບ້ານຫມູ່ບ້ານເປັນບ້ານ ເກົ່າ ແກ່ມາແຕ່ປູ່ມາແຕ່ປູ່ພູ່ນແລ້ວ.

ມີຢູ່ຄືນຫນຶ່ງ. ແມ່ນາງຝັນຢ່າງແປກປະຫລາດ, ພໍ່ຊວດ ຮູ້ ເມື່ອຕອນກາງເດິກ ຈຶ່ງຟ້າວກະຕືລືລົ້ນປຸກພໍ່ໃຫ້ຕື່ນ, ແລ້ວ ແກ ຄວາມຝັນສູ່ພໍ່ຟັງ, ແມ່ເລົ່າວ່າ : ຝັນເຫັນຕາພະຂາວເຫາະ ມາ ແຕ່ທາງທິດເຫນືອ, ແມ່ພວມຫາບຄຸນ້ຳຢູ່ບ່າ,ພໍ່ແນມເຫັນຕາ ພະ ຂາວເຫາະມາ ຈຶ່ງຟ້າວວາງຄົນບ່າພ້ອມກັບຄຸລົງດິນ ແລ້ວນັ່ງ ລົງ ຍໍມືນົບ, ພໍ່ຕາພະຂາວເຫາະມາເຄິ່ງເທິງຫົວ ເພິ່ນຮ້ອງລົງ ມາ ບອກກັບແມ່ວ່າ " ຈົ່ງຮັກສາແກ້ວປະເສີດຫນ່ວຍງາມຫນ່ວຍນີ້ ໄວ້ ໃຫ້ດີ ຈະເປັນສີລິມຸງຄຸນໃຫ້ແກ່ຊາວບ້ານຊາວເມືອງ " ເວົ້າແລ້ວ ເພິ່ນກໍ່ເຫາະໄປໃນອາກາດ.ແມ່ຮັບເອົາແກ້ວປະເສີດ ດ້ວຍຄວາມ ດີອົກດີໃຈຟ້າວເອົາ ເນັບໃສ່ຫົວສົ້ນ, ແລ້ວໄປຕັກນ້ຳ,ກໍພໍ ດີ ຊວດຮູ້ເມື່ອຄິງ.

ຕໍ່ມາ, ແມ່ກໍ່ຕັ້ງທ້ອງ,ແມ່ນຳເອົາເລື່ອງຄວາມຝັນໄປ ເລົ່າ ສູ່ພະອາຈານຢູ່ວັດຟັງ, ເພິ່ນເວົ້າວ່າ :" ແມ່ອອກຈະມີບຸດຜູ້ມີບຸນ ວາດສະຫນາມາເກີດນຳ "

ແມ່ເລົ່າວ່າ : ນັບແຕ່ມື້ນັ້ນມາ, ປະກົດວ່າຈິດໃຈຂອງ ແມ່ ສົດຊື່ນແຈ່ມໃສຢູ່ຕະຫລອດເວລາ,ເຂົ້າໄຮ່ເຂົ້ານາຂຽວງາມ ກວ່າ

ປີຜ່ານມາ, ຈົນແມ່ສາມາດເວົ້າໄດ້ເຕັມສິບເຕັມປາກວ່າ" ຫມົດທັງຫມູ່ບ້ານ, ໄຮ່ນາຂອງຄົນໃດກໍ່ດີ " ພໍ່ຈິ່ງເອົາໃຈແມ່, ບໍ່ໃຫ້ແມ່ເຮັດວຽກຫນັກ, ຢ້ານແຕ່ຈະມີອັນຕະລາຍເຖິງລູກຢູ່ໃນທ້ອງ.

ເລື່ອງທີ່ບໍ່ຫນ້າເຊື່ອ, ແຕ່ມັນກໍ່ເປັນນິມິດຢູ່ໃນຄວາມ ຝັນຂອງແມ່ອີຫລີ, ເມື່ອແມ່ມີທ້ອງໄດ້ 7 ເດືອນ, ແມ່ຊ້ຳພັດຝັນເຫັນຕາພະຂາວຄົນເກົ່ານັ້ນອີກ, ເພິ່ນເຫາະມາບອກກັບແມ່ວ່າ " ລູກຢູ່ໃນທ້ອງຂອງແມ່ອອກນັ້ນບໍ່ແມ່ນຄົນທຳມະດາໄດ໋ເນີ. ປາງ ກ່ອນເປັນລູກສາວຫລາຂອງເສດຖີທີ່ຮັ່ງມີທີ່ສຸດຢູ່ໃນສຸວັນນະພູມປະເທດແຫ່ງນີ້, ນາງມີຊື່ວ່າ : ສີລິວິສານ, ພໍອາຍຸໄດ້ 26 ປີກໍ່ອອກ ບວດເປັນນາງຊີເຖິງອາຍຸ 67 ປີ ບັນລຸອໍລະຫັນ, ກູສິນປາງກ່ອນຂອງນາງຈະຕອບສະຫນອງນາງໃນຊາດນີ້ "

ຟັງໆເບິ່ງແລ້ວບໍ່ຕ່າງຫຍັງກັບ " ເທບນິຍາຍ "ທີ່ນັກ ປະພັນແຕ່ງຂຶ້ນເອົາເອງ. ແຕ່, ແມ່ບອກວ່າ "ແມ່ນຄວາມຝັນ ແນວນັ້ນແທ້ " ສິ່ງທີ່ປະກົດຕອນນາງຢູ່ໃນທ້ອງມານດາ, ກໍ່ແມ່ນຄອບຄົວຢູ່ດີມີສຸກ. ເຂົ້າໄຮ່ເຂົ້ານາເປັນຫມາກເປັນຜົນດີ, ຫມູ ຫມາເປັດໄກ່ເກີດແມ່ແຜ່ລູກ ຈົນມີຊາວບ້ານຫລາຍຜູ້ຫລາຍຄົນມາບອກກັບແມ່ວ່າ " ລູກເທວະດາຈະມາເກີດກັບເຈົ້າແລ້ວ " ທັງພໍ່ທັງແມ່ທັງອ້າຍທັງພີ່ນ້ອງຜູ້ຮູ້ເລື່ອງນຳມີແຕ່ຄວາມດີໃຈ, ເຖິງຈະ ເປັນເລື່ອງເພີ້ຝັນ, ແຕ່ມັນກໍ່ໄດ້ເຮັດໃຫ້ຄອບຄົວ " ດວງບຸດດີ" ເຕັມໄປດ້ວຍ ກິ່ນອາຍແຫ່ງຄວາມອົບອຸ່ນ, ນັບທັງຊາວບ້ານຊາວເມືອງຄົນໃດກໍ່ຍິນດີດ້ວຍ.

# ບັ້ນເຍົາໄວ

ໄດ້ກ່າວແຕ່ຫົວທີແລ້ວວ່າ : ຄອບຄົວພໍ່ແມ່ຂອງນາງ ເປັນຊາວນາບ້ານນອກຂອກຄາເມ, ນາງເກີດລອດອອກຈາກທ້ອງ ແມ່ຕົກລົງຟາກພໍດີຕອນຮຸ່ງເຊົ້າ. ພໍແນມເຫັນໃບຕອງກ້ວຍເປັນ ສີເຫລືອມໆຈາກຂອບຟ້າທາງທິດບົວລະພາທີ່ແສງພະອາທິດຍາມເຊົ້າຍັງແນມບໍ່ທັນເຫັນ, ກົງກັບວັນພະຫັດ, ເດືອນຈຽງ, ປີຣວາຍ ຍີ ( ປີຂານ ) 1938, ພໍ່ຂອງນາງຊື່ ພໍ່ທອງດີ ດວງບຸດດີ, ແມ່ ຊື່ ນາງ ກົມ ດວງບຸດດີ. ຢູ່ບ້ານ ຫີນສິ່ວ, ຕາແສງສະໄກ ( ເວລານັ້ນເອີ້ນວ່າ ຕາແສງເພັຍລາດ ) ເມືອງຕຸລາຄົມ ( ດຽວ ນີ້ເອີ້ນວ່າເມືອງເພັຍລາດ ) ແຂວງ ສີສັດຕະນາກ (ຄາວນັ້ນ, ທັງກຳແພງນະຄອນວຽງຈັນທັງແຂວງວຽງຈັນລວມກັນເປັນແຂວງສີສັດຕະນາກ ) ຫ່າງຈາກຕົວເມືອງວຽງຈັນຂຶ້ນໄປທາງເຫນືອປະມານ 48 ກິໂລແມັດ ( ຕາມເສັ້ນທາງເລາະແຄມນ້ຳຂອງ )

ຫມົດທັງຫມູ່ບ້ານຫີນສິ່ວ ມີຢູ່ປະມານ 27 ຫລັງຄາ ເຮືອນ, ທຸກຫລັງຄາເຮືອນປຸກດ້ວຍເສົາໄມ້ແກ່ນຫລອນ, ປູຟາກໄມ້ ປ່ອງແອມຝາໄມ້ເຮັ້ຍ, ມຸງດ້ວຍຫຍ້າຄາ, ແລະ ມຸງດ້ວຍຟາບາງ ເຮືອນກໍ່ມຸງດ້ວຍແປ້ນເກັດ, ມີດົງຫນາປ່າໄມ້ໃຫຍ່ອອມຮອບ, ສົມກັບເປັນບ້ານປ່າຜາດອຍອີຫລີ.

ນາງເປັນລູກຄົນທີ່ 3 ແມ່ກົມຂອງນາງເລົ່າວ່າ: ນາງ ເກີດງ່າຍລ້ຽວງ່າຍກວ່າທຸກຄົນ, ນາງຄືຢາຫອມເພີ່ມກຳລັງໃຈໃຫ້ພໍ່ ກັບແມ່ມາແຕ່ກຳເນີດ, ນັບແຕ່ເກີດອອກມາ, ແມ່ວ່າ: ນາງເປັນ ຕາ

ຮັກຕາຊົ່ວຫລາຍ, ໄປເຮັດໄຮ່ເຮັດນາກັບມາເມື່ອຍໆ, ພໍແຕ່ ແມັບ ເຫັນໜ້າລູກສາວກໍ່ຫາຍຈາກຄວາມອິດເມື່ອຍໂລດ, ວ່າຈັ່ງຊັ້ນ.

ຊາວບ້ານພາກັນເອີ້ນນາງວ່າ " ສາວນ້ອຍປິ່ນອິ່ນ" ດ້ວຍເຫດຜົນທີ່ວ່າ " ນາງງາມປິ່ນອິ່ນ " ເມື່ອແມ່ນຶກເຖິງຄວາມຝັນເທື່ອທີ່ສອງທີ່ຕາພະຂາວບອກວ່າ " ລູກສາວຢູ່ໃນທ້ອງຂອງ ແມ່ອອກ, ຊາດກ່ອນເປັນລູກສາວຫລາເສດຖີ, ຊື່ ນາງ ສີລິວສານ" ພໍ່ກັບແມ່ຈິ່ງເອົາວະລີ ທີ່ຊາວບ້ານກ່າວຂານກັນວ່າ "ປິ່ນອິ່ນ" ບວກໃສ່ກັບ ວະລີ " ສີລິວສານ " ຈຶ່ງຕັ້ງຊື່ໃຫ້ນາງວ່າ "ທອງອິນ " ທອງ, ໝາຍເຖິງ " ທອງຄຳ " ແລະ " ອິນ " ໝາຍເຖິງ " ປິ່ນອິ່ນ " ສົດ, ໃສງາມ, ງາມຕາ "

ກໍ່ຍອນວ່າເປັນຄອບຄົວຊາວນາ, ຊ້ຳພັດເກີດນາງອອກ ມາຍາມເດືອນຈຽງ, ຍາມທີ່ດິນຟ້າອາກາດຂອງລາວເຮົາຢູ່ໃນ ຂັ້ນໜາວສຸດຂີດ. ພໍຄອດອອກມາກະທົບກັບອາກາດໜາວ, ຮ່າງກາຍຂອງນາງສະບັ້ນ ສັ່ນກໍ່ສັ່ນແຫລເອັດໆ, ພໍ່ຈຶ່ງສຸມໄຟຢູ່ເຕົາກາງເຊຍລູກທ້ອນໆ , ເກັບເອົາແພທຸກອັນເທົ່າທີ່ເກັບຫາມາໄດ້ເອົາມາຕຸ້ມຫຸ້ມ, ຢ້ານວ່ານາງຈະເປັນອື່ຫຍັງໄປ.

ແມ່ເລົ່າວ່າ : ຕອນຢູ່ໄຟ " ຢູ່ກຳນາງ " ນ້ຳນົມ ຂອງແມ່ຫລາຍເອົາແທ້ຫລາຍເອົ້າວ່າ , ຕ່າງກັບການເກີດລູກທັງ 6 ຄົນຜ່ານມາ, ຈຶ່ງຄິດເຂົ້າຂ້າງຕົວເອງວ່າ "ເທວະດາມາຊ່ວຍ " ທັງກິນເຂົ້າແຊບ, ນອນແຊບແຈບຈົ່ມ, ເພາະນາງບໍ່ຄ່ອຍຈະ ແອ່ວກວນແມ່ພໍ່ປານໃດ.

ມີສຽງຂອງພໍ່ມາໝາຍນາງໃຫ້ກັບລູກຊາຍນ້ອຍຂອງ ເພື່ນ

ໄວ້ແລ້ວ, ເໝືອນເປັນຄວາມຮັກຄວາມເມດຕາທີ່ຜູ້ໃຫຍ່ເອື້ອອາ ລີມີຕໍ່ນາງນັບແຕ່ປອດລອດມືນຕາຂຶ້ນມາເບິ່ງໂລກແລ້ວ. ແມ່ ເລົ່າ ວ່າ " ຖະໜອມແພງຮັກນາງດັ່ງແກ້ວຕາດວງໃຈ, ຄືວ່າແມ່ ມີ ເງິນແສນມີເງິນລ້ານ " ຈຶ່ງເຮັດໃຫ້ຄອບຄົວຊາວນາທີ່ຢູ່ອ້ອມອົກ ກາງດົງມີຄວາມອົບອຸ່ນຢ່າງແປກປະຫລາດ.

ພໍນາງກ້າວເຂົ້າອາຍຸ 3-4 ຂວບ, ຫລື ຈື່ກ່າວວ່າ: ຍິ່ງ ເຕີບກ້າໜ້າບານຂຶ້ນເທົ່າໃດ, ພໍ່ແມ່ຍິ່ງຮັກຖະໜອມແພງຮັກ, ຈົນ ມີບາງເທື່ອ, ພວກເພິ່ນຄິດວ່າມີແຕ່ນາງເປັນລູກຂອງເພິ່ນ ຄົນ ດຽວ, ສິ່ງທີ່ຕິດຕາມມາກໍ່ຄື " ຄວາມນ້ອຍໃຈ " ຂອງ ພວກ ອ້າຍທີ່ຄິດແຕ່ວ່າ, ພໍ່ແມ່ຮັກແຕ່ນາງຄົນດຽວ.

ແມ່ມັກເວົ້າຫລິ້ນແກມອີຫລີກັບພໍ່, ກັບພວກອ້າຍ, ກັບພີ່ ນ້ອງ ທີ່ມາຢາມວ່າ " ນາງທອງວິນຄົນນີ້ ຈື່ບໍ່ໃຫ້ແຄ່ງຕົກລົ້ນມາ ຈື່ ບໍ່ ໃຫ້ຂາຕົກໄຮ້ກ້າ. ລົມກໍ່ຈື່ບໍ່ໃຫ້ແທດ, ແດດກໍ່ຈື່ບໍ່ໃຫ້ຕອງ, ແພງ ດັ່ງດວງໃຈ ແທ້ແລ້ວ ".

ໄດ້ຍິນແມ່ເວົ້າແນວນັ້ນ, ພວກອ້າຍແຫ່ງມີຄວາມຕໍ່າຕ້ອຍ - ນ້ອຍໃຈ.

ນາງເປັນເດັກນ້ອຍ " ຂີ້ດື້ " ມັກສໍ້ຖາມ, ຈົນມີບາງເທື່ອ ແມ່ກໍ່ບໍ່ຮູ້ຈະຕອບວ່າແນວໃດ.

ນາງຂໍໄປນານຳພໍ່ຫລືຂໍໄປໄຮ່ນຳພວກອ້າຍ, ແມ່ບໍ່ຍອມ ໃຫ້ ໄປທາງໃດ. ແມ່ວ່າ " ລູກເປັນຜູ້ຍິງຄົນດຽວ, ເມື່ອສາມາດຢ່ຽບ ດັ້ນຫູກໄດ້ແລ້ວກໍ່ມີແຕ່ຮຽນໜັງສືແລະຮຽນຕໍ່າຫູກທັງຮຽນ ເຂັນ ຝ້າຍຢູ່ເຮືອນ ".

ພໍນາງອາຍຸ ໙ ຂວບ, ພໍ່ຈິ່ງແປງຫູກໃຫ້ນາງຕ່ຳ,ຫູກຂອງແມ່ທີ່ເຄີຍຕ່ຳຢູ່ຫູກນີ້,ພໍ່ເອົາພາໄປຕັດເສົາກີ່ໃຫ້ຕ່ຳລົງ,ເພື່ອ ໃຫ້ຫາຍເຖິງຈິ່ງນັ່ງຕ່ຳຫູກໄດ້.ແມ່ສອນໃຫ້ນາງ ມັດມີ່,ເກັບຂິດເກັບລາຍຕ່ຳແພຂາວ,ຕ່ຳແພອື່ໂປ້ຢູ່ກັບເຮືອນ.

ຕອນນີ້, ແມ່ໄດ້ເກີດນ້ອງຕື່ມອີກ 2 ຄົນ,ໜ້າທີ່ຂອງນາງຈິ່ງຢູ່ເຮືອນຕ່ຳຫູກ ແລະ ເອົານ້ອງຊ່ວຍພໍ່ແມ່ທີ່ອອກທົ່ງເຮັດ ນາເຂົ້າດົງເຮັດໄຮ.

ພໍອາຍຸເຕັມ ໙ ຂວບ,ພໍ່ພານາງໄປຝາກເຂົ້າໂຮງ ຮຽນນາງບໍ່ຢາກຮຽນ,ເພາະບໍ່ໄດ້ຢູ່ໃກ້ພໍ່ກັບແມ່, ທັງເດັກນ້ອຍ ນັກຮຽນກໍ່ຫຼູມມາເບິ່ງ,ຈົນມີບາງຄົນອອກປາກວ່າ"ສາວນ້ອຍນາງ ນີ້ງາມແທ້ນໍ ? "

ຍອມວ່າເປັນເທື່ອທຳອິດ, ຈິ່ງທັງຕື່ນທັງຢ້ານໂຮງ ຮຽນອ້າຍຄູຈັດໃຫ້ນາງນັ່ງຢູ່ໂຕະທາງໜ້າ,ເອີ້ນວ່າໂຕະນັ່ງ ຮຽນໜັງສືຢູ່ດອກ. ແຕ່ເປັນແປ້ນທີ່ເລື່ອຍດ້ວຍແຮງຄົນມາຈາກປ່າ,ຕີຕະປູຕິດກັບສອງເສົາ ເພື່ອໃຫ້ນັກຮຽນໄດ້ເອົາປຶ້ມເອົາກະ ດານນ້ອຍຮອງໃສ່ແລ້ວຂຽນ, ຝາໂຮງຮຽນທັງຂາດທັງເກົ່າ,ຝາ ມຸງໂຮງຮຽນກໍ່ແນມເຫັນທ້ອງຟ້າບາດແດດອອກຍັງວ່າໄຄແດ່,ພໍຝົນຕົກລົງມາທັ້ນຕິ ! ຕອງພາກັນໃຫ້ໄປມາປານອື່ຫຍັງເອົາໂລດ.

ຢູ່ໂຮງຮຽນ,ນາງມີສ່ຽວຄົນໜຶ່ງຊື່ ນາງ ບົວໄຂ, ນາງ ບົວໄຂ ເປັນລູກພໍ່ສຸງຂອງນາງເສັງ, ຈິ່ງຮັກກັນປານລູກພໍ່ ແມ່ດຽວກັນ.

ການຮຽນໜັງສືຂອງນາງຈັດຢູ່ໃນປະເພດເກັ່ງ ຂະໜາດ

ວ່າ : ຣຽນແດ່ຂາດໂຮງຮຽນແດ່, ເພາະເອົານອງຊ່ອຍແມ່ເມື່ອ ແມ່ມີວຽກຫລາຍຢູ່ກັບໄຮ່ຢູ່ກັບນາ.

ນາງເຮືອນ, ນາງຍັງແຕ່ງຕົວເອງເປັນເອື້ອຍດູແລວ ສອນຫນັງສືໃຫນອງ, ບອກໃຫນອງຮຽນຫນັງສືແດ່, ຕ່ຳຫູກໄປ ແດ່ ເຣັດຄືວ່ານາງເປັນຜູ້ໃຫຍ່ເຕັມຕົວພິລຶກພິໂລດເອົາໂລດ.

ຄວາມຈິງພໍ່ແມ່ບໍ່ຢາກໃຫນາງໄປຕັກໄປຫາບນ້ຳດອກ, ພໍ່ນາງອອນ ວອນ, ພໍ່ຈຶ່ງແປງຫາບຄຸນອຍໃຫ, ເຫດຜົນຂອງແມ່ທີ່ບໍ່ຢາກໃຫນາງຫາບນ້ຳ ກໍ່ຄື: ບາດໃຫຍເປັນສາວ,ຍອນຫາບນ້ຳຫນັກຫລາຍ, ຢ້ານຈະເປັນສາວງ້ານຫລັງໂກ່ງ, ເພາະເພີ່ນປາຖະຫນາຢາກໄດລູກເຂີຍ " ນາຍຣອຍແລະພໍ່ຄາ "ນາຍ ຣອຍທະຫານເວລານັ້ນສະນຸກສະບາຍຫລາຍ, ທັງມີຫນ້າມີຕາອີກຊັ້ວ.

ແມ່ມັກຫວີຜົມມັກເກົ້າຜົມໃຫນາງ. ມັກແຍງມັກເບິ່ງ ນາງດ້ວຍຣອຍຍິ້ມອິ່ມເອີບສຸກໃຈ.

ມື້ຫນຶ່ງ, ມີພະອາຈານຈຳສີນຢູ່ປ່າເຂົ້າມາບານ,ແມ່ມີ ນີມເພີ່ນຂຶ້ນເຮືອນ,ແລວຖາມເຖິງ " ແກວປະເສີດ "ພະອາ ຈານນັ້ນບອ່ານນ້ອມີເຣັດສິບຫນັງນຸບງຢູ່ດົນເຕີບຈຶ່ງຕອບ " ແກວ ປະເສີດເປັນແກວມີຄາທີ່ຫາຍາກ, ເປັນສີລົມີງຄຸນແກດິນເກີດປີຂານຄວນມີໄວປະດັບກາຍ ເພື່ອປະລະມີໃນພາຍຫນາ "

ນາງບໍ່ຮູດອກວາແມ່ຫມາຍເຖິງອັນໃດ, ຣູ້ເຫັນແຕແມ່ເພີ່ນມັກຖາມນ້ຳແມຄາຊາວຂາຍທີ່ເອົາຫາບຂອງສິນຄາໄປຂາຍ ບານນອກ, ແລວແມ່ກໍ່ມີຂອງມາຕອນມາຝາກນາງທຸກເທື່ອ ເມື່ອເພີ່ນໄປເບິ່ງສິນຄາທີ່ເອົາຫາບມາຂາຍ ຂວງຝາກທີ່ນາງມັກຫລາຍ ກໍ

ແມ່ນ " ຫວີສັກພົມ " ເຮັດໃຫ້ໃບຫນ້າເປັນປື້ນ ວົ່ນ,ພໍຫວີ ພົມ ແລ້ວກໍ່ເອົາຫວີສັກໄວ້ກັບພົມເປັນໂກຍພົມນັ້ນເລີຍ,ເພື່ອຮັກສາ ບໍ່ໃຫ້ພົມແຍ່ມາປົກຫນ້າຜາກ, ນອກຈາກຫວີແລ້ວຍັງມີແກ້ວ,ມີຕຸ້ມຫູຂອງຫລິ້ນ, ຈິ້ນນອງຈິ້ນອ້າຍອິດສາ, ຫາວ່າແມ່ຮັກແຕ່ນາງ ຄົນດຽວ, ແຕ່ນາງກໍ່ແບ່ງໃຫ້ພວກຂອງຫລິ້ນນຳມັນຈຶ່ງມ່ອນລະບໍ.

ມີສອງສາມເທື່ອ,ນາງ ບົວໄຂ ມາຊວນນາງໄປເອົາ ຟືນ ພໍ້ແມ່ຮູ້, ແມ່ຮ້າຍຢ່າງໃຫ່ຍ, ຢ້ານວ່າເສືອຮ້າຍຈະກິນ,ທັງເວົ້າວ່າ : ຢູ່ດົງນັ້ນມີຜີກອງກອຍ, ມີພີຍັກວາຍ,ເດັກລັກເດັກນອຍ ບໍ່ຕ້ອງເຂົ້າໄປເປັນອັນຂາດ ! ພໍໃຫ່ຍຂຶ້ນມານາງກໍ່ໄດ້ໄປ ນຳຫມູ່ມວນຫລາຍ.

## ອິດສະຫລະເຂົ້າບານ

ນາງແນມເຫັນຄົນຫມູ່ຫນຶ່ງພາກັນເຂົ້າມາບານ,ມີນາຍບານ ມີພໍ່ຂອງນາງ, ພອມກັບພວກອາວພວກລຸງໄປເວົ້າລົມກັບ ພວກເພິ່ນ.. ພວກເພິ່ນເວົ້າລົມກັນຢູ່ເຫິງເຮືອນຈົນເດິກດື່ນ,ມີການຈັດກັນເວນຍາມຢູ່ນອກບ້ານ.

ນີໃສ່ຂີ້ສອດຮູ້ສອດເຫັນຂອງນາງ, ນາງລັກຈອບຟັງພວກເພິ່ນເວົ້າຢູ່ຫອງນອນ, ຈຶ່ງພໍຈະຈັບເອົາຂໍ້ຄວາມມາປະຕິດປະ ຕໍ່ໃສ່ກັນ, ແລວກໍ່ຮູ້ວ່າພວກເພິ່ນແມ່ນ " ພວກລາວອິດສະຫລະ " ຂອຍບໍ່ຮູ້ດອກວ່າ " ລາວອິດສະຫລະ " ແມ່ນຫຍັງ ?ເຮັດຫຍັງ? ຮູ້ແຕ່ວ່າ, ພວກເພິ່ນຫນີພາຍຈາກການຕາມຈັບຕາມກຸມຂອງ ທະຫານຝຣັ່ງ.ຄຳທີ່ວ່າ " ທະຫານຝຣັ່ງ "ແມ່ນພວກໃດ ? ເດັກ

ນ້ອຍອາຍຸພຽງ 10 ຂວບຄື ຈົ່ງນາງບໍ່ອາດທີ່ຈະເຂົ້າໃຈຕໍ່ເລື່ອງ ແນວນັ້ນໄດ.

ພວກເພິ່ນເວົ້ານຳກັນວ່າ : ຍ້ອນທະຫານຈີນຈຽງໄກເຊັກ ຮ່ວມມືກັບ ທະຫານຝຣັ່ງ,ທະຫານຝຣັ່ງຈຶ່ງເຂົ້າມາຢຶດຄອງ ລາວ ເຮົາເທື່ອທີ່ສອງນີ້ໄດ, ບວກກັບການຊ່ວຍເຫລືອຂອງອັງກິດ ກຳ ລັງແຮງຂອງຝຣັ່ງຈຶ່ງເຫມືອນກັບຕົວເສືອມີປີກມີຫາງ,ລັດຖະບານ ລາວອິດສະຫລະຂອງພວກເຮົາຈຶ່ງແຕກສະລຸພູ່ຜ່າຍ,ສ່ວນ ໃຫຍ່ ໂຕນໄປເມືອງໄທ, ເພື່ອລີ້ໄພທາງດານການເມືອງ,ທັງຫມົດນັ້ນ ແມ່ນຍອມເຈົ້າຊີວິດສີສະຫວ່າງວົງຄືນດຽວທີ່ເປັນຫຍາຄາ ກາງ ແກ່ວ ວ່າໃດສຸກກິນວ່ານັ້ນໂດຍບໍ່ຄິດເຖິງປະຊາລາສະດອນໄດດິ້ງ ເອົາພັນເອກ ອິນແຟນ ເຂົ້າມາມີອຳນາດທາງທະຫານຢູ່ລາວອີກ ເຮັດແນວໃດ. ເມື່ອຫລັກຫລາຍກວ່າຖານ,ເມື່ອນ້ຳນອງ ຟອງ ແຮງ,ຈຳເປັນ ພວກເຮົາກໍ່ຕອງຫລົບຫລີກເອົາຕົວລອດສາກ່ອນ. ເພື່ອທຳການຕໍ່ສູ້ຍາວນານ, ເພື່ອກອບກູ້ເອົາປະເທດຊາດ ບານ ເມືອງຂອງເຮົາອອກຈາກມືຂອງພວກຄືນຮຸກຮານມາໃຫປະຊາຊົນ ລາວ ຈົ່ງໄດ ເປັນເອກະລາດອິດສະຫລະພາບອຳນາດອະທິປະ ໄຕພົ້ນແຜ່ນດິນອັນຄົບຖວນຢ່າງແທ້ຈິງ.

ທັງຫມົດທີ່ນາງໄດ້ຟັງ ໄດ້ຍິນລວນແຕ່ເປັນຄຳເວົ້າ ໃຫມ່ ແລະ ແປກປະຫລາດ,ເມື່ອພວກເພິ່ນ "ຫມາຍເຖິງພວກຄືນ ຕໍ່ ຕານ " ເຂົ້າມາຢູ່ບານຂອງນາງແລວ,ພວກເພິ່ນກໍເວົ້າລົມສະ ພາບການບານເມືອງສູ່ແມ່ປານາອາ ອາວລຸງຟັງ,ທັງມີການ ຈັດ ຕັ້ງຊາວຫນຸ່ມເປັນກອງຫລອນ,ຈັດຕັ້ງຫນ່ວຍແມ່ຍິງ,ຈັດຕັ້ງຫນ່ວຍ

ຍຸວັນນາລີ, ທັງໝົດແມ່ໃສ່ອົບຮົມບົ່ມເພາະຈິດໃຈຮັກຊາດໃຫ້ແກ່ພໍ່ແມ່ປະຊາຊົນຊາວບ້ານ.

ໂຮງຮຽນຢູ່ບ້ານຂອງນາງເວລານັ້ນ, ເລີ່ມຈາກປ 5, ປ 4 ແລະ ກໍ່ຈົບຢູ່ ປ 3, ນາງຮຽນຈົບ ປ 3 ແລ້ວກໍ່ບໍ່ມີໂຮງຮຽນຈະຮຽນຕໍ່ອີກ. ທາງການຈັດຕັ້ງ " ນາຍບ້ານລາວອິດສະຫລະ" ຈຶ່ງເປີກສາກັບພໍ່ແມ່ຂອງນາງ " ເວລານັ້ນພໍ່ຂອງນາງເປັນ ຫົວໜ້າກອງຫລອນ, ແມ່ເປັນຄະນະແມ່ຍິງ" ຕົກລົງເຫັນດີ ໃຫ້ນາງເປັນ " ນາງຄູ " ຄື : ຕອນຄໍ່າສອນພວກຜູ້ໃຫຍ່, ກາງເວັນສອນໜັງສືໃຫ້ພວກນ້ອງນ້ອຍ, ຖືວ່າເປັນເອື້ອຍຄູນ້ອຍ ວ່າຊັ້ນເທາະ.

ໃນທ້າຍປີ 1948 ນັ້ນ, ນາງຈຶ່ງກາຍເປັນ"ນາງຄູນ້ອຍປະຈໍາໝູ່ບ້ານ " ຈຶ່ງຍິ່ງເຮັດໃຫ້ພໍ່ກັບແມ່ຮັກນາງຍິ່ງຂຶ້ນ.ທັງ ຊາວບ້ານ , ຄົນໃດກໍ່ຍ້ອງຍໍວ່າ " ລູກສາວລຸງທອງດີ ຈັ່ງແມ່ນເກັ່ງຫລາຍແທ້ນໍ ? "

ຈາກການທີ່ເປັນນາງຄູ, ນາງຈຶ່ງມີໂອກາດໄດ້ໃກ້ຊິດ ກັບພວກອາວຸພະນັກງານ, ໄດ້ຮູ້ວຽກບ້ານວຽກເມືອງຂຶ້ນຕື່ມ ແລະຍາດແຍ່ງຮໍ່າຮຽນເອົາຄວາມຮູ້ຈາກພວກເພິ່ນຕື່ມອີກ.

## ຈາກບ້ານ

ມາຮອດປີ 1950, ເນື້ອໜັງໜ້າຕາສາວນ້ອຍ ພອນເປາະເລາະຂຶ້ນຢູ່ໃນຮູບຮ່າງຕົນຕົວຂອງນາງ, ນາງຈຶ່ງຮູ້ແກ່ ໃຈຕົນເອງວ່າ : ການເລີ່ມຕົ້ນເປັນສາວນ້ອຍໄວ 12 ປີນັ້ນມີ ອັນ

ໃດແຕກຕ່າງເກີດຂຶ້ນຢ່າງບອກບໍ່ຖືກ, ທັງໄດ້ຍິນພົ້ນອງເວົ້າຢອກແກມອິດຫລິເບາະຫລືວ່າແນວໃດກໍ່ບໍ່ຮູ້ກັບພໍ່ວ່າ " ຂໍຫມາຍລູກສາວຫອງວິນຄືນງາມຂອງໂຕໄວ້ເປັນລູກໃພ້ຂອງເຮົາເດີ ?" ສາ ລະພັດແຕ່ພວກເພິ່ນຊິເວົ້າຊິວ່າກັນ, ຈົນວ່ານາງອາຍ ຮອດບໍ່ຮູ້ ຈະວາງຕົວແນວໃດດີ.

ຕົກມາໃນປີນີ້, ເຫັນພວກອາວພວກລຸງເປີກສາຫາລື ກັນເກືອບທຸກມື້, ນາງຈຶ່ງຈອບລັກຟັງອີກ, ພວກເພິ່ນວ່າ: ລັດ ຖະບານລາວອິດສະຫລະທີ່ໂຕນໄປອາໃສຢູ່ປະເທດໄທນັ້ນໄດ້ແຕກ ຄໍແຍກອອກຈາກກັນແລວ, ຍອມການຊຈາງຈອບອອຍຍົວະ ເຍົາຂອງພວກຝຣັ່ງ, ຊຶ່ງແມ່ນ ເຈົ້າສຸວັນນະພູມມາເປັນນາຍົກລັດຖະມົນຕີ, ພະຍາຄຳມາວ ວິໄລ ( ນາຍົກລັດຖະມົນຕີລັດຖະບານລາວອິດສະຫລະ ) ທີ່ໄປອາໄສຢູ່ໄທ, ໄດພອມກັບກະຕ່າຍໂດນສະໂສລິດ, ພາພັກພວກຈຳນວນຫນຶ່ງກັບຄືນມາສະວາມິພັກຢູ່ວຽງຈັນ. ສ່ວນສະເດັດເຈົ້າສຸພານຸວົງ ເປັນຫມູ່ຫນຶ່ງສືບຕໍ່ເຂົ້າປ່າທຳການຕໍ່ຕານການຮຸກຮານຝຣັ່ງເສດ.

ພວກເພິ່ນຕິລາຄານຳກັນວ່າ : ເມື່ອສະພາບຂອງລັດຖະບານລາວອິດສະຫລະມີການແຍກຄືແນວນັ້ນ,ແນວໃດ,ສະຖາ ນະການກໍ່ຈະມີການພັນແປໄປທາງບໍ່ດີຢ່າງແນ່ນອນ.

ແມ່ນອີຫລີ, ບໍ່ດົນ, ນາຍົກລັດຖະມົນຕີເຈົ້າ ສຸວັນນະ ພູມມາ,ກະຕ່າຍໂດນສະໂສລິດ, ພະຍາຄຳມາວວິໄລ ແລະ ພັກພວກກໍ່ປະກາດຢ່າງເປັນທາງການວ່າ " ລົບລາງລັດຖະ ບານລາວອິດສະຫລະ "

ໃນປີນັ້ນເອງ, ການອອກແຮງປາບປາມຂະບວນຮັກ ຊາດ ຂອງປະຊາຊົນລາວຈຶ່ງເດືອດຮ້ອນໄປທົ່ວທຸກຍ່ອມຫຍ້າ.

ທະຫານຝຣັ່ງ ໄດ້ມາຕັ້ງປ້ອມຕັ້ງຄ້າຍປິດລ້ອມການສັນ ຈອນ ໄປມາຂອງປະຊາຊົນ. ທັງມີຂ່າວເປົ່າປິ່ວໄປທົ່ວພູຜາປ່າດົງວ່າ: ນອກຈາກທະຫານຝຣັ່ງຈະປາບປາມພໍ່ແມ່ປະຊາຊົນລາວແລ້ວຄອບ ຄົວໃດມີລູກສາວງາມ, ພວກເຂົາຈະຈັບເອົາໄປເຮັດເມຍໂລດ. ມີລູກຊາຍກໍ່ບັງຄັບເອົາໄປເປັນທະຫານເລວຮັບຈ້າງ...

ຊາວໜຸ່ມ ແລະ ກູອງຫລວງໄດ້ອອກໄປຢູ່ດົງໜາປ່າໄມ້ ໃຫ່ຍແລ້ວ, ພໍ່ຂອງນາງໄດ້ໜີອອກຈາກບ້ານ, ມີແຕ່ແມ່ກັບ ກັບ ພວກລູກພາກັນຢູ່ເຮືອນນ້ອຍແນ່ນ.

ແມ່ບອກໃຫ້ນາງອອກໄປຢູ່ປ່ານຳພໍ່, ແຕ່ນາງບໍ່ຍອມ ໄປ ເພາະຄິດຮອດແມ່, ຄິດດູຕົນແມ່ ແລະ ເປັນຫ່ວງພວກອ້າຍ ພວກ ນ້ອງ. ຊີວິດນາງຄູນ້ອຍຄົນນີ້ຈຶ່ງຢຸດຕິໄວ້ຊົ່ວຄາວ, ເມື່ອ ບ້ານ ເມືອງພວມສັບສົນວົນລະມ່ານເປັນແນວນັ້ນ, ອົບພະຍົບປົບ ເສິກ ເລື້ອຍໆ..

ພໍ່ເຂົ້າມາບ້ານຮັບເອົານາງເຖິງສອງເທື່ອແລ້ວ, ແຕ່ ນາງ ບໍ່ຍອມໄປນຳພໍ່, ເພາະວ່າ, ປະຈຸບັນທຸກໝູ່ບ້ານໃນເຂດ ບ້ານ ເກີດເມືອງນອນລ້ວນແຕ່ບ້ານແຕກສະແຫລກພາຍ, ຂ່າວທະຫານ ຝຣັ່ງພ້ອມທັງທະຫານຫຸ່ນເຂົ້າບ້ານໃດມັນປາບປາມລາວີ, ຈູດ ເລົ້າເຂົ້າເຜົາຫລັງເຮືອນ, ຈັບຍິງຂະຍິງຊາຍໄປທົ່ວທິບ. ຍ້ອນ ເຫດການດັ່ງກ່າວ, ບ້ານໃດກໍ່ແຕກເຂົ້າປ່າກ່ອນທະຫານ ຈະ ເຂົ້າບ້ານ, ແມ່ຂອງນາງກໍ່ຄືປະຊາຊົນທົ່ວໄປ, ພໍວຊ້ຳບໍ່ຢູ່, ຈຶ່ງ

ລ້ຽງລູກຜູ້ດຽວດ້ວຍຄວາມລຳບາກຕາກກຳ, ນາງຈຶ່ງຮູ້ສຶກອີ່ຕົນ ແມ່ຫລາຍ, ເວລາປົບເສິກເຂົ້າປ່າ, ບໍ່ຈັກບ່າຫາບມືຫິ້ວ, ຫລັງເຈັ້ຍລູກນ້ອຍ, ເວລານັ້ນນາງກໍ່ຫາບເຕັມແຮງເພື່ອຊ່ວຍ ແມ່ ສ່ວນຫລາຍມີແຕ່ເຄື່ອງກິນ, ຂອງນຸ່ງຖືທີ່ຈຳເປັນເທົ່ານັ້ນທີ່ຖື ໄປນຳ... ສະພາບການແນວນີ້ຈະໃຫ້ນາງປະແມ່ແລະນ້ອງ ໄດ້ແນວໃດ ? ຖ້າຂືນໄປກໍ່ຈະທຸກໃຈເຖິງພຽງໃດກໍ່ບໍ່ຮູ້...

ເທື່ອທີ່ສາມນີ້, ທັງພໍ່ທັງແມ່ໃຊ້ການບັງຄັບ, ດຶງແຂນຊ້າຍຂອງນາງໄປຕາມຄັນນາ, ມືຂວາຂອງນາງຈັບຮິດໃບເຂົ້າ ພວມຖອກນ່ານໄປຈົດສຸດທົ່ງນາ ນາງທັງຮ້ອງໄຫ້ແນມຄືນຫລັງ ໄປເບິ່ງແມ່, ແມ່ກໍ່ທັງຮ້ອງໄຫ້ທັງປັດມືບອກໃຫ້ລູກຕາມພໍ່ໄປ ລູກເຮີຍເພື່ອຄວາມປອດໄພຂອງລູກ ນາງນ້ອຍທັງຍ່າງທັງຖືກລາກແຂນແຕ່ທີບສື່ວ ບ້ານໄຮ່ຈົນເຖິງບ້ານນາຕານ.

ເຂດທີ່ໝັ້ນຂອງຄົນຕໍ່ຕ້ານ, ເປັນຕູບຢູ່ກາງດົງປ່າຕຶບຕີນພູ, ຊະນິດທີ່ວ່າ : ກ່ອນນີ້ເປັນປ່າ "ຜີບໍ່ຫ່ອງຄົນບໍ່ຫຽວ"ຫາກຍຸງ, ຮີ້ນ, ປານຫມູ່ແມງເນົ່າ, ສຽງສັດປ່າຮ້ອງ, ນາງຊະນິໂຫຍຫວນຍາມເຊົ້າ, ບໍ່ຕ່າງຫຍັງກັບນິທານທີ່ແມ່ເລົ່າສູ່ ຟັງໃນເລື່ອງ " ນາງສິບສອງ " ຖືກພໍ່ແມ່ເອົາໄປໂຜດໄວ້ ກາງດົງກາງປ່າຢ່າງຫນາສົມເພດເວດທະນາ, ບາດສຸດທ້າຍຊ້ຳພັດໄດ້ດີ.

ພໍ່ມອບໃຫ້ນາງຢູ່ກັບທະຫານອາສາສະໝັກຫວຽດນາມ ທີ່ປ່າບ້ານນາຕານ, ແລ້ວຍ້າຍເລິກເຂົ້າໄປໃນດົງຕື່ມອີກ, ຈົນແນມບໍ່ເຫັນຟ້າບໍ່ເຫັນຕາເວັນ.

ຢູ່ທີ່ນັ້ນ, ມີ " ອິງຄົນ " ເປັນຫົວໜ້າທະຫານອາ ສາ ສະໝັກທາວຽດນາມ, ນາງດີໃຈຫລາຍກໍ່ແມ່ນ, ມີເອື້ອຍລອງ ຫລື " ຈິລອງ " ແລະ ຫລາຍເອື້ອຍທີ່ເພິ່ນເອີ້ນນາງນອນນຳສອນ ໜັງສືໃຫ້ນາງ, ເອົາອົກເອົາໃຈນາງປານນ້ອງສາວຄີງ ຂອງ ເພິ່ນ.

ສະພາບການມີການປ່ຽນແປງໄປແຕ່ລະມື້ແຕ່ລະວັນ, ບຶດ ລະຍ້າຍສຳນັກ, ບຶດລະມີຄຳສັ່ງໃຫ້ຕຽມພ້ອມຍົກຍ້າຍ ເກືອບ ທຸກອາທິດ, ມີບາງອາທິດຍົກຍ້າຍຮອດສອງເທື່ອ, ຫລື ຍ້າຍ ໄປບ່ອນອື່ນແລ້ວຊ້ຳພັດກັບມາຢູ່ບ່ອນເກົ່າອີກ. ຕາມທີ່ພໍຈື່ໄດ້ ແຕ່ ລະບ່ອນຍ້າຍນັ້ນກໍ່ມີ, ຍ້າຍເຂົ້າດົງໃຫຍ່, ໄປຢູ່ຜາສີ່ໜ່ໍ ຄຳ ເມືອງທຸລະຄົມ , ແກວນອຍວຽງສານ. ໄປຢູ່ບ່ອນໃດກໍ່ ຮຽນ ໜັງສືຢູ່ບ່ອນນັ້ນ.

ມາຮອດເວລານີ້, ມີຄຳສັ່ງໄປຈາກຂັ້ນເທິງ" ສູນ ກາງ ແນວ " ໃຫ້ຈັດຕັ້ງສຳນັກແຂວງສີສັດຕະນາກ, ແຕ່ງຕັ້ງຍາ ພໍ່ ທິດດີ ເປັນປະທານແຂວງ " ເພິ່ນເປັນຄົນບ້ານນາຄຳ"ພໍ່ ທິດ ລຽນເປັນນາຍົກແນວ, ພໍ່ສະແຫວງເປັນຮອງປະທານ ແຂວງ ຍາພໍ່ອົ້ນເປັນຫົວໜ້າຫ້ອງການ.

ລຸງຈັນມີ ດວງບຸດດີ ເປັນປະທານຕາແສງ "ຕາແສງສະ ໄກ " ຕໍ່ມາ, ມີສະພາບການປ່ຽນແປງ, ລຸງຈັນມີ ດວງບຸດດີ ຂຶ້ນເປັນປະທານແຂວງສີສັດຕະນາກປ່ຽນກັນໄປປ່ຽນກັນມາຈົນ ນາງຂ່ອງກໍ່ຈື່ບໍ່ໄດ້.

# ນິຄົມນາຂໍ

ຢູ່ໃນຈຳນວນຄະນະນຳຂອງທະຫານອາສາສະ ໝັກຫວຽດນາມນັ້ນ,ມີຄົນໜຶ່ງຊື່ວ່າ "ອົງວິງ" ເປັນຊາວໜຸ່ມມີ ອາຍຸເກືອບ 30 ປີແລວ,ທຸກຄົນເອີ້ນເພິ່ນວ່າ "ອົງວິງ" ນາຍພົນປະຈຳພາກຕາເວັນອອກສ່ຽງເໜືອ,ຊື່ແມ່ນ "ອົງວິງ" ຈະໄປເຮັດວຽກເຮັດງານແຕ່ທາງໃດກັນມາ, ເພິ່ນຈະມີຂອງຕອນຂອງຝາກເອົາມາໃຫ້ນາງທຸກເທື່ອ. ເຊັ່ນວ່າ: ຫວີ,ແພ ນົມ, ມີດນອຍ, ແວ່ນແຍງນອຍ, ເຂົ້າຕົ້ມເຂົ້າໜົມບໍ່ຂາດມື ຈັກເທື່ອ. ນາງບໍ່ໄດ້ຄິດອັນໃດຫລາຍໄປກວ່າ " ເພິ່ນຮັກເພິ່ນແພງ " ທຸກເທື່ອ, ເພິ່ນຈະລູບຫົວນາງເຮັດຄືກັນກັບພໍ່ຂອງນາງລູບຫົວແພງຮັກ.ມີບາງເທື່ອ ອົງວິງ ເລົ່ານິທານສູ່ນາງຟັງເວົ້າເຖິງຄວາມສວຍງາມຂອງປະເທດລາວແລະປະເທດຫວຽດນາມເວົ້າເຖິງນະຄອນຫລວງຮ່າໂນ້ຍ,ເພິ່ນວ່າ:ເມື່ອໃດ ຮ່າໂນ້ຍໄດ້ຮັບການປົດປ່ອຍແລວເພິ່ນຈະພາໄປຢຽມຊົມ,ນາງກໍ່ຄິດຫຸ່ມໆຢູ່ໃນໃຈ,ຂະໜາດນະຄອນວຽງຈັນ.ກໍ່ຍັງບໍ່ທັນເຄີຍ ເຫັນຈັກເທື່ອຊໍ້າ, ຄົງຈະເປັນບຸນວາດສະໜາ ຖາຈະມີໂອ ກາດຂ້າມປ່າຂ້າມດົງໄປສຳພັດກັບກິ່ນອາຍຄວາມສວຍງາມນະ ຄອນຮ່າໂນ້ຍຂອງຫວຽດນາມອາຍນອງ.

ເມື່ອຫລາຍເດືອນຕໍ່ຫລາຍປີມາ, ປະທານແຂວງສີສົດຕະນາກປ່ຽນມາເປັນຍາພໍ່ດີ, ເພິ່ນເອີ້ນນາງໄປພົບ, ແລວ ບອກວ່າ : ອົງວິງ ຈະຂໍໝັ້ນໝາຍເອົາລູກໄວເປັນເມຍ,ເພິ່ນມາ

ເວົ້າເລື່ອງນີ້ກັບພໍ່ 5 ເທື່ອແລ້ວ, ເທື່ອໃດ ພໍ່ກໍ່ປະຕິ ເສດ, ອາງວ່ານາງທອງວິນ ຍັງເປັນເດັກນ້ອຍຢູ່,ອະນາຄົດຍັງ ຍາວ ໄກ,ເພິ່ນຫຍັບເຂົ້າມາອາວໃກ້ແລ້ວເວົ້າສຽງອາວຄ່ອຍລົງ ອີກ ວ່າ : ຄວາມຈິງພໍ່ກໍ່ບໍ່ເຫັນດີດອກ, ພໍ່ຈະແພງລູກສາວເອົາໄວ້ ໃຫ້ເປັນສິນບັດຂອງຄົນລາວ.

ນາງຫົວຢ່ານທັງຕົກໃຈ, ຈຶ່ງຄິດເຖິງຄວາມສະໜິດ ສະໜົມທີ່ ອົງວິງ ມີຕໍ່ນາງ "ທີ່ແທ້ກໍ່ແມ່ນຢາກໄດ້ນາງເປັນ ເມຍ ຫັ້ນເອງ ".

ຢູ່ຕໍ່ມາອີກເດືອນໜຶ່ງ,ມີ ພະນັກງານຂັ້ນລັດຖະບານລາວ ອິດສະຫລະຕໍ່ຕ້ານລົງມາປະຈໍາຢູ່ແຂວງ,ເພິ່ນຕາງໜ້າລັດ ຖະບານລາວຕໍ່ຕ້ານລົງມາຊີ້ນຳວຽກງານຢູ່ທ້ອງຖິ່ນເພື່ອສ້າງ ຮາກ ຖານຢູ່ພາກນີ້,ເພິ່ນຜູ້ນີ້ຖານະເປັນຜູ້ແທນລັດຖະບານລາວ ຕໍ່ ຕ້ານປະຈໍາພາກຕາເວັນອອກສ່ຽງເໜືອ.

ອົນວ່າເພິ່ນນີ້ອີກຫັ້ນແລ້ວ, ພໍແຕ່ແນັບເຫັນໜ້ານາງກໍ່ມີ ແສງຫູແສງຕາກ່ຽວພາລາສີໂລດ, ເພິ່ນຊື່ວ່າ " ທິດແກ້ວ "

ອົນວ່າເປັນສາວນ້ອຍວາຊຸ່ນເທາະ, ທຸກຄົນຍ່ອມສົນ ໃຈ ເລື່ອງຄູ່ຄອງ.ມື້ໜຶ່ງ, ພໍ່ສະແຫວງປະທານສຳນັກ ເມືອງ ຮຽກເອົານາງໄປເວົ້າລົມນຳ, ບໍ່ຮູ້ວ່າເພິ່ນເວົ້າຫລິ້ນເບາະຫລື ວ່າເວົ້າອີ່ຫລີ ? ເພິ່ນຂໍເບິ່ງລາຍມື,ແລ້ວກໍ່ພະຍາກອນໄປວ່າ: ເນື້ອຄູ່ຂອງຫລານເປັນຄົນເກີດຢູ່ທາງທິດໃຕ້ ແຕ່ໄປເປັນ ໃຫຍ່ ເປັນໂຕຢູ່ທາງທິດເໜືອ, ເປັນຄົນລາວ,ຮູບຮ່າງຕ່ຳເກິ້ງໜ້າ ຕາງົດງາມ, ມີຜິວເນື້ອສີປາເລີນ, ມີຄວາມຮູ້ສູງ , ສະ

ຫລາດຫລັກແຫລມເໜືອກວ່າຄົນທັງປວງ, ໄດ້ຍິນໄດ້ຟັງແລ້ວກໍ່ມີແຕ່ຄວາມດີໃຈຕາມພາສາຂອງສາວນ້ອຍ, ໃຜໆກໍ່ປາຖະໜາ ຄືແນວນັ້ນ. ຕໍ່ມາ, ສຳນັກໄດ້ຍົກຍ້າຍເຂົ້າໄປໃນດົງຕຶບໜາຕື່ມອີກ. ມີສາຍຢູ່ໃນບ້ານໄປລາຍງານວ່າ "ທະຫານຝຣັ່ງ ອອກກວດລ້າງແຮງຫລາຍ, ເທື່ອນີ້ພວກເຂົາປະຕິບັດຄຳຂວັນ 3 ກ້ຽງຄື " ຈູດກ້ຽງ, ປົດກວາດກ້ຽງ ແລະ ຈັບເອົາພວກ ຄົນອິດສະຫລະໃຫ້ກ້ຽງ "

## ຖືກປິດລ້ອມ

໑໐ ວັນຕົ້ນໆ, ທີ່ພາກັນຢູ່ກາງດົງ, ບໍ່ມີຄົນໃດຈະອອກຈາກດົງເຂົ້າໄປບ້ານໄດ້ເລີຍ ແລະ ກໍ່ບໍ່ມີປະຊາຊົນພື້ນຖານຄົນໃດຈະອອກຈາກບ້ານເຂົ້າໄປປ່າດົງຕິດຕໍ່ພົວພັນນຳໄດ້ອີກ.

ຈຶ່ງເປັນຊີວິດເທື່ອທຳອິດທີ່ນາງໄດ້ພ້ອມໝູ່ຫລາຍຄົນ ສຳພັດກັບຄວາມອຶດຢາກອິດຫິວຢ່າງແສນສາຫັດ.

ຫົວເຜືອກ, ຫົວມັນ, ບອນຜາ, ໜໍ່ໄມ້, ກົກກ້ວຍ, ຫົວ ກ້ວຍພາກັນຈົກໄວ້, ພາກັນຂຸດເອົາມາເໜືອດໃສ່ເຂົ້າທີ່ພໍມີຢູ່ບໍ່ ພໍເທົ່າໃດກະປອງນ້ຳນົມງົວແລ້ວກໍ່ພາກັນກິນ, ຮ່າງກາຍ ທຸກ ຄົນຈ່ອຍຜອມ, ລາເຫລືອງປານຫົວຂົມິ້ນຂົ້ນ, ການເຈັບໄຂ້ໄດ້ພະຍາດເກີດຕິດຕາມມາ, ເນື່ອທາກຍຸງໂຕຂຸມ, ຮົ້ນ ມີ ຫລວງຫລາຍ, ບໍ່ມີຢາກິນປ້ອງກັນ, ນອນບໍ່ມີມຸ້ງກາງ, ດັງໄຟ ກອງໃຫຍ່ກໍ່ບໍ່ໄດ້. ດີແຕ່ວ່າທຳມະຊາດໄດ້ມີພ້ອມທຸກຢ່າງ, ມີຫ້ວຍນ້ຳວົງໃສເຢັນ, ມີປ່າໄມ້ດົງໜາຂຽວງາມ, ມີສາຍລົມ, ມີ ດອກ

ໄມ້ນາງພົມ, ມີສຽງນົກຮ້ອງເສບວັນ, ຈຶ່ງເປັນຊີວິດຢູ່ກັບທຳມະຊາດມ່ວນໃຈເອົາແທ້ເອົາວ່າ.

ນາງພອນດອຍໝູ່ນຳກັນ 10 ກວ່າຄົນແຕ່ລະຄົນດຳລົງຊີວິດຮ່ວມທຸກຮ່ວມຍາກ, ຮ່ວມລຳບາກກາກກຳບົນອຸດົມຄະຕິ ດຽວກັນ, ຄວາມຮັກແພງກັນນາງຮູ້ສຶກວ່າ : ຍິ່ງກວ່າຄອບຄົວ ດຽວກັນ. ຄວາມຮັກແພງລະຫວ່າງເພດຍິງເພດຊາຍກໍ່ບໍ່ຕ່າງຫຍັງກັນກັບລູກຮ່ວມທ້ອງຂອງພໍ່ແມ່ດຽວ, ນັບຖືຫົວໜ້າກອງເໝືອນດັ່ງອາຈານ, ນັບຖືຜູ້ມີອາຍຸສູງເໝືອນດັ່ງພໍ່ແມ່ຕົນ, ໃນເດືອນໄຂກັນດານແບບນີ້ທຸກຄົນໄດ້ຮັບຄວາມຮັກແພງໂອບອ້ອມອາລີຊວງກັນ ແລະ ກັນໃນກົມກອງຈຶ່ງເຮັດໃຫ້ນາງສາວນ້ອຍລືມເປັນບັ້ນເຖິງຄວາມຄິດເຖິງແມ່.

ໝົດເຜືອກມັນ, ໝົດບອນຜາ, ໝົດໜໍ່ໄມ້ແລ້ວກໍ ແມ່ນເຫັນແຕ່ " ຫົວກະເບົາ " ທີ່ຄົນລາວເຮົາໄປຂຸດເອົາມາ ຕົ້ມຍ້ອມຜ້າແພ, ຈຶ່ງພາກັນໄປຂຸດເອົາຫົວໝາກກະເບົາມາຮໍ່ນາງເປັນຜູ້ຮໍ່, ເມັຍຍາພໍ່ຄຳຕັນເປັນຜູ້ຄົ້ນເປັນຜູ້ຫັນຽວ, ແລ້ວ ເອົາຖອກໃສ່ບັ້ງໄມ້ເຂົ້າຫລາມເພື່ອຫລາມໃຫ້ສຸກ. ພໍຫລາມສຸກແລ້ວກໍເອົາພາມາຖາກ. ເອົາກາບດຳອອກ ແລ້ວເອົາມີດບັ້ນແບ່ງແຕ່ລະສ່ວນໃຫ້ເທົ່າກັນ, ເພື່ອວ່າ " ບໍ່ໃຫ້ຄົນໃດໄດ້ຫລາຍໄດ້ໜ້ອຍລູດລື່ນກັນ " ເວັ້ນເສັຍແຕ່, ແບ່ງປັນກັນແລ້ວ, ໃຜຢາກ ຫັກຢາກບໍ່ຢາກແບ່ງໃຫ້ກັນກໍ່ສຸດແລ້ວແຕ່ໃຈ.

ທຸກຄົນບໍ່ແບ່ງສ່ວນທີ່ໄດ້ມາໃຫ້ກັນຕ່າງຫາກ ນາງນ້ອຍ ກໍ່ໄດ້ສ່ວນໝູ່ແບ່ງເພີ້ມຕ່າງຫາກເໝືອນກັນ ຈຶ່ງກິນເຕັມອີ່ມ, ອີ່

ພໍ່ອີແມ່ຂອຍເອີຍ... ! ຍອນກິນຫົວກະເບົາຫມົດ ເຂົ້າຫລາຍໂພດ, ເອີ ! ລືມໄປ... ການຫລານເຂົ້າໃສ່ກັບ ຫົວກະເບົາ, ແມ່ນເອົາເຂົ້າສານຫນຶ່ງກະປອງນ້ຳນຶ່ງວີດຕໍ່ຫົວກະເບົາ 10 ປອງ.ນາງກິນຫລາຍໂພດ ຈຶ່ງເມົາຮາກແຕກ ຮາກແຕນ, ໂລກທັງໂລກປິ່ນລ່ວງຄວງ, ພໍ່ສະແຫວງຈຶ່ງໄປ ຂອກເອົາໃບຢາເທົ່າທີ່ເພິ່ນຮູ້ມາຫລານໃສ່ບົ້ງໃຫ້ນາງກິນ,ນາງ ຈຶ່ງລອດຕາຍຈາກການເບື່ອເມົາ, ຮ່າງກາຍທີ່ຈ່ອຍເຫລືອງ - ເຫມືອນພູອື່ນຢູ່ແລ້ວຍິ່ງຈ່ອຍເຫລືອງລົງຕື່ມ,ຈົນຕາໂກນ ໂກມໂວກລົງກັບຫມອງ.

ເວລານີ້ພໍ່ຂອງນາງເຄື່ອນໄຫວຢູ່ອີກເຂດຫນຶ່ງ,ໄປມາຕິດຕໍ່ກັນບໍ່ໄດ້, ໃຜຢູ່ບ່ອນໃດແມ່ນຢູ່ບ່ອນນັ້ນ,ເພາະທະຫານສັດ ຕູອອກກວາດລາງແຮງຫລາຍ.

## ຕິດຕໍ່ກັນໄດ້

ເມື່ອຄິດຄືນເຖິງຄຳເວົ້າຂອງແມ່ທີ່ເລົ່າສູ່ຟັງຢ່າງ ເປັນຫມັ້ນເປັນຫມາຍວ່າ "ລູກບໍ່ແມ່ນລົມທຳມະດາ,ແມ່ນແກວ ປະເສີດທີ່ລ້ຳຄ່າ ທີ່ຕາພະຂາວເອົາມອບໃຫ້ແກ່ແມ່"ແຕ່, ຖາແມ່ນແກວປະເສີດທີ່ລ້ຳຄ່າ, ເປັນຫຍັງຄືວ່າອັບເສົາເຖິງພຽງນີ້ ? ຫລືວ່າ, ຍັງບໍ່ທັນເຖິງຄາວເຮືອງແສງ ? ຄິດເຖິງຕອນ ນີ້ນາງເທື່ອກໍ່ເຮັດໃຫ້ນາງສະບາຍໃຈ,ເມື່ອຄິດວ່າ:ການອົດ ທົນຜ່ານຜ່າອຸປະສັກຄວາມຫຍຸ້ງຍາກນັ້ນ ມື້ໃດມື້ຫນຶ່ງຈະຕອງ ເຖິງເສັ້ນໄຊຊະນະຢ່າງແນ່ນອນ.

ເວລານັ້ນນາງຮູ້ດີວ່າສັດຕູຂອງປະຊາຊົນລາວແມ່ນໃຜ ? ເພາະໄດ້ຮຽນການເມືອງຮູ້ເຫັນສະພາບການຢູ່ຕະຫລອດເວລາ ຈຶ່ງມີຈິດໃຈຮັກຊາດ, ຄຽດຊັງສັດຕູ, ຮັກຫອມປະຊາຊົນ ອີ່ດູຕົນ ຄົນທີ່ຖືກກົດຂີ່. ແລ້ວນາງກໍ່ຕັດສິນໃຈອອກແຮງຮ່ຳຮຽນ ຫນັງສືໃຫ້ໄດ້ເພື່ອຈະໄດ້ກາຍເປັນຄົນທີ່ມີຄວາມຮູ້ມີຄວາມສາ ມາດ ໃນພາຍພາກຫນາ.

ນາງນັບອ່ານກະປ໋ອງເຂົ້າແຕ່ລະກະປ໋ອງ, ເມັດເຂົ້າ ແຕ່ລະເມັດທີ່ພໍ່ເຫມືອດກັບຫົວກະເບົາ ໄດ້ອີກພຽງ 2 ຄາບເທົ່ານັ້ນ

ຕອນແລງຂອງມື້ຊຶ່ງຄິດວ່າອາຫານການກິນຄົງຈະບໍ່ມີຫຍັງ ອີກແລ້ວນັ້ນ, ມີຊາຍຫນຸ່ມ 2 ຄົນລັດລອດ ເຂົ້າໄປຫາ, ແຕ່ ລະຄົນພາກັນຫາບຕຸ້ມນົກຕໍ່ທີ່ໃຊ້ຕໍ່ນົກຕໍ່ຢູ່ກາງດົງ, ທີ່ແທ້ກໍ່ແມ່ນ ປະຊາຊົນຊາວບ້ານນຳເອົາເຂົ້າສານໄປສົ່ງໃຫ້, ດ້ວຍການ - ເອົາແພຂາດຕຸ້ມເຂົ້າສານຮັດເປັນຫໍ່ແລ້ວເອົາຍັດໃສ່ໃນຕຸ້ມນົກ ຕໍ່ເພື່ອບັງຕາທະຫານຝຣັ່ງທີ່ມີຢູ່ຕົ້ນບ້ານຕົ້ນເມືອງ.

ອ້າຍບ່າວທັງສອງເຂົ້າປ່າເອົາເຂົ້າມາສົ່ງໃຫ້ພວກຄົນ ກູ້ ຊາດບໍ່ເຖິງສາມມື້ກໍ່ເສັຍລັບ, ເມື່ອທະຫານສັດຕູ ເຂັ້ມ ງວດ ກວດຂັນ " ຄົນໃນບໍ່ໃຫ້ອອກ, ຄົນອອກບໍ່ໃຫ້ເຂົ້າ" ແຕ່ປານນັ້ນ ປະຊາຊົນກໍ່ຍັງພາກັນໄປຮັດສວນນ້ອຍຢູ່ກາງດົງ, ພາກັນ ເອົາ ເຂົ້າເປືອກໄປໃສ່ໄວ້ທີ່ນັ້ນ, ແລ້ວພວກກູ້ຊາດກໍ່ພາກັນໄປ ຂົນ ເອົາເຂົ້າເປືອກມາ.

ບັນຫາຕຳເຂົ້າກໍ່ບໍ່ແມ່ນເລື່ອງງ່າຍດາຍ, ຖ້າຈະພາ ກັນ ຮັດຄົກຮັດສາກຕຳເຂົ້າ " ສັກກະເລື່ອງເບິບ "ຄືເຮົາ ຕຳ

ເຂົ້າຄົກນອງຢູ່ບ້ານຢູ່ເຮືອນນັ້ນມີຫວັງເສຍລັບ, ຈຶ່ງພາກັນ ຊຸດຊຸມ, ເອົາໃບຕອງຈິງຮອງພື້ນເອົາກາບລາງຊອນແລວຕັດເອົາວາໄມເທົ່າແຂນມາເປັນສາກມີຕຳເທື່ອລະກອບເທື່ອລະກຳ, ທັງເຂົ້າທັງດິນທັງແກບທັງຮຳປົນເປກັນ, ຈຶ່ງພາກັນປັດພາກັນເປົ່າເອົາດິນອອກ, ເອົາກາບລາງເຮັດກະໂດງຟັດເຂົ້າ, ແຕ່ກໍ່ເປັນຊີວິດທີ່ມ່ອນ, ທັງມັກເວົ້າຢອກກັນເວລານັ່ງກິນເຂົ້າຢູ່ນຳກັນວ່າ " ພວກເຮົາໄດກາຍເປັນຄົນບັງບົດໄປແລວບໍ່ນີ້ ? " ຄົນ ທີ່ອ່າວຂົ້ດແດກໍ່ວ່າ " ກໍ່ດີລະບໍ, ຄົນບັງບົດແມ່ນຄົນມີສິນທັມ, ບໍ່ກິນຊິ້ນ, ບໍ່ເວົ້າຂີ້ຕົວະ, ຄົນບໍ່ມີບຸນແທງແມ່ນບໍ່ພົບເຫັນ". ແລວກໍ່ພາກັນຫົວແຕກອ້ນຂ້ນ.

ຕາມປະຊາຊົນເລົ່າສູ່ຟັງວ່າ: ທະຫານຝລັ່ງພະຍາຍາມຈະເຂົ້າປ່າບ່ອນທີ່ນຫລາຍເທື່ອ, ເພື່ອກວາດລ້າງຊອກຫາຄົນ ຮັກຊາດ, ພໍ່ປະຊາຊົນບອກວ່າ:" ຢູ່ໃນດົງທັ້ນມີຜີຮາຍ " ພວກເຂົາຈຶ່ງບໍ່ເຂົ້າໄປ.

## ເປັນພະນັກງານນ້ອຍ

ເມື່ອຜ່ານໄປຫລາຍເດືອນ, ບໍ່ຮູ້ວ່າດອຍເຫດພົນກົນ ໄກອັນໃດ, ສະພາບການເຄັ່ງຄັດຈຶ່ງໂຍະຍານແດ່.

ລຸງມົ່ນ ສີນູວິຈິດ ເປັນຜູ້ບັນຊາການທະຫານ, ແຕ່ງຕັ້ງໃຫ້ເອື້ອຍສີກັບນາງພອນພະນັກງານຊາຍຈຳນວນໜຶ່ງ ເປັນພະນັກງານທີ່ເອີ້ນກັນເວລານັ້ນວ່າ " ກອງຢອດນ້ຳມັນຊີມ " ກໍ່ດີ

" ກອງເຄື່ອນໄຫວຂົນຂວາຍສາງພັນຖານ ".

ຜ່ານການເພີຍແຜ່ສະພາບການ, ຈຶ່ງຮູ້ຫາດພົນທີ່ທະຫານຝລັ່ງໂຍະຍານ, ສະເພາະໃນເວລານັ້ນ,ຄືກາງປີ 1950ພວກລ່າເມືອງຂຶ້ນຝລັ່ງໄດ້ປະສານມືກັບຈັກກະພັດອາເມລິກາ, ເຕົ້າໂຮມກຳລັງຢ່າງຫລວງຫລາຍ ເພື່ອຈະຢຶດເອົາ 3 ແຂວງ ທັງພາກເໜືອຄື: ແຂວງຜົ້ງສາລີ, ແຂວງຫົວພັນ ແລະ ແຂວງຊຽງຂວາງ. ຊຶ່ງເປັນເຂດຕິດຕໍ່ກັບສະໜາມຮົບພາກ ເໜືອຫວຽດນາມ.

ທາງການເມືອງ, ພວກມັນໄດ້ໃຊ້ສາກ "ເອກະລາດ" ອັນປອມແປງເພື່ອຕົວະຍົວະຫລອກລວງປະຊາຊົນລາວ.

ຊີວິດການເລີ່ມຕົ້ນເປັນພະນັກງານຂອງນາງຈຶ່ງໄດ້ ເກີດຂຶ້ນຈາກຈຸດນັ້ນ. ເອື້ອຍສີ ເວົ້າລົມກັບປະຊາຊົນແລວກູ່ ແບ່ງເວລາໃຫ້ນາງໂອ້ລົມຫັດເວົ້າ ທຳອິດ,ນາງອາຍຈົນໜ້າ ແດງຫົວໃຈສັ່ນເຊັນ.ເມື່ອດົນຕໍ່ດົນໄປກໍເລີຍເຄີຍຊິນ,ຈົນເອື້ອຍ ສີອອກປາກຍອງຕໍ່ໜ້າຕໍ່ຕາວ່າ " ອະນາຄົດ,ນອງຈະ ຕອງກາຍເປັນພະນັກງານແມ່ຍິງທີ່ດີເດັ່ນຄົນໜຶ່ງ " ການຍອງຂອງເອື້ອຍສີ ໄດ້ຮັດໃຫ້ນາງມີຄວາມຕັ້ງໃຈ ເຝິກຝົນຕົນເອງ ຢູ່ຕະຫລອດເວລາ.

ກອງປະຕິບັດງານສາງພັນຖານຂອງໜ່ວຍນີ້ໄດ້ ເຄື່ອນໄຫວໄປຫລາຍທີ່ຫລາຍບ່ອນ, ໂດຍສະເພາະແມ່ນເຄື່ອນ ໄຫວຢູ່ຂອບເຂດວັງວຽງ,ສາມມື່ນເມືອງເຟືອງ,ທຸລະຄົມ ແລະ ທີ່ອື່ນໆ...

ການອອກເຄື່ອນໄຫວໃນເວລານັ້ນ, ຄືລັກເວົ້າລັກວ່າກັບພໍ່ແມ່ປະຊາຊົນທີ່ອອກໄປເຮັດໄຮ່ເຮັດນາ, ເພາະເຂົ້າໄປ ໃນບ້ານໃນເມືອງບໍ່ໄດ້, ຈັດຕັ້ງໜ່ວຍແນວໂຮມ, ໜ່ວຍຍຸວັນນາລີ ໜ່ວຍກອງຫລອນ, ຊີວິດຂອງພວກໜ່ວຍເຄື່ອນໄຫວຈຶ່ງ - ເໝືອນກັນປະຈົນໄພທີ່ອາໄສປ່າເປັນເຮືອນ, ອາໄສເດືອນ - ດາວເປັນແສງກະບອງໄຕ້, ມີຍຸງມີທາກມີສັດປ່າເປັນໝູ່ເປັນເພື່ອນ, ເປັນຊີວິດທີ່ລຳບາກ, ແຕ່ກໍ່ສະບາຍໃຈໄປແນວ ໜຶ່ງ ເພາະທຸກຄົນໄດ້ມີຄວາມຝັກໄຝ່ຫາອຸດົມຄະຕິອັນສູງສົ່ງຄື: ຫວັງຢາກໃຫ້ປະເທດຊາດເປັນເອກະລາດ, ມີອິດສະຫລະພາບ, ສັນຕິພາບ ແລະ ອຳນາດອະທິປະໄຕ ພື້ນແຜ່ນດິນທີ່ແສນຮັກ ດິນຕ້ອງເປັນຂອງປະຊາຊົນລາວຢ່າງແທ້ຈິງ, ແລະ ປາຖະ ໜາຢ່າງແຮງກ້າໃຫ້ປະຊາຊົນລາວທຸກຄົນໄດ້ຢູ່ເຢັນເປັນສຸກ, ປະເທດຊາດໄດ້ຮັບການສ້າງແປງໃຫ້ຮຸ່ງເຮືອງເຫລືອງ ເຫລື້ອມໃນອານາຄົດ.

ອຸດົມການດັ່ງກ່າວໄດ້ກາຍເປັນຄວາມສຸກໃຈຂອງນັກ ກູ້ຊາດດວຍການຮຸກຮານຂອງຊາດອື່ນ, ບໍ່ວ່າຍາມດັບຂັນກໍ່ດີຍາມທຸລະກັນດານຈິ່ງມີຄວາມຊື່ນບານຢູ່ສະເໝີ. ຈາກນັ້ນນາງກໍ ເພີ່ມຄວາມຮູ້ສຶກໃໝ່ທີ່ມີຄ່າທີ່ສຸດນັ້ນກໍ່ຄື: ເຂົ້າໃຈ ແລະ ເຫັນແຈ້ງຕໍ່ການດຳລົງຊີວິດທີ່ມີອຸດົມການ, ມີຄວາມຝັກໄຝ່ແຫ່ງ ຄວາມຫວັງທີ່ສວຍສົດງົດງາມນັ້ນແມ່ນຄວາມສຸກຂອງຊີວິດຄົນ ເຮົາ.

ຕິດຢູ່ກັບຕົວຂອງນາງທຸກເວລາກໍ່ມີມີດນ້ອຍດ້າມເງິນ ຝັກເງິນທີ່ແມ່ມອບໃຫ້ເປັນຂອງຂວັນກ່ອນຈະຈາກແມ່ໄປ. ຖົງພາຍ

ຫ້ອຍຢູ່ບ່າ ຫລື ເອົາໄວ້ຂ້າງກໍ່ແມ່ນມີມືດນ້ອຍຢູ່ໃນ, ຄວາມຍາວຂອງມີດພໍດີຄືບໜຶ່ງ, ຈຶ່ງແພງແທ້ແພງວ່າ ເພາະເປັນ ຂອງແມ່ນອບໃຫ້.

ຕໍ່ມາ, ໄດ້ຈັດຕັ້ງໜ່ວຍຂຶ້ນໃໝ່, ເອົາພໍ່ອ້ວນ ບ້ານ ປາກຣາງເປັນຮອງ, ພໍ່ສະແຫວງເປັນຫົວໜ້າ, ສ່ວນນາງທັງ ເປັນພະນັກງານນ້ອຍ, ທັງເປັນສະໝຽນ, ເພາະຢູ່ທີ່ນັ້ນ, ແມ່ນນາງຮູ້ຈັກອ່ານຮູ້ຈັກຂຽນໜັງສືເປັນດີກວ່າເພື່ອນ.

ສະພາບການທີ່ໄດ້ຮັບຮູ້ແຕ່ລະມື້ເຮັດໃຫ້ຕື່ນເຕັ້ນດີ. ເມື່ອຮູ້ວ່າ, ພວກລ່າເມືອງຂຶ້ນຝຣັ່ງກັບຈັກກະພັດອາເມລິກາ ພວມຂັດແຍ່ງທາງດ້ານຜົນປະໂຫຍດກັນຢ່າງໜັກຢູ່ ອິນດູຈີນ, ທັງ ຮູ້ອີກວ່າ: ເວລານີ້ສົງຄາມຢູ່ເກົາຫລີພວມຫັນມາສູ່ ອິນດູ ຈີນການສູ້ຮົບ ກັນຢູ່ຫວຽດນາມນັບມື້ນັບເພີ່ມທະວີ, ເມື່ອກຳລັງປະຕິວັດ ຫວຽດນາມມີແຜນການປົດປ່ອຍ "ດຽນບຽນຟູ "( ເມືອງແຖງສະໄໝຍັງເປັນດິນລາວ ).

ພໍຕົກມາຕົ້ນປີ 1951, ຈັກກະພັດອາເມລິກາໄດ້ ແຊກຊຶມພວກລ່າເມືອງຂຶ້ນຝຣັ່ງ ຢູ່ໃນອິນດູຈີນ.

ອາເມລິກາຈຶ່ງໂຄ່ນລົ້ມ ບຸນອຸ້ມ ນະຈຳປາສັກ ລູກມື ຮັບໃຊ້ຈຳຂອງຝຣັ່ງລົງ, ແລ້ວມອບຕຳແໜ່ງນາຍົກລັດຖະມົນຕີ ໃຫ້ແກ່ ຜູຍຊະນະນິກອນ. ເວລານີ້ເງິນໂດລາອາເມລິກາ 1 ໂດລາຕໍ່ 35 ກີບເງິນລາວ, ເງິນກີບລາວຊ້ຳພັດແພງກວ່າ ເງິນຝຣັ່ງຄື 1 ກີບເງິນລາວເທົ່າກັບ 12 ຟະຣັງ.

ມາຮອດວັນທີ 23 ທັນວາ, ຝຣັ່ງຊ້ຳພັດປົດເຂີຍນາຍົກ

ພຸຍຊະນະນິກອນລົງ, ເອົາເຈົ້າສຸວັນນະພູມມາຂຶ້ນເປັນນາ ຍົກແທນ. ຄວາມຂັດແຍ່ງຂອງຝຣັ່ງກັບອາເມລິກາ ຈຶ່ງ ເໝືອນສອງກົນພວມງັດຂໍ່ສອກກັນ, ເພື່ອຄວາມຢູ່ລອດຂອງຄົນທີ່ ເຂັ້ມແຂງກວ່າ.

ນາງໄດ້ຮູ້ໄດ້ຟັງເຖິງສະພາບການ, ກໍ່ຍິ່ງເຮັດໃຫ້ ນາງກະຕືລືລົ້ນ, ທັງເຊື່ອໝັ້ນໃນສັດຈະທຳຂອງຊາດລາວແລະປະຊາຊົນລາວທີ່ລຸກຂຶ້ນຕໍ່ສູ້ກູ້ຊາດ, ເຊື່ອໝັ້ນແນວລາວອິດສະຫລະທີ່ພວກເພິ່ນນຳພາປະຊາຊົນລາວດ້ວຍຄວາມໝັ້ນທ່ຽງແໜ້ນແກ່ນແຂງ.

## ເດີນທາງໄກ

ໃນປີ 1951 ນັ້ນເອງ, ທາງສຳນັກແຂວງສີສັດຕະນາກ ຊຶ່ງແມ່ນພໍ່ມື່ນເປັນຫົວໜ້າ, ໄດ້ບົ່ງຕົວເອົາພະນັກງານທີ່ດີ - ເດັ່ນຈຳນວນໜຶ່ງໄປນຳ, ໃນນັ້ນມີນາງຜູ້ໜຶ່ງ, ເພິ່ນບອກພຽງສັ້ນໆວ່າ: "ຂຶ້ນເມືອຮ່ວມກອງປະຊຸມນຳຄະນະລັດຖະບານຕໍ່ຕ້ານທີ່ຊຳເໜືອ" ແຕ່ເທື່ອນັ້ນນາງບໍ່ຍອມໄປເພາະບໍ່ເຄີຍເດີນ ທາງຍາວຄາວໄກຈັກເທື່ອອີກຢ່າງໜຶ່ງກໍ່ຄຶດງ້ຶຄຶດວ່ຽງຕໍ່ການບໍ່ເຄີຍປະສົບປະການໃນຊີວິດຕໍ່ການເດີນທາງໄກມາໄວ້ກ່ອນ.

ແຕ່ຢູ່ມາບໍ່ພໍ່ເທົ່າໃດເດືອນ, ທາງຄະນະແຂວງສີສັດ ຕະນາກເລີຍເລົ່າຂ່າວໃຫ້ນາງຮູ້ວ່າ: ທາງລັດຖະບານລາວຕໍ່ ຕ້ານໄດ້ສັ່ງມາວ່າໃຫ້ເລືອກເອົາຜູ້ແທນແມ່ຍິງແຂວງ ສີສັດຕະ ນາກໄປຮ່ວມກອງປະຊຸມແມ່ຍິງສາກົນທີ່ສະຫະພາບໂຊວຽດວ່າ ຊຶ່ນ

ພ້ອມພິຈາລະນາກັນຢູ່, ເດືອນລຸນຕໍ່ມາເພິ່ນໄດ້ເຊີນນາງ ພ້ອມປ້າບຸນໄທ ໄປລຸ ລວງວ່າ: ທາງຄະນະແຂວງໄດ້ຕົກລົງ ເຫັນດີໃຫ້ພວກເຈົ້າທັງ 2 ໄປຮ່ວມກອງປະຊຸມແມ່ຍິງສາກົນ, ຈຶ່ງກຽມເຄື່ອງສາ, ຄ່ອຍພາກັນອອກເດີນທາງນາງໄດ້ໄປພົບ ລຸງຈັນມີ ດວງບຸດດີ, ເພິ່ງເພິ່ນສົ່ງຂ່າວຄາວໃຫ້ພໍ່ ແລະແມ່ພ້ອມທັງເອົາມີດໂຕບນ້ອຍ ແລະ ປົດຕຸ້ມຫູຄຳອອກຈາກຫູທີ່ແມ່ເອົາມອບໃຫ້ເປັນຂວັນໃຈທີ່ລະລຶກຂອງແມ່, ແມ່ເວົ້າວ່າ: ຖ້າລູກຄິດຮອດແມ່ ລູກຈົ່ງແຍງແອ່ນເບິ່ງຕຸ້ມຫູ ແລະ ເບິ່ງມີດໂຕບດວງນີ້ ເນີລູກເຮີຍ. ນານມື້ນນາງຄິດວ່າ: ການອອກເດີນທາງບໍ່ຮູ້ວ່າຈັກວັນຈັກເດືອນຈຶ່ງຮອດຈຸດທີ່ໝາຍບົນເສັ້ນທາງເດີນຕ້ອງໄດ້ຜ່ານພາ ຍຸລົມແດດອັນຕະລາຍຮ້າຍແຮງພຽງໃດອາດເຖິງແກ່ຄວາມ ຕາຍກໍ່ບໍ່ຮູ້. ເມື່ອແມ່ໄດ້ຮັບຂອງນັ້ນສົ່ງຄືນບໍ່ຮູ້ເພິ່ນຈະຄິດ ແລະລະແວງສົງໄສເລື່ອງຕ່າງໆແນວໃດເດ ? ຈຶ່ງເພິ່ງລຸງຈົ່ງຊອກຊ່ອງທາງສົ່ງຂ່າວໃຫ້ເພິ່ນອຸ່ນອຽນໃຈຢູ່ສະເໝີ...

ເວລານັ້ນ ນາງມີອາຍຸ 13 ປີ, ເປັນສາວນ້ອຍ ເຕັມຄີງ, ເດີນທາງທັງກາງເວັນ ແລະກາງຄືນ, ຊວງມີພະນັກງານພົນຖານນຳທາງຈັດສົ່ງໄປຫາແຕ່ລະບ່ອນ. ເພາະເວລານັ້ນແນວໂຮມແຫ່ງຊາດໄດ້ຮັບການປັບປຸງຢ່າງກວ້າງຂວາງ, ການຕໍ່ ສູ້ກູ້ຊາດໄດ້ຂະຫຍາຍຕົວຢ່າງແຂງແຮງ " ສະມາຄົມກູ້ຊາດ" , " ສະມາຄົມແມ່ຍິງອິດສະຫລະ " " ສະມາຄົມຊາວໜຸ່ມ ອິດສະຫລະ " " ສະມາຄົມລາວສູ້ຕ້ານຝຣັ່ງ "ແລະ"ສະມາຄົມຜູ້ເປັນພໍ່ແມ່ທະຫານ " ບໍ່ຕ່າງຫຍັງກັບຕາໜ່າງທີ່ຖືກກາງເອົາ

ໄວ້ມັດພວກຣຸກຣານ, ເປັນສາຍໃຍຢ່າງເຊື່ອມຍິງທີ່ນາງ ໄດ້ສຳພັດຈາກການເດີນທາງໃນເທື່ອນັ້ນ.

ເພື່ອຄວາມປອດໄພໃນການເດີນທາງ, ພໍໄປຮອດເມືອງບ່ອນໜຶ່ງ, ຄະນະຈຶ່ງຕອງແຍກກັນ, ມີແຕ່ນາງກັບເອື້ອຍ ສີເດີນທາງຮ່ວມກັນ, ຢູ່ໃນຕົວຂອງນາງມີເອກະສານເພື່ອສົ່ງໃຫ້ຄະນະລັດຖະບານລາວຕໍ່ຕານທີ່ຊຳເໜືອ.

ພໍດີໄດ້ຂ່າວການສູ້ຮົບກັນຢູ່ທາງເມືອງທ່າໂທມ, ພວກ ທະຫານສັດຕູແຕກສະລຸພ່າຍລົງມາເຕັມຢູ່ປາກຊັນ, ທັງຂານ ໄປ ບົງການປະເທດ ໄທ ກະພ້ອງນັ້ນ.

ສວຍໂອກາດສະພາບພວມສັບສົນອົນລະມ່ານຄືແນວນັ້ນ ສອງເອື້ອຍນ້ອງພວກນາງຈຶ່ງພາກັນເດີນທາງ, ຂະນະທີ່ຂີ່ເຮືອຢູ່ກາງນ້ຳຂອງ ທ່າຝັ່ນກໍ່ພໍດີເທນ້ຳເທທ່າລົງມາຈາກຟາກຟ້າປາງໃຫຍ່, ປານເປັນໃຈເອົາໂລດ.

ເຮືອໄປຮອດກາງຂອງ, ຜ່ານດອນມີທະຫານ ຫົວໃຈ - ຂອງນາງເຕັ້ນແຮງກວ່າເກົ່າ, ທັງຫລຽວລົງເບິ່ງນ້ຳຂອງທີ່ພວມໄຫລແຮງ, ທັງຄິດ " ຫລືວ່ານ້ຳຂອງບ່ອນນີ້ຈະຮັບ ຕອນ ເອົາຊີວິດອັນໜຸ່ມນ້ອຍຂອງຕົນໄວ້ບໍ່?" ສາລະພັດແຕ່ຊິຄິດ...

ເຮືອລຳທີ່ສາງຂີ່ລອງໄປຕາມນ້ຳໜົດຄືນ, ຝົນຕົກລົນ ຕະຫລອດຄືນ, ຈຶ່ງພາກັນນັ່ງຢູ່ຂົ້ນເຮືອ, ມີແພຢາງຄົນລະແຜ່ນເອົາປົກຫົວ, ທັງໜາວທັງອິດນອນ, ເອົາມືໜຶ່ງຈັບແພຢາງໄວ້ເອົາອີກມືໜຶ່ງຕັກນ້ຳອອກຈາກເຮືອ, ໜາວກໍ່ໜາວ, ເຢັນກໍ່ ເຢັນ ທາງຈິດໃຈກໍ່ຕັ້ງທ່າກຽມພ້ອມກັບເຫດການທີ່ອັນຕະລາຍຈະເກີດ

ຂຶ້ນກັບໂຕເອງ ແລະ ເຮືອລຳນີ້ ດ້ວຍສັດຮ້າຍ,ລົມແຮງ ຈະ ເກີດຟອງໃຫ່ຍພາເຮືອຫຼົ້ມ ແລະ ສັດຕູຊ້ຳຍາມລັດຢູ່ດອນທີ່ ຈະ ຜ່ານໄປນັ້ນ, ເມື່ອເຮືອແລ່ນຜ່ານດອນທີ່ມີທະຫານຍາມນັ້ນ ໄປ ຈຶ່ງຫາຍໃຈໂລ່ງ ຊຶ່ງອາດຈະແມ່ນຍ້ອນຝົນລົມແຮງ,ພວກ ເຂົາ ຈຶ່ງຂີ້ຄ້ານລົງມາກວດກາເຮືອຜ່ານໄປມາເບາະຫລືວ່າແນວໃດ.

ແນມເຫັນດາວເພັດຢູ່ທ້ອງຟ້າແລ້ວ ຮູ້ສຶກມີຄວາມຊື່ນ ໃຈ ຄົນພາຍເຮືອທີ່ພາທາງ ເອີ້ນບອກໃຫ້ຮູ້ວ່າ " ມາຮອດບ່ອນ ແລ້ວ " ນາງເບິ່ງໂມງເວລານີ້ 6 ໂມງເຊົ້າແລ້ວ.

ການເດີນທາງໄກດ້ວຍການຍ່າງໄດ້ເລີ່ມຕົ້ນຈາກຕະ ຝັ່ງ ແມ່ນ້ຳຂອງ,ອັນມີລວງທິດມື່ນເປັນທິວຫນາລໍຖ້າຢູ່,ດ້ວຍຈຸດຫມາຍ ປາຍທາງຄື " ແຂວງຫົວພັນ " ດິນແດນທາງພາກເຫນືອໂດຍ ທີ່ນາງໄດ້ຮູ້ຊື່ສຽງລຽງນາມອັນນັ້ນມາດົນແລ້ວ

## ສາມເດືອນທີ່ເດີນທາງ

ນາງຈື່ໄດ້ດີວ່າເປັນລະດູທ້າຍປີ 1951,ຝົນຕົກລົມ, ທັງ ທ່ານ້ອຍທັງທ່າໃຫ່ຍ, ທັງຕົກຫນັກມື້ຫນັກຄືນ,ຈຶ່ງບໍ່ອາດທີ່ຈະພົ້ນ ລະນາໃຫ້ຫນັກໃຫ້ຊຸ່ມ ໄດ້ເຖິງຄວາມທຸກຍາກລຳບາກຂອງເດັກ ນ້ອຍຍິງຄົນຫນຶ່ງ ທີ່ບໍ່ເຄີຍພັດພາກຈາກພໍ່ແມ່ໄປທາງໃດຈັກເທື່ອ ພໍມາເຖິງບັ້ນພັດພາກກໍ່ເດີນທາງບຸປ່າຜ່າດົງ,ມີຍຸງ,ທາກ, ກັດ ຕອດສົມທົບກັບທາງກາງດົງກາງປ່າມີແຕ່ຕົ້ນຫຍ້າຮົກ,ບາງຍ່ານ ກໍ່ພາກັນບຸພາກັນຮື້ປ່າອອກແລ້ວຈຶ່ງລອດຈຶ່ງຄານໄປໄດ້,ບາງ-

ບ່ອນກໍ່ພາກັນຂ້າມນ້ຳຫ້ວຍລຸຍນ້ຳແກ່ງ, ພະລາດກ້ອນຫີນ ຈົນຫົວເຂົ່າເລື້ນ ຫົວເຂົ່າເລິກ, ນາງຄຶດເຖິງແມ່ຄຶດເຖິງພໍ່ຄຶດເຖິງອ້າຍນ້ອງຫລາຍ, ແຕ່ກໍ່ກັດແຂ້ວຢ່າງດ້ວຍຄວາມອົດທົນ ເມື່ອພົບທຸກຢ່າງແສນສາຫັດເທື່ອໃດກໍ່ຄິດເຫັນຄຳເວົ້າຂອງແມ່ວ່າ:

" ລູກເອີຍໄປກູ້ຊາດແມ່ນທຸກແທ້ໃດ, ຢູ່ບ້ານກໍ່ທຸກຫລາຍເໝືອນກັນ, ເພາະວ່າຄົນລາວເຮົາຕົກເປັນຂ້ອຍຂ້າມາໃຊ້ຂອງຈັກກະພັດຣຸກຣານ, ຄົນລາວເຮົານີ້ຢູ່ໃສກໍ່ທຸກເຮັດຫຍັງກໍ່ທຸກ ແທນວ່າສູວ່າເຮົາໄປທຸກບ່ອນຕໍ່ສູ້ກູ້ຊາດຕ້ານຈັກກະພັດຣຸກຣານ, ເວລາໃດຊາດລາວມີເອກະລາດແລ້ວ, ເວລານັ້ນເຮົາຈຶ່ງມີຄວາມສຸກຢ່າງມີກຽດສະຫງ່າໃດລູກເອີຍ ! " ຈັ່ງແມ່ນຄືອີຫລີ, ເພາະ ເອົາກາງຄືນເປັນກາງເວັນ ເອົາກາງເວັນເປັນກາງຄືນ, ພໍຟ້າມືດແທນທີ່ຈະນອນ ຊ້ຳພັດພາກັນອອກຍ່າງ, ເອົາກາບໄມ້ຊະ ນູດຫນຶ່ງເນັບໃສ່ທາງຫລັງບາໂລ, ເພາະກາບໄມ້ຕາຍແຫ້ງ ພໍ ຟ້າມືດຊ້ຳພັດເປັນແສງ ຈຶ່ງແນມເບິ່ງແຕ່ແສງກາບໄມ້ພໍເປັນ ເງົາຂາວໆຄື ດອກເຫັດນັ້ນແລ້ວກໍ່ຍ່າງຕາມຫລັງກັນໄປ, ພໍຟ້າ ແຈ້ງກໍ່ພາກັນພັກຜ່ອນຫລັບນອນ.

ອາຫານການກິນ, ດີແຕ່ວ່າພື້ນຖານປະຊາຊົນເອົາໄປ ຊຸກເຊື່ອງໄວ້ຕາມໂກນໄມ້ບ່ອນຊື່ຜ່ານໄປ, ຈຶ່ງພໍມີເຂົ້າຫລືຊຸ້ນ ປາແຫ້ງໄດ້ມຶກໄດ້ຈື່ພໍ່ອ້ອຍໃຫ້ກິນເຂົ້າໄດ້, ສ່ວນພັກກັບນັ້ນ, ວ່າ ແຕ່ແນມເຫັນຍອດໄມ້ຍອດໃດງາມຍອດໃດອ່ອນກໍ່ເດັດມາກິນໂລດ.

ບັນຍາກາດໃນເວລາເດີນທາງກໍ່ແມ່ນລຽບພື້ນນັ້ນແລ້ວສະແດງໄດ້ທຸກຕົວລະຄອນ, ທັງເລົ່ານິທານສູ່ທຸກຄົນຟັງແດ່, ທັງເລົ່າ

ສະພາບການບ້ານເມືອງສູ່ຟັງແດ່, ວ່າແຕ່ເພິ່ນຄິດອອກ ເລື່ອງໃດກໍ່ເລົ່າເລື່ອງນັ້ນ, ຊົດຈົງມີຊົດຊີວາຕາມພາສາໃນ ຍາມຢູ່ກາງປ່າກາງດົງ ທີ່ປ່ຽວພອຍດຽວດາຍ, ທັງໆທີ່ເພິ່ນກໍ່ ອິດເມື່ອຍບໍ່ທຳມະດາຢູ່ແລ້ວ, ຍັງພະຍາຍາມຫາລາຍສາງບັນ ຍາກາດພາຫມູ່ຫົວມ່ວນໃນຍາມອິດຫິວ, ນີ້ຈຶ່ງແມ່ນນ້ຳໃຈສູງສົ່ງຂອງນັກຕໍ່ສູ້ກູ້ຊາດ ທີ່ແທ້ຈິງ ຈຶ່ງແມ່ນຫນ້າຣ່ຳຮຽນນ້ຳໃຈປະ ເສີດຂອງເພິ່ນ.

ລຸງມື້ນເລົ່າເຖິງສະພາບການວ່າ : ຕົ້ນປີ, ມີຂ່າວ ມາໃຫ້ຮູ້ຫມາດໆ... ຢູ່ ອິນດູຈີນເຮົາໄດ້ສ້າງຕັ້ງແນວພັນທະພາບລາວ - ຫວຽດນາມ-ຂະແມ ຂຶ້ນແລ້ວ.ອັນວ່ານາງເປັນຄົນສະລອກກອກແດ່, ກໍ່ເພາະບໍ່ເຂົ້າໃຈຄຳສັບທີ່ເພິ່ນເວົ້າຈຶ່ງຖາມຄືນ " ອິນດູຈີນແມ່ນຫຍັງ ? ແນວພັນທະພາບລາວ-ຫວຽດນາມ - ຂະແມ ແມ່ນຫຍັງເບາະພໍ່ລຸງ ? "ຈົນວ່າລຸງມື້ນຢຸດເລົ່າ, ຫັນມາແນມເບິ່ງຫນ້ານາງແລ້ວວ່າ " ເອີ... ! ນາງສາວນ້ອຍຜູ້ນີ້ສະຫລາດດີ, ສົນໃຈຕໍ່ສິ່ງທີ່ບໍ່ທັນເຂົ້າໃຈແມ່ນເປັນຄົນສະ - ຫລາດ, ດີກວ່າຄົນບໍ່ເຂົ້າໃຈຊ້ຳພັດອວດສະຫລາດ, ຖືວ່າຕົນ ຮູ້ເລີຍບໍ່ຖາມ ".ທຸກຄົນຫົວແຕກໂຄບຂຶ້ນ, ຈົນລຸງມື້ນຈົບສົບເພາະຈະເສຍລັບ ຢ້ານທະຫານສັດຕູໄດ້ຍິນ.

ລຸງມື້ນອະທິບາຍວ່າ : ເດືອນກຸມພາ 1951,ກອງ ປະຊຸມໃຫຍ່ຄັ້ງທີ II ຂອງພັກກອມມູນິດອິນດູຈີນໄດ້ໄຂຂຶ້ນແລະຕົກລົງເປັນມະຕິວ່າ :" ໃຫ້ຂະບວນການຂອງແຕ່ລະປະ ເທດສ້າງຕັ້ງພັກການເມືອງຂອງຕົນເອງຂຶ້ນ, ເພື່ອສືບຕໍ່ຈັດຕັ້ງຊີ້ ນຳ

ການປະຕິວັດຂອງປະເທດໄພມັນ, ທັງຮັກສາສາຍສຳພັນປະສົມປະສານກັນຢ່າງແໜ້ນໜຽວທີ່ສຸດລະຫວ່າງປະຊາຊົນ 3 ຊາດອ້າຍນ້ອງ ລາວ - ຫວຽດນາມ - ກຳປູເຈຍ ..."

ເພິ່ນຫັນມາເບິ່ງນາງແລ້ວເວົ້າຕໍ່ "ຕາມທຳມະດາແລ້ວ, ແຕ່ປີກາຍນີ້ພຸ້ນ, ນາງ ທອງອິນ ສາວນ້ອຍແຂວງສີສັດຕະນາກຈະຕ້ອງເປັນຕົວແທນເພດຍິງຂຶ້ນໄປຮ່ວມກອງປະຊຸມໃຫຍ່ສະຫະພັນແມ່ຍິງສາກົນທີ່ສະຫະພາບໂຊວຽດ.ແຕ່ໄດ້ກາຍເປັນພູແທນ-ລາວຕໍ່ຕ້ານທີ່ວປະເທດຢູ່ເຂດທີ່ໝັ້ນສູນກາງ,ສະພາບການຮັດໃຫ້ເດີນທາງໄປບໍ່ທັນ, ຈຶ່ງລໍຖ້າເຂົ້າຮ່ວມໂອກາດຕໍ່ໄປ.

ນາງນ້ອຍບໍ່ໄດ້ຄິດອັນໃດຫລາຍດອກ,ຄິດແຕ່ວ່າ:" ປານໃດເນີ້ຈຶ່ງຈະເດີນທາງໄປຮອດແຂວງຫົວພັນ ? "

ການເດີນທາງຂອງພວກເພິ່ນໄດ້ພົບກັບກອງ " ປັດຕຸຍ" ຂອງທະຫານຝຣັ່ງຫລາຍເທື່ອ. ຕອນນີ້ແລ້ວ, ອີພໍ່ອີແມ່ຂອຍ-ເອີຍ ! ລູງມີ່ນບອກໃຫ້ພວກແມ່ຍິງແລ່ນບຸປ່າບຸດົງໄປກ່ອນ , ສ່ວນພວກພູຊາຍທີ່ມີປືນຢູ່ໃນມືກໍ່ຍິງຕໍ່ສູ້ກັບທະຫານສັດຕູ,ທັງ ຍິງທັງແລ່ນພາຍສັດຕູ, ເພາະປືນສັດຕູທັນສະໄໝກວ່າແລະ ຈຸດໝາຍປາຍທາງຂອງພວກເພິ່ນກໍ່ບໍ່ແມ່ນຈະເອົາຊີວິດໄປສ່ຽງກັບພວກມັນໃນຕອນນີ້, ດີແຕ່ວ່າທະຫານສັດຕູບໍ່ໄລ່ຕາມ,ຈຶ່ງ ອິດລອດຄວາມຕາຍໄປໃນທຸກເທື່ອ.

ແຕ່, ພວກເພິ່ນກໍ່ບໍ່ພົ້ນຈາກຄວາມເຈັບໄຂ້ໄດ້ພະ ຍາດຈາກການນອນກາງດົງກາງປ່າ, ຈຶ່ງເກີດເປັນພະຍາດໄຂ້ ຍຸງ "ໄຂ້ມາເລເລຍ" ພະຍາດຖອກທອ້າ.ພະຍາດເປັນຕຸ່ມເປື່ອຍ -

ຕາມຕົນຕົວ, ພະຍາດຕີນເປື່ອຍຍິ່ມຍິ " ພະຍາດຕີນທໍ ".

ຢູ່ກຢາທີ່ເອົາປິ່ນປົວກັນຈາກການມອບໃຫ້ຕອນອອກ ຈາກ ສຳນັກ, ກໍ່ມີຢາແດງ, ຢາກິນິນ ຫລື ໃຜພໍຈະຮູ້ໃບໄມ້ໃບຕອກ ຫລືຮາກໄມ້ນາໆຊະນິດ ອັນໃດເປັນຫວ້ານເປັນຢາກໍ່ເກັບກຳມາ ຕົ້ມມາຫລາຍໃຫ້ກັນກິນ, ຈຶ່ງເປັນຫນ້າສົມເພດເວດທະນາ ຍິ່ງ ຫນັກ ເມື່ອແນມເຫັນເພື່ອນຮ່ວມເດີນທາງແລະຮ່ວມງານ ຈຳ ນວນ 4 ຄົນຕ້ອງຈາກໄປຢ່າງບໍ່ມີວັນກັບ ຈຶ່ງມຽນຄາບອາບ ສະ ການດ້ວຍຄວາມອາໄລອາວອນ.

ນາງນ້ອຍເອງເຫມືອນກັນກັບຄົນອື່ນຈຶ່ງທັງຈ່ອຍ ທັງ ເຫລືອງ, ບາງເທື່ອກໍ່ຮິດຮອນຮິດຫນາວ, ແຕ່ກໍ່ເຮັດໃຈ ແຂງ ສູ້, ຄິດຢູ່ໃນໃຈເພື່ອລະດົມຕົວເອງວ່າ " ເຮົາຈະຕ້ອງບໍ່ເປັນ ຫຍັງ, ເຮົາຈະຕ້ອງດຳເນີນໃຫ້ສຳເລັດຫນ້າທີ່ຈະຕ້ອງໄປ ໃຫ້ ເຖິງຈຸດຫມາຍປາຍທາງໃຫ້ໄດ້ ! "

ເສັ້ນທາງອັນຍາວໄກກວ່າ 2 ເດືອນຈຶ່ງຮອດເມືອງ ເວ ຍ່າງຂຶ້ນສູ່ເມືອງວິງ, ຍ່າງໄປຮອດເມືອງແສນຊາຍແດນເມືອງ ຫວຽດນາມຕິດກັບດິນລາວຢູ່ເມືອງຫນອງແຮດແຂວງຊຽງຂວາງ

ພໍເຂົ້າຮອດດິນລາວຕອນຫນຶ່ງທີ່ເມືອງຫນອງແຮດ ແຂວງ ຊຽງຂວາງ, ຂອງກິນທີ່ກິນແຊບກິນນົວທີ່ສຸດທີ່ໄດ້ສຳພັດກັບປາຍ ລີ້ນກໍ່ແມ່ນມີຫລາຍອັນ ແຕ່ໃນນັ້ນມີ "ຫມາກສາລີ" ຫມາກສາລີ ພໍດີກຳລັງພໍຈີ່, ກິນແລ້ວທັງແຊບທັງຫວານ, ຄືນໃດຈີ່ແລ້ວກໍ່ ບໍ ແບ່ງປັນກັນ, ທັງເອົາມາໃຫ້ນາງດ້ວຍ, ທັງບອກວ່າ " ອື່ ດູ ຕົນສາວນ້ອຍຄົນງາມນາງນີ້, ຍັງເດັກຍັງນ້ອຍຢູ່ກໍ່ບຸປ່າຜ່າ ດົງ

ອອກມາຮັດການປະຕິວັດ " ພວກເພິ່ນວ່າຈັ່ງຊັ້ນ, ຈຶ່ງເຫັນວ່າ ເປັນຄວາມລຳບາກທີ່ແໜ້ນແກ່ນດ້ວຍພະລັງຄວາມສາມັກຄີຢ່າງ ຫາອັນໃດປຽບບໍ່ມີໄດ້.

## ດິນແດນເຂດທີ່ໝັ້ນ

ບາດຖານໃຫ້ຮູ້ແທ້ງຊ້ຳພັດວ່າ " ທີ່ນີ້ແລ້ວຄືດິນແດນ - ແຂວງຫົວພັນ ເຂດທີ່ໝັ້ນແຫ່ງການປະຕິວັດ ".

ນາງທັບໃຈໂລ່ງເອິກ, ເພາະໄດ້ມາເຖິງຈຸດໝາຍ ປາຍທາງແລ້ວ, ເຖິງຈະບໍ່ແມ່ນບ້ານເກີດເມືອງນອນ ຢູ່ກັບພໍ່ຢູ່ ກັບແມ່ ແຕ່ນັ້ນກໍ່ໄດ້ຜ່ານການເດີນຕາມເສັ້ນທາງອັນຍາວໄກ, ຜ່ານຜ່າສິ່ງທີ່ບໍ່ເຄີຍພົບເຫັນຈັກເທື່ອໃນຊີວິດມາໄວ້ກ່ອນ, ທັງທີ່ ໃຕ້ຈິດສຳນຶກຍັງເກັບຮູບພາບເຫຼົ່ານັ້ນໄວ້ໃນດວງໃຈຢູ່ບໍ່ມີວັນຫລົງລືມຈັກເທື່ອ.

ທາງຫ້ອງການລັດຖະບານລາວຕໍ່ຕ້ານໄດ້ລຸລ່ວງ, ເພິ່ນຈົດເອົາລາຍຊື່, ອາຍຸ, ນາມສະກຸນ, ເວົ້າງ່າຍໆກໍ່ແມ່ນປະຫວັດຫຍໍ້ຂອງທຸກຄົນລາຍງານໃຫ້ການຈັດຕັ້ງຊາບຕາມລະບຽບ ການໃນນາມ " ຄະນະຜູ້ແທນແຂວງສີສັດຕະນາກ " ໄດ້ມາ ຮອດມາເຖິງແລ້ວ. ມີພະນັກງານມາຈາກຫ້ອງການລັດຖະບານໄດ້ລຸລ້ວງພວກເຮົາວ່າເສຍດາຍທີ່ສຸດ. ຜູ້ແທນແມ່ຍິງມາບໍ່ທັນໂອກາດໄປຮ່ວມກອງປະຊຸມໃຫຍ່ແມ່ຍິງສາກົນທີ່ສະຫະພາບໂຊວຽດ ແຕ່ບໍ່ເປັນຫຍັງດອກ ຍັງທັນກອງປະຊຸມໃຫຍ່ຜູ້ແທນລາວທົ່ວ ປະ

ເຫດກຳລັງກຽມຈະເປີດບໍ່ນານນີ້, ຂໍໃຫ້ພວກສະຫາຍພັກ ຜ່ອນເອົາເຫື່ອເອົາແຮງແລ້ວກຽມເຂົ້າຮ່ວມກອງປະຊຸມໃຫຍ່ຜູ້ ແທນທົ່ວປະເທດ, ບໍ່ດັ່ງນັ້ນ ພວກສະຫາຍຈະເມື່ອຍຫລາຍໃດ, ຈະໄດ້ຄົ້ນຄວ້າຮ່ຳຮຽນນຳກັນຫລາຍບັນຫາ ໃນນັ້ນມີທັງແລກປ່ຽນ. ບົດຮຽນນຳກັນຕີໃຫ້ໄດ້ຊະນະພວກລ່າເມືອງຂຶ້ນຝຣັ່ງ, ວຽກງານຂອງພວກເຮົາຍັງຫນັກຫນ່ວງ, ຈຶ່ງທຳໃຈໃຫ້ສະບາຍ, ເຊື່ອຫມັ້ນຕໍ່ການນຳພາຂອງຄະນະລັດຖະບານລາວອິດສະຫລະ.ແນວໃດພວກເຮົາກໍ່ຕ້ອງຍາດໄຊຊະນະໄດ້ແນ່ນອນ ! " ເພິ່ນເວົ້າວ່າຫລາຍອັນຫລາຍແນວ, ແມ່ນແຕ່ຄວາມມ່ວນຫູ, ເປັນຕາຟັງທັງນັ້ນ.

ແລ້ວຈຶ່ງຮູ້ວ່າບ້ານທີ່ພວມພັກເຊົາຢູ່ນັ້ນແມ່ນບ້ານ ອົ້ງເຊິ່ງເປັນບ້ານບໍ່ໃຫຍ່ພໍປານໃດ, ຊາວບ້ານມີນໍໃສດີ, ເວົ້າຈາສຸພາບຕໍ່ແຂກຄົນທີ່ຈາກທາງໄກມາແວ່.

ຕະຫລອດໄລຍະເວລາ 3 ເດືອນຢູ່ບ້ານອົ້ງ, ຈຶ່ງເອົາເວລາວ່າງຮຽນຫນັງສື, ຮຽນເອກະສານຕ່າງໆ.

ຕໍ່ມາຈຶ່ງຮູ້ຈັກກັບຫລາຍຄົນໃນນັ້ນ ອາຍໄຊ, ຊາຍຮູບຮ່າງຕ່ຳເກິ່ງ, ມີຫນ້າຄົມຄາຍຄືຄົນຝຣັ່ງ, ນາງຄິດ "ຫລືວ່າ ແມ່ນທີ່ປຶກສາຝຣັ່ງ ? ບໍ່ ! ກະດຽວວ່າພວກເຮົາພວມຕໍ່ຕ້ານກັບພວກລ່າເມືອງຂຶ້ນຝຣັ່ງ, ເຮັດແນວໃດລັດຖະບານຝຣັ່ງຈຶ່ງ ເອົາທີ່ປຶກສາມາຊ່ວຍເພື່ອຕີກັບພວກເຂົາເອງ ? " ມີຫລາຍແນວຄິດເກີດຂຶ້ນກັບນາງ, ກໍ່ເພາະບໍ່ຮູ້ຈຶ່ງຢາກຮູ້, ເຫັນອາຍໄຊຫວ່ານຄາຖາສາລິກາ ລົ້ນທອງໃສ່ເກືອບທຸກເທື່ອທີ່ເຫັນກັນຄືວ່າຊື່ ມາ

ແອ່ວສາວນ້ອຍຊົ້ນລະວາ.

ບໍ່ດົນຊ້ຳພັດມີສຽງຊ່າລືວ່າ " ຄະນະຜູ້ແທນແຕ່ລະແຂວງ ໄປພັກເຊົາຢູ່ບ້ານອົງຕົ້ນ, ມີສາວນ້ອຍນາງໜຶ່ງໄປຈາກແຂວງ ສີສັດຕະນາກ, ງາມເລີດກວ່າທຸກຄົນ, ເປັນປິ່ນປິ່ນອິ່ມຢ່າງໄຮ ດຽງ ສາ... " ຈົນວ່ານາງອາຍບໍ່ຢາກສູ້ໜ້າໃຜ, ກໍ່ເພາະຫາກໍ່ ຊື່ ມີອາຍຸ 14 ປີ, ຍັງບໍ່ທັນຮູ້ຈັກແຕ່ງເພດຊ້ຳ, ຊ້ຳພັດມີອາຍບ່າວ ໃຫ່ຍອາຍບ່າວນ້ອຍມາກ່ຽວພາລາສີ, ເຮັດແນວໃດຊິ່ບໍ່ອາຍ ? ເມື່ອຄວາມຕັ້ງໃຈ, ແມ່ນຂຶ້ນໄປຮ່ວມກອງປະຊຸມໃນຖານະຕາງ ໜ້າໃຫ້ເພດຍິງທົ່ວແຂວງ ສີສັດຕະນາ, ເຖິງແນວໃດກໍ່ມີທ່າ ມີ ທາງເອົາໄວ້ສາກ່ອນ, ສ່ວນເລື່ອງອາຍບ່າວອາຍແພວແມ່ນ ບໍ່ ຄິດຢູ່ໃນໃຈຈັກໜ່ອຍເລີຍ.

## ບົ້ນຮ່ຳຮຽນ

ເມື່ອໄດ້ຂຶ້ນໄປເຂດທີ່ໝັ້ນແຫ່ງການປະຕິວັດແລ້ວ, ເຖິງບໍ່ ທັນໄດ້ຮ່ວມກອງປະຊຸມທັງພາຍໃນ ແລະ ຕ່າງປະເທດກໍ່ຕາມ, ຄະນະຮັບຜິດຊອບໄດ້ລຸລວງວ່າ " ສືບຕໍ່ຮ່ຳຮຽນ, ເພື່ອອະ ນາ ຄົດ ".

ນາງຈຶ່ງໄດ້ເຂົ້າຮ່ຳຮຽນການເມືອງຍາວນານເຖິງ 3 ເດືອນ, ເຮັດໃຫ້ແສງຕາຂອງນາງແຈ້ງສະຫວ່າງອອກ, ເມື່ອ ໄດ້ຮ່ຳຮຽນເຖິງສະພາບການບ້ານເມືອງ ແລະສະພາບການ - ຂອງໂລກ, ເວລານັ້ນຈຶ່ງຄິດວ່າ: " ນາງບໍ່ຄືເກົ່າອີກແລ້ວ " ອັນໝາຍເຖິງຄວາມຮູ້ຄວາມສະຫລາດ ຍິ່ງຮຽນກໍ່ຍິ່ງຮູ້ ກວ້າງ

ຂວາງ, ຈຶ່ງເຮັດໃຫ້ນາງພູມໃຈໃນຕົວຂອງຕົວເອງ, ເຊື່ອໝັ້ນຕໍ່ການນຳພາຂອງການປະຕິວັດ " ເວລານັ້ນບໍ່ທັນຮູ້ເທື່ອ ດອກວ່າພັກແມ່ນອັນໃດ ? ບໍ່ແມ່ນສະມາຊິກພັກແທ້ຈະບໍ່ໄດ້ເວົ້າເຖິງວຽກງານຂອງພັກພຽງແຕ່ຄຳດຽວ. ປິດລັບສຸດຂີດ ".

ກອງປະຊຸມເປີດຢູ່ໃນຖ້ຳ ນາໃກ ເທື່ອກ່ອນເຂົາເອີ້ນວ່າຖ້ຳຊາງ. ຫົວໜາໜ່ວຍຄົ້ນຄວາເອກະສານແມ່ນລຸງມາ, ເຊິ່ງນາງຖືເພິ່ນຄືພໍ່, ແຕ່ເອີ້ນເພິ່ນວ່າ " ພໍ່ລຸງ " ແລະທຽບ ຕົວນາງເອງເປັນ " ຫລານ ".

ຊຶ່ງແມ່ນເວລາພັກຜ່ອນ, ເວລາຄົ້ນຄວາເອກະສານຫລືເວລານັ່ງຟັງບັນຍາຍເອກະສານ, ພໍ່ລຸງມາຈະເອົາໃຈໃສ່ນາງເປັນພິເສດກວ່າທຸກຄົນ, ເຊິ່ງຈະຖາມນາງວ່າ : "ຫລານມີເຈັບ - ຂຽນບໍ່ ? ມີປາກກາບໍ່ ? ມີສໍດຳບໍ່ ? ປາກກາມີນ້ຳ ມຶກແລວຫລືຍັງ ? ການກິນຢູ່ຫລັບນອນເດ ດີບໍ່ ແລະ ອື່ນໆ... "

ຕາມການແບ່ງປັນຂັ້ນລັດຖະບານຕໍ່ຕານເພື່ອຕິດຕາມການທຳຮຽນຂອງແຕ່ລະໜ່ວຍ, ຊ້ຳພັດແມ່ນ ທ່ານ ໄກສອນ ພົມວິຫານ ລົງໄປໃກ້ຊິດຕິດຕາມຢູ່ໜ່ວຍຂອງນາງຈຶ່ງເຮັດໃຫ້ ສາວນ້ອຍຄົນນີ້, ທັງຢ້ານທັງຈຽມ, ຈົນຊື່ບໍ່ຮູ້ຈະອອກຄຳເຫັນຫລືອອກຄຳເຫັນເທື່ອໃດ ກໍ່ຮູ້ສຶກວ່າໜ້າຕາແດງຮ້ອນພູມແລວ.

ພໍ່ລຸງມາ ຊ້ຳພັດແມ່ນນຳຕື່ມ, ໃນໃຈຂອງເພິ່ນອາດຈະມີເຈຕະນາຢາກເວົ້າໃຫ້ນາງ ແຕ່ອາດຈະພິລຶກໂພດໄປ, ຈຶ່ງ ສະເໜີໃຫ້ໝົດທັງລູກໜ່ວຍຮູ້, ທັງເສືອຄຕານອຍມາເບິ່ງນາງ-
" ຂໍສະເໜີໃຫ້ທຸກສະຫາຍຮັບຮູ້, ຖືວ່າໜ່ວຍຄົ້ນຄວາຂອງ

ພວກເຮົາ, ທາງລັດຖະບານໄດ້ເອົາໃຈໃສ່ເປັນພິເສດ, ທ່ານລັດຖະເສນາກະຊວງປອງກັນຊາດໄດ້ລົງມາຕິດຕາມຫນ່ວຍຂອງພວກເຮົາໂດຍກົງ ( ລັດຖະເສນາທີ່ໃຊ້ເວົ້າກັນໃນເວລາ ນັ້ນກໍ່ຄືລັດຖະມົນຕີໃນເວລານີ້ ແລະ ລັດຖະມະຫາເສນາ ກໍ່ຄື ນາຍົກລັດຖະມົນຕີ ).

## ປາກກາ

ທຸກເທື່ອທີ່ເພິ່ນມານັ່ງຟັງການສົນທະນາຢູ່ໃນຫນ່ວຍ ຂອງນາງ, ເພິ່ນມັກຈະນັ່ງຢູ່ຊື່ໆ ແລະ ນາງກໍ່ບໍ່ເຫນັງບໍ່ຕິງ, ຄືວ່າມີອັນໃດມາສະກົດຈິດໃຈ, ເລື່ອງຊື່ແນມໄປເບິ່ງຫນາເພິ່ນ ແຕ່ງຢູ່ຫ່າງໄກ, ທັງເກງໃຈທັງຢານກົວເພາະບໍ່ເຄີຍເຫັນຜູ ໃຫຍເຖິງຂັ້ນນີ້ຈັກເທື່ອ, ເຫັນເພິ່ນເວົ້າວ່າກໍ່ແບບທະຫານແຂງ-ວາດຫນຶ່ງກໍ່ຍິ່ງເຮັດໃຫນາງຢານ ແລະ ຈຽມ...

ນາງມື້ກ່ອນຈະເລີກຫນ່ວຍກັບເມື່ອພັກຜ່ອນ, ເພິ່ນມັກ ຈະລົມກັບລຸງມາ ຢູ່ບຶດຫນຶ່ງ, ຖາມນາງຄິດອາດຈະແມ່ນເພິ່ນຕອງແນະນຳ, ບຳລຸງ ແລະ ໃຫ້ຄວາມເຫັນເນັ້ນຫນັກບາງບັນຫາໃນເອກະສານ ທີ່ພວມຄົ້ນຄວາຮ່ຳຮຽນນັ້ນໃຫສະມາຊິກ ຫນ່ວຍກຳໄດແກ່ນກົກຂອງບັນຫາ.

ມື້ຫນຶ່ງ, ຈັ່ງແມ່ນບັງເອີນ, ປາກກາຂຽນຫນັງສືຂອງນາງຊ້ຳພັດໄປຕົກເຫຍທາງໃດບຸ. ເວລາຟັງການບັນຍາຍເອກະສານ ຈຶ່ງບໍ່ມີອົນຈົດກາຍ ພໍລຸງມາຖາມວ່າ: ຄືບໍ່ເຫັນ - ຫລານຈົດຂຽນຫຍັງ ຫລືວ່າ ຫລານຄິດອຸກອັ່ງບໍ່ລົ່ງໃຈບໍ່,ຫລານ

ພີ່ຈະເລົ່າສູ່ລູງຟັງໄດ້ບໍ່ຫລາຍ ? ນາງຄິດໂລດວ່າ: ໂອ່ຍ !ພໍ່ລູງນີ້ຈັ່ງແມ່ນຫນ້າເຄົາຣົບ ແລະ ນັບຖືແທ້ເດ, ອັນນີ້ນີ້ ແມ່ນແທ້ແລ້ວທີ່ຕົນເຄີຍໄດ້ຍິນພວກພໍ່, ພວກອາຍ,ພວກອາວ ເວົ້າສູ່ຟັງວ່າ : ບັນດາທ່ານຜູ້ນຳແນວລາວຮັກຊາດ ແລະ ລັດຖະບານລາວຕໍ່ຕ້ານກໍ່ຄືບັນດາພະນັກງານປະຕິວັດທີ່ແທ້ຈິງນັ້ນຍາມ-ໃດກໍ່ມີໃຈເອື້ອເຟື້ອຮັກແພງປະຊາຊົນກໍ່ຄືພະນັກງານຣາກ ຖານຕົນຄິດແນວນັ້ນແລ້ວ ເລີຍຕອບເພິ່ນ ແລະເວົ້າສູ່ເພິ່ນຟັງວ່າ : ປາກກາຫລາຍເສັຍ, ເພິ່ນຟ້າວອອກຈາກກອງປະຊຸມໄປ,ແລ້ວກັບມາພ້ອມໃບເຈ້ຍສີຂາວຊະນິດດີ ແລະປາກກາແບບຂອງນາງເຮັດເສັຍຫັ້ນແລ້ວ,ເປັນປາກກາທຳມະດາ,ລາຄາກໍ່ບໍ່ແພງພໍປານໃດດອກ.

ຕອນເລີກປະຊຸມ, ລູງມາຊ້ຳພົດນຳເອົາປາກກາທີ່ຖື ວ່າເປັນປາກກາຊະນິດດີທີ່ສຸດໃນເວລານັ້ນພ້ອມດ້ວຍເຈ້ຍຂາວງາມມາໃຫ້ນາງອີກ, ເປັນປາກກາຍີ່ຫໍ້ປາກເກີ "PaKKeR" ທີ່ໃຫມ່ອ່ຽມ, ນາງອອກປາກຂອບໃຈນຳພໍ່ລູງມາ,ເພິ່ນຊ້ຳ ພູດເວົ້າວ່າ " ຄວນຈະຂອບໃຈຕໍ່ເຈົ້າຂອງປາກກາ " ເຮັດໃຫ້-ນາງງົງແລ້ວຖາມ " ແມ່ນໃຜເບາະພໍ່ລູງ ? ເພິ່ນຍິ້ມຫົວແລ້ວຕອບ " ຕໍ່ໄປຈະຮູ້ເອົາເອງ ".

ບັນຫາທາງຫົວໃຈ ແລະ ແນວຄິດຂອງນາງຈຶ່ງເລີ່ມ ຕົ້ນຕັ້ງຄຳຖາມຈາກຈຸດນັ້ນ." ຫລືຈະແມ່ນຂອງອ້າຍໄຊ ? "ຮູ້ແຕ່ຖາມແຕ່ບໍ່ຮູ້ຄຳຕອບ.ຕໍ່ມາ,ພໍ່ລູງມານັກຖາມນາງວ່າ " ເມື່ອຮ່ຳຮຽນຈົບແລ້ວຫລານຈະກັບແຂວງຄືເກົ່າບໍ່ ຫລືຈະຢູ່ຮັບ ໃຊ້

ວຽກງານຢູ່ທີ່ນີ້ເລີຍ ? ". ນາງຮູ້ແຕ່ຕອບວ່າ "ແລ້ວແຕ່ຊາດ ຈະມອບໝາຍ, ເພື່ອການປະຕິວັດ, ເພື່ອປະເທດຊາດບ້ານ - ເມືອງ, ເພື່ອປະຊາຊົນລາວ ແລະ ເພື່ອການຕໍ່ສູ້ກູ້ຊາດ ແລ້ວ ຫລານຢູ່ ແລະ ໄປໄດ້ທຸກທີ່ທຸກບ່ອນ " ພໍ່ລຸງມາເວົ້າຕໍ່ເຕີມ ໃສ່ ຄຳເວົ້າອັນໄຮ້ດຽງສາຂອງນາງວ່າ " ກ່ອນອື່ນກໍ່ແມ່ນເພື່ອຕົວ ຂອງເຮົາເອງສາກ່ອນ, ຖ້າບໍ່ມີຕົວຂອງເຮົາແລ້ວ, ເຮັດແນວ ໃດຊຶ່ງມີທຸກສິ່ງທຸກຢ່າງໄດ ? ".

ປະໂຫຍກຄຳເວົ້ານັ້ນເຮັດໃຫ້ນາງຄິດຕະຫລອດເວລາ " ຫລື່ວ່າເພິ່ນເວົ້າຢອກ ? " ຫລື່ວ່າ " ເພິ່ນເວົ້າລອງໃຈ? ສາລະພັດແຕ່ຊື່ຄິດໄປຕາມພາສາຂອງສາວນ້ອຍ.

ມີສອງເທື່ອທີ່ນາງຖາມເຖິງເຈົ້າຂອງປາກກາ, ເພິ່ນ ມີ ແຕ່ຕອບວ່າ " ແລ້ວມື້ໜຶ່ງຫລານກໍ່ຈະຮູ້ເອົາເອງ "ເປັນປິດ ສະໜາເຮັດໃຫ້ນາງຄິດ, ແລ້ວນາງຕັດສິນໃຈເອົາປາກ ກາ ພ້ອມດ້ວຍເຈັ້ຍຂາວແຜ່ນງາມປອດຝາກນຳພໍ່ລຸງມາສົ່ງຄືນ ໃຫ້ ເຈົ້າຂອງທີ່ລຶກລັບນັ້ນ. ພໍ່ລຸງມາຕົກໃຈ, ຟ້າວຖາມນາງຄືນ " ເປັນຫຍັງຫລານຈຶ່ງບໍ່ເອົາ ? " ນາງຕອບດ້ວຍຄຳສຸພາບ ວ່າ " ຄືຈິ່ງວ່າເປັນຂໍ້ຜູກມັດແນວໃດແນວໜຶ່ງຂອງເຈົ້າຂອງ ປາກກາ, ເມື່ອພໍ່ລຸງບໍ່ຍອມບອກຊື່, ບໍ່ຍອມບອກຈຸດປະສົງ - ຂອງເຈົ້າຂອງປາກກາແລ້ວ, ຫລານກໍ່ຂໍອະນຸຍາດສົ່ງເພິ່ນຄືນ ເພາະຫລານບໍ່ຢາກເປັນໜີ້ບຸນຄຸນຂອງຄົນສະຫງວນຕົວ ຈົນ ອຳຮອດຊື່ສຽງລຽງນາມ ແລະ ຂອງທີ່ເອົາໃຫ້ກໍ່ປຽບຄື ຊາວ ນາປູກເຂົ້າເພື່ອຫວັງຜົນ " ພໍ່ລຸງມາຮອງໂອະຮອງໂອຍ ຂຶ້ນ

" ຈັ່ງແມ່ນຫລານມີຈິດໃຈເດັດດ່ຽວແທ້ນໍຫລານສາວ ? ".

# ຈົດຫມາຍນ້ອຍ

ບໍ່ມີທາງໃດຈະລະບາຍຄວາມອຸກໃຈທີ່ດີໄປກວ່າເລົ່າເລື່ອງ ທີ່ພວມເກີດຂຶ້ນກັບນາງສູ່ເອື້ອຍຈັນສີຟັງ ( ເມຍຂອງທ່ານ ມົນ ຕີ ) ເພາະຄິດວ່າ " ມີແຕ່ແມ່ຍິງນຳກັນຈຶ່ງຈະເຂົ້າໃຈກັນໄດ້" ເພິ່ນຈຶ່ງຊຶ້ມໃສ່ຫູນາງວ່າ " ມີຄົນມັກນ້ອງແລ້ວໄດ໋ "ນາງຖາມ ຄືນວ່າ " ແມ່ນໃຜ ? " ເພິ່ນຕອບ " ນັ້ນແລ້ວຄືຕົວບັນ ຫາ ທີ່ພາໃຫ້ນ້ອງບໍ່ສະບາຍໃຈ, ອາດຈະແມ່ນລຸງມາເປັນພໍ່ຊື່" ຫູ ຕາຂອງນາງຈຶ່ງແຈ້ງສະຫວ່າງຂຶ້ນ , ບໍ່ແມ່ນດີໃຈ, ແຕ່ຊ້ຳ ພັດ ແມ່ນຄວາມອຸກໃຈ, ອຸກໃຈອັນທີ່ໜຶ່ງກໍ່ແມ່ນຕົນເອງຍັງນ້ອຍຢູ່, ການຈັດຕັ້ງສົ່ງໃຫ້ຂຶ້ນມາຮ່ຳຮຽນເອົາວິຊາຄວາມຮູ້, ຊ້ຳພັດມາ ປະສົບພົບພໍ້ກັບບັນຫາຫົວໃຈ, ອຸກໃຈອັນທີ່ສອງກໍ່ແມ່ນຄວາມລັບ ຂອງຄົນທີ່ປາຖະໜາດີນຳ, ຄືວ່າບໍ່ປະກົດຕົວໃຫ້ເຫັນແດ່ ?.

ເອື້ອຍຈັນສີ ສົ່ງຂ່າວໃຫ້ລຸງມາໄດ້ຊາບຕໍ່ເຫດການທີ່ ໄດ້ ເກີດຂຶ້ນກັບຕົວຂອງນາງ.

ພໍປິດ ກອງປະຊຸມ ນາງຖືກຍ້າຍໄປປະຈຳຢູ່ຫ້ອງການກະ ຊວງສຶກສາ ໂດຍແມ່ນທ່ານເຈົ້າສຸກ ວົງສັກ ເປັນລັດຖະເສນາ ກະຊວງສຶກສາຂອງລັດຖະບານລາວຕໍ່ຕານ, ບາງເທື່ອບາງ ທີ ກໍ່ໄດ້ສະຫມັກໄປຮັບໃຊ້ຢູ່ກອງປະຊຸມ

ລຸງມື່ນ ສົມວິຈິດ ຮຽກນາງໄປພົບແລ້ວບອກວ່າ "ຢ່າສູ່ອຸກ ໃຈເນີຫລານສາວ, ມີອ້າຍບ່າວອ້າຍແພວຍອກກໍ່ດີລະບໍ່, ອ້າຍ

ບ່າວນັ້ນກໍ່ບໍ່ແມ່ນສາມັນຊົນທຳມະດາອີກຊ້ຳ "ຍິ່ງເຮັດໃຫ້ນາງຄິດຫລາຍຂຶ້ນຕື່ມ.

ຕໍ່ມາ, ຊ້ຳພັດມີຈົດໝາຍຂຽນມາເຖິງ, ຈົດໝາຍບໍ່ລົງ ຊື່ ລົງສຽງຮຽງນາມ, ພຽງແຕ່ຂຽນວ່າ " ຈາກອາຍ" ນາງກໍ່ ບໍ່ ຮູ້ຈະຂຽນຕອບ ແລະ ຕັ້ງໃຈເອົາໄວ້, ຈະບໍ່ຕອບ ຈົນກວ່າ ຈະ ຮູ້ຈັກຕົນຕົວເຈົ້າຂອງຈົດໝາຍສາກ່ອນ.

ມີເອກະສານໃໝ່, ນາງຖືກຮ່ຳຮຽນອີກ. ເມື່ອຮຽນແລ້ວ ມີຊຸດໃໝ່ມາຮຽນຕໍ່, ນາງກໍ່ຮັບໃຊ້ຮັບແຂກຮັບຄົນຢູ່ກອງປະ ຊຸມ ບຶດລະຮຽນ, ບຶດລະໄປຮາກຖານປະຊາຊົນ ພັດປ່ຽນໝູນວຽນ ໄປຄືແນວນັ້ນຈົນຊົ່ວໄລຍະໜຶ່ງເກືອບເປັນປີ.

ທຸກເທື່ອ ນາງຖືກຮຽນ ບັນດາທ່ານຜູ້ນຳກໍ່ພັດປ່ຽນກັນ ລົງນຳພາແຕ່ລະໜ່ວຍ ແຕ່ເທື່ອນີ້ທ່ານ ໄກສອນ ພົມວິຫານຈະ ລົງໄປເປັນຜູ້ຕິດຕາມຢູ່ໜ່ວຍຂອງນາງອີກ. ບາງມື້ເລີກຮຽນ - ເພິ່ນກໍ່ຊວນນາງລົມນຳ " ເປັນແນວໃດ, ຮຽນຍາກບໍ່ ?ມີ ອັນໃດບໍ່ເຂົ້າໃຈກໍ່ໃຫ້ຖາມ, ເພາະເທື່ອນີ້ ການຈັດຕັ້ງໄດ້ ມອບໝາຍໃຫ້ອາຍຕິດຕາມໃກ້ຊິດກັບໜ່ວຍນີ້." ນອກນີ້ສ່ວນຫລາຍ ເພິ່ນໄດ້ສັ່ງຄວາມນຳພວກລູກທີ່ເພິ່ນເຄີຍສົ່ງມາຫານາງວ່າ: ໃຫ້ ຕັ້ງໃຈຮ່ຳຮຽນ ກຳໃຫ້ໄດ້ບັນຫາໃຫຍ່ທີ່ສຳຄັນໃຫ້ແໜ້ນແລ້ວ - ອອກໄປເຮັດວຽກໃຫ້ໄດ້ຜົນດີ. ສຳລັບນາງເຂົ້າໃຈຕໍ່ຄຳເວົ້າທີ່ ຝາກໄປນັ້ນ ພຽງແຕ່ຜູ້ໃຫຍ່ຍາມໃດກໍ່ເອົາໃຈໃສ່ເດັກນ້ອຍເຫັນ ເພິ່ນ ແລະ ບັນດາຜູ້ນຳທຸກທ່ານ ເພິ່ນສະແດງຄວາມເອື້ອເຟື້ອ ແລະ ຮັກແພງຕໍ່ນາງດີຄື ແນວນັ້ນ, ນາງຮູ້ສຶກພູມໃຈຫລາຍ

ແລະ ມີກຳລັງໃຈສູ້ຊົນບຸກບືນສ້າງຕົວໃຫ້ສົມກຽດ.ນາງບໍ່ ໄດ້ຄິດຫຍັງໄປຫລາຍເລື່ອງ, ເພາະເຫັນວ່າເພິ່ນກໍ່ເປັນຄົນມີ ອາຍຸແລ້ວ " ສາມສິບກວ່າປີແລ້ວ " ເພິ່ນຄົງຈະມີຄອບຄົວ ເອົາປະໄວ້ທີ່ໃດທີ່ຫນຶ່ງ, ຈຶ່ງບໍ່ຄິດພຽງແຕ່ນ້ອຍຄຽວເຖິງທີ່ມາ ຂອງ " ຄຳເຕືອນ " ແລະ " ປາກກາ " ຊະນິດດີຄາມນັ້ນ.

ຕອນປິດກອງປະຊຸມລັດຖະບານຕໍ່ຕານ,ຊຶ່ງເປັນໂອກາດທີ່ນາງໄດ້ພົບເຫັນເພິ່ນທຳອິດ ທ່ານ ໄກສອນ ພົມວິຫານ ຍົກຈອກອວຍພອນໄຊແກ່ທຸກຄົນແລ້ວກໍ່ຍ່າງມາຫານາງ ເພິ່ນທັງຍິ້ມທັງເວົ້າວ່າ " ຂໍອວຍພອນໃຫ້ແມ່ຍິງແຂວງ ສີສັດຕະນາກແລະອວຍພອນໃຫ້ແກ່ໄຊຊະນະຂອງປະຊາຊົນລາວ, ທັງຂໍ ຝາກຄວາມຫວັງໄວ້ກັບຈອກເຫລົ້າຈອກນີ້,ຫວັງວ່ານາງຄົງຈະບໍ່ຫລົງລືມຕະຫລອດການ " ອັນຄວາມໄຮດຽງສາຂອງນາງຊ້ຳພັດຄິດໄປວ່າ " ບໍ່ໃຫ້ລືມງານລຽງນັ້ນ,ໃຫ້ຄິດເຖິງໄຊຊະນະ ແລະວຽກງານຂອງປະເທດຊາດ,ບໍ່ຄິດຈັກຫນ່ອຍວ່າ ເພິ່ນເວົ້າ ໃສ່ຕົນເອງ "

ຫລັງຈາກນັ້ນ,ນາງກໍ່ຖືກສັບຊ້ອນລົງຂົນຂວາຍຢູ່ເຂດ ໃກ້ຄຽງນັ້ນ.ເວົ້າໃຫ້ເຂົ້າໃຈງ່າຍໆກໍ່ແມ່ນ,ພໍຮຽນຈົບເອກະ ສານແຕ່ລະຊຸດແລ້ວກໍ່ລົງກໍ່ສ້າງຮາກຖານໄລຍະ 15 ເຖິງ 20 ວັນ ຫລືແຕ່ 1 ເດືອນຫາ 3 ເດືອນ.ບາງຄັ້ງກໍ່ 6 ເດືອນຈົນ ຕະຫລອດເລີຍໃນວຽກງານນີ້,ແລ້ວກັບຂຶ້ນໄປສະຫລຸບຖອດ ຖອນບົດຮຽນ, ແລ້ວລົງໄປຂົນຂວາຍຕໍ່,ຫມູນວຽນປ່ຽນກັນຢູ່ຄືແນວນັ້ນ.

ໜ້າທີ່ຕົ້ນຕໍຂອງນາງໃນເວລານັ້ນ ແມ່ນປະຈຳຢູ່ ຫ້ອງການຂອງກະຊວງສຶກສາ, ຊຶ່ງຢູ່ຫ່າງໄກລູງມາແລວ.ຊ້າພັດ ນີລູງ ມະຫາຄຳ ເປັນພໍ່ຊື່ຕໍ່, ເປັນຜູ້ໃຫ້ຄວາມອົບອຸ່ນແລະສຶກສາອົບຮົມໃກ້ສິດ ເມື່ອນາງມີຄວາມອຸກອັ່ງຫງວມເຫງົາເພິ່ນກໍເຄີຍໄດ້ໃຫ້ການຊ່ວຍເຫລືອ ແລະ ໃຫ້ກຳລັງໃຈ,ສ່ວນຫລາຍ ເພິ່ນເອົາເລື່ອງອື່ນໆມາເລົ່າສູ່ຟັງ, ທັງມ່ວນແລະທັງພາໃຫ້ຄິດສາວຄວາມສົນໃຈ ແລະ ຮູ້ສຶກແປກປະຫລາດຈິດໃຈແດ່,ສາລະ ພັດຢ່າງແຕ່ສຸດທາຍນາງບໍ່ຮູ້ຄິດຫຍັງຫລາຍ ນອກຈາກຄິດວ່າ: ຜູ້ໃຫຍ່ຍາມໃດເພິ່ນກໍເອົາໃຈໃສ່ເດັກນ້ອຍທີ່ພັດພອຍຈາກພໍ່ແມ່ແຕ່ນ້ອຍ.ສ່ວນຫລາຍເພິ່ນກໍ່ຮັກແພງທຸກຄົນ ແຕ່ສຳລັບນາງບາງເລື່ອງທີ່ເພິ່ນເລົ່າສູ່ຟັງກໍເຮັດໃຫ້ຄິດສົນໃຈ ແລະແປກໃຈຢູ່ ບໍ່ວາຍໃນຍາມນັ້ນ.

ມື້ໜຶ່ງ ລູງມະຫາຄຳ ເອົາຂອງຕ້ອນມອບໃຫ້ນາງ ລູງມະຫາຄຳ ຍັງເວົ້າວ່າ " ວານນີ້ອາຍໄປປະຊຸມພົບທ່ານ ໄກສອນ ເພິ່ນໄດ້ຝາກຄວາມຢ້ຽມຢາມມາເຖິງນອງ ແລະ ຝາກຄວາມຫວັງວ່າ ໃຫ້ນອງຕັ້ງໃຈເຮັດວຽກແລະຮ່ຳຮຽນ" ນາງຈຶ່ງເຂົ້າໃຈວ່າ " ປາກກາ ແລະ ເລື່ອງລູງມະຫາຄຳ ເລົ່ານັ້ນເປັນຂອງໃຜຄົນໜຶ່ງຕ່າງຫາກອັນຄວາມໄຮດຽງສາຂອງ

ນາງຊ້ຳພັດຄິດໄປວ່າ " ບໍ່ໃຫ້ລືມງານລຽງນັ້ນ,ໃຫ້ຄິດ ເຖິງໄຊຊະນະ ແລະ ວຽກງານຂອງປະເທດຊາດ,ບໍ່ຄິດຈັກໜ້ອຍວ່າເພິ່ນເວົ້າໃສ່ຕົນເອງ ".

ແທນທີ່ລູງ ມະຫາຄຳ ຈິ່ເວົ້າພຽງແຕ່ເທົ່ານັ້ນ,ເພິ່ນເວົ້າ

ຕໍ່ໄປວ່າ " ທ່ານ ໄກສອນ ຝັນກ່ຽວກັບນ້ອງໄດ້ທັ້ນ, ເພິ່ນ ຝັນວ່າ : ນ້ອງ ທອງວິນຕະບ້ານນຳໜູແລວພະລາດລົ້ມ, ເພິ່ນຈຶ່ງຟ້າວແລ່ນໄປຮັບເອົາ, ນ້ອງທອງວິນ ຈຶ່ງບໍ່ລົ້ມເຖິງດິນ" ມີບາງເທື່ອ ລຸງມະຫາຄຳ ໄດນຳເອົາຄວາມຝັນຂອງທ່ານ ໄກສອນມາເລົ່າຕໍ່ສູ່ນາງຟັງວ່າ " ທ່ານໄກສອນ ຝັນວ່າ, ນ້ອງທອງວິນ ພວມລອຍນ້ຳຢູ່, ລອຍໄປຮອດນ້ຳໄຫລແຮງເພິ່ນເລີຍພາຍເຮືອໄປຮັບເອົາ " ແລວເພິ່ນສັ່ງຄວາມກັບອາຍວ່າ"ນ້ອງທອງວິນ ເປັນພຸ່ນອຍກວ່າເພິ່ນ, ໃຫ້ເອົາໃຈໃສ່ນາງແດ່" ແລະອື່ນໆ... ຈຶ່ງແມ່ນຄວາມຝັນແທ້ເພາະຫລືວ່າຝັນແນວໃດນາງກໍ່ບໍ່ໄດ້ຄິດຫຍັງຫລາຍ, ຄິດແຕ່ " ຂອບໃຈຕໍ່ເພິ່ນທີ່ເປັນຫ່ວງ, ຂະໜາດຈິດວິນຍານຢູ່ໃນຄວາມຝັນກໍ່ເປັນຫ່ວງນຳຫລານຄອບ ໃຈນຳເພິ່ນຫລາຍແລວ ".

## ຜູ້ທີ 4 ເປັນພະຍານ

ພໍ່ຈຶ່ງຜູ້ທີ່ສາມແມ່ນ ເຈົ້າສຸກ ວົງສັກ ,ລັດຖະມົນຕີກະຊວງສຶກສາເຄີຍໄດໂອລົມນາງຖາມທຸກສຸກໃນຊີວິດແນວໃດ.ມື້ນຶ່ງ ທ່ານ ເຈົ້າສຸກ ວົງສັກ ໄດຮຽກເອົານາງໄປພົບ ແລວເວົ້າຖາມແບບກົງໆວ່າ " ສົມມຸດວ່າມີຄົນມາມັກມາຮັກດູເດ, ຈະວ່າແນວໃດ ? " ນາງຕອບເພິ່ນໄປຕາມພາສາເດັກນ້ອຍວ່າ" ເພິ່ນຈຶ່ງວ່າແນວໃດ ? " ເຈົ້າສຸກ ວົງສັກກໍ່ບອກກົງໆໂລດ " ທ່ານໄກສອນ ພົມວິຫານ " ເມື່ອຫນັງນາງສັ່ນເຈັ້ນໄປທັງຕົວ,

ເພາະຢ້ານແລະຖາມ : "ໃຫ້ຫລານເປັນເມຍນ້ອຍຂອງເພີ່ນຊັ້ນບໍ ? ອັນເປັນເມຍນ້ອຍນັ້ນຫລາຍກຽດຊັງທີ່ສຸດ ! ".

ຜູ້ທີ່ສັ່ງປະກົດຕົວ, ຄື ທ່ານ ເລຊຸຍເລືອງ,ຄົນ ຫວຽດ ນາມ ທີ່ທ່ານໂຫ້ຈິມິນ ສົ່ງໄປເປັນທີ່ເປິກສາລັດຖະບານລາວອິດສະຫລະ.

ທ່ານ ເລຊຸຍເລືອງ ຈຶ່ງເລົ່າຄືນ ແລະ ຢັ້ງຢືນຄວາມຈິງທີ່ເກີດຂຶ້ນທັງຫມົດສູ່ນາງຟັງວ່າ :" ເຮົາກໍ່ບໍ່ໄດ້ປະຕິເສດ ວ່າທ່ານ ໄກສອນ ບໍ່ເຄີຍມີຄົນຮັກມາກ່ອນ. ສະໄຫມຢູ່ຫວຽດນາມທ່ານ ໄກສອນ ເປັນເຈັບ, ຈຶ່ງໄປນອນພັກຕົວຮັກສາພະຍາດປອດຢູ່ເຮືອນ ທາວ ໄຂ່ກາ, ທາວ ໄຂ່ກາ ມີຫລານສາວ ຄົນຫນຶ່ງ, ເອົາໃຈໃສ່ບົວລະບັດທ່ານໄກສອນ ຢ່າງໃກ້ຊິດ, ຈົນກາຍເປັນຄວາມຮັກ,ແລວກໍ່ຫມັ້ນຫມາຍກັນ,ວ່າຈະເອົາກັນແທ. ແຕ່, ເພື່ອປະເທດຊາດ ແລະ ການປະຕິວັດລາວຈະຕ້ອງກ້າວເດີນໄປເຖິງຈຸດຫມາຍປາຍທາງແຫ່ງໄຊຊະນະຕີພາບແຜຂາ-ເສິກສັດຕູໄດ້ນັ້ນ,ພວກເຮົາໄດ້ເປິກສາຫາລືນຳກັນຢູ່ໃນຂັ້ນ ລັດຖະບານລາວທັງຫມົດ, ຕົກລົງເປັນມະຕິວ່າ,ທ່ານໄກສອນ ພົມວິຫານ ຕ້ອງມີເມຍເປັນຄົນລາວ ແລະ ສາວລາວ,ເພາະມີ ຜູ້ນຳໃນຂັ້ນລັດຖະບານລາວຕໍ່ຕ້ານກໍ່ໄດ້ເອົາເມຍຄົນຫວຽດ ນາມສອງສາມທ່ານແລວ, ຝ່າຍສັດຕູພວມໂຄສະນາໃສ່ຮ້າຍປ້າຍ ສີຕໍ່ເລື່ອງນີ້ຢູ່, ເຮົາເອງຈະເປັນຜູ້ໄປເວົ້າກັບລຸງໄຂ່ກາ ເອງແລະ ຂຽນໄປຕົກຍ້ຳ ເພື່ອໃຫ້ເຂົ້າໃຈ ແລະເຫັນວຽກ ໃຫຍ່ເຫນືອກວ່າວຽກສ່ວນຕົວ,ຂອຍຂໍເປັນພະຍານໃຫ້ຫລານຮູ້ແຈ້ງ

ນ້ຳແນວນັ້ນ.

ນາງຈຶ່ງຂໍຄຶດເບິ່ງສາກ່ອນ, ມີເອື້ອຍຈັນສີ ພໍ່ລຸງມົ້ນ ພໍ່ທິດມ່ວນ ສາວຈັນທະລາ, ສ່ວນຫລາຍແມ່ນເພິ່ນເຫັນດີນຳ, ທັງລະດົມໃຫ້ກຳລັງໃຈແກ່ນາງອີກຊ້ຳ...

ສ່ວນທາງເພິ່ນກໍ່ຍັງແມ່ນ 4 ພໍ່ຊຸ່ຢູ່ຄືເກົ່າທີ່ມາເວົ້າ ປອງເວົ້າຫວ່ານໃຫ້ນາງຕົກລົງ.

ນາງໄດ້ນັບອ່ານວັນເດືອນປີເກີດຂອງທ່ານໄກສອນ ໃສ່ກັບວັນເດືອນປີເກີດຂອງນາງແລວ, ເພິ່ນມີອາຍຸລື່ນນາງເກືອບສອງທົດສະວັດ, ຄືມີອາຍຸລື່ນນາງ 18 ປີພໍດີ( ເພິ່ນເກີດ ວັນອັງຄານ, ເດືອນສິບສອງ ປີວອກ, ປີ 1920, ນາງເກີດປີ ຂານ) ເຖິງບໍ່ເຊື່ອກໍ່ທາງຮວງຫູຟັງໄປຈັ່ງຊັ້ນແລ້ວ ອັນເລື່ອງໂຫຣາສາດນີ້ ກໍ່ແມ່ນສ່ວນໜຶ່ງຂອງວິທະຍາສາດທີ່ຄົນວິທະຍາສາດຕິດຕາມກັນມາຫລາຍພັນປີແລວ.

## ກັບເມືອຢາມບ້ານ

ພາຍຫລັງກັບຄືນຈາກການໄປຊົມຂວາຍເຂດນ້ຳງື່ມ ນາງແລະ ໝູພອນກັນສະເໜີຕໍ່ຂັ້ນເທິງວ່າ : ຂໍເມືອຢາມບ້ານ - ເພາະຄຶດຮອດພໍ່ແມ່ຫລາຍ, ເພິ່ນຕົກລົງອານຸຍາດ ຈຶ່ງມີໝູ່ ມາດອຍກັນ 5 – 6 ຄົນ ເໝືອນກັບນາງ ກິມມາລີ ນາງກິມມາລອນ ເດີນດົງກັບມາບ້ານເກີດເມືອງນອນ, ມີທະຫານໝວດ - ໜຶ່ງພໍດີມືອງກລັບໄປທ້ອງຖິ່ນນັ້ນ, ການເດີນທາງຈຶ່ງຕະ ຫລອດ

ປອດໄພດີ.

ພໍແຕ່ແມ່ບເຫັນຫນ້າ, ພໍ່ແມ່ພີ່ນ້ອງດີອົກດີໃຈລົງຈາກເຮືອນຈາກຊານມາຕ້ອນປານວ່ານາງເປັນລູກເປັນເຕົ້າຂອງຫມົດທຸກຄົນ.

ຢູ່ເຮືອນບໍ່ພໍ 5 ມື້, ຊ້ຳພັດມີຂ່າວທະຫານຝຣັ່ງອອກເຄື່ອນໄຫວຈາກຄາຍ ກົກແຮ ແລະຄາຍບ້ານມໍ້ ເພື່ອກວດລາງ. ແມ່ຂອງນາງຈຶ່ງຮີບຟ້າວເອົານາງໄປເຊື່ອງຊ້ອນໄວ້ຢູ່ໄຮ່ຫ່າງ ໄກຈາກບ້ານ 10 ກວ່າກິໂລແມັດ, ເປັນພື້ນໄຮ່ຢູ່ກາງດົງພົງ ກົດຊຶ່ງມີ 5 ເຈົ້າດ້ວຍກັນ ຫມາຍວ່າມີໄຮ່ 5 ພື້ນນຳກັນ, ແຕ່ ລະເຈົ້າບໍ່ມີຄົນນອນໃນຖຽງ 4 ຫລັງນັ້ນ, ພື້ນໄຮ່ຂອງນາງຊ້ຳ ຢູ່ຂອກຫມູ່ ແລະມີແຕ່ນາງນອນຄົນດຽວ, ຖຽງພໍ່ປູກສູງເຄວ ວວ ຢູ່ກາງໄຮ່ ແລະປູກໃສ່ກາງໂນນສູງ, ແຄມຖຽງເບື້ອງຕາ ເວັນຕົກມີກົກບົກໃຫຍ່ປະມານ 6 - 7 ອຸ້ມ 1 ຕົ້ນໃຫຍ່ສູງອິຫລີ ພໍ່ຈູດໄຮ່ປາຍກົກບົກຍັງຂຽວອຸ່ມທຸ່ມຢູ່ແປວໄຟບໍ່ຮອນເຖິງ.

ອື່ອື່ແມ່ຂ້ອຍເອີຍ... ຕອນກາງເວັນຍັງໄດ້ແດ່ ເພາະມີແມ່ມາຫາ ພ້ອມພວກນ້ອງນ້ອຍທີ່ແມ່ບ່າເຈີຍມີຈົ່ງມາຢູ່ນຳຍັງນ້ອນແດ່, ເຈົ້າຂອງໄຮ່ແຕ່ລະພື້ນເອົາກໍ່ມານຳຍັງຮູ້ສຶກອຸ່ນໃຈແດ່ ບາດກາງຄືນນັ້ນຕີ ປະໃຫ້ນາງຢູ່ຄົນດຽວ, ເຖິງຍາມແລງ ແມ່ ແລະ ນ້ອງນ້ອຍພາກັນກັບຄືນບ້ານ ດ້ວຍຄວາມຈຳໃຈ ເພາະເປັນຫ່ວງຄິດເຖິງນາງ, ພໍ່ກໍ່ບໍ່ຢູ່ນຳ, ເພິ່ນເປັນນັກຕໍ່ສູ້ຮ່ວມ ກັບອິດສະຫລະບໍ່ຮູ້ວ່າເພິ່ນໄປທາງໃດທິດໃດ.

ກອງກົກບົກໃຫຍ່ແມ່ໄດ້ເອົາຄວາຍ 3 ໂຕຜູກແຫລ່ງ ໄວ້

ຮຽບຮ້ອຍແຕ່ລະມື້ ກ່ອນເພິ່ນກັບເມື່ອບ້ານ ແມ່ຄິດວ່າ: ເວລາ ເສືອໃຫຍ່ເຂົ້າມາກໍ່ໃຫ້ກິນຄວາຍນັ້ນກ່ອນ, ກອງລາງຖຽງມີຫມາ 1 ໂຕ, ຄວາມຈິງນາງຮູ້ສຶກອຸ່ນໃຈໃນຍາມເດິກ ເພາະ ມີຄວາຍມີຫມາເຝົ້າຢູ່ກອງລາງຖຽງນັ້ນເປັນເພື່ອນເຄື່ອງມື ມີມີດຫນຶ່ງດວງ, ມີພ້າ, ຈຶ່ງແມ່ນເປັນຊີວິດບັ້ນຫນຶ່ງຂອງນາງ ທີ່ໂດດດ່ຽວປ່ຽວພອຍທີ່ສຸດ.

ເພື່ອບໍ່ໃຫ້ຫງ່ວມເຫງົາ, ແມ່ໄດ້ເອົາຫລາເອົາຝ້າຍໄປໃຫ້ນາງເຂັນ, ກ່ອນຂຶ້ນຖຽງນອນ ນາງໄດ້ດັງໄຟໄວ້ກອງລາງ - ຖຽງ ດັງໄຟກອງຫນຶ່ງໃຫ້ຄວາຍ ເພື່ອໄລ່ຮິ້ນໄລ່ຍຸງ ແລະ ໄລ່ເຫລືອກມາກິນຄວາຍ, ເທິງຖຽງນາງໃຕ້ກະບອງແລ້ວເຂັນຝ້າຍເຕັ້ນໃນແລ້ວຈຶ່ງເຂົ້ານອນ.

ຢູ່ມາຊາວບ້ານຮູ້ສະພາບຂອງນາງແນວນັ້ນໃຜໆກໍ່ຈົ່ມອີ່ດູສົງສານນາງ ຍັງເດັກຍັງນ້ອຍໄປປ່ອຍໄວ້ດົງພົງກິດຄືນດຽວໂອ່ຍຈຶ່ງແມ່ນແມ່ຈັ້ນມັນສັງມາກາປ່ອຍນາງນັ້ນໄວ້ປ່າຄືນດຽວ (ຊາວບ້ານເອີ້ນແມ່ນາງເປັນແມ່ຈັ້ນ )ແມ່ຂອງນາງມີແຕ່ວ່າ - ດ້ວຍຄວາມຈຳເປັນ, ຖາຢູ່ບ້ານສັດຕູເຂົ້າບ້ານຍາມຖືກຈັບມັນໄປຂາ... ເວົ້າແລ້ວແມ່ກໍ່ນ້ຳຕາໄຫລພອນ...

ຢູ່ມາມີ 2 ຜົວເມັຍພໍ່ເຖົ້າຟອງເປັນຊາວບ້ານກໍ່ພາກັນໄປນອນໄຮ່ຂອງເພິ່ນ, ຫ່າງໄກຈາກໄຮ່ຂອງນາງປະມານ 600 ແມັດ, ເດິກໆ 2 ຜູ້ເຖົ້າພວກເພິ່ນຕີເຄາະເອີ້ນໃສ່ນາງ ເປັນສຽງພິຫວ່ຳໆນແຫລະ, ນາງກໍ່ຕີເຄາະຕອບພວກເພິ່ນ, 2 ຜູ້ເຖົ້ານັ້ນເພິ່ນກໍ່ຊວນນາງນອນນຳເພື່ອຈະບໍ່ຢ້ານແລະບໍ່ເຫງົາ.

ພວກພໍ່ແມ່ເຖົ້າມານອນໄຮ່ພີ້ກໍ່ຍອນອື່ດູເຈົ້າໃດນາງ ເຮີຍ ມາຮີບມານອນນຳກັນຈຶ່ງມ່ວນອື່ຫລາ ແຕ່ນາງບໍ່ຍອມມາ ເພາະ ປະຄວາຍ 3 ໂຕນັ້ນ.

ບາງຄືນນອນບໍ່ຫລັບ ເພາະເປັນຫ່ວງນຳຫມູ່ເພື່ອນທີ່ ມາ ຢ້າມບ້ານພອມກັນ, ບໍ່ຮູ້ພວກເພື່ອນເຫລົ່ານັ້ນຈະຕົກຢູ່ສະ ພາບ ການຄົດຕົນບໍ່ຫລີແນວໃດກໍ່ບໍ່ຮູ້ ? ຈະພາກັນກັບຄືນສູ່ກົມກອງກໍ່ ບໍ່ ໄດ້, ຈະອອກຢູ່ບ້ານກໍ່ບໍ່ໄດ້ ເລີຍບໍ່ຮູ້ຈະເຮັດແນວໃດ.ໃນຄາວນີ້ ຈັ່ງແມ່ນອັດຕະຄັດຄັບຂັນແທດເດ !.

ມີຄືນຫນຶ່ງນາງຝັນວ່າ : ໄດ້ຍິນເຫາະເຫີນເດີນອາ ກາດ ຄືກັນກັບນົກ ຈິດເວີ້ນຢ່າງແປກປະຫລາດຫົວໃຈ, ຍອມວ່າ:ມີ ທະ ຫານຝຣັ່ງລູ້ອນໄປເທິງຖຽງວ່າຈະຈັບເອົານາງ,ນາງຕັດສິນ ໃຈ ເລີຍໂດດລົງຖຽງບໍ່ຍອມໃຫ້ພວກເຂົາຈັບແຕ່ແລວກໍ່ເຫາະ ໄປ ເລີຍ, ເຫັນທະຫານຝຣັ່ງແຫງນຫນ້າຂຶ້ນຕາມນາງດ້ວຍຄວາມຜິດ ຫວັງແລວພວກເຂົາເລີຍຫນີ, ບາດພວກເຂົາຫນີໄປແລວນາງ ຊ້ຳ ພັດຄິດຮອດຫາຄວາຍ, ຢ້ານຄວາຍເສຍຈຶ່ງເຫາະລົງໄປຢືນ ຈັ້ງ ຢູ່ປາຍກົກບົກໃຫຍ່ຕົ້ນນັ້ນແລ້ວຫລຽວລົງເບິ່ງຄວາຍຍັງຄືເກົ່າ ຮູ້ ສຶກດີໃຈຫລາຍ, ຊວາດຮູ້ເມື່ອຂຶ້ນມາຈຶ່ງຮູ້ວ່າຕົນຝັນ.

ການກວາດລ້າງຂອງທະຫານຝຣັ່ງໂຍະຍານລົງ ແລ້ວ ນາງພ້ອມຫມູ່ພ້ອມກັນກັບຄືນສູ່ກົມກອງອີກພາຍຫລັງຄາວຢູ່ ໄຮ່ ໄດ້ 3 ເດືອນກວ່າ.

# ຄຳໝັ້ນສັນຍາ



ທ່ານ ໄກສອນ ພົມວິຫານ ເວລານີ້:(ໃນ ຕຳແໜ່ງ ລັດຖະເສນາປ້ອງ ກັນຊາດ) ໃນ ລັດຖະບານລາວ ຕໍ່ຕ້ານທັງເປັນຜູ້ ລິເລີ້ມສ້າງ ຕັ້ງ ກອງລາດຊະວົງ.

ຄົນທີ່ນາງໄດ້ເຫັນກ່ອນຜູ້ອື່ນກໍ່ແມ່ນອ້າຍໄຊ ຕໍ່ມາກໍ່ ແມ່ນ ອ້າຍອໍ ຊຶ່ງພວກອ້າຍເຫຼົ່ານັ້ນນາງກໍ່ພໍແຕ່ແກວ່ນເຄີຍເໝືອນກັບ ຄົນອື່ນໆ, ນາງບໍ່ໄດ້ຮູເລີຍຊູ້ວ່າພວກເພິ່ນມີເຈດຕະນາ ຫຍັງ ກັບນາງ,ແຕ່ບໍ່ຮູ້ເຫດຜົນ ຫຍັງອ້າຍອໍຫວງສຸດຂີດ, ທັງອອກປາກ ອີກວ່າ " ໃຜມາເອົານາງທອງວິນໜີໄປຈາກເຮົາແມ່ນບໍ່ໄດ້ " ໄດ້ຍິນຄຳນີ້ ນາງຮູ້ສຶກຢ້ານສັ່ນສະເທືອນຈິດໃຈບໍ່ວ່າຍ ນາງມີ

ແຕ່ອາໃສການຈັດຕັ້ງຊ່ວຍເຫຼືອເບິ່ງແຍງ. ເທົ່ານັ້ນ ແລະ ບໍ່ຮູ້ຈະອາໃສໃຜ.

ພວກລູກທັງ 4 ຄົນຕ່າງກໍ່ຫາໂອກາດອັນເຫມາະພົບ ນາງເປັນຄັ້ງໆໂອລົມແລະລະດົມໃຫນາງຄິດ ແລະ ຕັດສິນໃຈ ນາງໄດ້ຕັດສິນໃຈແລ້ວວ່າ " ນາງຍັງນອຍຢູ່ຫລາຍ, ຂໍໃຫມີພົບ ງານແກ່ປະເທດຊາດບ້ານເມືອງສາກ່ອນ."

ເວລາໄດຜ່ານໄປທາຍປີ 1952, ດ້ອຍທົນຕໍ່ປ້າຕໍ່ລູງ ບໍ່ໄຫວ, ນາງຈຶ່ງຮັບປາກການຫມັ້ນ.

ກ່ອນຈະເຖິງເວລາຫມັ້ນ, ການຈັດຕັ້ງໄດ້ຈັດໃຫນາງ ກັບເພິ່ນ ( ທ່ານ ໄກສອນ ພົມວິຫານ ) ພົບກັນສາກ່ອນ " ເພື່ອໃຫບ່າວສາວເວົ້າລົມກັນວ່າຈັ່ງໃດ " ຈຶ່ງເປັນເທື່ອທໍາ ອິດທີ່ນາງກັບເພິ່ນໄດພົບກັນຕາມລໍາພັງສອງຕໍ່ສອງ, ເມື່ອເພິ່ນຂີ່ ມ້າມາພົບນາງ.

ນາງຄິດເຖິງຮູບພາບເວລາເພິ່ນເຜີຍແຜ່ເອກະສານ, ເພິ່ນເວົ້າໄດເກັ່ງຫລາຍ ແລະ ເປັນຕາຟັງທັງຈັບ ອົກຈັບໃຈ ບາດມາເວົ້າກັບນາງ, ເພິ່ນຊໍ້າພັດບໍ່ເວົ້າພໍປານໃດ, ເປີດສາກເພິ່ນຖາມວ່າ : ຄິດຮອດບ້ານບໍ່ ? ການເຮັດວຽກງານ ແລະການຮໍ່າຮຽນຂອງນ້ອງເດເປັນແນວໃດ ?"ແລະ ອື່ນໆຖາມວິນວຽນເລື່ອງຊີວິດປະຈໍາວັນແລວຈຶ່ງເອີຍເຖິງເລື່ອງ : ເພິ່ນ ວ່າ " ເຖິງບໍ່ທັນຢາກແຕ່ງກໍ່ບໍ່ເປັນຫຍັງ, ພວກເຮົາຫມັ້ນຫມາຍ ກັນເອົາໄວ້ກ່ອນ, ອີກປີຫນຶ່ງສອງປີຈຶ່ງແຕ່ງກໍ່ໄດ້ " ນາງຕອບເພິ່ນແບບບໍ່ແນມເບິ່ງຫນ້າວ່າ " ນອງຍັງເດັກນອຍຢູ່, ວຽກບານການ

ເຮືອນກໍ່ຍັງບໍ່ທັນສະຫລາດ, ຜົນງານກໍ່ຍັງບໍ່ທັນມີອັນໃດຢ້ານວ່າຈະບໍ່ເປັນທີ່ພໍໃຈໃຫ້ແກ່ອ້າຍ, ເພາະອ້າຍກໍ່ເປັນຮອດລັດຖະເສນາ"

" ເວລານັ້ນນາຍົກເຂັ້ນວ່າ ລັດຖະມະຫາເສນາ )ເພິ່ນຕອບ-ວ່າ " ບໍ່ເປັນຫຍັງດອກ, ສາງຜົນງານຕື່ມອີກສາກ່ອນກໍ່ໄດ້, -ແຕ່... ໃນເວລາພວກເຮົາໝັ້ນໝາຍກັນນີ້, ອ້າຍກໍ່ຈື່ ບໍ່ມີຫຍັງໄດ້! ເພາະອອກຈາກບ້ານເຂົ້າປ່າມາຕໍ່ສູ້ກູ້ຊາດກໍ່ມີແຕ່ຕົນ ຕົວສອງຝາມືເປົ່າ, ເມື່ອເຖິງມື້ໝັ້ນໝາຍແລ້ວ, ອ້າຍຈະຂໍ ເອົາຫົວໃຈບໍລິສຸດຜຸດຜ່ອງຂອງອ້າຍນີ້ແລ້ວໝັ້ນກັບນ້ອງ, ພວກເຮົາຈະຮັກກັນ, ຈະຢູ່ຮ່ວມກັນໄປຈົນເຖິງວັນຕາຍ, ມີແຕ່ຄວາມຕາຍເທົ່ານັ້ນຈຶ່ງຈະມາພັດພາກພວກເຮົາໜີອອກຈາກກັນມີແຕ່ສັດຈະວາຈານີ້ແລ້ວເປັນສັກຂີພິຍານ "

ຫລັງຈາກລັດຖະບານຕໍ່ຕ້ານຈັດພິທີໝັ້ນໃຫ້ນາງກັບ ເພິ່ນແລ້ວ, ນາງສະໝັກໃຈໄປກໍ່ສ້າງຮາກຖານຢູ່ເຂດຫລວງພະບາງ

ເວລາຊື່ອອກເດີນທາງໄປຫລວງພະບາງກໍ່ບໍ່ແມ່ນ ເລື່ອງທຳມະດາ, ອ້າຍອໍ ຊອກຄົ້ນຫາປານຊື່ພົກແຜ່ນດິນ, ເມື່ອຮູ້ຂ່າວວ່າ " ນາງກັບທ່ານໄກສອນ ຈັດພິທີໝັ້ນກັນແລ້ວ " ການເດີນທາງອອກຈາກເມືອງຊຳເໜືອໄປສູ່ເຂດພື້ນຖານຈຶ່ງລັກລີ້ ສາຍຫູສາຍຕາ ອ້າຍອໍ ໄປບໍ່ແມ່ນຂອງຄອຍ. ແຕ່ບັງເອີນເວລາພວມເດີນທາງຜ່ານທົ່ງນາເມືອງປານຊ້ຳແມ່ນເຫັນອ້າຍອໍພວມ ຍ່າງມາກັບໝູ່ 4 ຄົນ, ຕົນເອງຮູ້ສຶກຢ້ານຄ້ານຄື້ນໃນໃຈ.

ທ່ານເຈົ້າສຸກ ວົງສັກ ຜູ້ເປັນຫົວໜ້າຄະນະຂອງນາງ ໄດ້ກະສັບໃສ່ພວກອ້າຍທີ່ພວມຍ່າງນຳກັນໄປນັ້ນ, ພິບດອວກໍ່ ເຫັນ

ອ້າຍ ບົວລຽນ ກັບອ້າຍສົມພວກອ້າຍທັງ 2 ກ້າວຂຶ້ນຍ່າງ ແຝງຂ້າງຂອງນາງທັງບອກຄ່ອຍໆໃສ່ຫູນາງວ່າ: ນ້ອງທອງວິນຈິ່ງ ຈັບມື້ທາວ ອໍ ນັ້ນແດ່ເນີ ແລະ ສົ່ງລາລ້າວຈົບເຈືອແດ່, ນາງປະ ຕິບັດຕາມເປັນຢ່າງດີ, ທຸກສິ່ງຢ່າງໄດ້ຜ່ານພົ້ນໄປໂດຍດີ ນາງຮູ້ສຶກທັນໃຈລົ່ງອົກລົ່ງໃຈເປັນຢ່າງໃຫຍ່.

## ໄປຫລວງພະບາງ

ປານນີ້, ນາງຈິ່ງຮູ້ສຶກຈາກຫົວໃຈຂອງຕົນເອງວ່າ "ການຈາກຄົນຮັກໄປຫ່າງໄກກັນແມ່ນໄດ້ເກີດມີຄວາມຮູ້ສຶກຄືແນວໃດ?" ຄວາມຮັກທຳອິດ, ຄວາມຮູ້ສຶກທຳອິດບໍ່ອາດຈະພັນລະນາໃຫ້ນັກປະພັນເພື່ອຂຽນໃຫ້ໝົດໃຫ້ສິ້ນໄດ້ເລີຍ.

ໜ່ວຍຂອງນາງໄປປະຈຳຢູ່ບ້ານ ຫາດງົ້ວ ລ້ຽງນາ ເບິ່ງເມືອງງອຍ, ເປັນປ່າໃຫຍ່ດົງໜາ, ເປັນໝູ່ບ້ານທີ່ ອົບພະ ຍົບຫລົບໄພຈາກການກວາດລ້າງຂອງພວກລ່າເມືອງຂຶ້ນຝຣັ່ງ, ຫ່າງຈາກຕົວເມືອງຫລວງພະບາງ 4 ກິໂລແມັດ.

ການລົງຮາກຖານເວລານັ້ນບໍ່ແມ່ນວ່າ ໄປນັ່ງຫລີໄປ ຢືນໂຄສະນາແນວທາງນະໂຍບາຍຂອງການປະຕິວັດສູ່ປະຊາຊົນຟັງຊື່ໆ. ປາກໂຄສະນາ, ມືເຮັດວຽກທຳງານ, ຫົງຕຳເຂົ້າ, ຕັກນ້ຳ ຕັດຟືນ, ຜ່າຟືນ, ຖາງໄຮ່, ສັກເຂົ້າໄຮ່, ປັດກວາດເດີ່ນ ບ້ານ ແລະເຮັດທຸກວຽກທີ່ປະຊາຊົນເຮັດ, ປະຊາຊົນກິນອັນໃດກໍ່ກິນນຳປະຊາຊົນ, ທຸກ ແລະ ສຸກຢູ່ຮ່ວມກັນກັບປະຊາຊົນ, ເປັນເວລາ 12 ເດືອນເຕັມໆ, ຈົນຮ່າງກາຍຂອງນາງກໍ່ຄືໝູ່ ຈ່ອຍ

ເຫລືອງທັງເປັນພະຍາດໄຂ້ຍຸງແດ່, ແຕ່ປານນັ້ນນາງກໍ່ບໍ່ຈົ່ມ ບໍ່ວ່າ, ເພື່ອເຣັດໃຫ້ຫລອນໜ້າທີ່ ທີ່ການຈັດຕັ້ງ ແລະ ຂັ້ນເທິງມອບໝາຍໃຫ້. ໜ່ວຍສາງຣາກຖານເທື່ອນີ້ແມ່ນ ທ່ານເຈົ້າສຸກວົງສັກ ເປັນຫົວໜ້າ ທຸກແຜນການ, ທຸກວິທີການອັນລະອຽດແມ່ນເພິ່ນເອງເປັນຜູ້ວາງໂດຍເພິ່ນໄດ້ເຕົ້າໂຮມເອົາ ຄວາມເຫັນຂອງ ພະນັກງານທຸກຂັ້ນ ແລະ ປວງຊົນຢ່າງຄ່ອງ ແຄ້ວແລ້ວວາງເປັນແຜນການຈຶ່ງພາໝູ່ປະຕິບັດຢ່າງມີໝາກມີ ຜົນເປັນແຕ່ລະບາດກ້າວ. ພາຍໃຕ້ການຊີ້ນຳນຳພາຂອງທ່ານເຈົ້າສຸກວົງສັກ ໂດຍກົງ. ພິເສດນາງໄດ້ໃສ່ໃຈເບິ່ງເພິ່ນ ແມ່ນເອື້ອເຟື້ອຣັກແພງພະນັກງານ ແລະ ປະຊາຊົນຢ່າງຈິງຈັງ ອີຫລີ.

## ແຕ່ງງານ



ພາບຕອນສົມລົດໃໝ່ ທີ່ ສຳນັກງານປະທານ ແນວລາວຣັກຊາດເມື່ອ ວັນທີ 20/10/54 ທີ່ ບ້ານບຸບຜາ ເມືອງຊຳ ເໜືອ ແຂວງ ຫົວພັນ.

ຈາກຕົວຈິງນີ້ເຮັດໃຫ້ນາງມີຄວາມຮູ້ສຶກຢ່າງມີຄ່າວ່າ : ໂດຍນ້ຳໃຈຮັກຊາດຄຽດແຄ້ນສັດຕູຜູ້ຮຸກຮານນີ້ແມ່ນບໍ່ເລືອກຊົນຊັ້ນຄົນໃນສັງຄົມແມ່ນແຕ່ເຊື້ອເຈົ້າແນວຈອມກໍ່ຍັງອອກວຽງວັງເຂົ້າປ່າເພື່ອພາປະຊາຊົນຕໍ່ສູ້ກູ້ຊາດຍາດເອົາເອກະລາດແຫ່ງຊາດອິດສະລະພາບມາໃຫ້ປະຊາຊົນລາວທັງປວງ. ສຳລັບນາງເພິ່ນກໍ່ເຫັນໃຈການຈາກຄູ່ຫມັ້ນ... ບາງຄັ້ງຄາວເພິ່ນກໍ່ເອົາຈົດຫມາຍຂອງທ່ານ ໄກສອນ ມອບໃຫ້ນາງ, ນາງຮູ້ສຶກດີໃຈ ແລະ ເປັນການປຸກກຳລັງໃຈຢ່າງໃຫຍ່ຫລວງ, ພາໃຫ້ນາງມອງຂ້າມຄວາມທຸກຍາກຫລະກົນດານໃນຫນ້າທີ່ວຽກງານຂອງນາງ. ເພິ່ນເອງກໍ່ຄອງຄອຍຮັບຈົດຫມາຍຂອງນາງເຫມືອນກັນ...

ຫລັງຈາກສະຫລຸບຂັ້ນຂົນຂວາຍປູກລຸກຮາກຖານແລ້ວ, ສູນກາງຈຶ່ງຮຽກຕົວນາງກັບ. ກັບໄປພັກຢູ່ບ້ານ ສົບຊານລ້ອງມາ - ແຂວງ ຫົວພັນ ເພື່ອລໍຖ້າໃຫ້ແຕ່ລະຫນ່ວຍກັບຂຶ້ນໄປຮອດ ແລວເປີດການສະຫລຸບໃຫ້ຢ່າງເປັນທາງການ.

ປະມານ 2 ອາທິດ, ຫນ່ວຍຂົນຂວາຍກໍ່ສ້າງຮາກ ຖານຈາກແຕ່ລະທິດກໍ່ທະຍອຍກັບມາຄົບຫນ້າຄົບຕາ.

ຂັ້ນສະຫລຸບວຽກງານໄດ້ໄຂຂຶ້ນ ແລະ ດຳເນີນໄປ ເປັນເວລາ 15 ວັນ.

ຈາກກອງປະຊຸມສະຫລຸບນັ້ນ, ພວກເຮົາຍັງຮູ້ຂ່າວດີວ່າ: ສະພາບການຢູ່ອິນດູຈີນ ພວມມີທ່າດີໃຫ້ແກ່ກຳລັງປະຕິວັດ, ສະຖານະການຢູ່ທົ່ວໂລກໄດ້ບັງຄັບໃຫ້ພວກຮຸກຮານຍອມຈຳນົນຕໍ່ກຳລັງແຮງສັງລວມຂອງມວນຊົນທີ່ຮັກຫອມສັນຕິພາບໃນທົ່ວໂລກ.

ໂດຍສະເພາະແມ່ນການປົດປ່ອຍດຽນບຽນຟູຂອງກອງທັບ ແລະ ປະຊາຊົນຫວຽດນາມຫວ່າງວັນທີ 7 ພຶດສະພາ 1954 ໃຕການບັນຊາຕິໂດຍກົງຂອງທ່ານພົນເອກ ວໍຫງວຽນຢາບ, ເຊິ່ງເລີ່ມຕີແຕ່ວັນທີ 13 ມີນາ,ຕະຫລອດ 55 ມື້ 55 ຄືນຈຶ່ງໄດ້ບັນລຸໄຊຊະນະ.

ເຈົ້າສຸກ ວົງສັກ ມາຊຶ່ມໃສ່ຫູນາງວ່າ : ເພື່ອຕ້ອນ ຮັບໄຊຊະນະຢູ່ ອິນດູຈີນ,ງານວິວາມະຫາມົງຄຸນຂອງຫລານ ກັບທ່ານ ໄກສອນ ພົມວິຫານ ຈະມີຄວາມໝາຍທີ່ສຸດ.

ນາງຈື່ໄດ້ແຕ່ວ່າ : ວັນທີ 20 ເດືອນ 10 ປີ 1954 ລັດຖະບານລາວຕໍ່ຕານໄດ້ຈັດການງານວິວາໃຫ້ທັງສອງ.ງານບໍ່ໃຫຍ່ໂຕ, ແຕ່ມີຄວາມໝາຍ ແລະ ມີຊີວິດຊີວາ,ມີບັນຍາກາດດີ.

24 / VII

ອາຫານການກິນກໍ່ມີງົວ,ມີໝູ,ມີໄກ່,ມີເຫລົ້າຂາວ, -ເຫລົ້າໄຫຕາມປະເພນີຮີດຄອງມີພາຂວັນ. ປາວຽງຄຳ( ເມຍເຈົ້າສຸພານຸວົງ ) ເປັນເຈົ້າກົ້ເຈົ້າການຈັດແປ່ງແຕ່ງເພດ ໃຫ້ນາງທຸກຢ່າງທຸກແນວ,ເພາະພໍ່ແມ່ຂອງນາງຢູ່ໄກ,ຈຶ່ງບໍ່ຮູ້ວ່າຈະເພິ່ງໃຜ, ການນຸ່ງຖືສິ້ນເສື້ອແພບິງກໍ່ຮອດບໍ່ເປັນ,ສະເດັດເຈົ້າສຸພານຸວົງ ໄດ້ເປັນເຈົ້າພາບໃຫ້ແກ່ງານ.

ເຈົ້າພາບຝ່າຍຍິງທີ່ທາງລັດຖະບານຕໍ່ຕານຈັດແລະ ປະກາດໃນງານກໍ່ມີ : ທ່ານ ສີສົມພອນ ລໍວັນໄຊ,ທ່ານພູມີ ວົງວິຈິດ, ເຈົ້າສຸກ ວົງສັກ, ທ່ານ ສິງກະໂປ ສີໂຄດຈຸນລະມະນີ, ທິດມອນ ສາວຈັນທະລາ,ລຸງມື່ນ ສົມວິຈິດແລະທ່ານອື່ນໆອີກ

ເພາະຈື່ບໍ່ໄດ້ໝົດ, ສ່ວນເຈົ້າພາບຝ່າຍຊາຍກໍ່ມີ:ທ່ານ ໜູຮັກ ພູມສະຫວັນ,ທ່ານ ຄຳໄຕສີພັນດອນ, ທ່ານ ພູມສີປະເສີດແລະ ທ່ານອື່ນໆອີກ...

ຍອນມີພິທີງານແຕ່ງແລ້ວ,ພັກປະຊາຊົນລາວຈຶ່ງໄດ້ເປີດ ເອິກຮັບເອົານາງເຂົ້າສູ່ວົງແຂນອັນແໜນແກ່ນຂອງພັກ,ໃນວັນ ທີ່ 3/9/1955, ຫລື ຊື່ວ່າຮັບເອົາຊີວິດໃໝ່ສອງຊັ້ນກໍ່ ວ່າ ແມ່ນ.

## ລວມລາວຄັ້ງທີໜຶ່ງ

ຈາກໄຊຊະນະດຽນບຽນຟູ, ໄດ້ເຮັດໃຫ້ໂລກຍອມຮັບ ຕໍ່ ສະພາບຄວາມເປັນຈິງທີ່ພວມເກີດຂຶ້ນຢູ່ ອິນດູຈີນ,ຮັບຮູ້ເຖິງ ການຮຸກຮານ ແລະ ການປ່າລາໄຊຢ່າງເຈັບແສບຂອງພວກລ່າ ເມືອງຂຶ້ນຝຣັ່ງ.

ໄຊຊະນະດຽນບຽນຟູ, ຈຶ່ງມີສ່ວນຕັດສິນຊາຕາກຳຂອງ ທັງ 3 ຊາດຢູ່ ອິນດູຈີນ ອັນມີລັກສະນະຕັດສິນປະຫວັດ ສາດ ບັງຄັບໃຫ້ພວກລ່າເມືອງຂຶ້ນຝຣັ່ງຕ້ອງກົ້ມຫົວຍອມເຊັນສັນຍາ ຢູ່ ເຊີແນວ, ຮັບຮູ້ເອກະລາດ,ອຳນາດອະທິປະໄຕ,ເອກະພາບ- ແລະ ພື້ນແຜ່ນດິນອັນຄົບຖ້ວນຂອງ 3 ຊາດ:ລາວ-ຫວຽດນາມ ແລະ ກຳປູເຈຍ.

ໃນເວລາດຽວກັນ, ຈັກກະພັດອາເມລິກາ ( ຟັອດ ສະ ເຕີຄັນເລັດ ແລະ ນາຍພົນອາກເທີເລັດຟອດ ) ກໍ່ຂຶ້ນຂຽວ - ວາງແຜນການປິດລ້ອມຫວັງຖິ້ມບົມທະລົ່ມດຽນບຽນຟູເພື່ອກອບ ກູ້

ຊ່ວຍເອົາໜ້າໃຫ້ຝຣັ່ງ. ແຕ່ຊ້ຳພັດປ່ຽນແຜນ,ຟ້າວຮ່ວມມື ກັບອົງກິດເພື່ອສືບຕໍ່ດຳເນີນສົງຄາມຢູ່ອິນດູຈີນ ແລະປັດເຂັ່ຍຝຣັ່ງ.

ຕໍ່ໂລກ, ພວກຈັກກະພັດເຮັດຄືວ່າມີຄວາມຈິງໃຈຮັບ ຮູ້ເອກະລາດຂອງ 3 ຊາດອິນດູຈີນແທ້.ແຕ່,ຢູ່ກະໂຕ ອິນດູ ຈີນແລວ, ພວກລ່າເມືອງຂຶ້ນຝຣັ່ງໄດຮ່ວມມືກັບຈັກກະພັດອາເມ ລິກາເພື່ອຫວັງກູ້ທ່າປາລະໄຊກັບຄືນ, ຈັກກະພັດອາເມລິກາຊ້ຳພັດຄິດຈະດຶດຫົວຝຣັ່ງອອກຈາກອິນດູຈີນ,ຄວາມຂັດແຍ່ງຈຶ່ງເກີດຂຶ້ນຢ່າງໜັກ.ຕາມສັນຍາເຊີແນວ, ຜູ້ຕາງໜ້າລັດຖະບານລາວຕໍ່ຕ້ານໄດເຂົ້າໄປວຽງຈັນ ເພື່ອເຈລະຈາກັບຝ່າຍຂວາວຽງ ຈັນເວົ້າເຖິງການຮ່ວມລາວ,ຄວາມຖືກຕອງປອງດອງຊາດ.

ຢູ່ພາຍໃນລັດຖະບານປະຕິການວຽງຈັນກໍ່ມີການຂັດ ແຍ່ງກັນຢ່າງໜັກ, ເມື່ອກຸ່ມຂວາຈັດບໍ່ຍອມປະຕິບັດຕາມສັນຍາ ເຊີແນວ, ແຕ່ກໍ່ຈຳຍອມຕໍ່ທາງສຽງໂລກທີ່ບີບບັງຄັບ.

ການລວມລາວເລີ່ມຕົ້ນ,ທ່ານ ໄກສອນ ພົມວິຫານ ພາເມຍ ແລະ ລູກນ້ອຍລົງມາວຽງຈັນ,ພັກຜ່ອນຢູ່ວຽງຈັນ ຫລາຍເດືອນຕິບຢູ່ມາເພິ່ນເລີຍຖືກແຕ່ງຕັ້ງໃຫ້ລົງໄປສະໝັກຮັບ - ເລືອກຜູ້ແທນລາສະດອນຢູ່ແຂວງອັດຕະປື, ສຳລັບນາງເອງຖືກມອບໝາຍເປັນພົນລະເມືອງດີເໝືອນຄົນອື່ນໆແລວຂໍເມືອຍາມບານ, ວັນທີ່ 25 ທັນວາ 1957,ການເລືອກຕັ້ງໄດສຳ ເລັດລົງ.ຮອດວັນທີ່ 14 ກຸມພາ 1956,ກະຕ່າຍ ໂດນສະໂສ ລົດຈຳຕອງໄດລາອອກຈາກຕຳແໜ່ງນາຍົກລັດຖະມົນຕີຂອງລັດຖະບານຣາຊະອານາຈັກລາວ.

ການເລືອກຕັ້ງຕ່າງຫາກ, ການຕັດກາງເງິນລະບັດຈ່າປະ ສົມ ແລະ ນະໂຍບາຍໂຫດຮ້າຍປ່າເຖື່ອນເຂັ້ມຂ້າແກແຄນຕໍ່ຄົນ ຕໍ່ຕ້ານໄດ້ເກີດຂຶ້ນ, ເຊັ່ນວ່າ: ປະຊາຊົນຄົນໃດປ່ອນບັດໃຫ້ ຄົນອິດສະຫລະ ແລະ ກໍ່ຖືກຍິງຖິ້ມຢູ່ກາງເດີ່ນບ້ານໂຈດ, ມີການລັດຊາລັດຍິງກັນສັບສົນວຸ້ນວາຍຫລາຍ, ທ່ານ ໄກສອນ ຈຶ່ງບໍ່ ໄດ້ຖືກຮັບເລືອກເປັນຜູ້ແທນ.

## ລູກຫົວແກ້ວຫົວແຫວນ

ເພິ່ນບອກກັບນາງວ່າ: " ມັນເປັນກົດເກນຂອງປະຫວັດສາດ " ເພິ່ນເວົ້າແຕ່ເທົ່ານັ້ນ, ນາງຈຶ່ງມາຕີຄວາມໝາຍ - ເອົາວ່າ " ກົດເກນປະຫວັດສາດ ອາດຈະໝາຍເຖິງປະຕິວັດກັບປະຕິການ, ເວລາໃດກໍ່ປະທັດປະທານກັນດ້ວຍທຸກຮູບແບບ"

ເພິ່ນ ແລະ ນາງບໍ່ມີຫຍັງເສຍໃຈ, ແຕ່ເຫັນເພິ່ນ ເຄື່ອນໄຫວຢູ່ທຸກເວລາ, ພໍນາງຖາມ, ເພິ່ນກໍ່ບອກວ່າ "ຫາສອງ ທາງການຄ້າຂາຍລ້ຽງເມຍແລະລູກແລ້ວເພິ່ນຂຶ້ນໄປວຽງຈັນ, ສອງແມ່ລູກຂອງນາງກໍ່ລຳຖາ, ມີບາງເທື່ອກໍ່ຄິດ, ການທີ່ນາງໄດ້ ແຕ່ງງານ, ຄິດວ່າ : ພໍແຕ່ງງານແລ້ວກໍ່ຈະໄດ້ຢູ່ສະບາຍແດ, ເລີຍບໍ່ເປັນດັ່ງທີ່ຄິດ, ບໍ່ຄືກັນກັບຕອນເປັນສາວນອຍຢູ່ຄົນດຽວ, ມີພຽງແຕ່ແບກບ່າດຽວ, ບາດນີ້ໄດ້ແບກທັງສອງບ່າລູກຊາດ ຂອງການເປັນເມຍຜູ້ນຳພຽງຂັ້ນນີ້ກໍ່ເຫັນວ່າ: ມີການສາງເງື່ອນໄຂສິ່ງເສີມໃຫ້ຜູ້ເປັນຜົວເຮັດວຽກສະດວກດີຢ່າງເປັນປົກກະຕິ ນັ້ນ

ມັນບໍ່ແມ່ນເລື່ອງງ່າຍ, ນາງໄດ້ເລີ່ມຕົ້ນຄິດຕໍ່ຕົນເອງວ່າ: ການເລີ່ມຕົ້ນຊີວິດໃຫມ່ຂອງຕົນທີ່ແທ້ມັນແມ່ນເພີ່ມຄວາມຮັບຜິດ ຊອບແບ່ງເບົາຜົວ, ຊ່ວຍຜົວສິ່ງທີ່ຕົນເຮັດໄດ້ຕະຫລອດເຮັດວຽກ ລະອຽດຄອບຄົວລູກເຕົ້າຜົວບໍ່ໃຫ້ຫຍຸ້ງກ່ຽວນຳທັງຫມົດ. ເຊັ່ນ:ການລ້ຽງປົວລະບັດສຶກສາອົບຮົມລູກເຕົ້າໃຫ້ເປັນຄົນດີຂອງຄອບຄົວພໍ່ແມ່, ທັງປະກອບສ່ວນຮ່ວມມືໃນວຽກລວມທັງປົວລະບັດລ້ຽງດູລູກທັງ 5 ຄົນ ໂດຍບໍ່ໄດ້ເອົາແມ່ລ້ຽງມາຊ່ວຍມືເລີຍ, ມີແຕ່ຜູ້ທີ່ 6 ລູກຫລ້າຈຶ່ງມີແມ່ລ້ຽງຊ່ວຍມືເພາະນາງໄດ້ມີຄວາມຮັບຜິດຊອບວຽກໃຫຍ່ ແລະ ຫນັກຫລາຍ... (ເລື່ອງບໍ່ຫນ້າເຊື່ອແຕ່ ວ່າຄວາມຈິງມັນມີ ) ເພິ່ນເຄີຍເຕືອນນາງວ່າ : ນ້ອງບໍ່ພຽງແຕ່ໄດ້ເປັນພັນລະຍາມີຄອບມີຄົວແລ້ວ, ແຕ່ນ້ອງຍັງເປັນພັນລະ ຍາຂອງຄົນທີ່ນຳພາຄົນ, ນຳພາຄົນໃຫ້ຮູ້ຈັກຫນ້າທີ່ຮັກຊາດຮູ້ມີຄວາມຮັບຜິດຊອບຕໍ່ໂຊກຊາຕາກຳຂອງຊາດຕົນ. ດັ່ງນັ້ນ, ຢາກໃຫ້ທຸກຄົນເປັນຄົນດີ, ເປັນຄົນຮັກຊາດໄດ້, ກ່ອນອື່ນກໍ່ແມ່ນເລີ່ມຈາກ - ເຮົານີ້ສາກ່ອນ, ເຊັ່ນວ່າ : ຕ້ອງມີຄຸນສົມບັດສິນທຳປະຕິວັດ, ຮູ້ຖະຫນອມຖ່ອມຕົວ, ຮູ້ຈັກບ້ານເມືອງ, ຮູ້ຈັກສົນທະນາເວົ້າຈາກັບທຸກຊັ້ນຄົນ, ເຊັ່ນ ມີຄຳໂບຮານກ່າວເອົາໄວ້ວ່າ: ຜົວ ເປັນເພັຍກໍ່ຍ່ອນເມຍຊ່າງເວົ້າ "ແລະ ອື່ນໆ... ທີ່ເພິ່ນ ເຕືອນນາງ, ນາງຈຶ່ງເປັນທັງພັນລະຍາທີ່ດີຂອງເພິ່ນ, ເປັນສະ ຫາຍຮ່ວມຮົບກັບເພິ່ນ ແລະ ເປັນຄູ່ຊີວິດທີ່ບໍລິສຸດຈິງໃຈຕໍ່ກັນ.

ແລ້ວນາງຈຶ່ງຮູ້ຕື່ມອີກວ່າ : ພາລະຫນ້າທີ່ບໍ່ແມ່ນ ເລື່ອງງ່າຍໆເລີຍ. ກ່ອນອື່ນ, ແມ່ນຕ້ອງຮຽນຮູ້ການເປັນພັນລະຍາທີ່ດີ

ຂອງຜູ້ນຳ, ເຊິ່ງບໍ່ແມ່ນການວາງຕົວອວດອີ່ງ, ເຮັດດັ່ງຄຳສຸພາສິດກ່າວເອົາໄວ້ວ່າ " ເຂົ້ານາ, ຍິ່ງງາມຍິ່ງແກ່ກໍ່ຍິ່ງກົ້ມ ສຸກງາມ ".

ລູກຊາຍຫົວແກ້ວຫົວແຫວນຄົນນີ້ປານແກ້ວຕາດວງໃຈ, ມີບາງເທື່ອຈົນຍາດກັນດົມຍາດກັນຈູບ, ຄືກັນກັບວ່າລູກຊາຍ ໄດ້ກາຍເປັນຢາຫອມບຳລຸງຫົວໃຈຊະນິດດີເລີດ, ປະກົດໃຫ້ປະຈັກແກ່ຄວາມຮູ້ສຶກກໍ່ເມື່ອຕອນເຮັດວຽກອອກແຮງງານກັບມາເມື່ອຍໆ ຫລືລົງໄປຂຽນເອກະສານກັບມາເຮືອນເມື່ອຍໆ... ພໍແຕ່ຫອມແກ້ມລູກຊາຍ, ໂລດປະກົດວ່າຄວາມເມື່ອຍຫາຍໄປທັນທີເລີຍ.


ແມ່ຍ່າ-ແມ່ທ່ານ ໄກສອນ
(ທີ່ແຂວງສະຫວັນນະເຂດ )

## ຢູ່ນຳປູ່ຍ່າ

ທ່າທີໜ້າຕາຂອງເພິ່ນ ແລະຄຳເວົ້າຂອງເພິ່ນ ບໍ່ໄດ້ສະແດງເຖິງຄວາມຜິດຫວັງອັນໃດເລີຍ, ເພິ່ນຍັງເບີກບານແຈ່ມໃສ"ແລ່ນຄ້າຂາຍ " ແລ້ວກໍ່ພານາງລົງໄປສະຫວັນນະເຂດເພື່ອຢ້ຽມຢາມປູ່ຍ່າ.

ຕໍ່ຄຳທີ່ວ່າ " ເມື່ອຢ້ຽມຢາມປູ່ຍ່າ " ເຮັດໃຫ້ນາງ

ຄິດນ້ອຍໃຈຕົວເອງທີ່ ເປັນຄົນບ້ານດົງ ບ້ານປ່າ ເປັນຄົນບໍ່ຮູ້ຮີດ ບໍ່ຮູ້ຄອງ, ບໍ່ຮູ້ວ່າປູ່ຍ່າຈະລັງກຽດທີ່ລູກຊາຍຄົນດຽວ ທັງເປັນລູກຊາຍຫົວແກ້ວ ຫົວແຫວນຂອງເພິ່ນ ຊ້ຳໄປເອົາເມຍຢູ່ບ້ານນອກ , ບ້ານນາກັບມາ.

ຄວາມຕັ້ງໃຈເອົາໄວ້ວ່າ: ເພິ່ນຈະພານາງໄປຢ້ຽມຢາມປູ່ຍ່າ ( ພໍ່ແມ່ພີ່ນ້ອງຂອງເພິ່ນ ) ປະມານສອງອາທິດແລ້ວກໍ່ຈະ ພາກັບຄືນວຽງຈັນ.

ສາມພໍ່ລູກຂຶ້ນຍົນໂດຍສານຈາກວຽງຈັນລົງສູ່ແຂວງ ສະຫວັນນະເຂດ. ພໍ່ແຕ່ຮູ້ຂ່າວວ່າ, ລູກ ໄກສອນ ພົມວິຫານກັບມາແລ້ວ, ພໍ່ແມ່ຂອງເພິ່ນດີອົກດີໃຈແລ່ນມາຫຸ້ມຫໍ່ປານໃດ ແກ້ວແຫວນແສນສິ້ງ, ຍ່າບໍ່ໄດ້ລັງກຽດນາງເລີຍ. ສ່ວນປູ່ຕາບອດທັງສອງກ້ຳ, ມີຄວາມດີໃຈທີ່ເພິ່ນມີຫລານຊາຍແລ້ວ. ພວກ ເພິ່ນພ້ອມທັງຍາດພີ່ນ້ອງທາງໃກ້ທາງໄກມາເຕົ້າໂຮມພາກັນຈັດພິ ທີຮັບຕ້ອນດ້ວຍທຳການບາສີຜູກແຂນແຂກຄົນເຕົ້າໂຮມເຮືອນພ້ອມເຄື່ອງກິນສາລະພັດທຸກຢ່າງຊຶ່ງສະແດງຄວາມດີໃຈຮັບຕ້ອນຕາມປະເພນີລາວ.

ນາງເອງຮູ້ສຶກອຶດອັດໃຈບໍ່ຮູ້ຈະເຮັດແນວໃດ, ມີແຕ່ ທາງດຽວ ພະຍາຍາມວາງຕົວໃຫ້ດີທີ່ສຸດ, ເພື່ອໃຫ້ຖືກຫູຖືກຕາຂອງພໍ່ແມ່ພີ່ນ້ອງຂອງເພິ່ນ, ເພື່ອຈະບໍ່ໃຫ້ເປັນການກ່າວຂວັນນິນ ທາເພິ່ນວ່າ " ໄປເອົາເມຍໄທບ້ານນອກກັບມາ "

ອັນທີ່ເຮັດໃຫ້ນາງສະດວກສະບາຍໃຈແດ່ກໍ່ແມ່ນ, ປູ່ຍ່າໄດ້ຈັດໃຫ້ຜົວເມຍລູກນ້ອຍພວກເພິ່ນພັກຢູ່ເຮືອນຫລັງບ້ານ (ຄື ມີ

ເຮືອນອີກຫລັງໜຶ່ງຢູ່ທາງຫລັງເຮືອນຫລັງໃຫ່ຍ ) ເຖິງ ຈະ
ອ່າວນ້ອຍແດ່, ແຕ່ສະດວກສະບາຍດີ,ອັນທີ່ສອງມາກໍ່ແມ່ນ ແມ່
ຂອງເພິ່ນກໍ່ບໍ່ມັກຈະຢູ່ເຮືອນ, ເອົາເງິນອອກຕະຫລາດໃຫ້ນາງ
ແຕ່ລະເຊົ້າແລ້ວກໍ່ອອກຈາກເຮືອນໄປ " ໄປຫລິ້ນໃພ້ໃບ ຕອງ
ຕາມພາສາຄົນແກ່ທີ່ມີຄວາມສຸກ " ສ່ວນເພິ່ນກໍ່ອອກຈາກເຮືອນ
ໄປ " ໄປຊອກຫາສ່ອງທາງຄ້າຂາຍ "

ຢູ່ຢ່າມປູ່ຍ່າມຍ່າໄດ້ພໍດີ 2 ອາທິດ,ພໍ່ນ້ອງສາວຫລ້າ ຂອງ
ທ່ານ ໄກສອນ ເອົາໜັງສືເດີນທາງໄປແຈ້ງເພື່ອຈະໄດ້ຊື້ປີ້ ຍົນ
ພາເມຍ ແລະ ລູກກັບວຽງຈັນ.ຕຳຫລວດໄດ້ກັກໜັງສືໄວ້ທັນ ທີ
ທັງບອກກັບອາວ່າ " ບໍ່ໃຫ້ຄົນຜູ້ນີ້ອອກຈາກຕົວເມືອງສະ ຫວັນ
ນະເຂດໄປທາງໃດ, ຈົນກວ່າຈະມີຄຳສັ່ງ "

ພໍ້ຮູ້ຂ່າວວ່າ, ຢູ່ທຸກບ່ອນ,ພວກຄົນປະຕິວັດຖືກປິດ ລ້ອມ
ຖືກຈັບກຸມ, ຖືກຂັງ ແລະ ຖືກຄາດຕະກຳໃນຫລາຍຮູບເພິ່ນ ຈຶ່ງ
ໄດ້ສັ່ງລານາງ, ບອກໃຫ້ນາງຢູ່ກັບປູ່ກັບຍ່າຊົ່ວໄລຍະໜຶ່ງ ເວ
ລາໃດຕິດຕໍ່ໄດ້ວຽກການຄ້າແລ້ວຈຶ່ງຈະກັບມາຮັບເອົານ້ອງ ແລະ
ລູກກັບຄືນວຽງຈັນນອງຈຶ່ງອົດສາລຽງລູກຖ້າໃຫ້ດີ ແລະນອງ ຈຶ່ງ
ຖືພໍ່ແມ່ຂອງອ້າຍຄືພໍ່ແມ່ຂອງນອງນັ້ນເອງຖາຫາການອງຈິງໃຈ ຕໍ່
ອ້າຍຢ່າງແທ້ຈິງ... ເພິ່ນເນັ້ນຄຳທີ່ວ່າ " ພວກເຮົາຈະເປັນຄູ່
ຜົວເມຍທີ່ຊື່ສັດບໍລິສຸດຕໍ່ກັນ, ຮັກດຽວໃຈດຽວ,ມີແຕ່ຄວາມ ຕາຍ
ເທົ່ານັ້ນຈຶ່ງຈະພັດພາກຈາກພວກເຮົາໜີຈາກກັນໄດ້ "ນ້ຳຕາ -
ຂອງນາງໄຫລຊຶມ,ແຕ່ນາງໃຈແຂງພໍ,ບໍ່ມີສຽງຮ້ອງໄຫ້,ບໍ່ມີສຽງ
ສະອື້ນ,ມີແຕ່ແນມເບິ່ງໜ້າຜົວ,ມືໜຶ່ງກອດລູກ,ອີກມືໜຶ່ງ ລູບ



ຮູບລວມລາວຄັ້ງທີຫນຶ່ງ( ຕອນນາງຢູ່ຢ້ຽມຢາມປູ່ຍ່າທີ່ແຂວງ ສະຫວັນນະເຂດ ) ອາກອງມະນີໄດພາໄປຖ່າຍໄວ້ ເພື່ອ ເປັນທີ່ລະນຶກ ເດືອນ 11/1958.

ທ້ອງ, ເພາະເວລານັ້ນນາງເລີ່ມຕັ້ງທ້ອງລູກຄົນທີ່ສອງ ເພິ່ນ ຍັງເຕືອນກັບໄປກັບມາອີກວ່າ : ນ້ອງຈົ່ງຮັກສາສຸຂະພາບໃຫ້ ດີເພື່ອໃຫ້ລູກໃນທ້ອງມີຄວາມແຂງແຮງ...ນາງໄດ້ແນມ ເຫັນຄວາມລຳບາກກັນດານຢືນລໍຖ້າຢູ່ເບື້ອງຫນ້າ,ທີ່ຈະຕ້ອງຕໍ່ສູ້ກັບບັນດາຂໍ້ຫຍຸ້ງຍາກໃນຊີວິດລຳພັງຄົນດຽວ, ເມື່ອສາມີສຸດທີ່ຮັກບໍ່ຢູ່ນຳທັງມີລູກນ້ອຍ,ທັງມີລູກຢູ່ໃນທ້ອງ,ທັງພາລະເບິ່ງປູ່ຍາ.

## ປ່ຽວພອຍ

ພໍໄປຕະຫລາດ, ຈຶ່ງຮູ້ຂ່າວທີ່ພວກແມ່ຄ້າຕະຫລາດຊຸບ ຊິບກັນຢູ່ເປັນກຸ່ມວ່າ " ທາງລັດຖະບານຈັບກຸມສະເດັດເຈົ້າສຸພາ ນຸວົງ ແລະ ຄະນະອິດສະຫລະໃສ່ຄຸກແລ້ວ "

ເວລາຈັ່ງແມ່ນແລ່ນໄປໄວອີ່ຫລີ ຈົນວ່ານາງລືມມື້ລືມ ວັນເມື່ອປີ້ນພວນກາວເຂົ້າສູ່ປີ 1959.ແລ້ວ.

ຄົນພົ້ນຖານທີ່ອອກຈາກການປະຕິວັດເຂົ້າໄປຮ່ວມ ລາວ" ເປັນພົນລະເມືອງດີ " ຢູ່ສະຫວັນນະເຂດກໍ່ຄືແຂວງອື່ນໆ ຢູ່ທົ່ວປະເທດ ຖືກຈັບຖືກກຸມ ແລະ ຖືກຂ້າຖິ້ມບໍ່ເວັ້ນແຕ່ລະວັນ,ອັນໄດ ເຮັດໃຫ້ນາງຕ້ອງຄົນຄິດຫລາຍບໍ່ແມ່ນຂອງຄ່ອຍ,ເພາະ ຄິດວ່າ , ຊິແມ່ນມື້ໃດເດ ພວກເຂົາຈະມາຈັບເອົາ ? ບາງ ຄືນກໍ່ນອນບໍ່ຫລັບຫມົດຄືນ,ເພາະຫມາເຫົ່າເປັນຫມູ່ເປັນພົງໂກ ໃຕໂຫເຫນືອຢູ່ທຸກຄືນ, ວ່າແຕ່ມີຄົນແປກຫນ້າຍ່າງເຂົ້າໄປບານກໍ່ຕົກໃຈຕື່ນ,ຄິດວ່າຈະແມ່ນທະຫານຕຳຫລວດມາຈັບ.

ເພື່ອຕໍ່ສູ້ກັບຊີວິດໃຫ້ຢູ່ລອດ,ນາງຕັດສິນໃຈລົງທຶນ ຂາຍ

ຕຳໝາກຫຸ່ງ, ຕັ້ງຕູບນ້ອຍຢູ່ຫນ້າບ້ານພໍຫາເງິນລ້ຽງລູກ ແລະລ້ຽງພໍ່ປູ່ແມ່ຍ່າເທົ່າທີ່ຈະເຮັດໄດ, ເພາະວິຊາອາຊີບອື່ນກໍ່ບໍ່ ຮູຈະເຮັດຫຍັງ.ຕຳໝາກຫຸ່ງເວລານັ້ນ,ຄົກໃຫຍ່ສຸດຂີດແມ່ນ 10 ກີບ, ລຸດລົງມາກໍ່ 5 ກີບ, 2 ກີບ.

ທຸກເຊົ້າກໍ່ໄປຕະຫລາດຊອກຊື້ໝາກຫຸ່ງ,ຊື້ປາແດກ, ຊື້ໝາກເຜັດ,ຜັກບົ້ງ. ຢູ່ເຮືອນ,ດີແຕ່ວ່ານອງສາວຫລາ ຂອງເພິ່ນໄປເອົາພີ່ນອງເປັນຜູ້ຍິງມາຢູ່ເປັນເພື່ອນນຳຜູ້ຫນຶ່ງ ເພື່ອເອົາລູກຊ່ວຍ.

ພໍຮອດເດືອນ 9/1959,ລູກຊາຍຄົນທີ່ສອງກໍ່ເກີດ ລູກເກີດອອກມາບໍ່ເຫັນໜ້າພໍ່ເລີຍ,ປູ່ຈຶ່ງຕັ້ງຊື່ໃຫ້ວ່າ " ທາວ ໄຊສົງຄາມ " ອັນມີຄວາມໝາຍວ່າ ສົງຄາມຕ້ອງມີໄຊຊະ ນະຢ່າງແນ່ນອນ.

ກໍ່ມີແຕ່ຫລານສາວຜູ້ມາຢູ່ນຳນັ້ນແລວຊ່ວຍເຫລືອເມື່ອ ຈຳເປັນ ແມ່ຍ່າລີກໍ່ຫມັ່ນມາອີບອຸ້ມເລື້ອຍໆເປັນຕົ້ນເບິ່ງແຍງເວລານາງຢູ່ກຳລູກຊາຍຄົນທີ 2.

ພໍອອກກຳແລວ ນາງຍັງສືບຕໍ່ເປັນແມ່ຄ້າຂາຍຕຳໝາກຫຸ່ງຢູ່ຄືເກົ່າ,ບໍ່ພໍປີສາມາດເກັບເງິນທີ່ໄດ້ຈາກກຳໄລນັ້ນຊື້ຄຳໄດ 5 ບາດ,ເພາະເວລານັ້ນຄຳນ້ຳຫນຶ່ງ 1 ບາດ ຕໍ່ 1.000 ກີບ ຫລືຄຳດີກໍ່ 1.200 ກີບ ແມ່ນສູງສຸດ,ສ່ວນ ຄຳນ້ຳແປດນ້ຳເກົ້າລາຄາ 800 - 900 ກີບ.

ຄວາມຫວອມເຫງົາເບົາບາງລົງແດ່,ເພາະເຮັດອັນ ນັ້ນອັນນີ້ກໍ່ພາໃຫ້ຫລົງລືມຄວາມທຸກຄວາມໂສກໄປນຳ,ຄວາມ ປ່ຽວ



ນາງໄດ້ ລູກຊາຍ ຜູ້ທີ່ສອງ ຕອນຢູ່ນຳ ປູ່ຍ່າ ທີ່ ແຂວງສະຫວັນ ນະເຂດ.

ຄວາມພອຍໄປ,ຫນ້າບໍ່ຊ້ຳພັດຍັງມີສິ່ງເກັບປອມທ້ອນໂຮມເລັກໆນ້ອຍໆໄປຊ່ວຍໃຫ້ມີກຳລັງໃຈສູ້ຊົນຕໍ່ພາຍຸລົມແດງຂອງຊີວິດ ໃຫ້ໄດ້ຜ່ານພົ້ນໄປຈົນເຖິງທີ່ສຸດ...ແຕ່ລະມື້ນາງໄດ້ຮັດເປັນ ປະຈຳດີ : ລຸກແຕ່ເຊົ້າ ຈັດແຈງແຕ່ງນ້ຳປາແດກ,ເອົານົມໃຫ້ລູກກິນ, ແຕ່ງເຂົ້າໃຫ້ປູ່ຍ່າ ແລວກໍ່ອອກຕະຫລາດ.

ເວົ້າເຖິງການແຕ່ງເຂົ້າແຕ່ງອາຫານໃຫ້ປູ່ຍ່າກິນກໍ່ບໍ່ແມ່ນເລື່ອງທຳມະດາອີກ,ພໍ່ປູ່ເປັນລົມຫວງດົນນານ, ອາຫານທີ່ເພິ່ນມັກແຫນັກກວ່າກໍ່ແມ່ນຕົ້ມເລືອດຫມູ,ແກງຈືດ,ລວກຜັກບົ້ງ,ອາຫານປະເພດນັ້ນຕ້ອງຈັດເປັນພາຫນາງສະເພາະໃຫ້ພໍ່ປູ່,ພາເຂົ້າທີ່ ສອງ

ສະເພາະແມ່ຍ່າ, ເປັນອາຫານແບບລາວ ແລະ ພາທີ່ ສານ ແມ່ນພາຂອງແມ່ລູກແລະຄົນຢູ່ນຳ ນາງຈຶ່ງເປັນອັນວ່າ: ໃນ ມື້ໜຶ່ງ, ນາງຕອງໄດ້ແຕ່ງພາເຂົ້າ ໑ ພາ, ແຕ່ລະຄາບ ເຊົ້າ-ຕອງແຕ່ງ ໓ ພາ, ອົດທົນຕໍ່ສູ້ຢ່າງແທ້ຈິງເພື່ອບໍ່ຢາກໃຫ້ພີ່ ນອງຫາງສາງນິນທາວ່າຂວັນວ່າລູກໃພ້ຄົນປ່າບໍ່ຮູ້ຈັກຮີດອີ່ຫຍັງ ? ແຕ່ປານນັ້ນກໍ່ຫລີກບໍ່ໄດ້ຈາກການປັ້ນເລື່ອງບໍ່ດີໃສ່ນາງບໍ່ເວັ້ນແຕ່ລະວັນ, ເພາະດູຫມິ່ນຄົນກຸຊາດທັງເປັນລູກຄົນບ້ານນອກອີກຊ້ຳ.

ຫົວໃຈຂອງນາງອົດທົນເຫລືອກຳລັງ, ແຕ່ສຸຂະພາບຊ້ຳພົດທົນນຳບໍ່ໄຫວ, ເມື່ອນາງລຳບາກກາກກຳເຫນື່ອອິດຈຳກັດຂອງເທື່ອແຮງ, ນາງຈຶ່ງລົ້ມເຈັບປ່ວຍເຖິງ 2 ເທື່ອ, ມໍ່ມີແຮງ ຂຶ້ນມາກໍ່ສືບຕໍ່ຕຳຫນາກຫຸ່ງຂາຍ, ທັງເຮັດຂອງຂາຍເພີ່ມຂຶ້ນ ອີກເມື່ອເຫັນວ່າຂາຍໄດ້ດີ, ສົ້ມນຳຫມຽງຂາຍຕື່ມ, ກໍ່ຈົ່ງວ່າ ທັ້ນແລວ, ໃສ່ກໍ່ຍອງວ່າ " ຕຳຫນາກຫຸ່ງຂອງນາງທອງວິນເຂົາວ່າພໍກິນ ແລະ ລຳຫມຽງຂອງນາງທອງວິນກໍ່ວ່າພໍກິນນຳ ຈ້ຳແຊບນົວດີ " ຜູ້ຄົນຈຶ່ງຫລັ່ງໄຫລພາກັນມາຊື້ສ່ວນຫລາຍເດັກນອຍນັກຮຽນມາຊື້ ຈົນຕຳນຳບໍ່ທວາດບໍ່ໄຫວ, ມັ້ນຫມຽງນຳບໍ່ຫວງບໍ່ທັນບົດລະຕຳຫນາກຫຸ່ງ, ບົດລະພັນລຳຫມຽງ, ເຊັດມື ນຳກໍ່ບໍ່ທັນ.

ທຸກເທື່ອນາງຕອງນຸ່ງສິ້ນສະອາດ, ສົ້ນບໍ່ມີຮອຍຕາບ, ແຕ່, ເສື້ອນັ້ນຕິ ! ນາງນຸ່ງເສື້ອຕາບບ່າ, ບໍ່ມີພົນໃດບໍ່ມີເສື້ອ ຕາບເພາະນາງຄິດວ່ານຸ່ງແບບນີ້ກໍ່ໃຫ້ສົມກັບຄວາມເວົ້າຂອງ ພວກເມຍເຈົ້າເມຍນາຍເຂົາຫານຂວັນວ່າ : ເມຍພວກອິດສະຫລະ

ທຸກຍາກ, ເຂົາບໍ່ເຂົ້າໃຈເລີຍວ່າ : ພວກນີ້ທຸກຍາກຍ້ອນ ເຂົາກູ້ເອົາບ້ານເອົາເມືອງໃຫ້ເປັນເອກະລາດ, ອີກຢ່າງໜຶ່ງພໍວ່າຢູ່ຕົນນຸ່ງຖືແບບນີ້ຮູ້ສຶກສະບາຍໃຈ.

ການໃຊ້ຊີວິດຢູ່ແບບນັ້ນ, ຈາກເດືອນເປັນປີ, ຈາກປີ ໜຶ່ງເປັນສອງປີ... ສາມປີ... ສີ່ປີ...

ຊີວິດການຂາຍຕຳໝາກຫຸ່ງກັບຂາຍລຳໜັມຽວກໍ່ບໍ່ເຫັນໜັກໜາພໍປານໃດດອກ, ມີແຕ່ອິດູເມື່ອຍແດ່, ທັງຈັບໄຊເປັນ ໄຂປ່າແດ່, ຈຶ່ງເຊົາເຮັດລຳໜມຽວຂາຍ; ຂາຍແຕ່ຕຳໝາກຫຸ່ງແຕ່ຢ່າງດຽວ.

ແຕ່ລະຄາບເຂົ້າ, ປູ່ເອົາເງິນໃຫ້ 10 ກີບ, ຍ່າເອົາ ໃຫ້ 20 ກີບ, ປູ່ໄດ້ເງິນຈາກເບັ້ຍບຳນານຂອງເພິ່ນ, ຍ່າໄດ້ ເງິນມາຈາກເກັບຄ່າຄືນເຊົ່າເຮືອນຫອງແຖວເພື່ອຊື້ອາຫານການກິນໄປແຕ່ງໃຫ້ເພິ່ນກິນ, ບົວລະບັດລັດສີເພິ່ນລື່ນເຮັດຕໍ່ພໍ່ຕໍ່ແມ່ຂອງຕົນອີກຊ້ຳ.

ຕົກມາຮອດປີ 1960, ທະຫານອອກກວາດລ້າງທັງ ເວັນທັງຄືນ, ທັງເຂົ້າໄປມາບຸ່ນາງວ່າ " ເຫັນຄົນນຸ່ງເຄື່ອງ ດຳແລ່ນເຂົ້າມາໃນບ້ານນີ້! " ແລ້ວພວກເຂົາກໍ່ພາກັນກວາດ ຄົ້ນບົດລະອ່າ " ພົວຂອງເຈົ້ານຸ່ງເຄື່ອງດຳເຂົ້າມາຫາ !" ສາລະພັດແຕ່ພວກເຂົາຊີ່ຕູ່ຊີ່ຫາເລື່ອງໃສ່. ນອນຢູ່ດີໆກໍ່ຕື່ນສະ ເດີດບໍ່ເປັນອັນຫລັບອັນນອນ, ລູກທັງສອງກໍ່ຮອງໄຫ້, ຈີນນາງລົ້ມເຈັບລົງອີກ, ເພາະອຸກອັ່ງທັງໃຈຫລາຍ, ຄິວ່າຖືກຫລອກຖືກ ຫລອນຢູ່ທຸກເວລາ, ຈີນຊິເກີດເປັນໂລກເສັ້ນປະສາດ, ຮ່າງກາຍ ທີ່

ຈ່ອຍເຫລືອງຢູ່ແລ້ວຍັ້ງສ່ອຍລົງຕື່ມ, ຈົມນຸ່ງສັ້ນຫລົມໂຕ່ງໂລ່ງ, ຫນ້າຕາກໍ່ຫົວກ້ຳເຂົ້າຝາແກມເຫລືອງລ່າຈຶດ.

ຂາດໄປຕະຫລາດຈຶ່ງຮູ້ຂ່າວວ່າ " ສະເດັດເຈົ້າສຸພາ ນຸວົງ ແລະ ຄະນະຜູ້ນຳວິດສະຫລະພາກັນໂຕນອອກຈາກຄຸກ ໄປແລ້ວ " ຈຳພົດອກ,ທະຫານສັດຕູຈຶ່ງອອກກວາດລ້ຳຈັບກຸມ ຄົນພົ້ນຖານເປັນການໃຫຍ່.

ຊາວຫວຽດນາມ-ຊາວຈີນຕ່າງດ້າວ ແລະ ພີ່ນ້ອງ ທາງຜົວພາກັນໄປຢ້ຽມຢາມນາງ.ທະຫານສັດຕູຈ້ຳພົດໄປນາບຊູ້ທັງຜູ້ໄປຢາມ ແລະ ຜູ້ຖືກຢາມທັງປະກາດວ່າ " ນີ້ແມ່ນເຮືອນເມຍຫົວໂປ່ ກອມມູນິດ ! ບໍ່ໃຫ້ຄົນໃດເຂົ້າໄປຢ້ຽມຢາມ!"

ຈ້ຳພົດມີຂ່າວອີກວ່າ " ທ່ານ ໄກສອນ ພົມວິຫານ ຕາຍແລ້ວ... " ຂ່າວດີແນວນັ້ນຫັ້ນຕິ,ເຮັດໃຫ້ຫົວ ອົກຫົວໃຈຂອງນາງສັ່ນເຊັນ.ນາງບົວຈ້ຳພົດມາບອກກັບນາງວ່າ" ເມື່ອ ເພິ່ນຕາຍແລ້ວກໍ່ເອົາຜົວໃຫມ່ຊັ້ນລະບໍ່,ເອື້ອຍຊື່ທີ່ລະມານຕົວເອງໄປເຮັດຫຍັງ ? " ສາລະພັດແຕ່ຄົນຊື່ມາເວົ້ານາວ່າ.ນາງ ຄິດເຖິງຄຳເວົ້າຂອງຜົວຕອນສັ່ງລາວ່າ : "ມີແຕ່ຄວາມຕາຍເທົ່ານັ້ນຈະພັດພາກຄວາມຮັກ.ຄວາມເປັນຜົວເປັນເມຍຂອງ ພວກເຮົາໃຫ້ອອກຈາກກັນໄດ້ ! " ຈ້ຳພົດນີ້ຄົນມາບອກ"ຊີວິດ ຄົນເຮົາເກີດມາແລ້ວຢູ່ເຖິງ 100 ປີດອກ,ແນວໃດຊິ່ມີຄວາມສຸກຈຶ່ງຫາລະເຮັດຫາລະທຳ,ຜົວຕາຍແລ້ວຫາເອົາໃຫມ່ເອີ້ຍ, ຜົວກັບມາກໍ່ປະຄົນໃຫມ່ກັບໄປເອົາຄົນເກົ່າອີກກໍ່ໄດ້ "ເຈົ້າບໍ່ ແມ່ນລົມຈະຫາຜົວຍາກ.

# ຂໍເປັນແມ່ຍິງທີ່ດີ, ເປັນເມຍທີ່ດີ
# ແລະເປັນແມ່ທີ່ດີ.

ແມ່ປ້າງເກີດມີ, ແມ່ຍາລີ, ແມ່ປ້າທຸມ (ແມ່ທ່ານສີຊະນະ ສີສານ ) ໄດ້ໄປລະດົມຈິດໃຈຂອງນາງ, ຍ້ອງຍໍນາງຕໍ່ໜ້າຕໍ່ຕາວ່າ " ເຈົ້າເປັນແມ່ຍິງທີ່ປະເສີດຫລາຍແລ້ວນາງເອີຍ, ເປັນເມຍທີ່ດີຂອງສາມີແທ້... "ແລະວ່າ " ຈົ່ງຮັດດີໄປເທາະຫລານເອີຍ... ! ອັນດິນດີມີເທວະດາ ຄຸ້ມຄອງເບິ່ງແຍງ , ດິນນ້ຳບໍ່ໄຫລດິນໄຟບໍ່ໄໝ້ " ນາງໄດ້ຕັດສິນໃຈແລ້ວວ່າ "ຈະຂໍເປັນແມ່ຍິງທີ່ດີເປັນແມ່ທີ່ດີ ແລະ ເປັນເມຍທີ່ດີທີ່ສຸດຂອງສາມີ! ເມື່ອໃດໄດ້ເຫັນກະດູກ ຫລື ເຫັນຂຸມຝັງສົບຂອງຜົວກັບຕາ ຈຶ່ງຈະເຊື່ອວ່າຜົວໄດ້ຕາຍໄປຈາກໂລກນີ້ແທ້ " ເວລານັ້ນນາງຈຶ່ງຈະຕັ້ງບັ້ນທາຕໍ່ການສ້າງຊີວິດໃໝ່ທີ່ໄດ້ຕອບນາງບົວ.

ມີຂ່າວໃຫຍ່ທີ່ໄດ້ຮັບກໍ່ແມ່ນ, ສັດຕູຈະຈັບນາງແລ້ວ ມີຂ່າວດັງໄປຈາກປ່າດົງພົງໄພເຂົ້າສູ່ໃນເມືອງສະຫວັນນະເຂດ" ຖາທະຫານສັດຕູຈັບລູກເມຍຂອງ ໄກສອນ ພົມວິຫານ ຕອງປິດຄາຍ ຂອງທະຫານຢູ່ທຸກບ່ອນທີ່ແຂວງສະຫວັນນະເຂດ ແມ່ນຈະມຸ່ນເປັນເຖົ່າຖ່ານປຸ່ຍພົງທັງໝົດ !.

ທະຫານສັດຕູຊ້ຳພັດຈັບເອົາພໍ່ປູ່ໄປຂັງ, ອາກອງມະນີ ( ນ້ອງສາວຫລ້າທ່ານ ໄກສອນ ) ໄປຕໍ່ວ່າຕໍ່ຂານເອົາກັບ ຜູ້ແທນວໍລະອົງໄດ້ 20 ມື້ຈຶ່ງປ່ອຍ, ພວກເພິ່ນອາງວ່າ:" ຍອມ

ເອື້ອຍໄພແມ່ນລາວຂອງພວກເຈົ້ານັ້ນແລ້ວ, ຈຶ່ງເຮັດໃຫ້ຍາດພີ່ນ້ອງເດືອດຮ້ອນ "ອາກອງມະນີຕອບໂຕ້ຄືນວ່າ "ເອື້ອຍໄພເປັນແມ່ຍິງ, ເພິ່ນຊິຮູ້ຈັກຫຍັງ , ແຕ່ລະມື້ກໍມີແຕ່ຂາຍຕຳຫມາກຫຸ່ງ ຊິໄປຈັບພໍ່ຂອຍທັງຫູຫນວກ ທັງຕາບອດເຮັດຫຍັງ ?"

ນາງສະເດືອກຄຶດຮອດຄຳສັ່ງລາສຸດທ້າຍຂອງຜົວ,ທີ່ເວົ້າວ່າ " ຖ້າຈຳເປັນແທ້ໆ,ນ້ອງອາດຖືກສັດຕູຈັບໄປນາບຂູ່ບີບບັງຄັບ, ເພື່ອເອົາຕົວລອດ,ເພື່ອລູກແລ້ວ,ນ້ອງຈະເອົາຜົວ ໃຫມ່ກໍ່ໄດ້ " ຄຶດມາເຖິງຕອນນີ້, ນາງເຫຼືອໃຈຫລາຍ ນາງໄດ້ຕັດສິນໃຈແລ້ວວ່າຈະຂໍມີແຕ່ຜົວຫນຶ່ງເມຍດຽວເທົ່ານັ້ນ ນອກຈາກຄວາມຕາຍຈາກກັນ.

ມື້ຫນຶ່ງໃນປີ 1962,ມີຊາຍຕາຫລວດຄົນຫນຶ່ງ,ເທັນ ຢູ່ບ່າແມ່ນຂັ້ນພົນເອກທີ່ນາງບໍ່ຮູ້ເຫັນມາກ່ອນ,ລົງລົດຈີບມານັ່ງ ທີ່ຮ້ານຂາຍຕຳຫມາກຫຸ່ງນ້ອຍຂອງນາງແລ້ວສັ່ງຊື້ຕຳຫມາກ ຫຸ່ງ 100 ກີບ,ນາງຖາມຄືນ " ຍາອາຍຊິກິນເຜັດບໍ່ ?" ຫມໍ ທັງຍິ້ມທັງຕອບແບບຢາກກຽວພາລາສີແດ່ວ່າຊຸ້ນເທາະ" ອ້າຍ ຊື້ 100 ກີບ, ນ້ອງຈະຕຳໃຫ້ຫນ້ອຍຫນຶ່ງກໍ່ໄດ້ " ນາງຕຳ ເຄື່ອງຄົກ, ຈັດເອົາໃສ່ຈານສະອາດດີ,ມີຜັກບົ້ງ,ທີ່ຍັງສົດງົວງາມຢູ່ຍື່ນໃຫ້,ນາງຄຶດວ່າ" ຫລືຈະແມ່ນຄົນພົນຖານ ? " ແນວ ຄິດຫນຶ່ງ ຊ້ຳພັດຄຶດວ່າ " ຄົງບໍ່ແມ່ນດອກ " ເພາະວາດຊົງ ຂອງເປັນຕາຢ້ານພິລຶກ.

ພໍລາວກິນຕຳຫມາກຫຸ່ງແລ້ວກໍ່ວ່າ " ແຊບຫລາຍ " ຈົກເງິນອອກມາໃຫ້ 3.000 ກີບນາງບໍ່ທັນຮູ້ເທື່ອ,ພັບເບິ່ງເງິນ

ອ້າວ ! ຄືວ່າຫລາຍແທ້ ? ນາງຈຶ່ງເອົາເງິນສົ່ງຄືນລາວວ່າ:
" ເອົາໃຫ້ນ້ອງລ້ຽງລູກ " ນາງບໍ່ຍອມເອົາເດັດຂາດ! ຂໍເອົາແຕ່ 100 ກີບເທົ່ານັ້ນ, ກ່ອນລາວອູ້ລູກອອກໄປ, ລາວວ່າ :
" ນ້ອງເປັນແມ່ຍິງດີເລີດປະເສີດແທ້ ! "

## ອອກຈາກສະຫວັນນະເຂດ

ຂ່າວທີ່ນາງໄດ້ຮັບຟັງ ຕິດຕໍ່ຫນໍ່ເນື່ອງກັນມາເປັນ ໄລຍະຫລັງຂ່າວການໂຕນລຸກຂອງສະເດັດເຈົ້າສຸພານຸວົງແລະຄະ ນະແລວກໍ່ແມ່ນຂ່າວກອງທະຫານເຮັດລັດຖະປະຫານຢູ່ວຽງຈັນຂ່າວທະຫານສູ້ຮົບກັນຢູ່ຕົວເມືອງວຽງຈັນ.

ຢູ່ສະຫວັນນະເຂດໄດ້ເຫັນພວກທະຫານສັດຕູຂີ່ລົດເຊ ຊຳເຊ ເປັນຂະບວນແລ່ນໄປມາທັງສະພາບການປາບປາມ ຄົນລາວທີ່ຮັກຊາດ ແລະ ອື່ນໆ...

ທັງຫມົດເຫລົ່ານັ້ນລ້ວນແຕ່ແມ່ນຂ່າວເສົ້າ, ອັນເປັນ ຂ່າວຕົກໃຈຕໍ່ສາມແມ່ລູກພວກນາງທີ່ພົດພອຍແລະຕໍ່ສູ້ກັບຊາຕາກຳ ທີ່ລຳບາກທີ່ສຸດໃນຊີວິດ.

ການເຂົ້າສູ່ປີ 1961 ຕໍ່ໃສ່ປີ 1962 ໄດ້ຂ່າວ ຫມັດແຫນວຣັດໃຫ້ດີໃຈຂຶ້ນມາກໍ່ແມ່ນຂ່າວການເຈລະຈາຂອງ ຝ່າຍປະເທດລາວກັບຝ່າຍລັດຖະບານຂວາຈັດວຽງຈັນ, ຄິດວ່າຈະໄດ້ຍິນລາຍຊື່ " ທ່ານໄກສອນ ພົມວິຫານ" ຢູ່ວິທະຍຸເທື່ອໃດກໍ່ ບໍ່ໄດ້ຍິນຈັກເທື່ອ. ແຕ່ນາງກໍ່ຍັງເຊື່ອຫມັ້ນ, ເຊື່ອຫມັ້ນວ່າສາມີສຸດ

ທີ່ຮັກຂອງນາງຕ້ອງຍັງມີຊີວິດຢູ່ຢ່າງແນ່ນອນ.

ນາງຕິດຕາມຂ່າວທຸກວັນ, ຮູ້ວ່າການຮ່ວມລາວເທື່ອທີ່ ສອງພວມຈະເກີດຂຶ້ນ, ນັ້ນກໍ່ສະແດງວ່າ, ນາງກັບສາມີຈະຕ້ອງໄດ້ພົບກັນ.

ມາຮອດນີ້, ນາງຂາຍຕຳໝາກຫຸ່ງຫ້ອນເງິນຊື້ລຳ ໄດ້ 10 ບາດແລ້ວ, ຄຳທີ່ນາງຫາມາໄດ້ດ້ວຍນ້ຳເຫື່ອນ້ຳໄຄ ຂອງນາງແທ້, ຈຶ່ງເປັນຄວາມພູມໃຈໃຫ້ກັບຕົວເອງ, ເພື່ອວ່າ, ຕໍ່ໄປພາຍພາກໜ້າຈະເກັບເອົາໄວ້ເປັນທຶນຮອນເພື່ອການ ສຶກສາຮ່ຳຮຽນຂອງລູກ.

ຕອນແລງຂອງມື້ໜຶ່ງ, ມີຊາຍສອງຄົນເຂົ້າມາບ້ານ ແລ້ວບອກຂ່າວດີໃຫ້ນາງຮູ້, ນາງດີໃຈຈົນນ້ຳຕາໄຫລຊຶມຕໍ່ຄຳທີ່ວ່າ: " ພວກນ້ອງມາຕອນເອົາເອື້ອຍອອກສູ່ເຂດປົດປ່ອຍ" ຫົວ ໃຈຕຳເຂົ້າຕຶກໆຕັກໆ, ຈົນບໍ່ຮູ້ວ່າແມ່ນຈັງຫວະໃດ ? ຄິດວ່າຊີ ໄປບາດນັ້ນໂລດ, ຊ້ຳພັດວ່າ" ນ້ອນອອກແຕ່ເຈົ້າ"ຕະຫລອດ ທັງຄືນນອນກໍ່ບໍ່ຫລັບ, ນອນພິກຊ້າຍພິກຂວາໄປແນວໃດກໍ່ຫລັບຕາບໍ່ລົງ.

ພໍຮອດມື້ເຊົ້າ, ມີນາງບົວສອນ ມາສູ່ເອົາຢູ່ເຮືອນ( ເມຍຂອງທ່ານສີຊະນະສີສານ ) ແລ້ວຂຶ້ນລົດອີເຕົ່າດຳອອກ ຈາກຕົວເມືອງສະຫວັນນະເຂດສູ່ເຊໂນ.

ພໍຮອດເມືອງເຊໂນ, ມີຄົນອີກພວກໜຶ່ງມາຮັບ, ພາຍ່າງໄປຕາມປ່າຕາມດົງ, ກາງຄືນຍ່າງກາງເວັນພັກ, ດີແຕ່ວ່າພວກອາວໃຈດີອຸ້ມລູກຊາຍທັງສອງຊ່ວຍຈົນໄປຮອດເມືອງພິນ, ທັງ ນີ້

ກໍ່ເພາະວ່າ : ແຕ່ເຊໂນໄປເມືອງພິນມີປິດດ່ານຂອງທະ ຫານ ສັດຕູລັດຢູ່ຫລາຍບ່ອນ, ຈຶ່ງຕ້ອງພາກັນຍ່າງຫລີກ.

ພໍອອກເມືອງພິນກໍ່ພາກັນຂຶ້ນຍົນໄປລົງເມືອງວິງ "ປະເທດ ຫວຽດນາມ " ແຕ່ເມືອງວິງເຂົ້າຫາຮ່າໂນຍແມ່ນຂີ່ລົດຈົນຮອດ 5 ໂມງແລງຈຶ່ງຮອດຮ່າໂນ້ຍ.

## ຄົບໜ້າຄົບຕາ

ອັນວ່າລູກແມ່ຍິງ, ຊຶ່ງມີຫຍັງດີໃຈໄປກວ່າ, ເວລາຜົວພັດ ພາກໄປເຮັດວຽກທາງໄກເປັນເວລາຫລາຍປີແລ້ວກັບມາພົບ ພໍ້ ກັນອີກ ? ຄືຊິບໍ່ມີອັນໃດດີໃຈໄປກວ່ານັ້ນອີກແລ້ວ.

ລົດຈອດລົງຖະໜົນຄຸມ ຫວວຽນຍູ ແຖວຫນອງໂຮແລ, ແລ້ວກ້າວເຂົ້າສູ່ເຮືອນເລກທີ 62.

ຊາຍກ້າງຄົນ, ຮູບຮ່າງຕ່ຳເຕັ້ຍ,ຜິວຂາວ,ຕຸ້ຍພີດີ ງາມ ກ້າວອອກມາຕອນຮັບແມ່ລູກພວກນາງພອນຮອຍຍິ້ມທີ່ເຕັມ ໄປ ດ້ວຍຄວາມສຸກ ແລະ ເປັນຫ່ວງເປັນໃຍນັ້ນ,ຊຶ່ງແມ່ນໃຜອີກ ? ລູກຊາຍທ້າວ ໄຊສົມພອນ ພະຫວາເຂົ້າກອດພໍ່ທັນທີ,ແຕ່ ທ້າວ ລູກຊາຍທ້າວ ໄຊສົງຄາມນັ້ນຕິ ! ຟ້າວຫົດມືກອດແມ່ພອນ ກັບ ຖາມວ່າ " ອີ່ຕາຕຸ້ຍນີ້ແມ່ນໃຜ, ເບ່າະແມ່ ? "ນາງສະຫອນ ໄປທັງຕົວ ແລະ ຫົວໃຈ, ທັງຄິດວ່າ " ນີ້ຄວາມພັດພາກ " ເພາະ, ແຕ່ເກີດມາຈົນຮອດມື້ນີ້,ອີ່ຕາຕຸ້ຍຄົນນີ້ແມ່ນໃຜ ? ກໍ່ບໍ່ ເຄີຍພົບເຫັນຈັກເທື່ອ, ລູກຈຶ່ງຖາມຄືແນວນັ້ນ.

ສ່ວນນາງແລ້ວເປັນໂຊ ຢູ່ແຕ່ເມືອງສະຫວັນນະເຂດພຸ້ນມາແລ້ວ, ການເດີນທາງຈຶ່ງອິດຫີນແທ້ອິດຫີນວ່າ, ຄືກັນ ກັບຮ່າງຄີງຄົນບໍ່ມີຈິດວິນຍານຍ່າງໄປແນວນັ້ນແລ້ວ.

ນາງເຂົ້າປິ່ນປົວຢູ່ໂຮງໝໍ ຫວຽດ-ໂຊ ທີ່ຮ່າໂນ້ຍ ເປັນເວລາ 3 ເດືອນເຕັມໆ, ເຫື່ອແຮງຈຶ່ງຟື້ນຄືນມາສູ່ປົກກະຕິ.

ພໍອອກຈາກໂຮງໝໍກໍໄປຢູ່ກັບລູກຜົວທີ່ເຮືອນເລກທີ 62 ສ່ວນເພິ່ນກໍ່ທ່ຽວໄປທ່ຽວມາລະຫວ່າງເຂດປົດປ່ອຍກັບຮ່າໂນ້ຍ.

ບາງເທື່ອນາງຈຶ່ງຄິດວ່າ: " ອັນວ່າຊີວິດຂອງຄົນ ເຮົານັ້ນ, ບາງເທື່ອກໍ່ຄືກັນກັບຄວາມຝັນເອົາແທ້ໆ ",

## ເປັນນັກຮຽນ

24/VII

ການຈັດຕັ້ງໄດ້ມອບໝາຍໃຫ້ນາງເຂົ້າໂຮງຮຽນ, ເພື່ອເພີ້ມພູນຄວາມຮູ້ໃຫ້ສະຫລາດຫລັກແຫລມຂຶ້ນຕື່ມ, ຂະນະທີ່ນາງໄດ້ເລີ້ມຕັ້ງທ້ອງລູກຄົນທີ່ 3.

ຫ້າມຈຳໜ່າຍ

ໂຮງຮຽນ " ບັກຢ່າງ " ຮັບເອົານາງເຂົ້າສູ່ຫ້ອງຮຽນຊັ້ນຫ້ອງ 5, ຮຽນຮອດຫ້ອງ 6 ກໍ່ເກີດລູກຄົນທີ່ສາມໃນປີ 1963 ໃສ່ຊື່ວ່າທ້າວ ສັນຕິພາບ, ເກີດຢູ່ໂຮງໝໍ ຫວຽດ-ໂຊ ເກີດງ່າຍລຽນງ່າຍກວ່າທຸກຄົນ.

ປີຕໍ່ມາກໍ່ເກີດລູກຄົນທີ4 ທີ່ໂຮງໝໍຫວຽດໂຊ ນັ້ນອີກ, ໃສ່ຊື່ວ່າ ທ້າວ ຫລວງສະຫວັນ, ເກີດປີ 1964, ໂລດມີແຕ່ 4 ທ້າວອ້ອຍຕ້ອຍ, ຫວັງຢາກໄດ້ລູກສາວຈັກຄົນກໍ່ບໍ່ໄດ້ໃຫ້ເຊີນຊົມ.



ທີ່ເຮືອນ

ປີ 1966 ( ຂວາສຸດທ້າຍ ສີສະຫວາດ ແກ້ວບຸນພັນ ).

ພາລະໜ້າທີ່ຂອງນາງເວລານັ້ນ, ຖືໄດ້ວ່າເປັນແມ່ເຮືອນເຕັມອັດຕາ, ເບິ່ງແຍງລ້ຽງດູລູກທັງ 4 ຊາຍ. ທັງຮຽນໜັງສືສ່ວນເພີ້ມປະຈຳຢູ່ເມືອງວຽງໄຊ, ເມື່ອການຮວມລາວຄັ້ງທີ່ສອງບໍ່ສຳເລັດດັ່ງຄິດເອົາໄວ. ນັ້ນໝາຍເຖິງການຕໍ່ສູ້ຍັງຈະຕ້ອງສືບຕໍ່ຍືດເຍື້ອຍາວນານໄປອີກ. ດີແຕ່ວ່າຢູ່ໂຮງຮຽນມີບ່ອນຝາກເດັກ, ມີແມ່ລ້ຽງເດັກຂອງໂຮງຮຽນຮັບສົ່ງ, ມີຄົນຊ່ວຍດູແລລູກນຳ ໃນໂມງຮຽນ. ພາຍຫລັງຈົບວັດທະນະທຳ ນາງຈຶ່ງສືບຕໍ່ເຂົ້າຮຽນ ຢູ່

ໂຮງຮຽນທົດສະດີ "ອັນກົບ" ຮຽນທິດສະດີການເມືອງມາກ - ເລນິນຊັ້ນກາງ, ຮຽນ 2 ປີຈົບໃນປີ 1966.

ການຮຽນທິດສະດີກໍ່ມີອຸປະສັກຢ່າງໜັກ, ເພາະຕອນ ນັ້ນ ຈັກກະພັດອາເມລິກາປືນຂັ້ນໄດກໍ່ສົງຄາມຢູ່ພາກເໜືອ ຫວຽດ ນາມ, ໃຊ້ຍົນທີ່ທັນສະໄໝໄປຖິ້ມລະເບີດລົງໃສ່ພາກ ເໜືອ ພວກນັກຮຽນຈຶ່ງອົບພະຍົບໄປຢູ່ເຂດທີ່ປອດໄພ, ທັງຮຽນທັງຫລົບ ໄພຈົນຮຽນສຳເລັດເປັນຢ່າງດີ.

## ເປັນຄະນະອຳນວຍການ



ປີ 1968-67 ນາງເປັນຄະນະອຳນວຍການໂຮງຮຽນເດັກ ນ້ອຍລາວ ທີ່ໂຮງຮຽນ 67.

ພໍຮຽນຈົບທິດສະດີຊັ້ນກາງແລ້ວ, ນາງກໍ່ຫອບຫິ້ວລູກທັງ 4 ຊາຍໄປຢູ່ເມືອງວຽງໄຊ, ເພື່ອຮ່ວມສຸກຮ່ວມທຸກຢູ່ກັບລູກ ຜົວ ຢູ່ກັບອົງການ ແລະ ການຕໍ່ສູ້, ຂະນະທີ່ສົງຄາມພວມດຸເດືອດ ໂຈນອາກາດອາເມລິກາບໍ່ພຽງແຕ່ຍິງທຳລາຍພາກໃຕ້ ພາກ ເໜືອປະເທດຫວຽດນາມເທົ່ານັ້ນ, ເຂດປົດປ່ອຍຂອງ ລາວ ເຮົາ, ແຕ່ເໜືອຈົນຮອດໃຕ້ລ້ວນແຕ່ຖືກທຳລາຍເຜົາຜານສາຍ ກະນວນສົງຄາມທີ່ຈັກກະພັດອາເມລິກາໄດ້ຈູດຂຶ້ນ ພວມລຸກໄໝ້ ໄປທົ່ວອິນດູຈີນ ຢ່າງຮ້າຍແຮງ.

ນາງໄດ້ຖືກຈັດຊອບມອບໝາຍໃຫ້ນາງປະຈຳຢູ່ຫ້ອງການ ຄົ້ນຄວ້າຂອງສູນກາງພັກທີ່ເມືອງວຽງໄຊໄລຍະໜຶ່ງ, ແລ້ວແຕ່ງ ຕັ້ງໃຫ້ນາງໄປເປັນຄະນະອຳນວຍການໂຮງຮຽນເດັກນ້ອຍລາວ ຢູ່ທີ່ເມືອງແຂວງກວາງຊີ, ເມືອງນານນິງປະເທດສາທາລະນະລັດ ປະຊາຊົນຈີນ ເວລານັ້ນນາງພວມຕັ້ງທ້ອງລູກຄົນທີ່ 5, ໃນ ປີ 1967 ຈົນເຖິງປີ 1969 ອັນເປັນເວລາຍາວນານເຖິງ 3 ປີ ເຕັມ.

ເວລາຢູ່ປະເທດຈີນ, ເຮັດໜ້າທີ່ເປັນຄະນະອຳ ນວຍ ການໂຮງຮຽນຢູ່ນັ້ນ, ນາງກໍ່ໄດ້ເກີດລູກຊາຍຄົນທີ່ 5 ໃນ ປີ 1968, ຈຶ່ງໃສ່ຊື່ໃຫ້ວ່າ " ທ້າວ ສັນຍາຮັກ " ຫລື ທ້າວ " ແອຮັກ "

ນາງເຮັດທຸກວຽກທຸກການ, ວ່າແຕ່ຄະນະອຳນວຍ ການ ມອບໝາຍ, ເມື່ອຄິດເຖິງຢູ່ເຂດປົດປ່ອຍແລ້ວ, ປະຊາຊົນລາວ ແມ່ນໄດ້ເຮັດວຽກຕໍ່ສູ້ ແລະ ລຳບາກຜ່ານຜ່າຄວາມລົ້ມ ຕາຍ

ຮ້ອຍແປດພັນປະການ.

## ປົດປ່ອຍທົ່ວປະເທດ

ປີ 1970, ນາງກັບສູ່ເຂດປົດປ່ອຍທີ່ເມືອງວຽງໄຊ, ປະຈຳວຽກຢູ່ຫ້ອງການຄົ້ນຄວ້າສູນກາງພັກຄືເກົ່າ, ຫົວໜ້າ ຫ້ອງການຄົ້ນຄວ້າ ສູນກາງພັກແມ່ນທ່ານ ສາລີ ວົງຄຳຊາວ.

ຕໍ່ມາ, ຊໍ້າພັດເກີດມີຂ່າວເສົ້າຢູ່ໃນຄອບຄົວຂອງນາງເມື່ອລູກຊາຍຄົນທີ່ສອງ, ຄື ທ້າວ ໄຊສົງຄາມເກີດມີອາການ ເຈັບຫມາກໄຂ່ຫລັງຢ່າງແຮງ, ຂະນະທີ່ລູກຊາຍພວມຮຽນຢູ່ປະເທດຫວຽດນາມໃນປີ 1973.

ນາງຟ້າວໄປຢາມລູກ, ຢູ່ເບິ່ງລູກທີ່ໂຮງຫມໍ ຫວຽດ- ໂຊ " ຮ່າໂນ້ຍ "

ລູກຊາຍເຫັນແຕ່ໜ້າແມ່, ເພາະພໍ່ວຸ້ນຢູ່ກັບວຽກບ້ານວຽກເມືອງ, ຂ່າວຄາວທີ່ໄດ້ຮັບ, ມີທ່າທີອາການຮວມລາວຈະ ເກີດມີຂຶ້ນອີກເປັນເທື່ອທີ 3, ເພິ່ນຈຶ່ງບໍ່ມີເວລາໄປຢ້ຽມເບິ່ງລູກແລະ ນາງເອງກໍ່ບໍ່ໄດ້ຕິເພິ່ນຈັກຄວາມ, ເພື່ອປະເທດຊາດບ້ານເມືອງ ແລວນາງຮັດໄດ້ທຸກຢ່າງ, ເລື່ອງການເບິ່ງລູກເຈັບເປັນ ພຽງເທົ່ານີ້, ມີແຕ່ແມ່ກັບແພດເທົ່ານັ້ນ. ແນ່ນອນຄວາມອົບອຸ່ນ ຂອງຄອບຄົວແມ່ນພ້ອມພໍ່ພ້ອມແມ່ເບິ່ງແຍງລູກຈຶ່ງມີຄວາມສຸກແຕ່ສຳລັບນາງແມ່ນຕ້ອງໄດ້ອົດກັ້ນແບກຫາບແທນພໍ່ທຸກປະການໃນ - ວຽກງານເບິ່ງແຍງປະຄອງລູກ ທັງຜູ້ເຈັບ ແລະ ພວກ ແຂງແຮງ.

ປີ 1974, ເຫັນວ່າລູກຊາຍທຸເລົາລົງແດ່ແລ້ວ, ນາງຈຶ່ງພາລູກຊາຍກັບເຂດປົດປ່ອຍເມືອງວຽງໄຊ, ເພື່ອສືບຕໍ່ປິ່ນປົວຢາພື້ນເມືອງລາວລອງເບິ່ງ.

ເລື່ອງດີອີກມ່ວນໃຈ, ບໍ່ພຽງແຕ່ນາງຄົນດຽວດີອົກດີໃຈ ຢ່າງລົ້ນເຫຼືອກໍ່ແມ່ນ, ວັນທີ 2 ທັນວາ 1975, ປະຫວັດສາດລາວໄດ້ຂຽນໃສ່ໜ້າເຈ້ຍໃບໃໝ່ທີ່ຂາວສະອາດ, ເມື່ອ ການປະຕິວັດ ແລະ ປະຊາຊົນລາວທົ່ວທັງປະເທດສາມາດໂຄ່ນ ລົ້ມລະບອບຣາຊາທິປະໄຕລົງໄດ້ ແລະ ສ້າງຕັ້ງລະບອບໃໝ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນຢ່າງສະຫງ່າຜ່າເຜີຍ.

ປີ 1976, ນາງຈຶ່ງພາລູກເຕົ້າເຂົ້າສູ່ນະຄອນຫຼວງວຽງຈັນ, ນາງເຂົ້າຢູ່ໃນຄະນະຂົນຂວາຍຊາວໜຸ່ມປະຊາຊົນປະຕິວັດລາວ, ມີ ທ່ານໄມຈັນຕານ ແສງມະນີ ເປັນປະທານ.

ການສືບຕໍ່ປິ່ນປົວລູກຊາຍຍັງດຳເນີນໄປບໍ່ເຊົາ, ວ່າ ແຕ່ຢາອັນໃດດີກໍ່ຊອກຫາມາປິ່ນປົວຈົນໝົດ.

ປີ 1977, ເປັນມະຕິຂອງສູນກາງພັກ, ຕົກລົງໃຫ້ ນາງໄປຮຽນທິດສະດີຊັ້ນສູງຢູ່ປະເທດ ຫວຽດນາມ, ທັງໆທີ່ລູກ ຊາຍຂອງນາງພວມໄດ້ຮັບການປິ່ນປົວຢູ່, ແຕ່ນາງກໍ່ຕ້ອງຕັດສິນໃຈໄປ

ກ່ອນຈະໄປ, ນາງສັ່ງລາກັບສາມີວ່າ "ຂໍໃຫ້ດູແລ ເບິ່ງແຍງລູກຂອງເຮົາໃຫ້ດີໆເນີ ? "ເພິ່ນບໍ່ຮູ້ດອກວ່າ, ຫົວໃຈຂອງນາງມີຄວາມຮູ້ສຶກແນວໃດ ? ເພິ່ນບອກກັບນາງວ່າ" ນ້ອງຈົ່ງຕັ້ງອົກຕັ້ງໃຈໄປຮຽນໃຫ້ສຳເລັດເທາະ, ຢ່າເປັນຫ່ວງນຳລູກ

ອ້າຍຈະເປັນຜູ້ເບິ່ງແຍງເອງ ".

## ເສົ້າສະລົດໃຈ

ນາງກ່າວເຂົ້າໂຮງຮຽນທຶດສະດີຊັ້ນສູງ" ສາວຮຽນອາຍຸ ຫົກ 2 ຕົ້ນປີ 1977, ຊະນິດທີ່ວ່າ :"ຮຽນແບບເລັ່ງລັດ 2 ປີ " ທັງຮຽນທຶດສະດີທັງຄິດຮອດລູກ, ແຕ່ກໍ່ອົດທົນຈົນຕົວ ໃຈ ຟົດບິບໆ ຢູ່ຕະຫລອດເວລາ, ອັນເປັນການທົດສອບແນວຄິດຈິດ ໃຈຂອງນາງໃນຂີດສູງສຸດ, "ອັນນັ້ນແມ່ນນາງຄິດ" ບໍ່ ຕ່າງ ຫຍັງກັບມີເລື່ອງໄດເລົ່າສູ່ກັນຟັງວ່າ " ເມຍພວມຮອງທີ່ມາຢູ່ຈື່ ເກີດລູກ, ການຈັດຕັ້ງຊ້ຳພັດມອບໝາຍໃຫ້ຜົວໄປຮົບ ວຽກ ທາງໄກຢ່າງດ່ວນ ! "ນາງບໍ່ໄດ້ຕິການຈັດຕັ້ງ, ຊ້ຳພັດກົງ ກັນ ຂ້າມ, ເປັນການພູມໃຈຊ້ຳທີ່ພັກໄດ້ທົດສອບເບິ່ງຫົວໃຈຂອງນາງ ເພາະເພິ່ນພວມຈະສາງເອົານາງໃຫ້ກ້າວຍ່າງໄປຕາມຈັງຫວະ ເດີນຂອງປະເທດຊາດໃນໄລຍະໃຫມ່ແຫ່ງປະຫວັດສາດ.

ນາງຍັງຈື່ໄດ້ດີວ່າ: ເມື່ອກາງເດືອນ 5/1977 ຕອນ ຂ້ອນຈື່ແຈງ, ນາງຝັນວ່າ " ໄດ້ຮັບໂທລະເລກຈາກທ່ານ ໄກ ສອນ, ບອກວ່າລູກຊາຍພວມເຈັບໜັກ"

ພໍຊວາດຮູ້ເນື້ອຄີງ, ທັງເຫື່ອໄຄໄຫລເຕັມຕົວ, ຫົວໃຈເຕັ້ນ ແຮງ, ທັງຄິດເປັນຫ່ວງລູກຊາຍປານໃຈຊິຂາດ, ແຕ່ນາງກໍ່ ບໍ່ ໄດ້ສະແດງທ່າທີກິລິຍາແນວໃດຕໍ່ໝູ່ຄູ່ໃຫ້ເຫັນວ່າ " ນາງພວມ ຕົກຢູ່ໃນຄວາມກັງວົນເປັນຫ່ວງຫາລູກຜົວຄອບຄົວແຕ່ຢ່າງໃດ "

ຄືນທີ່ພໍຈະລະບາຍຄວາມຮູ້ສຶກນຳໄດ້ໃນເວລານັ້ນກໍ່ມີ ແຕ່

ອາຫຼ້າ ( ເມຍຂອງທ່ານ ໄມສຸກ ໄຊສົມແພງ)ເພິ່ນອອຍໃຈ ນາງວ່າ " ເອື້ອຍຄິດຫລາຍລະຕີ້ນ "ແລວເພິ່ນກໍ່ຫົວ.

ການສອບເສັງທົດລອງພາກຮຽນຊຸດທີ່ໜຶ່ງໄດ້ເລີ່ມຕົ້ນມາ ແຕ່ມື້ອານ,ມື້ນີ້,ຫລັງຈາກກິນເຂົ້າກິນນ້ຳແລວ,ພໍຕົກຄອຍ ຄ່ຳ ຍາມແລງກໍ່ພາກັນຍ່າງຫລິ້ນກິນລົມຊົມທິວທັດ, ສະເພາະ ນາງ ແລວກໍ່ເພື່ອເຮັດໃຫ້ຈິດໃຈປອດປົ່ງບໍ່ກັງວົນລະນຶງຫ່ວງຫາ ລູກ ຫລາຍ.

ສິ່ງທີ່ນາງຈື່ບໍ່ລືມຈັກເທື່ອຈົນຊົ່ວກາຍເປັນຄວາມເຊື່ອ. ກໍ່ ແມ່ນຄວາມຈິງຈາກລາງສັງຫອນ ຫລື ເຫດການແປກປະຫລາດ ທີ່ໄດ້ເກີດຂຶ້ນຢູ່ທີ່ໜ້ານາສາຍຕາແທ້ງ,ຂະນະທີ່ພວມພາກັນຍ່າງໄປ ຕາມຄັນນາ,ທັນໃດ ! ມີນົກນ້ອຍສີດຳຕົກລູຍລົງມາຕໍ່ໜ້າຂອງ ນາງ, ບໍ່ຮູ້ວ່ານົກອັນໃດ, ນາງຮ້ອງຂຶ້ນ " ນົກບິນມາຕົກລົງຢູ່ ໜີ້ນີ້ນ ! ຂອຍຊິເອົາໄປລຽງ " ບ່ອນທີ່ນົກຕົກນັ້ນເປັນປ່າຫຍາ ຂວາກທຳມະດາ,ແຕ່ຊອກຫານົກບໍ່ເຫັນ, ຈຶ່ງເປັນເລື່ອງ ແປກ ປະຫລາດສຳລັບນາງ,ແລວທຸກຄົນທີ່ໄປນຳກໍ່ບອກວ່າ" ເຈົ້າ ຕາ ລາຍໄປແລວລະຕີ ? " ເພາະບໍ່ມີໃຜເຫັນ,ທັງໆທີ່ນາງ ເຫັນ ແທ້ໆ.

ພໍຍ່າງໄປຮອດຮ່ອງນ້ຳທີ່ຊາວນາເປັ່ງນ້ຳຈາກຮ່ອງ ເຂົ້າ ນາ,ນາງແນມເຫັນໝູ່ປາ "ຊະນິດປາຊິວຫລືປາຂາວນ້ອຍ"ພາ ກັນເຕັ້ນຂຶ້ນຈົນພົ້ນໜ້ານ້ຳນັບເປັນສິບເປັນຊາວໂຕ,ນາງ ຮອງ ບອກໃຫ້ທຸກຄົນເບິ່ງ,ພວກເພິ່ນຊ້ຳພັດວ່າບໍ່ເຫັນອີ່ຫຍັງ.

ຕອນຄ່ຳ,ພັກຜ່ອນທີ່ພັກ,ນາງເລີຍໄປຫາລຸງຖົງ "ທະຫານ

ອາສາສະຫມັກຫວຽດນາມທີ່ໄປກໍ່ສ້າງພື້ນຖານຊ່ວຍລາວ ເມື່ອ
ກ່ອນ ແລະ ຮູ້ກັບນາງດີ, ເວລານີ້ເພິ່ນອອກພັກຜ່ອນກິນ ເບັ້ຍ
ບຳນານຢູ່ບ້ານໃກ້ໂຮງຮຽນນັ້ນ " ເພິ່ນວ່າ, ເຫັນຈິມສາ ກະ
ໄທຍ "Chim Xà Cá nhảy" ຖືວ່າເປັນລາງບໍ່ດີ, ມີອັນ ຈະ
ເກີດຂຶ້ນໃນທາງເສົ້າ.

ພໍສອບເສັງແລ້ວພາກຮຽນ, ຊື່ວ່າຈັ່ງໃດກໍ່ວ່າສາເຫາະ?
ເພາະຄິດຮອດລູກຊາຍຫລາຍ, ຈິ່ງຕັດສິນໃຈເຂົ້າພົບຄະນະໂຮງ
ຮຽນ, ຂໍລາພັກເມືອຢາມຄອບຄົວ, ພວກເພິ່ນຊ້ຳພັດເວົ້າ ຢອກ
ໃສ່ນາງວ່າ " ຫລືວ່າ... ຄິດຮອດພໍ່ຫລາຍກວ່າຄິດຮອດລູກ,
ກໍ່ບໍ່ຮູ້ ? "ເພິ່ນອະນຸຍາດ, ຕະຫລອດທັງຄືນນອນບໍ່ຫລັບ, ພໍ ຮຸ່ງ
ເຊົ້າກໍ່ຂຶ້ນລົດໄປພົບທູດລາວປະຈຳຮາໂ ນຍ " ແມ່ນທ່ານຄຳ
ຕາ ດວງຫອງລາ " ກໍ່ພໍດີມີຍົນທະຫານຈາກວຽງຈັນໄປຮາ -
ໂນ້ຍພວມຈະກັບ, ທ່ານ ຄຳຕາ ດວງຫອງລາ ກໍ່ເອົາອົກເອົາ
ໃຈໃສ່, ຈັດສົ່ງນາງໄປເຖິ່ນຍົນ, ຈຶ່ງຂີ່ຍົນທະຫານກັບໄປ ເຖິງ
ສະຫນາມບິນວັດໄຕທີ່ນະຄອນວຽງຈັນ. ທັງໆທີ່ນາງບໍ່ໄດ້ຮູ້ໃຜໃນ
ພວກຂັບຍົນ ແລະ ເຂົາກໍ່ບໍ່ຮູ້ນາງ.

ພວກ " Pilot " ຂັບຍົນກໍ່ໃຈດີ, ທັງໆທີ່ບໍ່ຮູ້ຈັກນາງ -
ດອກພວກເພິ່ນຖາມນາງວ່າ " ເອື້ອຍຊິໄປໃສ ? "ແລ້ວພວກ
ເພິ່ນກໍ່ເອົານາງໄປສົ່ງທີ່ໂພນເຄັງ.

ພໍເຂົ້າໄປເຮືອນ, ບໍ່ເຫັນໃຜຈັກຄົນ, ຈຶ່ງຖາມອ້າຍ ນ້ອງ
ປ້ອງກັນ ແລ້ວໄປໂຮງຫມໍເລກ 1 ທີ່ຫລັກ 6, ເພາະອ້າຍນ້ອງ
ບອກວ່າ " ລຸງໃຫ່ຍໄປປະຊຸມ "

ພໍຮອດຫລັກ 6,ແນມເຫັນລູກນອນຫາຍໃຈປາແວບໆຢູ່, ຈຶ່ງຫົວຊານຫົວອອຍລູກ,ຖາມລູກແລວຫັນຫນ້າຫນີເຊັດນ້ຳ ຕາ ເພາະລີ້ນລູກແຂງ,ປາກບໍ່ໄດ້ຂັດຖອຍຂັດຄວາມແລວ,ຈຶ່ງພະຍາ ຍາມເຊັດນ້ຳຕາບໍ່ໃຫ້ລູກແນມເຫັນ,ຫົວຄຶດນ້ອຍໃຈ"ເປັນ ຫຍັງ ບໍ່ສົ່ງຂ່າວໃຫ້ຮູ້ແດ່ ? ທັງໆທີ່ລູກເຈັບຫນັກຢູ່ຄືແນວນີ້ ?"ແລວກໍ່ ບໍ່ຄິດຕຳຫນິເພິ່ນດອກ,ເມື່ອເພິ່ນເປັນຜູ້ນຳຫົວປະເທດ, ວຽກ ງານຄົງຈະຫລວງຫລາຍ,ຈຶ່ງບໍ່ມີເວລາມາເບິ່ງລູກເຈັບ ຫນັກ ຢູ່ຄືແນວນີ້,ລູກຊາຍເວົ້າກັບນາງແບບຄືນລີ້ນແຂງວ່າ"ດີໃຈທີ່ແມ່ ກັບມາເຫັນໃຈລູກເທື່ອສຸດທາຍ..." ນາງອອຍໃຈລູກວ່າ : " ຢ່າວ່າແນວນັ້ນແມ່ລູກ... ທ່ານຫມໍບອກກັບແມ່ແລວ,ລູກ ບໍ່ ເປັນຫຍັງດອກ "

ທັນໄດ້ເບິ່ງໃຈລູກພຽງອາທິດດຽວ,ຄວາມເສົ້າສະ ຫລົດ ໃຈທີ່ສຸດໃນຊີວິດຂອງນາງຜູ້ເປັນຫົວອົກແມ່ຈຶ່ງປານຖືກກະແສຟ້າ ຟາດ,ເມື່ອແນມເຫັນເປືອກຕາຂອງລູກຊາຍ ໄຂສົງຄາມ ປິດ ລົງຢ່າງບໍ່ມີເວລາເປີດຂຶ້ນມາເບິ່ງພໍ່ກັບແມ່ອີກແລວ,ຂະນະທີ່ລູກ ຊາຍມີອາຍຸໄດ້ພຽງ 18 ປີພໍດີ.

ພໍປົງສົບສົ່ງສະການ,ເກັບດູກເກັບດຽວລູກຊາຍເຂົ້າ ຫມໍ້ ກໍ່ທາດໃສ່ຕາມຮີດຄອງປະເພນີລາວແລວ,ນາງຈຶ່ງກັບໄປ ຮຽນ ທິດສະດີຕໍ່ຈົນຈົບ.

## ຕັດສິນໃຈສູ້ຊົນ

ນາງເຊັດນ້ຳຕາອອກຈາກຕາໃຫ້ແຫ້ງດີ,ນາງແປງສີຫນ້າ

ໃຫ້ເປັນປົກກະຕິ, ນາງກົດເນັ້ນຫົວໃຈແຫ່ງຄວາມເຈັບປວດ ສຸດແສນສາຫັດ, ໃຫ້ຈົມດິ່ງນິ້ງສະຫນິດຢູ່ໃນຫົວໃຈ ແລ້ວອຳລາ ລູກຜົວກັບຄືນສູ່ການຮຽນ, ເຮັດຄືບໍ່ມີຫຍັງເກີດຂຶ້ນ.

3 ປີຕົ້ນຮຽນທິດສະດີໂຮງຮຽນ ຫງວຽນ ອາຍກວັກ ແລ້ວກໍ່ຮຽນຈົບປີ 1978.

ພໍກັບຄືນມາສູ່ປິຕຸພູມ; ການຈັດຕັ້ງສັບຊ້ອນໃຫ້ນາງຢູ່ໃນຄະນະຂົນຂວາຍສ້າງຕັ້ງຊາວຫນຸ່ມປະຊາຊົນປະຕິວັດລາວ, ເປັນຮອງຫົວຫນ້າພະແນກໂຄສະນາອົບຮົມ " ຫົວຫນ້າພະແນກແມ່ນທ່ານ ສົມສະຫນິດ ຄຳໃບ " ຫົວຫນ້າຄະນະຂົນຂວາຍສ້າງຕັ້ງຊາວຫນຸ່ມແມ່ນ ລຸງ ໄມ້ຈັນຕານ ແສງມະນີ.



ນາງໄດ້ພາຫມູ່ຄະນະຊາວຫນຸ່ມລາວ 250 ຄົນ. ໄປຮ່ວມງານມະໂຫລານຊາວຫນຸ່ມໂລກຄັ້ງທີ 12 ທີ່ນະຄອນຫລວງມົດສະກູ.

ນາເຖິງຂັ້ນນີ້ແລວ, ນາງໄດ້ບອກກັບຕົວເອງວ່າ" ຈະຕັດສິນໃຈສູ້ຈົນເພື່ອສ້າງພົບງານໃນໄລຍະໃຫ່ມ "ມີສຸພາສິດ ຈີນໄດ້ກ່າວເອົາໄວ້ວ່າ " ເມື່ອມືອັນຫນຶ່ງເສຍໄປ, ກໍ່ຕອງໄດ້ ອັນຫນຶ່ງມາແທນທີ່ໃຫ່ຍກວ່າ " ຫລື ປະທານໂຮຈີ່ມິນເຄີຍໄດ້ກ່າວເອົາໄວ້ວ່າ " ຢູ່ໃນໂລກນີ້ບໍ່ມີຫຍັງຍາກ, ຍ້ານແຕ່ໃຈບໍ່ ແຂງເທົ່ານັ້ນ... "

ລຸງ ໄມ້ຈັນດານ ແສງມະນີ ໄດ້ຕັກເຕືອນນາງວ່າ"ເປັນໂອກາດທີ່ຈະຕອງສະແດງສິມືໃຫ້ທຸກຄົນເຫັນແລວໄດ້ ເອື້ອຍຫລວງອິນ ".

ນາງຈຶ່ງຕັດສິນໃຈລົງສູ່ການເຮັດວຽກຢ່າງບໍ່ຮູ້ອິດຮູ້ເມື່ອຍຈົນບໍ່ມີເວລາຢູ່ເຮືອນ, ເພາະ, ພໍແຕ່ຕື່ນມາ, ຜົວກໍ່ໄປວຽກ ຜົວເນີຍກໍ່ໄປວຽກເນີຍ. ນາງຄິດວ່າ: ມີແຕ່ບົ້ນໃສ່ວຽກຈຶ່ງຈະພາໃຫ້ບັນເທົາຄວາມທຸກໂສກທີ່ວໃຈຂອງນາງ.

ຢູ່ມາໄລຍະໜຶ່ງ, ການຈັດຕັ້ງບົ່ງຕົວໃຫ້ທ່ານ ສົມສະຫນິດ ຄຳມີບ ໄປບຳລຸງທິດສະດີຢູ່ປະເທດ ຫວຽດນາມ ໑ ປີ.

ເຮັດຫນ້າທີ່ອາການແທນຫົວຫນ້າພະແນກໂຄສະນາອົບຮົມ ຈຶ່ງຖືກນາເປັນຍຸດຂອງນາງ, ນາງໄດ້ຄິດຢູ່ທຸກເວລາວ່າ"ພອນ" ກັບການສ້າງຕັ້ງຊາວຫນຸ່ມປະຊາຊົນປະຕິວັດລາວ, ນາງ ຈະເຮັດໃຫ້ມືອົງປະກອບຂອງໃບຫນ້າຫນັງສືພິມຊາວຫນຸ່ມເກີດ ຂຶ້ນໃຫ້ຈົນໄດ້"

ນາງຈຶ່ງນຳເອົາຄວາມຄິດນີ້ເຂົ້າເປິກສານຳຄະນະ, ຢູ່ໃນຄະນະບໍ່ຫັນເອກະພາບກັນເທື່ອ, ເມື່ອມີສຽງສ່ວນຫນຶ່ງຊ້ຳພິດ

ວ່າ: "ການສ້າງຕົວໜັງສືພິມເປັນຂອງຕົນເອງ, ມັນບໍ່ແມ່ນເລື່ອງທຳມະດາ, ເຊິ່ງນອກຈາກອົງປະກອບຢ່າງຄົບຊຸດແລວ, ປັດໄຈສຳຄັນແມ່ນຄົນທີ່ເປັນນັກວິຊາການ ແລະ ເງິນ " ການຖົກ ຖຽງກັນໄດ້ດຳເນີນໄປຢ່າງຕໍ່ເນື່ອງ, ເມື່ອສຽງໜຶ່ງເຫັນວ່າເຖິງ ເວລາແລວ, ສຽງໜຶ່ງຊ້ຳພັດວ່າບໍ່ທັນເຖິງເວລາເທື່ອ. ນາງນອນຈົນບໍ່ຫລັບ. ຄິດແຕ່ເລື່ອງຈະຕອງສ້າງຕົວໜັງສືພິມຊາວໜຸ່ມຂຶ້ນໃຫ້ໄດ້.

ນາງໄດ້ແລ່ນໄປ ປຶກສາຫາລືກັບຫລາຍຄົນທີ່ມີຄວາມ ຮູ້ທາງດ້ານໜັງສືພິມມາແລວ, ແລວນາງສະຫລຸບໃຫ້ກັບຕົວ ເອງວ່າ " ກ່ອນອື່ນຕອງແມ່ນວັດຖຸດິບ, ຕໍ່ໄປຈຶ່ງແມ່ນເຊື້ອໄຟ" ວັດ ຖຸດິບນັ້ນແມ່ນຫຍັງ ? ແມ່ນຄົນ, ຄົນປະເພດໃດ ? ຄົນປະ ເພດນັກໜັງສືພິມ, ຊຶ່ງບໍ່ພຽງແຕ່ຮູ້ຂຽນໜັງສືພິມເປັນແຕ່ຢ່າງ ດຽວ ຍັງຈະຕອງຮູ້ຈັກນຳພາ, ກວດກາ ແລະ ຕຳນິວິຈານເປັນ ນຳ ນາງນຳເອົາທຸກແນວຄິດທີ່ນາງມີນຳສະເໜີຕໍ່ ກອງປະຊຸມ ຄົບຄະນະ, ຜູ້ເປັນປະທານ ແລະ ສອງສາມສະຫາຍເຫັນດີ, ມີ ອີກສອງສຽງຍັງບໍ່ທັນເຫັນດີດອຍຄຳເຫັນ " ມັນບໍ່ແມ່ນວຽກທຳ ມະດາ ແລະ ບໍ່ທັນເຖິງເວລາເທື່ອ " ອີກສຽງໜຶ່ງກໍ່ວ່າ " ຄົນ ແລະ ທຶນຈະໄປເອົາມາຈາກໃສ ? ໃນເມື່ອປະເທດຊາດ ຂອງພວກເຮົາຫາກໍ່ຈຶ່ງຟື້ນຊີບເປັນລະບອບໃຫມ່ມາໄດ້ບໍ່ທັນເຖິງ 3 ປີ ທຸກສິ່ງທຸກຢ່າງລອນແຕ່ແມ່ນ 2 ຝາມືເປົ່າ ".

ນາງວົງເຕັ້ນໄປຂໍນຂວາຍຊອກຫາຊັບພະຍາກອນທາງ ອື່ນ ອັນນັ້ນຈາກຄະນະຂ່າວສານໜັງສືພິມ. ຄະນະດັ່ງກ່າວໄດ້ ຕົກລົງມອບສະຫາຍ ດວງດີ ອິນດາວົງ ໃຫ້ນາງຈຶ່ງ ໄດ້ຫອ ໄປ

ຫາສະຫາຍ ດວງດີ ອິນຄາວົງ ທັງຢູ່ເຮືອນແລະຫ້ອງການ, ໄປຫ້ອງການບໍ່ພົບຈຶ່ງໄປພົບ ຢູ່ເຮືອນ, ໄປຕອນກາງເວັນບໍ່ ພົບຈຶ່ງໄປຕອນກາງຄືນ, ເພື່ອລະດົມຂົນຂວາຍໃຫ້ໄປຮ່ວມວຽກນຳ

ບັນຫາຕໍ່ໄປກໍ່ແມ່ນນັກຂ່າວຫນັງສືພິມທີ່ມີສີມືພໍສົມຄວນ, ຈຶ່ງໄດ້ນັກຂ່າວ 3 ຄົນ ເພີ່ມຕື່ມອີກ.

ນາງໄດ້ຮຽກຄົນທັງ 4 ເປີກສາຫາລືວຽກງານເພື່ອ ກະກຽມສ້າງຕັ້ງຫນັງສືພິມ ແລະ ຕັ້ງຊື່ຫນັງສືພິມ.

ກອງປະຊຸມໄດ້ຄົ້ນຄວ້າຕົກລົງ " ໃຫ້ປະກາດຮັບສະຫມັກເອົານັກຂ່າວ ແລະ ປະກາດການແຂ່ງຂັນກວດສອບການ ຂຽນບົດຂ່າວ, ການສຳພາດ ແລະ ອື່ນໆ...ສ່ວນການໃສ່ຊື່ ຫນັງສືພິມຊີ້ໃສ່ວ່າແນວໃດນັ້ນ, ທຸກຄົນມອບໃຫ້ນາງເອົາໄປຄົ້ນຄວ້າ"

## ສ້າງຕັ້ງຫນັງສືພິມ

ການຕັດສິນໃຈຂອງນາງທີ່ສູ້ຈົນເຮັດວຽກ, ອົດຕາຫລັບຂັບຕານອນ ຈົນຮ່າງກາຍຈ່ອຍຜອມ, ທັງຄິດຫລາຍ, ຢ້ານວ່າ ຫນັງສືພິມຂອງຊາວຫນຸ່ມຈະເກີດຂຶ້ນບໍ່ໄດ້, ເມື່ອຄິດເຖິງຄຳເຫັນຂອງຄະນະດອຍກັນທີ່ວ່າ " ຍັງບໍ່ທັນເຖິງເວລາເທື່ອ " ແລະ " ເຮົາມີແຕ່ສອງຝາມືເປົ່າ " ນາງໄດ້ຕັດສິນໃຈແລ້ວ ວ່າ : " ນາງຈະສູ້ຈົນສ້າງຕັ້ງຫນັງສືພິມຂຶ້ນໃຫ້ໄດ້ ! ເພາະອັນ ນັ້ນ ຄືປາກກະບອກສຽງຂອງຊາວຫນຸ່ມ, ຊາວຫນຸ່ມທີ່ເປັນແຂນ ຂວາຂອງພັກ ".



ກ່າວເປີດງານວາງສະແດງຫົວຄິດປະດິດສ້າງຂອງ
ຊາວຫນຸ່ມ ທີ່ ມົດສະກູ.

ທຸກຄົນຕ່າງກໍ່ໄດ້ເຮັດຫນ້າທີ່ຂອງໃຜລາວຢ່າງບໍ່ໄດ້ຢູ່ ໄດ້ເຊົາ, ເມື່ອບົດຂຽນ ທັງປະເພດຮ້ອຍແກ້ວ ແລະ ຮ້ອຍກອງ ຫລັ່ງໄຫລກັນເຂົ້າມາສູ່ພະແນກໂຄສະນາອົບຮົມຂອງຄະນະ ຍົນ ຂວາຍສ້າງຕັ້ງຊາວຫນຸ່ມປະຊາຊົນປະຕິວັດລາວ.

ບັນຫາຍັງບໍ່ທັນຢຸດຢູ່ພຽງເທົ່ານັ້ນ, ການສ້າງຕັ້ງຫນັງສືພິມ ຍັງຕ້ອງເວົ້າເຖິງສະຖານທີ່, ໂຄງຮ່າງປະກອບ, ນັບແຕ່ກອງບັນນາທິການ, ຫົວຫນ້າບັນນາທິການ, ຫນ່ວຍຈັດຫນ້າຫນັງສື ພິມ ຫນ່ວຍກວດແກ້, ພິມດີດ, ຖ່າຍຮູບ, ນັກຂ່າວເຄື່ອນທີ່ແລະອື່ນໆ.

... ທີ່ມີຄວາມສາມາດເທົ່າທຽມກັບກົມໜຶ່ງ.

ເມື່ອເລືອກເຟັ້ນບົດຂຽນທີ່ພູສະໜັກສົ່ງເຂົ້າໄປ, ຈຶ່ງ ໄດ້ມີກຂຽນຕື່ມອີກສອງສາມຄົນ.

ມີງົບປະມານຂອງລັດອອກມາຊ່ວຍເຫລືອປະມານ 6-7 ແສນກີບ ເພື່ອຊຸກຍູ້ຂະບວນການເຮັດໃຫ້ໜັງສືພິມເກີດເປັນຕົນເປັນຕົວ.

ນາງວົງເຕັ້ນແລ່ນໃຕ້ແລ່ນເໜືອຈົນທົ່ວນະຄອນ ຫລວງ ເພື່ອຊອກຫາສະຖານທີ່. ໃນທີ່ສຸດຈຶ່ງໄດ້ເຮືອນຕຶກ 2 ຊັ້ນທີ່ນ້ຳພູ

ຂະນະດຽວກັນ, ນາງຍາດແຍ່ງພົບກັບຊາວໜຸ່ມ ໂກມ ໄຊໂມມ ໄຊວຽດ, ຊາວໜຸ່ມເຍຍລະມັນ, ຊາວໜຸ່ມ ບຸນກາຣີ ເພື່ອຂໍຄວາມເຫັນໃຈສະໜັບສະໜູນຕໍ່ການສ້າງຕັ້ງໜັງສື ພິມ

ນາງເອງເປັນຜູ້ຕັ້ງຊື່ຂອງໜັງສືພິມ. ເມື່ອນຳເອົາ ຜ່ານໝູ່ຄະນະແລ້ວ, ທຸກຄົນເຫັນດີເປັນເອກະພາບຕາມ, ຄືໃສ່ ຊື່ໜັງສືພິມວ່າ " ໜັງສືພິມໜຸ່ມລາວ " ເພາະເປັນຄຳ ເວົ້າງ່າຍໆ, ມີຄວາມໝາຍເລິກເຊິ່ງແລະກວມລວມທັງໝົດ.

ເມື່ອທຸກສິ່ງທຸກຢ່າງກະກຽມພອມທຸກຂະບວນແລ້ວ, ວັນສຳຄັນອັນເປັນປະຫວັດສາດແຫ່ງໜັງສືພິມຊາວໜຸ່ມກໍ່ໄດ້ໄຂຂຶ້ນ - ຢ່າງເປັນທາງການໃນວັນທີ 1 ມັງກອນປີ 1979.

ໜັງສືພິມຊາວໜຸ່ມນັ້ນ, ທີ່ວໜ້າບັນນາທິການ, ນາງ ເປັນຜູ້ຊີ້ນຳລວມໃນນາມຄະນະກຳມະການອົບຂວາຍສ້າງຕັ້ງ - ຊາວໜຸ່ມປະຊາຊົນປະຕິວັດລາວ.

# ສ້າງຕັ້ງໂຮງພິມ

ພໍແຕ່ສ້າງຕັ້ງໜັງສືພິມ " ໜຸ່ມລາວ " ໄດ້ແລ້ວ,ນາງກໍ່ລົ້ມຫາງປີ່ນ,ຖືກນຳເຂົ້າໂຮງໝໍເລກ 1 ທີ່ ຫລັກ 6, ບຸກວຽກບຸກງານຫລາຍຈົນລືມຮອດຮັກສາບຳລຸງສຸຂະພາບ, ຈຶ່ງລົ້ມເຈັບເຂົ້າໂຮງໝໍ 1 ເດືອນເຕັມ.

ພວມນອນຢູ່ໂຮງໝໍ,ນາງກໍ່ຍັງຊຸ້ນນຳວຽກງານຂອງ ໜັງສືພິມ " ໜຸ່ມລາວ " ຢູ່,ຫົວດີໃຈທີ່ເຫັນຜົນສຳເລັດຈາກ ມັນສະໝອງ ແລະ ເຫື່ອແຮງຂອງຕົນເອງ ທ່ານໝໍອອກ ປາກຫ້າມບໍ່ໃຫ້ນາງເວົ້າວ່ານຳວຽກນຳງານ,ເພາະເປັນຊ່ວງໄລຍະພັກຜ່ອນຮັກສາສຸຂະພາບ.ແຕ່ນາງກໍ່ອົດບໍ່ໄດ້.

ພໍອອກຈາກໂຮງໝໍ ບັນຫາໄດ້ຕັ້ງຂຶ້ນຕໍ່ໜ້າເປັນຄຳຖາມເພື່ອບອກໃຫ້ນາງແກ້ໄຂກໍ່ຄື : ມີໜັງສືພິມເປັນຂອງຕົນເອງແລ້ວ, ແຕ່ຕ້ອງໄປຂໍພິມນຳໂຮງພິມອື່ນໆ, ບາງເທື່ອກໍ່ບໍ່ທ່ວງທັນກັບວັນເວລາທີ່ໄດ້ກຳນົດ,ພິມບໍ່ທັນກັບຄວາມຕ້ອງການ, ຈຶ່ງເຮັດໃຫ້ນາງເກີດມີແນວຄິດຢາກມີໂຮງພິມຂອງຊາວໜຸ່ມ ໂດຍສະເພາະ.

ນາງນຳເອົາເລື່ອງນີ້ສະເໜີຕໍ່ຄະນະ,ຄະນະບາງຄົນຍັງຍິ້ມຫົວ " ພຽງແຕ່ສ້າງຕັ້ງໜັງສືພິມ,ເອື້ອຍກໍ່ລົ້ມເຈັບ ເຂົ້າໂຮງໝໍເປັນເດືອນແລ້ວ " ມີຄວາມໝາຍວ່າ:"ຖ້ານາງ ຍິ່ງສ້າງຕັ້ງໂຮງພິມກໍ່ອາດຈະເຈັບໜັກກວ່ານັ້ນອີກ ວ່າຊັ້ນເທາະ"

ນາງສະເໜີແລ້ວສະເໜີອີກ, ທັງປະຕິຍານວ່າ "ນາງ ມີຄວາມສາມາດເຮັດໄດ້ ! " ຫົວໜາແລະຄະນະ ດວຍ ກັນ ຈຶ່ງຕົກລົງ " ກໍ່ລອງເບິ່ງ... "

ນາງດີໃຈຫລາຍ, ຟ້າວໄປພົບຄະນະໂຮງພິມແຫ່ງ ຊາດ ເພື່ອຂໍຄຳຄຶດຄຳເຫັນເປັນທິດທາງ, ເພາະນາງກໍ່ບໍ່ເຄີຍ ເຫັນ ເຄ... ຈຶ່ງເລືອກໄດ້ສະຫາຍ ບົວຄຳ ເພັງສຸວັນ, ນາງໄປພົບ ແລະ ຂົນຂວາຍເອົາສະຫາຍ ບົວຄຳ ເພັງສຸວັນ ໄດ້ແລ້ວກໍ່ - ມອບພວຽກງານການເຄື່ອນໄຫວໃຫ້ກະກຽມທາງດ້ານວິຊາການ ໃຫ້ໂລດ, ສ່ວນອົງເຕັ້ນກະກຽມທາງດ້ານເປົ້າໝາຍກ່ອນອື່ນແມ່ນ ສະຖານທີ່, ຕໍ່ໄປແມ່ນຄະນະເຮັດວຽກນຳກັນ, ເຄື່ອງຈັກໂຮງ ພິມ ແລະ ນັກວິຊາການຄົບຊຸດ.

ເລື່ອງທີ່ນາງຄິດວົກຄິດວຽງ, ຄິດເຂົ້າຄິດອອກຢູ່ຕະ ຫລອດ ເວລາກໍ່ແມ່ນ " ເຄື່ອງຈັກຈະເອົາມາແຕ່ໃສ ? ເມື່ອ ເງິນກໍ່ບໍ່ມີ, ທຶນທັງດ້ານງົບປະມານທີ່ລັດໃຫ້ກໍ່ມີແຕ່ເປັນເງິນ ເດືອນ ແລະ ຄ່າພິມໜັງສືພິມຢູ່ໃນຂອບເຂດວົງເງິນຈຳກັດຂອງ ໜັງສືພິມເທົ່ານັ້ນຈະເອົາໄປໃຊ້ຈ່າຍວຽກຈຳເປັນອື່ນບໍ່ໄດ້ແລ້ວ.

ເມື່ອນາງອອກແຮງຂົນຂວາຍສະຖານທີ່, ທຶນ ແລະເຄື່ອງຈັກຂອງໂຮງພິມຈາກຕ່າງປະເທດໄດ້ແລ້ວ.

ທຳອິດ, ຄິດວ່າຈະຕັ້ງໂຮງພິມຢູ່ແຫ່ງໜຶ່ງທີ່ຊຸມບ້ານ ສີສະຫວາດ, ຊ້ຳພັດເປັນໄປບໍ່ໄດ້, ຈຶ່ງຊອກຕໍ່, ແລ້ວໄປໄດ້ໂຮງງານຢາສີແຂ້ວເກົ່າຢູ່ບ້ານໜອງປາໃນ ເມືອງສີໂຄດຕະບອງ ຖະໜົນຫລວງພະບາງ, ແຕ່ທາງກຳແພງນະຄອນວຽງຈັນຊຸມຄອງ.

ນາງຂຶ້ນໄປຫາຄະນະກຳແພງນະຄອນຫລວງວຽງຈັນ.ສະເຫນີຈຸດປະສົງ ແລະ ຄວາມສຳຄັນເພື່ອສ້າງຕັ້ງໂຮງພິມ ຂອງຊາວຫນຸ່ມ ( ເວລານັ້ນ,ເລຂາພັກກຳແພງນະຄອນວຽງ ຈັນໂດຍແມ່ນ ຈູງຈັນມີ ດວງບຸດດີ ) ເພິ່ນຕົກລົງທັນທີ.

ພໍໄດ້ສະຖານທີ່ແລ້ວ,ບັນຫາກໍ່ຕາມມາແມ່ນຕ້ອງມີງົບ ປະມານສ້ອມແປງສະຖານທີ່,ເພາະເປັນເຮືອນເກົ່າແກ່,ນ້ຳ ໄຫລຊຶມນາງຈຶ່ງນຳສະເຫນີຕໍ່ຄະນະເລື່ອງຂໍງົບປະມານເງິນ ສ້ອມແປງ, ບາງສະຫາຍເກີດມີທ່າທີ,ບອກວ່ານາງ " ສ້າງວຽກງານເກີນຄວາມສາມາດ "ເພາະການສ້າງຕັ້ງແລະ ການ ຄຸ້ມຄອງໂຮງພິມນັ້ນບໍ່ແມ່ນວຽກງ່າຍໆເລີຍ.

ບາງເທື່ອນາງກໍ່ທົດທໍ້ໃຈ,ແຕ່...ເມື່ອໄດ້ຄຶດຄັກ ໄດ້ຍ່າງໄປທາງຫນ້າ ແລ້ວຈະຢຸດຢູ່ຫລືຖອຍຫລັງໄດ້ຈັ່ງໃດ ?

ມີບາງທາງສຽງຊ້ຳພັດວ່າ" ສ້າງຕັ້ງໂຮງພິມໄດ້ ແລ້ວໂຮງພິມບໍ່ແລ່ນຈະພໍ່ອາຍເພິ່ນບໍ່ ? " ແລະອື່ນໆ...

ເປັນໂອກາດດີມາເຖິງ,ເມື່ອນາງຖືກແຕ່ງຕັ້ງໄປ ຮ່ວມກອງປະຊຸມຊາວຫນຸ່ມໂລກທີ່ປະເທດ ເຢຍລະມັນ,ນາງຈຶ່ງຍາດເວລາພົບຄະນະຊາວຫນຸ່ມປະເທດສັງຄົມນິຍົມອາຍນອງເຊັ່ນ : ຊາວຫນຸ່ມ ກົມໂຊໂມນເລີນແຫ່ງສະຫະພາບໂຊວຽດ, ຊາວຫນຸ່ມອິດສະຫລະເຢຍລະມັນ,ຊາວຫນຸ່ມ ຮົງກາຣີ,ຊາວຫນຸ່ມບຸນກາຣີ... ທຸກຄະນະຮັບປາກວ່າ " ຈະນຳເອົາຄຳສະເຫນີ - ຂອງນາງໄປສະເຫນີຕໍ່ການຈັດຕັ້ງຂອງຂະເຈົ້າ " ມີແຕ່ ຊາວຫນຸ່ມ ກົມໂຊໂມນເລີນແຫ່ງສະຫະພາບໂຊວຽດຮັບປາກ ກັບ



ມໍ່ຂໍອຸ້ມແດ່... ລູກຊາຍຫຼ້າຂອງມໍ່ເອີຍ... !

ທີ່ໂລດ. ວ່າຈະຊ່ວຍເຫລືອ.

ຕົກມາຮອດເດືອນ 4/1980, ຄະນະຊາວໜຸ່ມ ໂກມໂຊໂມນໄດ້ມາວຽງຈັນ, ພົບປະກັບຄະນະພວກນາງ ແລະຮ່ວມເຊັນສັນຍານຳກັນ ຕໍ່ການຊ່ວຍເຫລືອເຄື່ອງຈັກໂຮງພິມໃຫ້ແກ່ ຊາວໜຸ່ມລາວ.

ຄວາມຝັນຂອງນາງຈຶ່ງຄ່ອຍໆປະກົດຊັດແຈ້ງຂຶ້ນ, ດ້ວຍ ຂໍ້ຄິດຄະຕິຂອງນາງມີປະຈຳຢູ່ວ່າ " ຄວາມພະຍາຍາມຢູ່ທີ່ ໃດ ຄວາມສຳເລັດມີຢູ່ທີ່ນັ້ນ "

ຕອນຜ່ານໂຊວຽດ, ນາງໄດ້ພົບເລຂາທິການທີ I ຂອງ

ຊາວໜຸ່ມ ກົມໂຊໂມນເລນິນ ເຂົາເຈົ້າໄດ້ແຈ້ງເປັນ ທາງການວ່າໄດ້ແລ້ວຕາມທີ່ທ່ານຕ້ອງການ.



ນຳພາເປີດຂະບວນປູກຕົ້ນໄມ້ທີ່ສວນ 14 ເມສາ (1-6-1988) ເພື່ອປະກອບສ່ວນອະນຸລັກຊັບພະຍາກອນຂອງໂລກ.

ພັກບມາລາວແລ້ວ, ນາງຍັງວິ້ງເຕັ້ນໄປຫາກບ່ອນເພື່ອຊອກຫາທີ່ນຢ່າງບໍ່ຢູ່ບໍ່ເຊົາ, ຈົນແຫງລູກທີ່ມີຢູ່ທ້ອງ, ພັກຜ່ອນຢູ່ ຕາມຫມໍກຳນົດແລວກໍ່ສືບຕໍ່ເຮັດວຽກງານ.

ບໍ່ດົນກໍ່ຖືງ ທອງຊີກ, ຈຶ່ງອູນທອງທັງແລ່ນວຽກ, ຫມູ່ຄູ່ບອກໃຫ້ພັກຜ່ອນ, ນາງຮູ້ສຶກວ່າຕີນຄືບໍ່ພໍເປັນຫຍັງ ຈົນຮອດ ວັນທີ 5/12/1980 ນາງກໍ່ເກີດລູກຊາຍເຊິ່ງຄິດວ່າເປັນລູກຫລາແລວ, ຈຶ່ງໃສ່ຊື່ໃຫ້ວ່າ : ທາວ ບຸນຄຳແກວ " ເອີ້ນຫລົ້ນວ່າແອຄຳ ຫລື ຍອດສະເອີ " ເກີດປີ້ວອກດີພໍ. ນາງພັກຜ່ອນ ຢູ່ 2 ເດືອນກໍ່ເຮັດວຽກຕໍ່ໂລດເພາະຮູ້ສຶກວ່າຕີນແຂງແຮງດີ.

ເປັນເວລາ 3 ປີທີ່ເດືອນໄຫວຢ່າງບໍ່ຮູ້ອິດຮູ້ເມື່ອຍ, ຈົນມາຮອດວັນແຫ່ງຜົນສຳເລັດໃນຄວາມມຸມານະຂອງນາງ, ວັນ ທີ 26/4/1983, ໂຮງພິມຊາວຫນຸ່ມປະຊາຊົນປະຕິວັດລາວກໍ່ໄດ້ສາງຕັ້ງຂຶ້ນ ແລະ ປະກາດນຳໃຊ້ຢ່າງເປັນທາງການ.

ເພື່ອການຮ່ວມມືລະຫວ່າງຊາວຫນຸ່ມລາວແລະຊາວຫນຸ່ມໂຊວຽດ, ໂຮງພິມແຫ່ງນີ້ຈຶ່ງໄດ້ໃສ່ຊື່ວ່າ : ໂຮງພິມມິດຕະພາບຊາວຫນຸ່ມລາວ - ໂຊວຽດ.

## ສ້າງຕັ້ງໂຮງຮຽນຊາວຫນຸ່ມ

ນາງໄດ້ຢຶດຫມັ້ນທິດສະດີມາກເລນິນຕໍ່ການແກ້ໄຂບັນຫາໃດຫນຶ່ງໃນຫນ້າທີ່ວຽກງານຂອງສັງຄົມນັ້ນຕອງດຳເນີນ ຢ່າງເປັນລະບົບຄົບຊຸດຈຶ່ງຮັບປະກັນຄຸນນະພາບຂອງວຸດົມການ ຂອງ

ວຽກງານນັ້ນໆ ແລະ ເຮັດດ້ວຍຄວາມຕັດສິນໃຈທັງຕອງ ມີ ຄວາມຮັບຜິດຊອບສູງຕໍ່ພົນປະໂຫຍດລວມແລວທັງຫາທັງຫານ.

ດີ່ງນາງນີ້ເປັນຕົ້ນ, ຕອນວັງເຕັ້ນອິນຂວາຍສາງ ຕັ້ງ ຫນັງສືພິມຊາວຫນຸ່ມ,ຕອນນັ້ນຈື່ງຂໍເປີດອົກເປີດໃຈເວົ້າໄດ້ໂລດ ວ່າ " ທັງປານທັງຫານ " ປານຈະຢູ່ເກີດ,ປານບໍ່ໄດ້ດັ່ງ - ຄວາມຕັ້ງໃຈເອົາໄວ້, ພໍເກີດຂຶ້ນແລວ,ຊາວດຶດປາກນີໂຮງ ພົມ



ບັນດາທ່ານຜູ້ນຳລາວຍາມໃດກໍ່ເອື້ອເຟື້ອເພື່ອແຜ່ ຮັກແພງ ສະຫນິດສະຫນົມກັບລູກໆຫລານໆຢ່າງໃກ້ຊິດເຫມືອນດັ່ງ ຊຸ ຫອນຂອງຕົນເອງ.

ພາບນີ້ໃຫ້ກຽດຖ່າຍຮູບຮ່ວມ ແລະ ນຳພາປູກເບັ້ຽໄມ້ ໂອກາດວັນທີ 1/6 ປີ 1988.

ແລ້ວໂຮງພິມກໍ່ເກີດຂຶ້ນ.

ຕອນນີ້, ນາງຄິດຢາກສ້າງຕັ້ງໂຮງຮຽນບຳລຸງທິດສະດີ ທີ່ເປັນຂອງຊາວໜຸ່ມໂດຍສະເພາະ.

ຈຸດປະສົງກໍ່ແມ່ນ, ຢາກໃຫ້ຊາວໜຸ່ມລາວໄດ້ຮັບການ ອົບຮົມທິດສະດີໃນໄລຍະສັ້ນ. ເພາະທີ່ຜ່ານມາ, ວ່າແຕ່ຈະຮຽນ ອັນໃດກໍ່ມີແຕ່ໄປຕ່າງປະເທດ, ເສຍງົບປະມານຂອງລັດ, ເສຍ ເວລາ ແລະ ຄິດວ່າ "ຄົນລາວຍັງມີຄວາມສາມາດເປັນຄູ ເປັນອາຈານສອນທິດສະດີໄດ້"



ລຸງເລຂາທິການໃຫຍ່ ພັກປະຊາຊົນປະຕິວັດລາວ ກໍ່ຄືທ່ານຜູ້ນຳອື່ນໆ ຕ່າງກໍ່ໄດ້ຍາດເວລາອັນເໝາະນຳພາຊາວໜຸ່ມ ແລະ ເຍົາວະຊົນປູກເບັ້ຽໄມ້ໂອກາດວັນທີ 1/6.

ໂຮງຮຽນທິດສະດີຊາວໜຸ່ມຈຶ່ງເລີ່ມຂຶ້ນຢູ່ທີ່ສວນຫລັກ 14 (ທາງໄປທ່າເດື່ອ ) ເອີ້ນວ່າ " ໂຮງຮຽນທິດສະດີ 14 ເມສາ " ຊຶ່ງເປັນສະຖານທີ່ຊົ່ວຄາວ, ບໍ່ຖາວອນ.

ນາງໄດ້ຄຶດອ່ານຫາຄວາມຖາວອນຂອງໂຮງຮຽນທິດສະດີ ຈະຕ້ອງມີດິນຕອນໜຶ່ງຕ່າງຫາກ, ມີໂຮງຮຽນສະເພາະ.

ນາງອິ້ງເຕັ້ນໄປຫາຜູ້ຊົງຄຸນວຸດທິ ແລະ ບາງບໍລິສັດ, ເພື່ອຂືນຂວາຍເນື້ອທີ່ດິນປູກໂຮງຮຽນທິດສະດີຂອງຊາວໜຸ່ມ.

ເມື່ອໄດ້ຮັບຟັງເຖິງຄວາມໝາຍຄວາມປະສົງຢ່າງຄັກແນ່ແລ້ວ, ຍາພໍ່ ສີມບູນ ອິນທະວົງໄດ້ເວົ້າວ່າ " ຫລານຈະ ເອົາໄປເຮັດເອົາໄປສ້າງອັນໃດກໍ່ແລ້ວແຕ່, ພໍ່ຕາຂໍມອບທີ່ດິນຢູ່ ໂພນທັນ ໃຫ້ຫລານ, ມີເນື້ອທີ່ດິນ 2 ເຮັກຕາ ".

ໂຮງຮຽນທິດສະດີຊາວໜຸ່ມຈຶ່ງໄດ້ຍ້າຍຈາກຫລັກ 14 ໄປຢູ່ໂພນທັນແຕ່ບັດນັ້ນ, ອັນໄດ້ເຮັດໃຫ້ນາງດີໃຈຫລາຍ, ເມື່ອຕົນເອງໄດ້ເຮັດສິ່ງທີ່ເປັນປະໂຫຍດໃຫ້ແກ່ປະເທດຊາດ ແລະ ສ່ວນລວມແລ້ວ.

## ສ້າງຕັ້ງສວນອຸທິຍານເຍົາວະຊົນ

## 2 ທັນວາ

ເມື່ອໄດ້ຮັບມອບໝາຍໜ້າທີ່ໃຫ້ຊີ້ນຳວຽກງານເຍົາວະຊົນທັນວາ ອີກວຽກໜຶ່ງ, ນາງຈຶ່ງຄິດເຖິງຄວາມຜາສຸກຂອງເດັກນ້ອຍ.

ແນ່ນອນ,ທຸກຢ່າງທີ່ເກີດຂຶ້ນໄດ້ກໍ່ແມ່ນຍ້ອນການໃກ້ຊິດຊ່ວຍເຫລືອຈາກຂັ້ນເທິງ,ຈາກພໍ່ແມ່ປະຊາຊົນ,ຈາກໝູ່ຄະນະບອກກັບທົວຄິດປະດິດສ້າງ ແລະ ຄວາມສູ້ຊົນພະຍາຍາມຂອງນາງ, ນາງຈຶ່ງມີຄວາມກະຕືລືລົ້ນຄິດຢາກແນມເຫັນຄວາມສວຍຄວາມງາມຂອງປະເທດຊາດບ້ານເມືອງ.ກ່ອນອື່ນ,ແມ່ນ ເລີ່ມຈາກຈຸດໃດຈຸດໜຶ່ງ,ຈາກທີ່ໃດທີ່ໜຶ່ງ ແລ້ວຈຶ່ງສ່ອງແສງ ຂະຫຍາຍຕົວໄປເລື້ອຍໆ...

ນາງນຳເອົາແນວຄິດໃໝ່ເຂົ້າສູ່ກອງປະຊຸມຄະນະ " ຢາກສ້າງສວນອຸທິຍານເຍົາວະຊົນ " ມາເຖິງຕອນນີ້,ໝົດທັງຄະນະໄດ້ແນມເບິ່ງນາງດ້ວຍຄວາມເຊື່ອໝັ້ນຂຶ້ນຫລາຍແລ້ວ ນາງສະເໜີວ່າ " ໝົດທັງນະຄອນຫລວງວຽງຈັນບໍ່ມີສວນຈັກບ່ອນ,ເພື່ອເປັນທີ່ພັກຜ່ອນຢ່ອນອາລົມໃຫ້ຄົນສູງອາຍຸ,ຄົນ ໜຸ່ມຄົນສາວ ແລະ ນ້ອງນ້ອຍເຍົາວະຊົນ,ນັ້ນຈະຕ້ອງໃຊ້ເວລາຫລາຍປີ. ແຕ່,ດຽວນີ້ເຮົາຢາກສ້າງສວນອຸທິຍານເຍົາວະຊົນຂຶ້ນຢູ່ທີ່ມູມໜຶ່ງ,ແຈໜຶ່ງຂອງເດີ່ນທາດຫລວງ,ເພື່ອເສີມ ແຕ່ງທິວທັດໃຫ້ພະທາດຫລວງອັນເປັນມິ່ງຂວັນຂອງຊາວລາວ ເຮົາມີສີສັນສວຍງາມຂຶ້ນຕື່ມ " ຈຶ່ງມີພຽງຄຳຖາມດຽວອອກມາ ຈາກຄະນະວ່າ " ຈະເອົາທຶນມາແຕ່ໃສ ? "ນາງສະເໜີຕໍ່ໝູ່ຄະນະວ່າ " ເລື່ອງທັງໝົດ ເຮົາຂໍຮັບຜິດຊອບຂົນຂວາຍຫາ ທຶນ ທຶນອາດຈະເອົາມາຈາກບໍລິສັດຫ້າງຮ້ານຕ່າງໆທີ່ເຫັນດີ ເຫັນພ້ອມຕໍ່ຄວາມສຳຄັນຂອງສວນອຸທິຍານ,ເມື່ອໃດສວນເກີດຂຶ້ນມາແລ້ວ. ບໍ່ພຽງແຕ່ລູກຫລານພະນັກງານແຕ່ຢ່າງດຽວເຂົ້າຊົມໃຊ້

ລູກຫລານປະຊາຊົນ, ລູກຫລານກຳມະກອນ, ລູກຫລານຊາວ ໄຮ່ ນາ ທຸກຊັ້ນວັນນະມີສິດເຂົ້າຊົມໃຊ້ໄດ້.

ເມື່ອຫມູ່ຄະນະຕົກລົງເຫັນດີ, ນາງໄດ້ອອກແຮງ ເຄື່ອນໄຫວຂົນຂວາຍຊອກທຶນ, ຈຶ່ງໄດ້ທຶນຈາກແຕ່ລະບ່ອນດັ່ງນີ້ :

1). ຊິງຊາ, ໄດ້ທຶນຈາກຄອບຄົວຂອງນາງ ພູທອນ ພູມສະຫວັນ.

2). ງົບປະມານລັດແດ່, ເອກະຊົນຊ່ວຍແດ່.

3). ປົວແປງສະຖານທີ່ແມ່ນບໍລິສັດກໍ່ສ້າງແສງດຳພານິດ.



ນາງທອງວັນ ພົມວິຫານ ມອບໃບຍ້ອງຍໍໃຫ້ແກ່ບັນດາ ບໍລິສັດ ລັດວິສາຫະກິດແລະຫຸ້ນສ່ວນລວມຫມູ່ທີ່ໄດ້ນຳເອົາວັດຖຸ ປັດໃຈ ປະກອບສ່ວນສ້າງສວນເຍົາວະຊົນ 2 ທັນວາ.

4). ມີພໍ່ແມ່ຍາດພີ່ນ້ອງກໍ່ຮ່ວມມີຊ່ວຍສາງສາດີ: ທ່ານ ສີນພາວັນ ອິນທະວົງ ແລະອື່ນໆ...

5). ນາຫມູນ ໄດ້ທຶນຊຸປະຖຳຈາກຄອບຄົວ ທ່ານ ສີທາ ສີທາຈັກ.

ນອກຈາກນີ້ກໍ່ຍັງມີບັນດາບໍລິສັດ, ມີພາກສ່ວນຕ່າງໆ ເຫັນ ໄດ້ຄວາມສຳຄັນແລ້ວບໍລິຈາກຊັບສິນສ່ວນຕົວເພື່ອສ່ວນລວມ ປະ ກອບເຂົ້າ.

ເມື່ອຊີວິຊາ, ນ້ານາຫມູນ ແລະ ມີເດີ່ນ, ມີຮ້ວອອນແບບ ຖາ ວອນແລວ, ນາງໄດ້ຄິດຢູ່ຄົນດຽວວ່າ " ນະທີ່ນັ້ນຄືສະຖານທີ່ ແຫ່ງຫນຶ່ງແຫ່ງດຽວທີ່ມີຢູ່ນະຄອນຫລວງວຽງຈັນ " ນາງດີ ໃຈ ເມື່ອແນມເຫັນຊຸມນອງນ້ອຍຍິ້ມຫົວ, ຢອກກັນ, ຮ້ອງໃສ່ກັນ, - ກອດກັນໃສ່ກັນ, ຢືນຍິ້ມຢູ່ຂ້າງສວນດອກໄມ້ແລວຖ່າຍຮູບຮ່ວມກັບ ພໍ່ແມ່. ໂດຍສະເພາະແມ່ນນອງນ້ອຍເພດຍິງ, ຈັ່ງແມ່ນເປັນຕາ ຮັກຕາແພງ, ກໍ່ເພາະວ່ານາງບໍ່ເຄີຍມີລູກຜູ້ຍິງນຳເພິ່ນນັ້ນແລ້ວ.

ຈາກພາບທີ່ໄດ້ພົບເຫັນ, ເຮັດໃຫ້ນາງເກີດມີຈິນຕະ ນາ ການ, ຄິດຢາກໃຫ້ມີ " ທຳພະສາດເຍົາວະຊົນ " ຕັ້ງສະຫງ່າ ຢູ່ແຄມຫນອງ " ຫນອງສະພັງເລນ "ກໍ່ຈະປົວແປງປູກ ຫມານ ດອກໄມ້ອອມແຄມຂອບ, ກາງຫນອງປູກດອກບົວທັງຂາວ ແລະ ແດງ, ນຳເອົາປາໄປລ້ຽງໄວ້ແດ່, ນາງຍັງຄິດ ແລະ ໄຝ່ຝັນ ຫລາຍແນວດີ: ກາງຫນອງຕອງມີນ້ຳພຸ ຫລືເປັນອ່າງນ້ຳ ໃສ ໃຫ້ເດັກນ້ອຍລອຍອາບຢ່າງສະຫນຸກສຳລານໂລ່ຍ... ! ສ່ວນ ອຸທິຍານເຍົາວະຊົນ 2 ທັນວາແຫ່ງນີ້ ຄົງຈະເວີຍອງປະດັບ ສີ

ໃຫ້ຂອບກຳແພງນະຄອນຫລວງວຽງຈັນສວຍງາມຂຶ້ນຕື່ມແທ້ແລ້ວ

ນາງຈຶ່ງສະເຫນີຕໍ່ການຈັດຕັ້ງ. ເພື່ອຈະສ້າງ " ຜາສາດ" ຢູ່ແຄມຫນອງ. ແຕ່, ບັນຫາອັນເປັນປັດໄຈຕັດສິນນັ້ນແມ່ນ "ເງິນ"

ນາງໄດ້ວົງເຕັ້ນຂອກຫາທຶນຮອນ, ເຖິງຈະມີທາງສຽງໄດ ຍິນພໍທວ່າໆເຂົ້າຫູວ່າ " ນາງວົງເຕັ້ນຂອກຫາລາຍໄດ້ສ່ວນຕົວ" ກໍ່ຕາມ. ເພາະນາງເຊື່ອຫມັ້ນໃຈຕົວເອງ, ວ່າຕົວນາງ ພວມເຮັດໃນສິ່ງທີ່ຖືກຕ້ອງແລ້ວ, ນັ້ນກໍ່ຄື "ເຮັດສິ່ງທີ່ເປັນປະ ໂຫຍດໃຫ້ແກ່ປະເທດຊາດບ້ານເມືອງ, ເຊິ່ງບໍ່ພຽງແຕ່ສະເພາະ ຫນາຍັງຍາວນານອີກນຳ " ສິ່ງນີ້ແລວໄດ້ເຮັດໃຫ້ນາງຕັດສິນໃຈບຸກຫນ້າ... ຈຶ່ງມອບໃຫ້ບໍລິສັດຊາວຫນຸ່ມສືບຕໍ່ກໍ່ສ້າງຫໍຜາ ສາດດ້ວຍກອນທຶນລັດຈຳກັດທີ່ສຸດ. ແຕ່ກໍ່ບໍ່ສຳເຫລັດ ຕໍ່ມາ ນາງຈຶ່ງໄດ້ສຳພັດມືກັບບໍລິສັດ " ໃຕ້ຫວັນ " ແຕ່, ບໍ່ຮູ້ວ່າດ້ວຍເຫດຜົນກົນໄກປະການໃດ, ທາງການທີ່ກ່ຽວຂ້ອງຈຶ່ງອະນຸມັດຊຸກຊາ. ຫໍຜາສາດສວນອຸທິຍານຈຶ່ງມີສະພາບເຄິ່ງສ້າງເຄິ່ງປະຢູ່ຄືແນວນັ້ນ

ເມື່ອໄດ້ສວນອຸທິຍານເພື່ອເປັນບ່ອນຫລິ້ນໃຫ້ເດັກນ້ອຍແລ້ວ, ນາງຍັງຄິດຢາກໃຫ້ມີບ່ອນຝຶກແອບຮ່ຳຮຽນວິຊາອາ ຊີບຮອບດ້ານໃຫ້ເດັກນ້ອຍແຕ່ອາຍຸໄວເຍົາຕາມພອນສະຫວັນ ຂອງເຂົາເພື່ອໃຫ້ເຂົາໄດ້ຝຶກເລືອກຮ່ຳຮຽນຕາມວິຊາທີ່ຕົນມັກແຕ່ອາຍຸຍັງນ້ອຍພໍ.

ນາງຈຶ່ງໄດ້ຂໍຫໍຄຳເກົ່າມາສ້າງເປັນວັງເຍົາວະຊົນ. ເຂົາໄດ້ມີການເຄື່ອນໄຫວເປັນເວລາຫລາຍປີເຕີບ. ແຕ່ດ້ວຍ ຄວາມຈຳເປັນເຮືອນ 5 ຊັ້ນທີ່ທາງລັດໄດ້ປ່ຽນເອົາເຮືອນ 4 ຫລັງ

ຂອງສຳນັກເກົ່າສູນກາງຊາວໜຸ່ມ ປປລ ນັ້ນໄດ້ຊຸດໂຊມ ແລະ ເພພັງຫລາຍບໍ່ສາມາດຢູ່ຕໍ່ໄປໄດ. ລັດກໍ່ລົງທຶນໃຫສ້ອມແປງຫມົດ ຫລາຍ ແຕ່ກໍ່ບໍ່ໄດ້ ຄວາມອັນຕະລາຍຍັງອື່ມຊູ່ຢູ່ຕະຫລອດເວລາ ດ້ວຍຄວາມຈຳເປັນ ນາງ ຈຶ່ງພາໝູ່ ຍາຍໄປອາໃສຢູ່ວັງເຍົາ ວະຈິນຈິ່ວຄາວ.

## ກ່ອນເປີດກອງປະຊຸມ

ວຽກງານຂອງພວກເຮົານັບມື້ນັບໜັກມື, ເມື່ອໄດ້ປຸກ ຂະບວນຊາວໜຸ່ມຂຶ້ນມາແລວ, ວຽກງານຂອງຊາວໜຸ່ມກໍ່ຟົດຟື້ນຂຶ້ນ ໃນທົ່ວກຳແພງນະຄອນຫລວງວຽງຈັນ ແລະ ສິ່ງພິມສະທອນ - ທາງບວກໄປສູ່ເຂດແຂວງຕ່າງໆຢ່າງເປັນຂະບວນທັງເໜືອ ແລະ ໃຕ.

ຂະນະດຽວກັນ, ລຸງ ໄມຈັນຕານ ແສງມະນີ, ປະທານ ຄະນະກຳມະການອົນຂວາຍສາງຕັ້ງຊາວໜຸ່ມປະຊາຊົນປະຕິ ວັດລາວຊ້ຳພັດຖືກຍົກຍາຍໄປເປັນລັດຖະມົນຕີຢູ່ກະຊວງພາຍ ໃນ ( ເພາະລຸງ ຊົນຊື່ນ, ລັດຖະມົນຕີຄົນເກົ່າເສຍຊີວິດ )

ຄະນະຈຶ່ງໄດ້ຕົກລົງເຫັນດີໃຫ້ຜູ້ຮອງທີ່ໜຶ່ງຂຶ້ນເປັນຜູ້ ວ່າການແທນປະທານ, ຄື ທ່ານທອງໄຫລ ກົມມະສິດ, ເຊິ່ງທັງ ຮັບຜິດຊອບລວມ ແລະ ລົງເລິກວຽກງານການຕ່າງປະເທດ, ສ່ວນນາງລົງເລິກວຽກງານໂຄສະນາອົບຮົມແລະວັດທະນະທຳຄືເກົ່າ

ວຽກງານການກະກຽມກອງປະຊຸມໃຫຍ່ຊາວໜຸ່ມຄັ້ງ ປະ

ຖືມນະເລີກທົ່ວປະເທດພວມສັບສົນ. ທ່ານທອງ ໄຫລ ກົມມະສິດ ຂຶ້ນວ່າການແທນປະທານບໍ່ພໍເທົ່າໃດ, ຊ້ຳພັດຖືກຍົກຍ້າຍໄປ ຢູ່ກອງທັບ, ເມື່ອມີນາຍພົນຄົນໜຶ່ງໄດ້ຖືກເສຍຊີວິດ, ທ່ານ ທອງ ໄຫລ ຈຶ່ງກ້າວເຂົ້າໄປຮັບເອົາຊັ້ນນາຍພົນຢູ່ຝ່າຍທະຫານ.

ການຈັດຕັ້ງຂາດຜູ້ນຳກໍ່ຄືດັ່ງງູບໍ່ມີຫົວ, ຂັ້ນເທິງຈຶ່ງໄດ້ແຕ່ງຕັ້ງທ່ານ ສີສະຫວາດ ແກ້ວບຸນພັນ ໄປເປັນປະທານຄະນະ ກຳມະການຂົນຂວາຍສາວຕັ້ງຊາວໜຸ່ມ, ແທນທ່ານ ທອງໄຫລ ກົມມະສິດ.

ການກະກຽມກອງປະຊຸມພໍດີຈະເຂົ້າຮອບເຂົ້າຮອຍ, ທ່ານ ສີສະຫວາດ ແກ້ວບຸນພັນ ຊ້ຳພັດຖືກຍົກຍ້າຍໄປເປັນເລຂາ ພັກ ກຳແພງນະຄອນຫລວງວຽງຈັນ.

ການຈັດຕັ້ງເລັ່ງໃສ່ນາງ, ແຕ່ນາງຂໍປະຕິເສດດ້ອຍ ເຫດຜົນ 2 ປະການຄື: ຄວາມສຳນານໃນວຽກນີ້ບໍ່ທັນຫລາຍ ແລະ ປະສົບການຍັງບໍ່ທັນຫລາຍ, ຈຶ່ງຂໍສຶກສາຮ່ຳຮຽນໄປສາກ່ອນ, ຂໍໃຫ້ຊອກຜູ້ໃຫມ່ສາ.

ເວລານັ້ນ, ນາງຫຸມເຫ ຫມົດກຳລັງແຮງເທົ່າທີ່ມີ, ເພື່ອສຳເລັດໜ້າທີ່ທີ່ຖືກມອບໝາຍ, ລົງຊີ້ນຳຢ່າງໃກ້ຊິດຕິດແທດກັບທຸກການຈັດຕັ້ງທີ່ຂຶ້ນກັບນາງ ໂດຍສອງຝາມືຂອງນາງ ໄດ້ສ້າງຕັ້ງຂຶ້ນ.

ຂັ້ນເທິງຈຶ່ງໄດ້ແຕ່ງຕັ້ງທ່ານ ທອງສະຫວັດ ໄຂຄຳພິທູນ ໄປເປັນຜູ້ວ່າການແທນປະທານຄະນະກຳມະການຂົນຂວາຍສາວຕັ້ງຊາວໜຸ່ມປະຊາຊົນປະຕິວັດລາວ.

# ເປັນກຳມະການສູນກາງພັກ

ປີ 1982, ຂະນະທີ່ນາງພວມສົນລະວົນແລະທຸ້ມເທເຫື່ອແຮງຈົນສຸດຄວາມສາມາດເພື່ອເຮັດຫລອນຫນ້າທີ່ທີ່ຕ້ອນນາງເອງກໍ່ຍອມຮັບກັບຕົວວ່າ " ຫນັກຫນ່ວງ " ແຕ່... ນາງຕ່ອງບຸກບືນສູ້ຈົນ, ເພື່ອຢາກໃຫ້ທຸກຄົນຮູ້ວ່າ " ແມ່ຍິງລາວກໍ່ມີ ຄວາມສາມາດເຮັດໄດ້ທຸກວຽກງານເທົ່າທຽມກັບເພດຊາຍດີກັນ" ຈຶ່ງຍອມອົດກັ້ນຕໍ່ຄວາມອິດເມື່ອຍ,ຍອມອົດກັ້ນຕໍ່ຄວາມເຈັບ ປວດທ້ອງນ້ອຍທີ່ເກີດຈາກພົນສະທ້ອນຕອນແທ້ງລູກ ແລະ ເກີດ ລູກແລ້ວໄດ້ພັກຜ່ອນຕາມກຳນົດທີ່ຄວນ ຫມໍໄດ້ບອກນາງວ່າ"ຂໍ ໃຫ້ເອື້ອຍເຮັດແຕ່ວຽກເບົາ,ຢ່າອົດນອນ " ແຕ່ນາງໄດ້ຝືນຄຳເຕືອນຂອງຫມໍທຸກຢ່າງແລ້ວ, ວັນເວລາທີ່ສຸພາສິດລາວ ເຮົາເຄີຍກ່າວຂານຕໍ່ກັນມາຊ້ານານວ່າ " ທຳດີໄດ້ດີ,ມີຄວາມ ພະຍາຍາມຢູ່ທີ່ໃດ, ພົນສຳເລັດກໍ່ຢູ່ທີ່ນັ້ນ " ນີ້ເປັນບົດໃສ່ປະຈຳ ຕົວເມື່ອໄດ້ຕັດສິນໃຈຢ່າງສົມເຫດສົມຜົນແລ້ວນາງຕ້ອງມຸ່ງໃຫ້ສຳເລັດຕາມທີ່ນາງໄດ້ຄາດຄິດເອົາໄວ້, ເພາະນາງໄດ້ຄິດຢູ່ຕະ ຫລອດເວລາວ່າ " ເມືອງລາວມີທຸກຢ່າງທຸກແນວ;ເຖິງຂົງເຂດຕົນເອັດເປັນວົງແຄບແຕ່ນາງພູມໃຈທີ່ໄດ້ປະກອບສ່ວນເຂົ້າອັນລວມ, ນາງຈຶ່ງເຮັດດ້ວຍຄວາມຊື່ນໃຈຈົນລືມອິດລືມເມື່ອຍໄປເລີຍ.

ກອງປະຊຸມໃຫຍ່ຄັ້ງທີ III ຂອງພັກ,ໃນວັນທີ 27/4/1982 ໄດ້ອາແຂນອອກຮັບເອົານາງເຂົ້າສູ່ວົງແຂນທີ່ອົບອຸ່ນ

ຄືເປັນກຳມະການສູນກາງພັກມາແຕ່ບາດນັ້ນ. ໃນໂອກາດ ກອງປະຊຸມໃຫຍ່ຄັ້ງທີ III ນາງຄາແລ່ນວຽກຂ້າງນອກ ພາຍຫລັງວັນທີ 27/4/1982 ນາງໄດ້ຍິນໝູ່ເລົ່າໃຫ້ຟັງວ່າ ນາງຖືກເລືອກຕັ້ງ... ນາງວິງຢູ່ຄິດວ່າເຂົາເຈົ້າເວົ້າຢອກ.

ວຽກງານຂອງນາງຈຶ່ງເພີ່ມຈາກພຽງແຕ່ແບກບ່າ ດຽວເປັນແບກທັງສອງບ່າ: ຖືທັງສອງມື. ແຕ່ນາງກໍ່ພູມໃຈ. ຂໍແຕ່ ໃຫ້ໄດ້ເຮັດວຽກປະກອບສ່ວນໃຫ້ແກ່ປະເທດຊາດບ້ານເມືອງ, ນາງພອມແລວອຸທິດທັງຊີວິດແລະຈິດໃຈ ທັງສະຕິປັນຍາກຳລັງ ວັງຊາ...

ຕໍ່ໜ້າທີ່ຂອງນາງ, ນາງໄດ້ລົງເລິກຊີ້ນຳແລະນຳພາຢ່າງໃກ້ຊິດຕໍ່ວຽກງານໂຄສະນາອົບຮົມ, ທັງວົງເຕັ້ນຂັບຂວາຍກໍ່ສ້າງສວນອຸທິຍານເຍົາວະຊົນ 2 ທັນວາ ແລະ ຫໍພາສາດໃຫ້ ເປັນໜ້າກາກເປັນພືນເພື່ອໃຫ້ເດັກນ້ອຍລາວໄດ້ມີບ່ອນຫລິ້ນລະບາຍອາລົມສະໜຸກໃຈ.

ໃນຊ່ວງໄລຍະທີ່ກະກຽມຂະບວນການຊາວໜຸ່ມແລະເຍົາວະຊົນທັນວາເພື່ອໃຫ້ກອງປະຊຸມໃຫຍ່ຊາວໜຸ່ມຄັ້ງທີ I ໄດ້ ມີເນື້ອໃນອຸດົມຮັ່ງມີ, ໃນນາມນາງຖືກມອບໝາຍຮັບຜິດ ຊອບຊີ້ນຳວຽກໂຄສະນາວັດທະນະທຳ ແລະ ເຍົາວະຊົນທັນວາ, ນາງໄດ້ຄິດຢາກໃຫ້ມີການໂຄສະນາທາງໂທລະພາບເພື່ອ ຊ່ວຍຊຸກຍູ້ຂະບວນການຊາວໜຸ່ມໄດ້ກວ້າງຂວາງເລິກເຊິ່ງຕື່ມ. ແຕ່ໂທລະພາບແຫ່ງຊາດກໍ່ຍັງບໍ່ທັນມີເທື່ອ ນາງຈຶ່ງໄດ້ໄປພົວພັນກັບທ່ານ ສອນຄຳ ວານວົງສາ ແລະ ພະນັກງານກ່ຽວຂ້ອງ ຂອງ

ກະຊວງນັ້ນຕັ້ງຫລາຍຄັ້ງຫລາຍຫົນເພື່ອຊັກຊວນ ແລະ ກະກຽມ ໃຫ້ໂທລະພາບແຫ່ງຊາດໄດ້ອອກເປັນຈິງ ເພື່ອຈະໄດ້ອາໃສ ຊ່ວຍໂຄສະນາປຸກລະດົມຂະບວນການຊາວໜຸ່ມໄປພ້ອມດ້ວຍຄວາມ ພະຍາຍາມຂອງທັງ 2 ຄື ນາງເອງໄດ້ອອກແຮງຊຸກຍູ້,ທາງ ກະ ຊວງເຈົ້າພາບກໍ່ວົງເຕັ້ນຢ່າງຈິງຈັງ, ສຸດທ້າຍໂທລະພາບກໍ ເກີດ ເປັນຈິງໃນຄາວນັ້ນເລີຍ.

## ກອງປະຊຸມໃຫຍ່ຊາວໜຸ່ມຄັ້ງທີ I



ນາງ ທອງວິນ ພົມວິຫານ ກ່າວສຸນທອນພົດຕໍ່ກອງປະຊຸມຊາວ ໜຸ່ມທົ່ວປະເທດຄັ້ງທີ I, 83.

ວັນທີ 29/4/1983, ກອງປະຊຸມໃຫຍ່ຊາວໜຸ່ມທົ່ວປະເທດຄັ້ງທີ I ໄດ້ໄຂຂຶ້ນຢ່າງສະຫງ່າງາມຢູ່ນະຄອນ ຫລວງວຽງຈັນ.

ກອງປະຊຸມໄດ້ເລືອກເອົາທ່ານທອງສະຫວັດ ໄຂຄຳພິທູນ ເປັນເລຂາທີ I ແລະ ເລືອກເອົານາງທອງວິນ ພົມວິຫານເປັນເລຂາທີ I ພ້ອມດ້ວຍ 5 ສະຫາຍຢູ່ໃນ ຄະນະເລຂາບໍ ລິຫານງານຂອງສູນກາງຊາວໜຸ່ມ ປະຊາຊົນປະຕິວັດ ລາວ ລວມທັງໝົດແລ້ວມີ 29 ສະຫາຍ.

ຢູ່ໃນຄະນະເລຂາ, ພວກເພິ່ນໄດ້ຄົ້ນຄວ້າແລະແບ່ງໜ້າທີ່ໃຫ້ແຕ່ລະຄົນຮັບຜິດຊອບຢ່າງຖືກຕ້ອງ ແລະ ແທດເໝາະ ກັບຄວາມຮູ້ຄວາມສາມາດຂອງແຕ່ລະສະຫາຍ.

ກົງຈັກວຽກງານອ້ອມຂ້າງຄະນະເລຂາ, ໄດ້ຈັດຕັ້ງ ເປັນ ໖ ກົມໃຫຍ່ຄື :ຫ້ອງການ, ກົມຕ່າງປະເທດ, ກົມຈັດຕັ້ງ, ກົມໂຄສະນາອົບຮົມວັດທະນະທຳ, ກົມເຍົາວະຊົນ, ກົມຂະບວນ ການ ແລະ ມີ 3 ຄະນະກຳມະການທຽບເທົ່າກົມຄື : ຄະນະກຳມະການໜັງສືພິມ, ຄະນະກຳມະການໂຮງຮຽນທິດສະດີແລະຄະນະກຳມະການໂຮງພິມຊາວໜຸ່ມ, ດ້ວຍຈຳນວນພະນັກງານ ເກືອບ 300 ຄົນ.

ຕໍ່ມາ, ເຫັນວ່າການຈັດຕັ້ງອ້ອມຂ້າງຄະນະມີຫລາຍ ໂພດຈຶ່ງຕັດກົມຂະບວນການ, ຄະນະກຳມະການໂຮງຮຽນທິດສະ ດີ ແລະ ຄະນະກຳມະການໜັງສືພິມໃຫ້ຂຶ້ນກັບວຽກງານໂຄສະນາອົບຮົມ.

# ເປັນຜູ້ວ່າການແທນ

ກອງປະຊຸມໃຫຍ່ຄັ້ງທີ I ຂອງຄະນະຊາວໜຸ່ມປະ ຊາ ຊົນປະຕິວັດລາວປິດລົງບໍ່ທັນເຖິງໜຶ່ງປີ, ວຽກງານອັນຮີບ ດ່ວນ ໄດ້ຮຽກຮອງເອົາສະຫາຍທອງສະຫວັດ ໄຂຄຳພິທູນ ໄປຮຽນທິດສະດີ ແລ້ວລັດຢູ່ຫວຽດນາມເພື່ອກຽມຕົວໄປຮັບໜ້າທີ່ໃຫຍ່ກວ່າເກົ່າຄືໄປເປັນເອກະອັກຄະລະຖະທູດຜູ້ມີອຳນາດເຕັມຢູ່ສະ ທະ ພາບ ໂຊວຽດ.

ນາງຈຶ່ງໄດ້ຂຶ້ນເປັນຜູ້ວ່າການເລຂາທິການທີ່ I ຂອງຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວແຕ່ບັດນັ້ນເປັນຕົ້ນມາ.

ບໍ່ດົນ, ຊ້ຳພັດມີວຽກງານຮຽກຮອງຕ້ອງການໃຫ້ສະ ຫາຍ ບຸນເຮືອງ ດວງພະຈັນ ໄປເປັນຄະນະພັກແຂວງຫລວງພະ ບາງ

ຕໍ່ມາອີກບໍ່ດົນ, ທາງສູນກາງແນວລາວສ້າງຊາດມີຄວາມຕ້ອງການສະຫາຍຈະເລີນ ເຢຍປໍເຮີ, ສະຫາຍຈຶ່ງໄດ້ຍົກ ຍ້າຍ ໄປເປັນຄະນະກຳມະການສູນກາງແນວລາວສ້າງຊາດແລວ ໄດ້ເອົາສະຫາຍ ສີທົງ ຈັນຈົມພູເຂົ້າມາແທນ.

ເຖິງວ່າ, ການຍົກຍ້າຍຢູ່ໃນຄະນະເລຂາຈະມີຜົນສະທ້ອນ ເຖິງວຽກງານ, ເພື່ອປັບປຸງຕົວເອງໃຫ້ຢູ່ໃນສະພາບເປັນປົກກະຕິ, ນາງໄດ້ຕັ້ງອົກຕັ້ງໃຈຈົນສຸດຄວາມສາມາດເພື່ອ ເຮັດໜ້າທີ່ງມົກ ແລະ ລັດໄດ້ມອບໝາຍຢ່າງດີທີ່ສຸດແລວ.

ນາງໄດ້ອອກແຮງປຸກລຸກຂະບວນນັກຂຽນໜຸ່ມ, ເປີດ ຂັ້ນແຂ່ງຂັນກວດສອບເພື່ອເສີມຂະຫຍາຍຫົວຄິດປະດິດສ້າງ ຊາວໜຸ່ມໃຫ້ເປັນກະແສຟອງຢູ່ນະຄອນຫລວງວຽງຈັນ, ທັງຈັດຕັ້ງພະນັກງານລົງໄປແຕ່ລະແຂວງ, ເພື່ອຂະຫຍາຍຈິດໃຈປຸກລະດົມດັ່ງກາວ.

ພ້ອມຂະບວນວັດທະນະທຳ, ວັນນະຄະດີຊາວໜຸ່ມຢູ່ທ້ອງຖິ່ນຟົດຟື້ນແລ້ວ, ນາງໄດ້ຊຸກຍູ້ນຳພາພາກສ່ວນໂຄສະນາອົບຮົມ ໃຫ້ເປີດຂັ້ນແຂ່ງຂັນວັນນະຄະດີຊາວໜຸ່ມສະໝັກຫລິ້ນທົ່ວປະ ເທດ



ນາງທອງວຸ່ນ ພົມວິຫານ ຕ້ອນຮັບປະທານຂອງອົງການຈັດຕັ້ງຊາວໜຸ່ມ ອາຊີ - ປາຊີຟິກ.

ຂຶ້ນຢູ່ທີ່ນະຄອນຫລວງວຽງຈັນ, ມີການກວດສອບ, ມີລາງວັນຢ່າງ ດົກແໜ່.

ນາງໄດ້ມີຫົວຄິດປະດິດສ້າງເປີດການພົບປະກັບນັກ ຂ່າວໜຸ່ມຫລາຍເທື່ອ, ເພື່ອແລກປ່ຽນບົດຮຽນ, ແລກປ່ຽນຄຳຄິດຄຳເຫັນນຳກັນຕໍ່ການຂຽນຂ່າວ, ຂຽນບົດ, ເຮັດແນວໃດຈຶ່ງຈະຂຽນດີ, ຖືກຕ້ອງຕາມແນວທາງແລະ ນະໂຍບາຍຂອງພັກ, ຖືກ ກັບລົດນິຍົມຂອງຊາວໜຸ່ມ ແລະ ທັງໄດ້ຮັບການນິຍົມຊົມຊອບ ໃນໝູ່ມະຫາຊົນ.



ນາງທອງວິນ ພົມວິຫານ ໃຫ້ສຳພາດນັກຂ່າວສະຫະພາບ ໂຊວຽດ ໂອກາດເປີດກອງປະຊຸມຊາວໜຸ່ມທົ່ວປະເທດສະໄໝທີ _II_ ປີ 1988.



ນາງທອງວິນ ພົມວິຫານ ພ້ອມດ້ວຍປະທານສັນຕິພາບໂລກ ແລະ ໂອກາດຈັດຕັ້ງມະຫາຊຸມນຸມຍ່າງເພື່ອສັນຕິ ພາບ ໂລກ ຈຳນວນ 2 ໝື່ນກວ່າຄົນ.

ໃນປີ 1985ນາງຊຸ້ນນຳໃຫ້ກົມກອງ ແລະພະແນກການ ທີ່ກ່ຽວຂ້ອງລົງສູ່ຮາກຖານ, ເພື່ອເປີດຂະບວນການປຸກລຸກເຍົາວະຊົນກ່ຽວກັບວຽກງານວັນນະຄະດີສະໜັກຫລິ້ນ, ເລືອກເອົາເຍົາວະຊົນຢູ່ທ້ອງຖິ່ນທີ່ດີເດັ່ນຂຶ້ນມານະຄອນຫລວງວຽງຈັນ, ເພື່ອໃຫ້ເຂົາເຈົ້າໄດ້ມີໂອກາດເປີດຫູເປີດຕາ ແລະສະແດງຄວາມ ສາມາດຂອງຕົນໃນຂອບເຂດທົ່ວປະເທດ.

ຊຸກຍູ້ຄູ, ອາຈານ, ພະນັກງານຊາວໜຸ່ມໃຫ້ພາເຍົາວະຊົນ

ຕັ້ງຄາຍ, ເພື່ອຜູກຮັດຄວາມສາມັກຄີເຍົາວະຊົນຢູ່ແຕ່ລະບ່ອນໃຫ້ຮູ້ຈັກກັນ ແລະຊ່ວຍເຫລືອກັນ, ທັງສ້າງສັນແນວຄວາມຄິດ ພິກໄຫວໃນການຕອບຄຳຖາມ, ແກ້ບັນຫາພັດທະນາສະໝອງໃຫ້ສອດຄ່ອງສ່ອງໃສ່ແຕ່ອາຍຸໄວເຍົາ.

ປີ 1987, ນາງໄດ້ມີແນວຄວາມຄິດເປີດຂະບວນກິລາພາກັນຍ່າງເພື່ອສັນຕິພາບ, ເຊິ່ງແມ່ນນາງເອງເປັນຜູ້ລິເລີ່ມ. ພາຊາວໜຸ່ມເຍົາວະຊົນ ແລະ ປະຊາຊົນນະຄອນຫລວງວຽງ ຈັນນັບໄດ້ກວ່າ 2 ໝື່ນຄົນເລີ້ມຍ່າງຈາກສຳນັກງານສູນກາງຊາວໜຸ່ມໄປຮອດຫລັກ 2 ແລວຍ່າງຕາມທາງລ່ອງຖະໜົນຫລວງ



ນາງ ທອງວິນ ພົມວິຫານ

ລົງຢ້ຽມຢາມຄົນເຈັບຢູ່ໂຮງໝໍຕ່າງໆ...

ພະບາງເຖິງສາມແຍກວັດສີເມືອງກຽວອ້ອມໄປທາງຕະຫລາດເຊົ້າ, ໄປຮ່ວມສະຫລຸບກັນຢູ່ເດີ່ນທາດຫລວງອະນຸສາວະລີ ລະນາມນັກຮົບ ແລະ ໄປຢ້ຽມຢາມຄົນເຈັບຢູ່ໂຮງຫມໍ.

ຕົ້ນປີ 1988, ເພື່ອສົ່ງເສີມສິລະປະວັດທະນະທຳ ລາວ ແລະ ຟື້ນຟູສີໄມ້ລາຍມືຫຍິບທັກປັກແສ່ວ ແລະ ຕຳຫູກມັດໝີ່ຂອງຄົນລາວເຮົາທີ່ມີມາແຕ່ໂບຮານນະການແລ້ວ.

ນາງໄດ້ເຄື່ອນໄຫວປຸກລະດົມຊຸກຍູ້ໃຫ້ຜູ້ຊົງຄຸນວຸດທິຕື່ນຕົວເຂົ້າໃຈ ແລ້ວຮ່ວມໄມ້ຮ່ວມມືກັນຈັດງານແຂ່ງ "ອາພອນເພດຊົງລາວ" ເຊິ່ງຖືໄດ້ວ່າເປັນຄັ້ງ "ປະຖົມມະເລີກ" ຂອງງານ ນີ້ທີ່ມີຢູ່ດິນລາວ. ຈາກນັ້ນມາຜົນສຳເລັດດັ່ງກ່າວ ໄດ້ຮັບການຊົມໃຊທີ່ເປັນເອກະລັກຂອງຊາດລາວຢ່າງສະຫງ່າ.

ໃນແນວຄິດຄວາມສາງສັນຂອງນາງແລ້ວ, ນາງຢາກເຮັດທຸກວຽກຢາກເຮັດທຸກອັນ, ຄະແນນແຕ່ວ່າວຽກອັນນັ້ນເກີດ ປະໂຫຍດໃຫ້ແກ່ສັງຄົມສ່ວນລວມ, ຈຶ່ງກະທຳຢ່າງລືມຄວາມອິດຄວາມເມື່ອຍຂອງຕົນໄປ. ຜູ້ຊົງຄຸນວຸດທິ, ພໍ່ແມ່ປະຊາຊົນຕົບມື ພືຜາສະຫນັບສະຫນູນການກະທຳຂອງນາງຢ່າງລົ້ນເຫລືອ ແລະ ພວກເພິ່ນກໍ່ໄດ້ໃຫ້ການຮ່ວມມືຢ່າງຫາວຫັນຈິງຈັງ.

## ກອງປະຊຸມໃຫຍ່ຄັ້ງທີ II

ທີ່ນະຄອນຫລວງວຽງຈັນ, ວັນທີ 13/7/1988, ກອງປະຊຸມໃຫຍ່ຄັ້ງທີ II ຂອງຄະນະບໍລິຫານງານຊາວຫນຸ່ມປະຊາ



ນາງ ທອງວິນ ພົມວິຫານ, ກ່າວຄຳປາໃສຢູ່ກອງປະຊຸມໃຫຍ່ ຊາວໜຸ່ມຄັ້ງທີ II ຂອງ ແຂວງຈຳປາສັກ.

ຊົນປະຕິວັດລາວທົ່ວປະເທດໄດ້ໄຂຂຶ້ນໃຕ້ທ້ອງຟ້າສີຄາມ ງາມຕາ .

ກອງປະຊຸມໃຫຍ່, ໄດ້ຮັບກຽດຟັງຄຳປາໃສຂອງສະຫາຍ ໄກສອນ ພົມວິຫານ, ເລຂາທິການໃຫຍ່ຄະນະບໍລິຫານງານ ສູນກາງພັກ ປະທານສະພາລັດຖະມົນຕີແຫ່ງ ສປປ ລ

ສະຫາຍ ນາງທອງວິນ ພົມວິຫານ ໄດ້ອ່ານບົດລາຍງານການເມືອງຂອງຄະນະບໍລິຫານງານສູນກາງ ຊປປລ, ເຊິ່ງມີເນື້ອໃນຄົບຖ້ວນໃນທຸກດ້ານຕໍ່ການສັງເກດຕີລາຄາຜົນງານແລະ

ໄຊຊະນະຂອງຂະບວນການຊາວໜຸ່ມທົ່ວປະເທດໃນໄລຍະຜ່ານມາ.

ກອງປະຊຸມໃຫຍ່ຄັ້ງທີ II ຂອງຊາວໜຸ່ມປະຊາຊົນປະຕິວັດລາວທົ່ວປະເທດ ຈຶ່ງໄດ້ປ່ອນບັດເລືອກເອົາສະຫາຍ ນາງ ທອງວິນ ພົມວິຫານເປັນເລຂາທິການທີ I ຂອງຄະນະບໍລິຫານງານຊາວໜຸ່ມ ແລະ ເລືອກເອົາຄະນະເລຂາທິການ ຈຳນວນ 5 ສະຫາຍລວມຄະນະບໍລິຫານງານສູນກາງຊາວໜຸ່ມສະໄໝທີ II ມີ 35 ສະຫາຍ.

ກອງປະຊຸມສະໄໝທີ II ຍັງໄດ້ຜ່ານມະຕິດັດແປງກົດລະບຽບຂອງຊາວໜຸ່ມປະຊາຊົນປະຕິວັດລາວຢ່າງເປັນເອກະສັນ.



ນາງ ທອງວິນ ພົມວິຫານ ເຂົ້າຮ່ວມກອງປະຊຸມຊາວໜຸ່ມ ຄັ້ງທີ I ກຳແພງນະຄອນຫລວງວຽງຈັນ.

# ນະໂຍບາຍເປີດກວ້າງ

ພາຍຫຼັງທີ່ພັກ ສປປລ ໄດ້ວາງແນວທາງການປ່ຽນແປງໃໝ່ເພື່ອໃຫ້ສອດຄ່ອງກັບສະພາບການພັນແປຂອງສາກົນ ເວົ້າລວມ. ເວົ້າສະເພາະກໍ່ນັບແຕ່ມີມະຕິປະຕິຮູບຂອງພັກວາງອອກວ່າດ້ວຍການປະຕິຮູບທາງດ້ານເສດຖະກິດສັງຄົມໃນລາວ ຄື: ລົບລ້າງກົນໄກເກົ່າບໍລິຫານເກື້ອກຸມ, ຫັນມາສົ່ງເສີມ ເສີມ ຂະຫຍາຍກົນໄກໃໝ່ ໄລ່ລຽງທຸລະກິດເສດຖະກິດ ຜະລິດສິນຄ້າ ກະສິກຳ, ຫັດຖະກຳ, ອຸດສາຫະກຳເບົາໃຫ້ມາກມາຍ, ເປີດ



**ໂອກາດທີ່ພໍ່ແມ່ ແລະ ແມ່ຍ່າມາຢາມ.**

ກວ້າງຕະຫລາດໃຫ້ທົ່ວເຖິງໄປຮອດຊົນນະບົດເຂດພູດອຍ ຫ່າງໄກສອກຫລີກ ເລັ່ງໃສ່ຊ່ວຍ ແລະ ສ້າງເງື່ອນໄຂໃຫ້ການ ດຳລົງຊີວິດ ການເປັນຢູ່ຂອງປະຊາຊົນບັນດາເຂດດັ່ງກ່າວໄດ້ ຍົກສູງຂຶ້ນເທື່ອລະກ້າວ ເພື່ອເຮັດໃຫ້ການດຳລົງຊີວິດຂອງ ເຂົາເຈົ້າບໍ່ແຕກຕ່າງຫຍັງກັບປະຊາຊົນຕົວເມືອງ ແລະ ທົ່ງພຽງ.

ຍິ່ງໄປກວ່ານັ້ນ ຄຸນຄ່າອັນປະເສີດເລີດລ້ຳຂອງແນວທາງນະໂຍບາຍປ່ຽນແປງໃຫມ່ທີ່ພັກວາງອອກນັ້ນແມ່ນຕ້ອງຮັບປະກັນ 3 ຜົນປະໂຫຍດຢ່າງຈະແຈ້ງເປັນຕົ້ນແມ່ນ ຜົນປະໂຫຍດ ຂອງບຸກຄົນຜູ້ອອກແຮງງານ, ທີ່ມີປະສິດຕິຜົນແກ່ປະເທດຊາດ ບ້ານເມືອງຢ່າງແທ້ຈິງ. ຫມາຍຄວາມວ່າ: ປະເທດຊາດລາວສັງຄົມລາວກໍ່ຈະອຸດົມຮັ່ງມີ ຮຸ່ງເຮືອງຍິ່ງຂຶ້ນ, ລາຍຮັບແຫ່ງຊາດກໍ່ຈະມີຫມາກຜົນຂະຫຍັບຂະຫຍາຍຕົວຍິ່ງຂຶ້ນເລື້ອຍໆທັງເປັນການ ຮັກສາ ແລະ ເສີມຂະຫຍາຍມູນເຊື້ອດຸຫມັ່ນຂະຫຍັນພຽນແລະ ຫົວຄິດປະດິດສ້າງຂອງຕົນໄປໄວໃຫ້ຢ່າງຫມັ້ນຄົງ.

ພ້ອມກັນນັ້ນກໍ່ເພື່ອຄວາມສະເຫມີພາບ ແລະ ຄວາມ ເປັນທຳຂອງການອອກແຮງງານຂອງທຸກຄົນໃນສັງຄົມລາວລວມ ແຕ່ຕ້ອງມີປະໂຫຍດອັນຊອບທຳດຶງດູດຈິດໃຈເນື້ອໃນຂອງແນວ ທາງນະໂຍບາຍຂອງພັກ ສປປລ ໄດ້ຊີ້ບອກໄວ້. ດ້ານຫນຶ່ງກໍ່ ເປັນການປະກອບສ່ວນເຂົ້າໃນການສ້າງເງື່ອນໄຂແກ້ໄຂໄພ ວ່າງງານຂອງຊຸມຊົນຊຶ່ງເປັນການຕອບສະຫນອງຄວາມຕ້ອງການອັນຮີບດ່ວນຂອງຊຸມຄົນດັ່ງກ່າວ ແລະ ເປັນການຕອບສະ ຫນອງຄວາມເປັນຫ່ວງເປັນໄຍຂອງພັກທີ່ວ່າ :ຍາມໃດກໍ່ປາດຖະຫນາ

ໃຫ້ຄົນລາວ ທຸກຄົນຕ້ອງມີຊີວິດການເປັນຢູ່ອີ່ມໜຳສຳລານ ທຸກທົ່ວໜ້າ.

ດ້ວຍເຫດນັ້ນພາຍຫລັງກອງປະຊຸມໃຫຍ່ຄັ້ງທີ VII ໄດ້ສຳເລັດລົງ ແລະ ກອງປະຊຸມໃຫຍ່ຄັ້ງທີ VII ຂອງພັກ ໄດວາງແນວທາງການປ່ຽນແປງໃໝ່ຢູ່ໃນຊີວິດການເມືອງ, ເສດຖະກິດ ແລະ ສັງຄົມລາວ. ໃນນາມກຳມະການສູນກາງພັກນາງກໍໄດປະກອບສ່ວນເຂົ້າໃນການນຳພາເປັນໝູ່ຄະນະໃນ ການວາງແນວທາງດັ່ງກ່າວ. ແນວທາງນີ້ໄດ້ຮັບການສະໜັບສະໜູນໄດ້ຮັບການນິຍົມຢ່າງກວາງຂວາງ ແລະ ເລິກເຊິ່ງຈາກປະຊາຊົນທົ່ວທັງປະເທດ ແລະ ຈາກສາກົນ.

ໃນການພັນຂະຫຍາຍເນື້ອໃນຈິດໃຈກອງປະຊຸມໃຫຍ່ ຄັ້ງທີ VII ຂອງພັກ ນາງໄດເອົາໃຈໃສ່ຄົ້ນຄວາຮ່ຳຮຽນສຶກ ສາ ແລະ ພັນຂະຫຍາຍມະຕິຕ່າງໆຂອງພັກໃຫປະກົດຜົນເປັນ ຈິງ ເປັນຕົ້ນແມ່ນມະຕິ 4,5,6,7,8 ສະໄໝທີ VII ຂອງສູນກາງພັກ.

ນາງໄດ້ເຫັນວ່າ, ເວລານີ້ປະເທດຊາດຂອງພວກ ເຮົາພວມທຸກຍາກຢູ່. ໃນຍາມປະເທດຊາດຖືກສົງຄາມທຳລາຍ, ໄວໜຸ່ມໄດປະຕິບັດໜ້າທີ່ປະຈັນບານ, ຕານກັບການຮຸກຮານ, ບຽດບຶດຈາກພາຍນອກ, ຍາດເອົາເອກະລາດ ແລະ ອິດສະ ຫລະພາບມາໃຫແກ່ຊາດ ແລະ ປະຊາຊົນ, ໄວໜຸ່ມລາວສົມແລວ ທີ່ເປັນລູກຄົນວິລະຊົນ ຂອງຊາດລາວວິລະຊົນ.

ໃນຍາມນັ້ນສັນຕິພາບ, ນາງຈຶ່ງນຳພາໄວໜຸ່ມປະກອບສ່ວນ

ເຂົ້າໃນສອງໜ້າທີ່ຍຸດທະສາດຄື: ປົກປັກຮັກສາ ແລະ ສ້າງສາ ປະເທດຊາດ. ຄຽງຂ້າງກັບການເຄື່ອນໄຫວວຽກງານ ການເມືອງ ໂດຍສະເພາະຢ່າງຍິ່ງແມ່ນນຳພາໄວໜຸ່ມປະຕິບັດແນວທາງປ່ຽນແປງໃໝ່ໃຫ້ປະກົດຜົນເປັນຈິງ. ນາງຈິ່ງຫລິງເຫັນວ່າ ຊາວໜຸ່ມໃນຖານະຜູ້ທີ່ມີມູນເຊື້ອອົງອາດກ້າແກ່ນຜູ້ຂະຫຍັນໝັ່ນພຽນ ແລະ ແຂງແຮງນັ້ນ, ມາໃນປະຈຸບັນນີ້ ບໍ່ອາດຈະນັ່ງກອດຫົວເຂົ່າ ລໍຖ້າລັດແກ້ໄຂທຸກປະການ ແຕ່ຫາກຍັງຕ້ອງບືນ ຕົວຂຶ້ນເພື່ອຄ່ອຍກ້າວຂຶ້ນກຸ້ມຕົນເອງເທື່ອລະກ້າວ.

ໃນໄລຍະຜ່ານມາ, ນາງໄດ້ຊີ້ນຳຂະບວນການຂອງຊາວໜຸ່ມໂດຍການເຂົ້າຮ່ວມຢ່າງຟົດຟື້ນໃນການຮັບເໝົາກິດ ຈະການຕ່າງໆ ດ້ວຍສອງຝາມືເປົ່າ ດ້ວຍກຳລັງແຮງລຳ ແຂນຂອງຊາວໜຸ່ມ ບໍ່ລໍຈາກໂດຍການສະໜອງວັດຖຸ-ເຕັກນິກຈາກລັດ. ມາໃນໄລຍະປະຈຸບັນຂະບວນການເຄື່ອນໄຫວດັ່ງກ່າວແມ່ນບໍ່ແທດເໝາະກັບແນວທາງເປີດກວ້າງທຸລະກິດ ກໍຄືແນວທາງປ່ຽນແປງໃໝ່ທາງເສດຖະກິດສັງຄົມຂອງພັກອີກແລ້ວ.

ຈາກບ່ອນນີ້, ແນວຄວາມຄິດຊີ້ນຳຂອງນາງຈິ່ງກວມ ລວມໄປເຖິງບັນຫາຕ່າງໆທີ່ກຳລັງມີບັນຫາຢູ່ໃນໝູ່ຊາວໜຸ່ມເຊັ່ນ : ຕ້ອງແກ້ໄຂບັນຫາວຽກເຮັດງານທຳໃຫ້ແກ່ຊາວໜຸ່ມ, ຍົກສູງລະດັບວິທະຍາສາດ-ເຕັກນິກ ແລະ ຍົກສູງຊີວິດການເປັນຢູ່ ຂຶ້ນເທື່ອລະກ້າວສະແດງເຖິງຄວາມເປັນເຈົ້າການພ້ອມກັນປົກ ປັກຮັກສາສິ່ງແວດລ້ອມ ປູກຕົ້ນໄມ້ໃຫ້ເປັນປ່າ, ເອົາໃຈໃສ່ບັນ ຫາສິດຜົນປະໂຫຍດ ອັນຊອບທຳຂອງໄວໜຸ່ມ ແລະ ກໍ່ຄືປະຊາຊົນ

ຊຶ່ງໃນນັ້ນ ດຽງຂ້າງກັບການສ້າງຂະບວນການແບບໃໝ່ ໂດຍຫັນໄປສູ່ທຸລະກິດຕິດພັນແໜ້ນກັບການປັບປຸງກິດຈະການ ກະທັດລັດ, ເບົາບາງ, ມີຄຸນນະພາບ, ເພື່ອຫລຸດຜ່ອນງົບປະມານຂອງລັດ, ໃນພາກຕົວຈິງ, ນາງກໍໄດ້ນຳພາສູນກາງຊາວໜຸ່ມປັບປຸງກົງຈັກຂອງຕົນຈາກເກືອບ 300 ຄົນໃນປີ 1986 ມາເປັນ 71 ຄົນໃນຕົ້ນປີ 1981 ແລະ ກໍຍັງຈະສືບຕໍ່ຫລຸດ ຜ່ອນກົງຈັກດັ່ງກ່າວຕື່ມອີກ ໃຫ້ໄດ້ຕາມຕົວເລກລາດໝາຍທີ່ຈັດ ຕັ້ງສູນກາງວາງອອກ.

ໄປຄຽງຄູ່ກັບການປັບປຸງກົງຈັກດັ່ງກ່າວ,ແນວຄວາມ ຄິດທີ່ຖືກຕ້ອງນັ້ນໄດ້ສ້າງ 8 ຫົວໜ່ວຍທຸລະກິດຂຶ້ນ ແລະ ພວມສ້າງໂຄງການອີກບາງຢ່າງ ຊຶ່ງໃນປະຈຸບັນລວມມີ 4 ໂຄງການຄື : ໂຄງການໂຮງຮຽນວິຊາຊີບກະສິກຳຮອບດ້ານ, ໂຄງການທ່າລາດ, ໂຄງການວົງ " ວ.ສ.ລ " ໂຄງການ ສອນອຸດທິຍານເຍົາວະຊົນ 2 ທັນວາ.

ແຕ່ລະໂຄງການລ້ວນແລ້ວແຕ່ມີຈຸດປະສົງເພື່ອພັດທະ ນາເສດຖະກິດ - ສັງຄົມລາວ ໃຫ້ນັບມື້ນັບກ້າວໜ້າຂຶ້ນເລື້ອຍໆ, ໂຄງການດັ່ງກ່າວຮັບໃຊ້ໃຫ້ແກ່ສິດຜົນປະໂຫຍດອັນຖືກຕ້ອງແລະເປັນທຳຂອງໄວໜຸ່ມ ກໍຄືປະຊາຊົນລາວ.

ທັງໝົດເຫລົ່ານີ້ ໄດ້ຊີ້ສະແດງໃຫ້ເຫັນເຖິງການຈັດ ຕັ້ງປະຕິບັດ ແລະ ພັນຂະຫຍາຍມະຕິຂອງກອງປະຊຸມໃຫຍ່ຂອງພັກ ປປລ ຄັ້ງທີ IV ໃຫ້ປະກົດຜົນເປັນຈິງໂດຍພື້ນຖານ.

ໃນຕົວຈິງບັນດາຕັບບີຂອງເນື້ອໃນມະຕິຕ່າງໆຈາກນະໂຍ

ขายเปีดກ້ວາງຂອງພັກ ປປລ ໄດ້ສົ່ງຜົນກະທົບທາງບວກເຂົ້າ ສູ່ຈິດໃຈຂອງສັງຄົມຢ່າງໃຫຍ່ຫລວງ...

## ດຳເນີນໂຄງການ



ນາງ ທອງອິນ ພົມວິຫານ , ໄດ້ອອກຄຳເຫັນປຸກລະດົມຂະບວນການຊາວຫນຸ່ມລາວໃຊ້ຫົວຄິດປະດິດສ້າງ, ວິທະຍາສາດ ເຕັກນິກ ເພື່ອນຳໄປວາງສະແດງແຂ່ງໂລກຄັ້ງປະຖົມມະເລີກ ທີ່ ນິຄສະກູ ຊຶ່ງມີ......ປະເທດ,ຄັ້ງນີ້ ລາວກໍ່ໄດ້ຮັບການຕີລາຄາສູງແລະໄດ້ຮັບຫລຽນໄຊຄຳຫລຽນໄຊເງິນເປັນຈຳນວນ.........ຫນ່ວຍ.

ຫລາຍຄັ້ງຕໍ່ມາກໍ່ໄດ້ມີການຣດ ລາວໄດ້ຮັບການຍ້ອງ ຍໍດີເດັ່ນ ແລະ ໄດ້ຮັບຫລຽນໄຊຄຳເປັນຈຳນວນຫລາຍຫນ່ວຍ ຫລຽນໄຊເງິນກໍ່ຈຳນວນຫລວງຫລາຍ...

ເມື່ອຣູ້ ແລະ ເຂົ້າໃຈແລ້ວວ່າ: ພັກ ແລະ ລັດຖະບານໄດ້ເປີດກວ້າງຕະຫລາດ " ຄ້າຂາຍແບບເສລີແຕ່ຖືກຕອງຕາມກົດໝາຍ " ອັນໝາຍຄວາມວ່າ ໃຜຢາກຄ້າຂາຍອັນໃດແນວໃດກໍ່ໄດ້, ແຕ່ຕອງສະເໜີການຈັດຕັ້ງທີ່ກ່ຽວຂອງ,ມີທະ ບຽນຄ້າຂາຍ ແລະ ເສຍພາສີໃຫ້ລັດຕາມກົດໝາຍ.

ກົມກອງທີ່ສັງກັດຢູ່ແຕ່ລະກະຊວງເຊັ່ນ: ໂຮງພິມ, ຮ້ານຄ້າ, ວຽກງານທ່ອງທ່ຽວ,ໂຮງແຮມ ແລະ ວຽກງານທີ່ເຄື່ອນໄຫວທຸລະກິດການຄ້າຂອງລັດໃນເມື່ອກ່ອນ,ຖ້າມີຄວາມສາມາດກຸ້ມຕົນເອງໄດ້ກໍ່ສະເໜີ ຕໍ່ການຈັດຕັ້ງຂໍແຍກຕົວຫັນເປັນ"ທຸລະກິດກຸ້ມຕົນເອງ " ຕ່າງຫາກ, ໂດຍບໍ່ກ່ຽວຂອງກັບງົບປະມານເກືອກູນຈາກລັດ , ຂະບວນການອັນນີ້ຈຶ່ງເກີດຂຶ້ນ ແລະ ດຳເນີນໄປຢ່າງຟົດຟື້ນ, ຊີວິດການເປັນຢູ່ຂອງພະນັກງານທີ່ ເຮັດວຽກທຸລະກິດໄດ້ມີອັນດີຂຶ້ນ, ການລົງບານເຊັ່ນສົມຍາຫັນ ເປັນທຸລະກິດໄດ້ເປັນຂະບວນທີ່ສົ່ງຜົນສະທອນອັນດີມາສູ່ສັງຄົມ.ຢູ່ຕະຫລາດທາງຮ້ານໄດ້ມີໃບໜ້າປ່ຽນແປງໃໝ່ດວຍສີສັນ ແລະຮອຍຍິ້ມ.

ສ່ວນນາງແລວ, ນາງໄຜ່ຟັນ ແລະ ປາດຖະໜາຢາກໃຫ້ 4 ໂຄງການໃຫຍ່ໃນຄວາມຮັບຜິດຊອບຂອງສູນກາງຊາວໜຸ່ມປະຊາຊົນປະຕິວັດໄດ້ເກີດດອກອອກຜົນ,ນາງຈຶ່ງວິ່ງ ເຕັ້ນອອກແຮງຂົນຂວາຍຢ່າງແຂງແຮງ,ເພື່ອເຮັດໃຫ້ 4 ໂຄງການເກີດຂຶ້ນໃຫ້ໄດ້, ດວຍຄວາມຄິດ ດວຍມັນສະໝອງຂອງ ນາງຄິດຢູ່ຄົນດຽວວ່າ " ຄ່ອຍລຶດຜ່ອນງົບປະມານຂອງລັດໄປ ເທື່ອ

ລະກ້າວ ຈົນໄປເຖິງບ່ອນກຸມຕົນເອງ "

ນອກຈາກຈະໄດ້ປຶກສາຫາລືກັບໝູ່ຄະນະເລຂາທິ ການສູນກາງຊາວໜຸ່ມປະຊາຊົນປະຕິວັດລາວດ້ວຍກັນແລ້ວ, ນາງຍັງໄດ້ຮັບແຮງສັດທາຈາກຜູ້ຊົງວຸດທິ,ພາກສ່ວນໃດບຸກຄົນໃດ ກໍ່ສະໜັບສະໜູນອຸ້ມຊູ, ປະກອບສ່ວນທັງແຮງໃຈ,ແຮງວາ ຈາແຮງຄວາມຄິດ,ແຮງກາຍ ແລະ ແຮງຊັບຢ່າງເປັນຂະ ບວນຟົດຟື້ນ, ເຮັດໃຫ້ນາງຄິດໝູນໆຢູ່ວ່າ " ໂຄງການທັງ 4 ຈະເກີດດອກອອກຜົນເງີຍຂື້ນຢ່າງວິດຖານ"ນີ້ ກໍ່ບໍ່ແມ່ນຜົນງານຂອງນາງຜູ້ດຽວ ມັນແມ່ນເປັນຜົນງານທັງໝົດທີ່ປວງຊົນລວມທັງຄົນຕ່າງຊາດທີ່ຈິງໃຈກັບລາວ, ບໍ່ວ່າຜູ້ຊ່ວຍເຫລືອລາກໍ ດີການຮ່ວມມື ທັງຄິດວ່າຈະເຮັດແບບຄ່ອຍເຮັດຄ່ອຍທຳໄປຕາມລະດັບຄວາມສາມາດຕົວຈິງທີ່ມີຢູ່ພາຍໃນປະເທດເຮົາ.ແຕ່ເຊື່ອແນ່ວ່າຕ້ອງເກີດຜົນເປັນຈິງ.

ໃນໂອກາດທີ່ນາງໄດ້ໄປຢ້ຽມຢາມຕ່າງປະເທດພ້ອມດ້ວຍສາມີ " ທ່ານໄກສອນ ພົມວິຫານ " ທັງປະເທດໂລກສັງ ຄົມນິຍົມ ແລະ ປະເທດໂລກເສລີ, ນາງຈຶ່ງໄດ້ຍົບຍົກຂື້ນມາກ່າວເວົ້າເຖິງໂຄງການທີ່ນາງພວມດຳເນີນ,ເຊິ່ງບໍ່ພຽງແຕ່ຈະເປັນປະໂຫຍດໃຫ້ແກ່ປະເທດລາວ,ປະຊາຊົນລາວ ພຽງແຕ່ ຢ່າງດຽວ, ຫາກຍັງມີສ່ວນພັດທະນາຂີງເຂດວຽກງານອະນຸລັກ ຊັບພະຍາກອນຂອງໂລກອີກນຳ.

ດັ່ງນັ້ນ, ຈຶ່ງມີຫລາຍປະເທດອອກປາກວ່າ " ເປັນໂຄງການທີ່ດີຫລາຍ ແລະ ທ່ານຍັງມີແນວຄິດສ້າງສັນດີຫລາຍ ພວກ

ເຮົາເຫັນດີເຫັນພ້ອມແລະ ຈະຊ່ວຍເຫລືອດ້ວຍທຶນມູນນິທິ ແລະ ທຶນສ່ວນຕົວຂອງພວກເຮົາເອງ ".

## ວິທີເຄື່ອນໄຫວສ້າງໂຄງການ

ທຸກໂຄງການກ່ອນຈະມີການເຄື່ອນໄຫວ, ແມ່ນເລີ່ມ ຈາກ ຫົວຄິດປະດິດສ້າງຂອງນາງບອກໃສ່ກັບວິຊາການ, ນາງ ຢາກ ເຫັນສວນອຸທິຍານເຢົາວະຊົນ 2 ທັນວາແຄມເດີ່ນທາດ ຫລວງ ສວຍງາມ, ຢາກເຫັນພວກລູກຫລານຂອງພໍ່ແມ່ປະຊາຊົນຊາວພູ ອອກແຮງງານມີບ່ອນຫລິ້ນບ່ອນພັກຜ່ອນຢ່ອນອາລົມ, ເພາະຢູ່ນະ ຄອນຫລວງວຽງຈັນບໍ່ມີບ່ອນໃດອີກແລວ, ຖາບໍ່ຕັດສິນໃຈເຮັດກໍ່ ບໍ່ເຫັນມີໃຜເວົ້າເຖິງເທື່ອ, ນາງຢາກເຫັນສວນຫລັກ 14 ເມສາ ເປັນບ່ອນຫລິ້ນຂອງພວກອາວອາ, ອະນາຄົດຕອງກາຍ ເປັນ ໂຄງການໃຫຍ່ພໍສົມຄວນທີ່ຈະມີຄວາມສີວິໄລທີ່ສຸດ ແລະ ຈະນຳ ເອົາຄວາມອຸດົມຮັ່ງມີແກ່ປະເທດຊາດເຮົາໃນອານາຄົດ. ສະ ພາບຂອງສຳນັກເກົ່າຊຸດໂຊມ ແລະ ໃກ້ຈະຊຸບຕົວທະລົ່ມ ລົງ ແລວ. ແຕ່ພວກເຮົາບໍ່ມີທຶນຮອນຈະສອມແປງ, ທັງເປັນຫ່ວງ ຕໍ່ ເຮືອນທີ່ດັ່ງກ່າວເທົ່າທີ່ໃຈບໍ່ຂາດ, ນາງຈຶ່ງຟ້າວຮ່ວມມືກັບບໍ ລິ ສັດໜຶ່ງຈາກໄຕ້ຫວັນໃຫ້ເອົາລົງທຶນສອມແປງແລວໃຫ້ເອົານຳ ໃຊ້ກັບທຶນຄືນຕາມກຳນົດໝາຍທີ່ 2 ຝ່າຍເວົ້າກັນດ້ວຍ ເງື່ອນ ໄຂ " ສອມແປງເຮືອນນີ້ໃຫ້ໝັ້ນຄົງແລະສືບຕໍ່ປົວແປງທີ່ ພະ ສາດຢູ່ທີ່ສວນອຸທິຍານເຢົາວະຊົນ 2 ທັນວາ " ໂຄງການ ທ່າ

ລາດ,ເປັນບ່ອນຕາກອາກາດ.ຊົມທິວທັດທຳມະຊາດຂອງຜູ້ໃຫຍ່ ຂອງພະນັກງານ ແລະ ນັກທຸລະກິດ " ນັບທັງນັກທ່ອງ ທ່ຽວ ກໍຄືບັນດາຊຸ້ມຄົນຕ່າງໆທັງພາຍໃນ ແລະ ຕ່າງປະເທດ. ເປັນ ໂຄງການທ່ອງທ່ຽວ ທັງສະເພາະໜ້າ ແລະ ຍາວນານ.ເປັນ ວຽກງານວັດທະນະທຳທີ່ລະອຽດອ່ອນທີ່ຈະຕ້ອງຄ່ອຍເຮັດ ຄ່ອຍ ໄປຕາມເງື່ອນໄຂຂອງທຶນຮອນທີ່ມີ.ສຸດທ້າຍແມ່ນໂຄງການເພຍ ລາດ, ເປັນໂຄງການທີ່ໃຊ້ຈ່າຍທຶນຮອນພໍສົມຄວນ,ບໍ່ພຽງ ແຕ່ ມີປະໂຫຍດແກ່ລາວເຮົາເທົ່ານັ້ນ, ຍັງມີສ່ວນຮ່ວມຢູ່ໃນແຜນກາ ການອະນຸລັກຊັບພະຍາກອນທຳມະຊາດຂອງໂລກອີກນຳ. ແຜນ ການນີ້,ເນື້ອແທ້ແມ່ນພັນຂະຫຍາຍຈິດໃຈມະຕິ 6 ສະໄໝ ທີ VII ຂອງສູນກາງພັກວາງອອກ ແລະ ໄດ້ຕັ້ງຄຳຂວັນເອົາ ໄວ້ວ່າ :" ຫັນໄປສູ່ຊົນນະບົດ, ຂຶ້ນໄປເຂດພູດອຍ,ລົງເລິກ ຮາກຖານ " ເນື້ອແທ້ຂອງໂຄງການເພຍລາດນີ້ກໍຄື:ເປັນສູນ ຝຶກອົບຮົມກະສິກຳຮອບດ້ານ,ສຶກສາອົບຮົມ ແລະ ເຜີຍແຜ່ ຄວາມຮູ້ທາງດ້ານປູກຝັງ,ລ້ຽງສັດ ຮັກສາ ປ່າໄມ້ ແລະ ຊົນ ລະປະທານໃຫ້ແກ່ຊາວກະສິກອນຢູ່ໃນຊົນນະບົດ,ເພື່ອໃຫ້ເຂົາ ເຈົ້າມີວິຊາອາຊີບທຳມາຫາກິນລ້ຽງຊີບໄດ້ຢ່າງຖືກຕ້ອງ ຕາມ ຫລັກວິຊາການ.

ກໍໄດ້ຮູ້ເຖິງຈຸດປະສົງທັງໃຫຍ່ທັງມີຄວາມໝາຍສຳ ຄັນ ຄືດັ່ງກ່າວ,ມູນນິທິປະເທດຝຣັ່ງ,ອົງການອາຫານແລະການ ກະ ເສດທີ່ພວມເຄື່ອນໄຫວວຽກງານຢູ່ ສປປ ລາວກໍ່ຮັບປາກ ຈະ ຊ່ວຍເຫລືອ ການໃຊ້ຈ່າຍຈະໄດ້ແບ່ງອອກເປັນ 2 ງວດ ງວດ

ທີໜຶ່ງແຕ່ປີ 1992 ເຖິງ 1995 ແລະງວດທີ່ສອງແຕ່ປີ1996 ເຖິງປີ ໒໐໐໐.

ວິທີການເຄື່ອນໄຫວທັງ 4 ໂຄງການຂອງນາງ,ນາງໄດ້ ເຮັດຢ່າງຖືກຕ້ອງດ້ວຍຫົວຄິດສະຕິປັນຍາຕົນເອງເປັນຜູ້ລິ ເລີ່ມ ເພື່ອແນໃສ່ໃຫ້ໄດ້ມາເຊິ່ງຜົນປະໂຫຍດລວມຂອງປະເທດ ຊາດ

ຫຼັງຈາກນາງຂຽນເປັນແຜນການຢ່າງຄັກແນ່ແລ້ວກໍ່ ນຳ ເອົາເຂົ້າປຶກສາກັບຄະນະເລຂາທິການສູນກາງຊາວໜຸ່ມດ້ວຍ ກັນ, ທຸກທ່ານໄດ້ລົງສຽງເປັນມະຕິເຫັນດີນຳທຸກປະການທັງຍັງ ຍ້ອງຍໍຊົມເຊີຍນາງວ່າ " ສະຫາຍເລຂາທີ 1 ມີຫົວ ຄິດ ປະດິດສ້າງເບິ່ງກວ້າງເຫັນໄກ " ຈຶ່ງຖືວ່າເປັນໂຄງການຂອງ ຄະນະດ້ວຍກັນໝົດທຸກຄົນ, ເປັນໂຄງການສ່ວນລວມແລະເປັນ ວຽກງານຂອງສູນກາງຊາວໜຸ່ມ,ຄະນະເລຂາດ້ວຍກັນຈຶ່ງມອບ ໃຫ້ນາງເປັນຜູ້ຮັບຜິດຊອບແລະຊີ້ນຳໂດຍກົງ,ທາງດ້ານທິດທາງ ແລະ ເປົ້າໝາຍ ສ່ວນເຮັດລະອຽດ ແລະ ວາງແຜນລະອຽດ ເຕັກນິກແມ່ນວິຊາການ.

ນາງຈຶ່ງຮັບເອົາວຽກທີ່ເປັນມະຕິຈາກຄະນະແລ້ວນຳ ໄປ ດຳເນີນດ້ວຍຄວາມອົດທົນ,ດ້ານເຕັກນິກແມ່ນນາງໄດ້ອາໃສ ວິ ຊາການ ບາດກ້າວທຳອິດໄດ້ພົບກັບບັນຫາທຶນຮອນ"ຕ່າງປະເທ ເທດຮັບປາກຈະຊ່ວຍເຫຼືອ,ນາງກໍເຊື່ອໝັ້ນວ່າ: ແນ່ນອນ ເກີດເປັນຈິງໃນພາຍຂ້າງໜ້າ"ນັ້ຄ້ສິດຈະທຳໃນເມື່ອໃດເຮົາ ຫາກໄດ້ສ້າງຂຶ້ນມາເປັນຮູບເປັນຮ່າງ ແລະເກີດຜົນເປັນຈິງ.

ທ້າຍປີ 1988,ທັງອຳນາດການປົກຄອງທ້ອງຖິ່ນ ແລະ

ປະຊາຊົນແຂວງ ຈຳປາສັກ ໄດ້ນຳເອົາຊ້າງເຜືອກເຊິ່ງມີຊື່ ລື
ນາມວ່າ: " ນາງພະຍາຊ້າງເຜືອກຄຳແກ້ວມິ່ງເມືອງລາວ "
ໂດຍຈັດພິທີມອບຢ່າງຄຶກຄື້ນເປັນທາງການຂຶ້ນຢູ່ທີ່ສວນ 14 ເມ
ສາ ໃຫ້ແກ່ລັດຖະບານແລວລັດຖະບານໄດ້ມອບໃຫ້ແກ່ຊາວໜຸ່ມ
ເວົ້າລວມ,ເວົ້າສະເພາະແມ່ນໃຫ້ແກ່ສູນກາງຊາວໜຸ່ມປະຊາ
ຊົນປະຕິວັດລາວເປັນເຈົ້າຮັບພາລະ ໃນການປົກປັກຮັກສາເບິ່ງ
ແຍງ,ລ້ຽງດູ " ນາງພະຍາຊ້າງເຜືອກຄຳແກ້ວມິ່ງເມືອງລາວ
ໃນທຸກປະການ " ນາງຄິດູໂລດວ່າ:ການລ້ຽງຊ້າງມຸງຄຸນຂອງ
ບ້ານເມືອງ ມັນຕ່າງລ້ຽງຊ້າງທຳມະດາ ນາງມອງເຫັນຄວາມ
ໜັກໜ່ວງພໍ,ແຕ່ນາງກໍພໍໃຈ ແລະ ມ່ວນໃຈລ້ຽງນາງບໍ່ກາ ຂໍ
ເງິນລັດ ເພື່ອລ້ຽງເກືອ ນາງຄິດອາໃສກຳລັງແຮງສັງ ລວມ
ຂອງມະຫາຊົນ ແລະ ເຊື່ອໝັ້ນປະຊາຊົນໃນຕົວຈິງປະຊາ ຊົນ
ກໍ່ຮ່ວມມືໃນວຽກລ້ຽງດູນາງພະຍາຊ້າງເຜືອກຄຳແກ້ວມິ່ງເມືອງ
ລາວໄດ້ເປັນຢ່າງດີຕະຫລອດມາ ການໃຊ້ຈ່າຍເດືອນ ລະ
300.000 ກີບ.

ໃນຂະນະທີ່ໂຄງການທັງ 4 ພວມກຽມດຳເນີນຢູ່ແລະ ດຳ
ເນີນໄປແບບຝືດເຄືອງຍ້ອນທຶນຮອນຂາດເຂີນ.ຈຸດປະສົງ ຂອງ
ນາງແລວ, ແມ່ນຢາກຮີບຮ້ອນສ້າງໂຄງການຂຶ້ນມາໃຫ້ເປັນ ຮູບ
ຮ່າງທັງເປັນ ການສ້າງທ່າແຮງປະກອບເຂົ້າໃນການລ້ຽງ ດູ
ນາງພະຍາຊ້າງເຜືອກຄຳແກ້ວມິ່ງເມືອງລາວເຊັ່ນດຽວກັນ.ໂດຍ
ຍາດແຍ່ງເອົາທຶນຈາກມູນນິທິ ແລະ ອົງການສາກົນທີ່ຈະ ຊ່ວຍ
ເຫລືອ,ຈຶ່ງໄດ້ປຶກສາກັບໜຸ່ມຄະນະ,ປຶກສາກັບຜູ້ຊົງຄຸນວຸດທິ "ທາ

ລາຍໄດ້ຈາກວຽກງານຕ່າງໆ " ແລ້ວຈັດວຽກງານຢູ່ສວນຫລັກ 14 ເມສາ, ຈັດງານໃນໂອກາດວັນຂຶ້ນປີໃໝ່ແຫ່ນາງສັງຂານ, ຈັດງານບຸນອຍ, ຈັດງານໃຫຍ່ເພື່ອຫາລາຍໄດ້ເອົາໄປເປັນທຶນເພື່ອ ການລ້ຽງດູຊາວເຜືອກໃນແຕ່ລະມື້ແຕ່ລະວັນ, ຊຶ່ງໃນຊີວິດຂອງນາງ, ນັບແຕ່ເກີດມາຮອດມື້ນີ້ ຖືໄດ້ວ່ານາງຮັບເອົາວຽກມາເຮັດ ໜັກໜ່ວງທີ່ສຸດແລ້ວ.

## ຄວາມນຶກຄິດ

ມີຫລາຍເທື່ອ, ພໍນາງລຸກຂຶ້ນຈາກຕັ່ງນັ່ງທີ່ຫ້ອງການ, ນາງຕ້ອງຢືນຊື່ງລີງຢູ່ດົນເຕີບ, ຍອນວິນຫົວ, ມືດໜ້າລາຍຕາ ເພາະຄິດເປັນຫ່ວງນຳວຽກຫລາຍ.

ພໍກັບໄປເຖິງເຮືອນບາງມື້ບໍ່ໄດ້ນອນພັກຜ່ອນເລີຍ, ກິນເຂົ້າພຽງສອງສາມຄຳກໍ່ອີ່ມ, ແນວຄວາມຄິດຍາມໃດກໍ່ວົນວຽນ ຢູ່ກັບວຽກງານທີ່ຕົນໄປດ້ວຍຄວາມຮັບຜິດຊອບອັນສູງ.

ມາຮອດມື້ນີ້ ນາງຈຶ່ງໄດ້ເຂົ້າໃຈດີ ຕໍ່ການເປັນຜູ້ນຳຄົນ ການຮັບເອົາວຽກໃຫຍ່ ແລະ ໜັກໜ່ວງທັງຜົວ ແລະ ເມຍ.

ບາງເທື່ອນາງໄດ້ຕັ້ງຄຳຖາມກັບຕົວເອງວ່າ "ເປັນ ຫຍັງເຮົາຈຶ່ງແບກຫາບວຽກທັງ 4-5 ບ່າ, ທັງໆທີ່ເຮົາມີພຽງແຕ່ 2 ບ່າ, ສອງມື, ສອງຂາ ? ".

ແຕ່ເມື່ອຄິດເຖິງຄວາມຍິ່ງໃຫຍ່ຂອງວຽກງານທີ່ຈະ ນຳຜົນປະໂຫຍດມາສູ່ປະຊາຊົນ, ມາສູ່ຊົນນະບົດ ແລະ ມາສູ່ ປະ

ເທດຊາດປິຕຸພູມທີ່ແສນຮັກແລວ, ຄວາມອິດເມື່ອຍກໍ່ຫຼຸເລົາລົງ.

ມີບາງຄົນໄດ້ຕັ້ງຄຳຖາມວ່າ, ຖາມນາງວ່າ "ເອື້ອຍເຮັດເພື່ອໃຜ ? " ນາງຕອບຄຳຖາມດວຍຄວາມເຊື່ອໝັ້ນຕົນເອງວ່າ " ທັງໝົດທີ່ຂ້ອຍໄດ້ເຮັດໄປນັ້ນແມ່ນເຮັດເພື່ອປະ ເທດຊາດ. ເຮັດເພື່ອໃຫ້ຄວາມປາດຖະໜາຂອງຂອຍ ເກີດ ເປັນຈິງ. ຊົ່ວຍາມໃດຂ້ອຍກໍ່ໄຝ່ຝັນຢາກໃຫ້ບ້ານເມືອງຈະເລີນ ຮຸ່ງເຮືອງ, ຢາກໃຫ້ປະຊາຊົນລາວທຸກຄົນໄດ້ຢູ່ເຢັນເປັນສຸກ, ຍອມອຸທິດການດັ່ງກ່າວຂອງຂອຍ, ຂອຍຈຶ່ງພະຍາຍາມປະກອບ ສ່ວນຕາມເຫື່ອແຮງທີ່ຂ້ອຍເຮັດໄດ້. ໃນເມື່ອປະເທດຂອງພວກ ເຮົາກໍ່ຍັງທຸກຍາກຢູ່. ຖາໂຄງການນີ້ຫາກປິ່ງຂຶ້ນມາແດ່ແລ້ວ, ຊາວໂລກພວກເພິ່ນຈຶ່ງຈະຊ່ວຍເຫລືອ, ບໍ່ແມ່ນຢູ່ບໍ່ຢູ່, ຈະໃຫ້ພວກເພິ່ນຖືມເງິນມາໃຫ້ເພື່ອຊ່ວຍເຫລືອຢ່າງງ່າຍດາຍນັ້ນ, ແມ່ນເປັນໄປບໍ່ໄດ້ "

ຍ້ອນນາງເວົ້າຄືແນວນັ້ນ, ປະຊາຊົນເກີດມີຄວາມນິຍົມຊົມຊອບບໍ່ແມ່ນໂຄສະນາເພື່ອຕົວຂອງນາງຄົນດຽວ. ແມ່ນຢູ່ ນາງແມ່ນກຳມະການສູນກາງພັກປະຊາຊົນປະຕິວັດລາວ, ເປັນສະມາຊິກສະພາປະຊາຊົນສູງສຸດ ເປັນເລຂາທິການທີ່ 1 ຄະນະ ບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວຄົນໜຶ່ງ, ເມື່ອໄດ້ເຊື່ອມຊຶມມະຕິເປີດກວ້າງຈິນຕະນາການໃຫມ່ຂອງພັກແລວ, ມັນກໍ່ແມ່ນວິທີການອັນໜຶ່ງທີ່ແບບອ່ອນໂຍນເພື່ອ ສາງຄວາມເຂົ້າໃຈດີຂອງປະຊາຊົນທີ່ມີຕໍ່ນະໂຍບາຍເປີດກວ້າງຂອງພັກ ແລະ ລັດຖະບານເຮົາ, ສຳຄັນແມ່ນເຮົາແມ່ນຕົວຂອງເຮົາ

ເອງຫລືບໍ່ ? "

ນັ້ນຄືຄວາມນຶກຄິດແລະ ຈຸດປະສົງອັນແທ້ຈິງຂອງ ນາງ ທອງວິນ ພົມວິຫານ.

ຕໍ່ຈຸດພິເສດສະເພາະຕົວຂອງນາງ. ນາງເປັນຄົນມີຈິດໃຈ ຮັບຜິດຊອບສູງ, ເມື່ອຄິດຈະເຮັດຄິດຈະກະທຳອັນໃດແລວ ແລະ ອັນນັ້ນຕອງແມ່ນເພື່ອຜົນປະໂຫຍດລວມຂອງປະເທດຊາດ ບ້ານ ເມືອງ, ນາງຈະຕັດສິນໃຈເຮັດຈົນໃຫ້ເຖິງທີ່ສຸດ, ທັງໆທີ່ນາງ ກໍ່ ເປັນພຽງແຕ່ຜູ້ຍິງຄົນໜຶ່ງ, ເມື່ອມີຈິດໃຈຮັກຊາດສູງສົ່ງ, ມີ ຄວາມເຊື່ອໝັ້ນຕໍ່ການນຳ ມີການຕັດສິນໃຈສູງແລວເຖິງ ເປັນ ແມ່ຍິງກໍ່ສາມາດເຮັດວຽກໜັກໜ່ວງໄດເທົ່າຜູ້ຊາຍຄືກັນ, ນາງ ຢາກໃຫ້ໂລກຮັບຮູ້ວ່າ :ຜູ້ຍິງລາວ ປະຊາຊົນລາວ ຄົນ ລາວ ເຄີຍມີມູນເຊື້ອທົນທານໝັ້ນທົນຮົວບໍ່ຍອມຈຳນົນຕໍ່ອຸປະສັກນາໆ ປະການ. ດວຍຄວາມນຶກຄິດອັນນີ້ຂອງນາງ ນັບແຕ່ນາງ ກາວ ຂຶ້ນເປັນກຳມະການສູນກາງພັກ, ເປັນສະມາຊິກສະພາປະຊາຊົນ ສູງສຸດ, ເປັນເລຂາທີໜຶ່ງສູນກາງຊາວໜຸ່ມ, ທັງເປັນແມ່ ເຮືອນທີ່ດີຂອງສາມີ ແລະ ເປັນແມ່ທີ່ດີຂອງລູກ, ທັງທຸ້ມ ເທ ເຫື່ອແຮງທັງໝົດ ເພື່ອປະກອບສ່ວນເຂົ້າໃນການສາງ ບາດ ລຽວໃໝ່ຂອງປະຫວັດສາດຂອງຊາດລາວເຮົາໃນຍຸກສະ ໄໝ ປະຈຸບັນນີ້ ໂດຍພາຍໃຕ້ການນຳພາອັນປີຊາສາມາດຂອງພັກ ປ ປລ.

# ຍັງສືບຕໍ່

ມັນເປັນກິດຈະການແຫ່ງໂລກະທັດ, ມັນເປັນເລື່ອງກິດ ຈະການ ຂອງໂລກ ແລະ ສັງຄົມ, ນັ້ນຄືສັດຈະທຳແຫ່ງກິດຈະການ. ນາງ ເຊື່ອໝັ້ນຕໍ່ຈິດໃຈອັນບໍລິສຸດພຸດຜ່ອງຂອງຕົນທີ່ມີຕໍ່ປະເທດຊາດ ບ້ານເມືອງ, ມີຕໍ່ປະຊາຊົນ, ເມື່ອໃດນາງຍັງໄດ້ຮັບໃຊ້ຄວາມ ຮຽກຮ້ອງຕ້ອງການຂອງປະຊາຊົນ, ເມື່ອໃດນາງຍັງມີລົມຫາຍ ໃຈຢູ່, ນາງຍັງຈະສືບຕໍ່ປະກອບສ່ວນສ້າງບ້ານແປງ ເມືອງ ເທົ່າທີ່ເຮັດໄດ້, ເພື່ອເປັນອະນຸສອນຈາລຶກໄວ້ກັບໂລກວ່າ : " ຢູ່ແຜ່ນດິນລາວຂອງເຮົາ, ຄັ້ງໜຶ່ງຍັງມີນາງທອງວິນ ພົມວິ ຫານ ໄດ້ຄິດກໍ່ສ້າງໂຄງການພອມກັນທັງ 4 ໂຄງການ, ທັງໆທີ່ ປະເທດຊາດຍັງທຸກຍາກຢູ່ ເພື່ອຢາກໃຫ້ໂລກຮັບຮູ້, ເພື່ອ ຢາກ ໃຫ້ໂລກຊ່ວຍເຫລືອ, ເຊິ່ງບໍ່ແມ່ນຊ່ວຍເຫລືອນາງ, ແມ່ນ ຊ່ວຍ ເຫລືອ ອະນາຄົດຂອງປະເທດຊາດຂອງນາງ, ຊ່ວຍເຫລືອປະ ຊາຊົນຂອງນາງ ເມື່ອນາງມີຄວາມປາດຖະໜາຢາກເຫັນທອງ ຖິ່ນຊົນນະບົດຂອງລາວ, ຢູ່ແຫ່ງໃດແຫ່ງໜຶ່ງເປັນແບບຢ່າງ, ໃຫ້ ເປັນແສງສະຫວ່າງແຜ່ໄປທົ່ວປະເທດວ່າ , ຊົນນະບົດແຫ່ງນັ້ນ ຄືຊາວກະສິກອນ ໄດ້ຮັບການພັດທະນາຢ່າງຮອບດ້ານ, ຊາວກະ ສິກອນ ໄດ້ນຳໃຊ້ເຕັກນິກວິທະຍາສາດທີ່ກ້າວໜ້າ ແລະຄ່ອຍໆ ກ້າວຂຶ້ນສູ່ ທັນສະໄໝມີຜະລິດພັນອອກສູ່ຕະຫລາດ ແລະ ມີ ຊີ ວິດການເປັນຢູ່ດີຂຶ້ນບໍ່ຕ່າງກັບຕົວເມືອງ.

ມາຮອດຕອນນີ້, ຈຶ່ງຂໍສະຫລຸບພຽງສັ້ນໆວ່າ: "ອັນສິ່ງ ບໍ່ແນ່ນອນຄືສິ່ງທີ່ແນ່ນອນ" ຄືກັນກັບເມັດເຂົ້າເປືອກເມັດ ໜຶ່ງເມື່ອຕົກເຫ່ຍລົງດິນ ແລ້ວກໍ່ປະຖິ້ມໄປ,ພໍເມັດເຂົ້າເປືອກ ເມັດນັ້ນຢູ່ກັບຂີ້ດິນ ຖືກແດດ,ຖືກນ້ຳ, ໄດ້ຮັບທັງຄວາມອຸ່ນ ແລະໄດ້ຮັບທັງຄວາມເຢັນຈຶ່ງແຕກໜໍ່ອອກຈາວເກີດເປັນຕົ້ນເຂົ້າ,ເມື່ອຈະເລີນເຕີບໂຕໃຫຍ່ຂຶ້ນມາມີຮວງ,ເກີດເປັນຮວງເຂົ້າຈົນສຸກເຫລືອງ,ແລ້ວຄົນກໍ່ມາເກັບກ່ຽວເອົາໄປກິນ,ຄວາມແນ່ນອນໃນຄວາມອັນບໍ່ແນ່ນອນຈຶ່ງໝູນວຽນຄືແນວນັ້ນເປັນວັດຕະຈັກ.

ເມື່ອທວນຄິດຄືນຄວາມຫລັງ 51 ປີທີ່ນາງເກີດ ແລະເຕີບໂຕໃຫຍ່ຂຶ້ນມາ,ຈາກລູກຊາວໄຮ່ນາຄົນບ້ານນອກຂອກຄະເນ ຄົນໜຶ່ງ, ແຕ່ລະມື້ມີຊີວິດຢູ່ກັບປ່າດົງພົງໄພ,ແນມບໍ່ ເຫັນອະນາຄົດແນມບໍ່ເຫັນຄວາມຈະເລີນ,ນອກຈາກປ່າດົງ ແລະທົ່ງໄຮ່ທົ່ງນາເທົ່ານັ້ນ.

ຍ້ອນມີແສງສະຫວ່າງຂອງການປະຕິວັດ,ຍ້ອນມີເສັ້ນທາງເດີນທີ່ຖືກຕ້ອງເປັນທຳ ແຫ່ງການປະຕິວັດທີ່ມີພັກປະຊາຊົນ ປະຕິວັດລາວນຳພາທີ່ສະຫລາດສ່ອງໃສ,ຊີວິດຂອງນາງຈຶ່ງຈະເລີນເຕີບໂຕໃຫຍ່ຂຶ້ນມາທ່າມກາງການຕໍ່ສູ້ປະຕິວັດ,ຄື "ຕໍ່ສູ້ຂັບໄລ່ພວກລ່າເມືອງຂຶ້ນຝຣັ່ງ ແລະ ຈັກກະພັດອາເມລິກາຜູ້ຮຸກ ຮານປະເທດຊາດບ້ານເມືອງຂອງລາວ" ພັກ ແລະ ການປະຕິວັດໄດ້ອົບຮົມບົ່ມເພາະ ນາງໃຫ້ມີຈິດໃຈກ້າຫານ,ເຂັ້ມແຂງ, ກ້າເຮັດກ້າທຳ ແລະ ກ້າເສຍສະຫລະເພື່ອປະເທດຊາດບ້ານເມືອງ.

ຈາກບ່ອນເປັນຊາວບ້ານນອກ ໄດ້ກາຍມາເປັນພະນັກງານປະຕິວັດ, ກາຍມາເປັນເມຍທີ່ດີຂອງທ່ານຜູ້ນຳ ແລະ ໄດ້ ກາຍມາເປັນຜູ້ນຳພາຄົນຈົນເຖິງຂັ້ນໄດ້ເປັນກຳມະການສູນກາງ ພັກ ເປັນສະມາຊິກສະພາປະຊາຊົນສູງສຸດແຫ່ງ ສປປລ, ເປັນເລຂາທິການຄົນທີ່ໜຶ່ງໃນຄະນະເລຂາຄະນະບໍລິຫານງານສູນ ກາງຊາວໜຸ່ມປະຊາຊົນປະຕິວັດລາວ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ນັ້ນ, ບໍ່ແມ່ນຄວາມເອກອາງທະນົງໃຈ, ຫາກແມ່ນຄວາມດີມີສິນທຳຂອງຜູ້ຍິງລາວຄົນໜຶ່ງ, ທີ່ພັກ ແລະ ການປະຕິວັດ ກໍຄືສິນທຳ ໄດ້ກໍ່ສາງຈົນໄດ້ກາວຂຶ້ນສູ່ຕຳແໜ່ງສູງສຸດໃນຈຳນວນຜູ້ຍິງລາວທົ່ວປະເທດ.

ທັງໝົດນັ້ນຄືສັດຈະທຳ, ຄືຊີວະທັດ, ຄືປາຊະຍາແຫ່ງປາຊະຍາທີ່ໄດ້ຢັ້ງຢືນເຖິງຄວາມດີຕາມການນິຍາມຂອງນັກປາດທັງທາງພຸດ ແລະ ທາງໂລກທີ່ວ່າ " ທຳດີໄດ້ດີ, ທຳຊົ່ວໄດ້ຊົ່ວ "

ທັງໝົດທີ່ໄດ້ຂຽນຂຶ້ນເປັນປຶ້ມນີ້ແມ່ນຊີວິດຈິງຂອງນາງເປັນນິຍາຍຊີວິດຂອງຜູ້ຍິງລາວຄົນໜຶ່ງທີ່ມີຊີວິດລະອິດລະ ອຽວພໍສົມຄວນ, ເພື່ອເປັນແບບຢ່າງ, ເພື່ອເປັນບົດຮຽນໃຫ້ແກ່ ລູກໆຫລານໆຄົນລຸ້ນຫລັງກໍ່ຄືທ່ານຜູ້ອ່ານທຸກທ່ານ ແລະ ທັງຈາລຶກໄວ້ເປັນອະນຸສອນຢູ່ໃນຊີວິດຂອງນາງຊົ່ວກາລະນານນິລັນດອນ.



ທ່ານ ໄກສອນ ພົມວິຫານພ້ອມດ້ວຍພັນລະຍາຖ່າຍພາບຮ່ວມກັນ
ໃນໂອກາດໄປຢ້ຽມຢາມປະເທດຝລັ່ງ(ນະຄອນຫຼວງ ປາຣີ).



ສະຫະພັນນັກສຶກສາ ສາກົນມອບທຸງສາມັກຄີມິດຕະພາບ
ໂລກໃຫ້ແກ່ ນາງທອງວິນ ພົມວິຫານເລຂາທີ I, ສູນກາງ
ຊາວໜຸ່ມປະຊາຊົນປະຕິວັດລາວ.



ພາບນີ້ຖ່າຍພາຍຫລັງພົບປະກັບນາງ ດານຽນ ພັນລະຍາ
ຂອງທານປະທານາທິບໍດີ ເມຕເຕລັງ(ທີ່ ປາຣີ )



ນາງທອງວິນ ພົມວິຫານ ພົບປະກັບເລຂາທິການທີ I
ຂອງສູນກາງຊາວຫນຸ່ມ ໂກມໂຊໂມນ ເລນິນທີ່ມົດສະກູ.



ນາງທອງວິນ ພົມວິຫານຢ້ຽມຢາມປະເທດ ບຸນກາລີ
ໂອກາດວັນເດັກນ້ອຍສາກົນ.



ນາງ ທອງວິນ ພົມວິຫານ ນຳພາຊາວໜຸ່ມລາວ 250 ຄົນ ພົບປະມິດຕະພາບຊາວໜຸ່ມລາວ - ໂຊວຽດ ຢູ່ ທີ່ເມືອງ ໂກຼດຊະນີ ທີ່ ສະຫະພາບໂຊວຽດ.



ນາງ ທອງວິນ ພົມວິຫານ
ຕ້ອນຮັບຄະນະຜູ້ແທນຊາວໜຸ່ມມົງໂກນ.



ນາງ ທອງວິນ ພົມວິຫານ ນຳພາຫລານນ້ອຍສາວພິນຍານ
ປູກຕົ້ນໄມ້ ໂອກາດວັນທີ 1/6 ເພື່ອຮັກສາສິ່ງແວດລ້ອມ.

## ຫລຽນໄຊຊະນະ

ບັນດາຫລຽນໄຊຊະນະທັງພາຍໃນ ແລະ ຕ່າງປະເທດທີ່ທ່ານນາງທອງວິນ ພົມວິຫານ ໄດ້ຮັບ.

1/- ຫລຽນໄຊອິດສະຫລະຊັ້ນ III

- ເລກທີ 12584, ລົງວັນທີ 13/6/1980.

- ຜູ້ເຊັນມອບ : ປະທານປະເທດ ສຸພານຸວົງ.

ມີຜົນງານ : ໄດ້ອຸທິດໃຫ້ແກ່ປະເທດຊາດໃນພາລະກິດການປະຕິວັດຊາດປະຊາທິປະໄຕໃນຕະຫລອດໄລຍະ 30 ປີຕໍ່ຕານ.

2/- ຫລຽນໄຊຊະນະເລີດຊັ້ນ I

- ເລກທີ 6850, ລົງວັນທີ 13/6/1980.

- ຜູ້ເຊັນມອບ : ປະທານປະເທດ ສຸພານຸວົງ

ມີຜົນງານ : ໄດ້ອຸທິດໃຫ້ແກ່ປະເທດຊາດໃນພາລະກິດປະຕິວັດຊາດ ປະຊາທິປະໄຕໃນຕະຫລອດໄລຍະ 30 ປີຕໍ່ຕານ.

3/- ຫລຽນໄຊອິດສະຫລະຊັ້ນ III

- ເລກທີ 27848 ( ບໍ່ໄດ້ລົງວັນທີ )

- ຜູ້ເຊັນມອບ : ປະທານປະເທດ ສຸພານຸວົງ

ມີຜົນງານ : ຕໍ່ປະເທດຊາດໃນ 5 ປີ 1975 - 1980.

4/- ຫລຽນໄຊແຮງງານຊັ້ນ III

- ເລກທີ 018/ປທປທ, ລົງວັນທີ 24/3/1988.

- ຜູ້ຈັດມອບ : ວ່າການແທນປະທານປະເທດ
ພູມີ ວົງວິຈິດ.

ມີຜົນງານ : ດີເດັ່ນໃນພາລະກິດປົກປັກຮັກສາ ແລະ ສ້າງສາສັງຄົມນິຍົມ.

5/- ຫລຽນໄຊອິດສະຫລະຊັ້ນ III

- ເລກທີ 058 ລົງວັນທີ 11/10/1988.

- ຜູ້ຈັດມອບ : ຜູ້ວ່າການແທນປະທານປະເທດ
ພູມີ ວົງວິຈິດ.

ມີຜົນງານ : ໃນພາລະກິດປົກປັກຮັກສາປະເທດຊາດ ແລະ ກໍ່ສ້າງສັງຄົມນິຍົມຕະຫລອດ 10 ປີຜ່ານມາ.

6/- ຫລຽນໄຊແຮງງານຊັ້ນ III

- ບໍ່ມີເລກທີ , ບໍ່ລົງວັນທີ

- ຜູ້ຈັດມອບ : ຜູ້ວ່າການແທນປະທານປະເທດ
ພູມີ ວົງວິຈິດ.

ມີຜົນງານ : ດີເດັ່ນໃນພາລະກິດປົກປັກຮັກສາແລະສ້າງສາສັງຄົມນິຍົມໃນ ສ ປ ປ ລ.

7/- ຫລຽນກາ 5 ປີ

8/- ຫລຽນໄຊມິດຕະພາບ : ຄົບຮອບ 40 ປີແຫ່ງການສ້າງຕັ້ງ ສ ປ ບຸນກາຣີ.

- ເລກທີ 543 ໂຊເຟຍ 1984.

- ຜູ້ມອບ : ເລຂາທິການທີ່ປຶກສາແຫ່ງລັດຂອງ ສປ ບູນກາຣີ ນ.ມານາລົບ.

9/- ຫລຽນໄຊມິດຕະພາບ ສ້າງຕັ້ງບູນກາຣີຄົບຮອບ 1.300 ປີ

ເລກທີ : 028018, ລົງວັນທີ 12/1982.

10/- ຫລຽນໄຊມິດຕະພາບ ອາກຕູ - ເບັກເກີ

- ລົງວັນທີ 12/9/1984.
- ຜູ້ມອບ ເລຂາທິການທີ I ສູນກາງຊາວໜຸ່ມອິດສະຫລະ ເຍຍລະມັນ.

11/- ຫລຽນກາຂອງສູນກາງຊາວໜຸ່ມ ກົມໂຊໂມນເລນິນ :

- ລົງວັນທີ 25/1/1988
- ຜູ້ມອບ : ເລຂາທິການທີ I ສູນກາງຊາວໜຸ່ມ ກອມໂຊໂມນເລນິນ ມີໂຣເນັນໂກ.

ປະທານຄະນະບໍລິຫານງານຊາວໜຸ່ມໂຊວຽດ-ເຈັນໂກນົບ.

ມີຜົນງານ : ປະກອບສ່ວນເຂົ້າໃນການປົບປຸງສັນຕິພາບ,ມິດຕະພາບ ແລະ ຄວາມສາມັກຄີໃນໝູ່ຊາວໜຸ່ມ.

12/- ຫລຽນກາດີເດັ່ນຂອງສະຫະພັນຊາວໜຸ່ມປະຕິວັດມົງໂກນ :

- ເລກທີ 876 ລົງວັນທີ 24 ກໍລະກົດ 1984.

- ຜູ້ມອບ ເລ ຂາທີໜຶ່ງ ສູນກາງສະຫະພັນ ຊາວໜຸ່ມ

13/- ໃບຍ້ອງຍໍຂອງສູນກາງຊາວໜຸ່ມ ກົມໂຊໂມນ ເລນິນ :

- ລົງວັນທີ 30/12/1985.

ມີຜົນງານ : ໄດ້ປະກອບສ່ວນຢ່າງໃຫຍ່ຫລວງເຂົ້າໃນການເສີມຂະຫຍາຍແລະປັບປຸງຄວາມສາມັກຄີມິດຕະພາບ ແບບອ້າຍນ້ອງ ແລະ ການຮ່ວມມືຮອບດ້ານລະຫວ່າງຊາວໜຸ່ມກອມໂຊໂມນເລນິນ ແລະ ຊາວໜຸ່ມປະຊາຊົນປະຕິວັດລາວ,ລະຫວ່າງຊາວໜຸ່ມ ໂຊວຽດ ແລະ ຊາວໜຸ່ມລາວ.

- ຜູ້ເຊັນມອບ : ວ.ມີຊີຣ-ເລຂາທີ /̄ ຂອງສູນກາງ ໂກມໂຊໂມນເລນິນ.

14/- ຫລຽນກາ ເນື່ອງໃນໂອກາດ 40 ປີແຫ່ງການສ້າງຕັ້ງສະຫະພັນຊາວໜຸ່ມປະຊາທິປະໄຕໂລກ.

ມີຜົນງານ : ເປັນແບບຢ່າງໃນການເຄື່ອນໄຫວເພື່ອສັນຕິພາບ, ເພື່ອການລົດຜ່ອນກຳລັງອາວຸດ,ເພື່ອຄວາມສາມັກຄີຕ້ານຈັກກະພັດ,ເພື່ອເອກະລາດແຫ່ງຊາດ,ເພື່ອ ປະຊາທິປະໄຕ ແລະ ຄວາມກ້າວໜ້າທາງສັງຄົມ.

• • • • • • • • •



ພາບແຫ່ນາງສັງຂານ
ຊຶ່ງເປັນຂະບວນການທີ່ນາງສ້າງຂຶ້ນ.



ພາບນີ້ແມ່ນນາງ ໄດ້ຊຸກຍູ້ຂົນຂວາຍແມ່ບ້ານການເຮືອນ ອອກ
ແຮງແຂ່ງຂັນການຜະລິດຕ່ຳຫູກຕຳໄໝ ໃນຊຸມປີ 1980 ເພື່ອ
ປົກປັກຮັກສາສີໄມ້ລາຍມືທີ່ເປັນເອກະລັກຂອງຊາດລາວໄວ້,ຮອດ
ປີ 1988 ຈຶ່ງໄດ້ເປີດການແຂ່ງຂັນອາພອນເພດຍິງລາວ.

( ນີ້ແມ່ນພາບໃນຈຳນວນທີ່ເດັ່ນຈາກການຄັດເລືອກພາຍຫລັງ
ສຳເລັດການແຂ່ງຂັນອາພອນເພດຍິງລາວຄັ້ງປະຖົມມະເລີກ).

ພິມທີ່ໂຮງພິມມິດຕະພາບຊາວໜຸ່ມລາວ-ໂຊວຽດ

ໂທ : 4800 ຖະໜົນຫລວງພະບາງ

ຕູ້ ປ ນ : 2536

ພິມຈຳນວນ : 1.000 ເຫລັ້ມ

ຂະໜາດ 13 × 19

ພິມແລ້ວ ວັນທີ 25.5.1992.



... ສິ່ງຍອດຍິ່ງທີ່ຂ້ອຍປາດຖະໜາທີ່ສຸດໃນຊີວິດຂອງຂ້ອຍກໍຄື : ຂ້ອຍຢາກເຮັດ, ຢາກສ້າງ, ຢາກເຫັນປະຊາຊົນລາວທຸກຊົນເຜົ່າຢູ່ທົ່ວແຜ່ນດິນລາວ ແຕ່ເໜືອສຸດຈົນເຖິງ ໃຕ້ສຸດ ພ້ອມພຽງຮຽງໜ້າກັນສ້າງສາພັດທະນາປະເທດຊາດ, ມີຊີວິດການເປັນຢູ່ອຸດົມສົມບູນ, ທຸກຄົນໄດ້ກິນອີ່ມກິນແຊບ, ນຸ່ງຖືທັງອຸ່ນຄິງທັງງາມຕາ, ມີເຮືອນຢູ່ຫລັງຈີ່ຍງາມ, ມີໄຮ່ມີນາຂຽວງາມອຸ່ມທຸ່ມ, ມີຄວາມສາມັກຄີຮັກແພງກັນຄືອ້າຍຄືນ້ອງ ຮ່ວມສາຍອູ່ທອນດຽວກັນແລະຢູ່ຮ່ວມພື້ນແຜ່ນດິນນຳກັນດ້ວຍຄວາມເບີກບານມ່ວນຊື່ນຢ່າງມີຄວາມສຸກກາຍສະບາຍໃຈໃຕ້ທ້ອງຟ້າສີຄາມເມືອງລາວນີ້ລັນດອນ.

<u>ທອງວິນ ພົມວິຫານ</u>